ໝວດຄວາມຮູ້ພື້ນຖານວິຊາ | ສາຍສ້າງຄູມັດທະຍົມ

# ປະຫວັດສາດລາວບູຮານ-ລ້ານຊ້າງ





**ສົກປີ 2023-2024**

# ປະຫວັດສາດລາວບູຮານ-ລ້ານຊ້າງ

| | | |
|---|---|---|
| ສາຍປະຫວັດສາດ ລະບົບ | ປີທີ3 | ພາກຮຽນທີ 1 |


ຮຽບຮຽງໂດຍ:

ທ່ານ ນາງ ອິນປອນ ເພັງສຸວັນ

ກວດແກ້ໂດຍ:

ທ່ານ ວັດທະນາ ໝັ້ນວິໄລ

ທ່ານ ອຈ ປທ ນາງ ສິງອຳໄພ ພົມພາພອນ

ທ່ານ ປທ ນາງ ລຸ້ງຟ້າ ຂັນຕິວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໜໜໜໜ໑໑໑໑

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ 45 ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງເອກະສານ ປະກອບການສອນພາກວິຊາຄູປະຫວັດສາດ-ພູມສາດ

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 05/ສພ.ວສ, ລົງວັນທີ 7 ມີນາ 2024.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າ ບົດຮຽບຮຽງເອກະສານປະກອບການສອນ ວິຊາ: ປະຫວັດສາດລາວບູຮານ-ລ້ານຊ້າງ ມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
| --- | --- |
| ທ່ານ ປອ ສຸພັນ ເທບພະວົງສາ | .................................... |
| ທ່ານ ຊອ ປອ ໂພທອງ ພົງສົງຄາມ | .................................... |
| ທ່ານ ບຸນທັນ ອິ້ມອໍລະວົງ | .................................... |

**ທີ່, ສາລະວັນ, ວັນທີ .........................**

**ປະທານສະພາວິທະຍາສາດ**

ອຈ. ນ ສົມປອງ ແສນທະວິສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

໑໑໑໑໑໒໒໒

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ພາກວິຊາຄູປະຫວັດສາດ-ພູມສາດ

## ໃບຮັບຮອງ
## ການກວດແກ້ບົດຮຽບຮຽງເອກະສານປະກອບການສອນ
## ວິຊາ: ປະຫວັດສາດລາວບູຮານ-ລ້ານຊ້າງ

**ພາກວິຊາ**: ຄູປະຫວັດສາດ-ພູມສາດ

**ຜູ້ຮຽບຮຽງເອກະສານປະກອບການສອນ**

ທ່ານ ຊອ ນາງ ອິນປອນ ເພັງສຸວັນ

**ຄະນະກຳມະການກວດແກ້ບົດ** **ລາຍເຊັນ**

ທ່ານ ວັດທະນາ ໝັ້ນວິໄລ ..............................

ທ່ານ ອຈ ປທ ນາງ ສີງອຳໄພ ພິມພາພອນ ..............................

ທ່ານ ປທ ນາງ ລຸ້ງຟ້າ ຂັນຕິວົງ ..............................

**ທີ່, ສາລະວັນ, ວັນທີ ..........................**

**ຫົວໜ້າພາກວິຊາຄູປະຫວັດສາດ-ພູມສາດ**

ບຸນທັນ ອົ້ມວໍລະວົງ

Bounthanh OMVORAYONG

ຄຳນຳ

ເພື່ອປະຕິບັດຕາມແນວທາງການສຶກສາຂອງກະຊວງສຶກສາທິການແລະກິລາ ກໍ່ຄືວິທະຍາໄລຄູ ສາລະວັນທີ່ວາງແຜນການພັດທະນາການສຶກສາເພື່ອໃຫ້ມີປະສິດທິພາບຕາມການສຶກສາແບບໃໝ່ໃຫ້ສູງຂຶ້ນເທື່ອລະກ້າວ.

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ຊອກຫາເອກະສານຕ່າງໆທີ່ກ່ຽວຂ້ອງເພື່ອປະກອບເປັນປຶ້ມຫົວນີ້ ເປັນຕົ້ນແມ່ນໄດ້ສຶກສາຄົ້ນຄວ້າຫຼາຍເອກະສານຫຼາຍຕຳລາ,ອິນເຕີເນັດແລະອື່ນໆ. ເພື່ອສ້າງໃຫ້ເປັນບົດຮຽນແກ່ນັກສຶກສາລຸ້ນຫຼັງທີ່ມີຄວາມສົນໃຈໄດ້ສຶກສາຄົ້ນຄວ້າ ແລະເພື່ອອຳນວຍຄວາມສະດວກແກ່ການສຶກສາຮ່ຳຮຽນໃນລາຍວິຊາປະຫວັດສາດທີ່ເວົ້າເຖິງ ປະຫວັດສາດລາວບູຮານ-ສະໄໝລາວລ້ານຊ້າງ ເລີ່ມແຕ່ການກຳເນີດຊາດລາວ,ກ້າວໄປເຖິງການທ້ອນໂຮມດິນແດນຂອງເຈົ້າຟ້າງຸ່ມ ແລະ ອານາຈັກລາວລ້ານຊ້າງຮຸ່ງເຮືອງເຖິງຂີດສຸດໃນສະຕະວັດທີXVII ສະໄໝເຈົ້າສຸລິຍະວົງສາ ທຳມິກະຣາດ.

ປຶ້ມແບບຮຽນຫົວນີ້ໃຊ້ເວລາຮຽບຮຽງຫຼາຍສົມຄວນແຕ່ແນວໃດກໍ່ຕາມຍັງປະສະຈາກບໍ່ໄດ້ບາງເນື້ອໃນອາດບໍ່ທັນຄົບຖ້ວນສົມບູນເທື່ອ.ດັ່ງນັ້ນ, ບາງປະເດັນອາດຍັງຂາດຕົກບົກຜ່ອງ ແລະ ຜິດພາດບາງປະການຂ້າພະເຈົ້າຈຶ່ງຂໍອະໄພມາໃນທີ່ນີ້ດ້ວຍແລະຂໍຮຽກຮ້ອງບັນດາທ່ານທີ່ໄດ້ອ່ານຈົ່ງໃຫ້ຄຳຊ່ວຍເຫຼືອແລະຕິຊົມໃນທາງສ້າງສັນເພື່ອເປັນການປັບປຸງປຶ້ມຫົວນີ້ໃຫ້ດີຂຶ້ນແລະເປັນບົດຮຽນໃນການຮຽບຮຽງຄັ້ງຕໍ່ໄປດ້ວຍ.

# ສາລະບານ

**ປະຫວັດສາດລາວບູຮານ** ........................................................................................2

**ບົດທີ 1 ຫຼັກຖານທາງປະຫວັດສາດໃນແຜ່ນດິນລາວ** ........................................................2
I. ຄວາມໝາຍ ແລະ ຄວາມສຳຄັນຂອງຫຼັກຖານທາງປະຫວັດສາດ ........................................2
1. ຄວາມໝາຍຂອງຫຼັກຖານ........................................................................2
2. ຄວາມສຳຄັນຂອງຫຼັກຖານ ........................................................................2
II. ປະເພດຫຼັກຖານທີ່ຄົ້ນພົບໃນແຜ່ນດິນລາວ ........................................................2
1. ຫຼັກຖານປະເພດວັດຖຸ ........................................................................2
2. ຫຼັກຖານປະເພດບັນທຶກ........................................................................2
3. ຫຼັກຖານປະເພດບອກເລົ່າ. ........................................................................3
III. ຮ່ອງຮອຍຫຼັກຖານທາງປະຫວັດສາດໃນແຜ່ນດິນລາວ ........................................................3
1. ຮ່ອງຮ່ອຍປະຫວັດສາດໃນຍຸກຫີນ ........................................................................3
2. ຮ່ອງຮອຍປະຫວັດສາດໃນຍຸກໂລຫະ ........................................................................6
3. ຮ່ອງຮອຍປະຫວັດສາດຢູ່ແຂວງຫຼວງພະບາງ ........................................................................7
4. ຮ່ອງຮອຍປະຫວັດສາດຢູ່ແຂວງຫົວພັນ........................................................................8
5. ຮ່ອງຮອຍປະຫວັດສາດຢູ່ແຂວງຊຽງຂວາງ........................................................................8
6. ຮ່ອງຮອຍປະຫວັດສາດຢູ່ແຂວງຄຳມ່ວນ........................................................................9
7. ຮ່ອງຮອຍປະຫວັດສາດຢູ່ນະຄອນຫຼວງວຽງຈັນ ........................................................................9
**ບົດທີ 2**........................................................................ 10
**ຄວາມເປັນມາຂອງຄຳວ່າລາວ ແລະ ຊົນຊາດລາວ** ........................................................ 10
I. ຄວາມໝາຍແລະຄວາມເປັນມາຂອງຄຳວ່າລາວ........................................................ 10
1. ບັນດາທັດສະນະກ່ຽວກັບຄຳວ່າລາວ ........................................................ 10
II. ຖິ່ນກຳເນີດຂອງຊົນຊາດລາວ........................................................ 11
1. ຖິ່ນກຳເນີດຂອງຊົນເຜົ່າອ້າຍລາວ........................................................ 12
2. ຖິ່ນກຳເນີດຂອງພວກມອນ-ຂອມ........................................................ 13
3. ຊົນເຜົ່າດັ້ງເດີມຂອງລາວ........................................................ 13
III. ການສ້າງຕັ້ງນະຄອນລັດທຳອິດຂອງຊົນເຜົ່າອ້າຍລາວ........................................................ 14
1. ອານາຈັກອ້າຍລາວ ........................................................ 14
3. ອານາຈັກແຖນ ........................................................ 15
4. ອານາຈັກໜອງແສ........................................................ 16

**ການສ້າງຕັ້ງອານາຈັກບູຮານໃນແຜ່ນດິນລາວ** ............ 21
I. ການເຄື່ອນຍ້າຍເຂົ້າສູ່ແຫຼມສຸວັນນະພູມຂອງພວກຂອມ ............ 21
II. ການສ້າງຕັ້ງອານາຈັກຕ່າງໆໃນແຜ່ນດິນລາວ ............ 21
1. ອານາຈັກສີໂຄດຕະບອງ ............ 21
2. ເມືອງວຽງຈັນ ............ 23
3. ເມືອງຈຳປາສັກ ............ 23
4. ເມືອງພວນ ............ 24
5. ເມືອງຊວາ ............ 25
II. ວັດທະນະທຳລາວໃນສະໄໝບູຮານ ............ 25
1. ດ້ານສາສະໜາ ............ 26
2. ດ້ານສັງຄົມ ............ 26
3. ດ້ານສິລະປະ ............ 26
4. ດ້ານພາສາ ແລະ ວັນນະຄະດີ ............ 27
**ພາກທີ 2** ............ 28
**ປະຫວັດສາດລາວສະໄໝກາງ** ............ 28
**ບົດທີ 4** ............ 28
**ການທ້ອນໂຮມອານາຈັກລາວລ້ານຊ້າງ** ............ 28
I. ທີ່ມາຂອງຄຳວ່າ: ອານາຈັກລາວລ້ານຊ້າງ ............ 28
II. ສະພາບກ່ອນການທ້ອນໂຮມແແຜ່ນດິນຂອງເຈົ້າຟ້າງຸ່ມ ............ 28
1. ສະພາບຂອງອານາຈັກອ້ອມຂ້າງ ............ 28
2. ສະພາບຂອງຫົວເມືອງລາວກ່ອນການທ້ອນໂຮມແຜ່ນດິນ ............ 31
3. ປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ ............ 32
4. ການກະກຽມກຳລັງເພື່ອທ້ອນໂຮມແຜ່ນດິນຂອງເຈົ້າຟ້າງຸ່ມ ............ 34
III. ການທ້ອນໂຮມອານາຈັກລາວລ້ານຊ້າງໃນສະຕະວັດທີ 14 ............ 34
1. ການທ້ອນໂຮມແຜ່ນດິນຄັ້ງທີ 1 ປີຄ.ສ 1349-1353 ............ 34
2. ການທ້ອນໂຮມແຜ່ນດິນຄັ້ງທີ 2 ປີ ຄ.ສ 1354-1357 ............ 37
2.2. ການບຸກຕີເມືອງວຽງຈັນ-ວຽງຄຳ ............ 39
2.3 ການບຸກຕີເອົາເມືອງລາວທາງຝັ່ງຂວາແມ່ນ້ຳຂອງ ............ 40

3. ການສະຫຼອງໄຊໃຫຍ່ທີ່ວຽງຈັນປີຄ.ສ 1357 ....................................................................40
IV. ການປັບປຸງອານາຈັກຂອງເຈົ້າຟ້າງຸ່ມ........................................................................................42
1. ການປັບປຸງອຳນາດການປົກຄອງ........................................................................................42
2. ການປັບປຸງທາງດ້ານວັດທະນະທຳ ......................................................................................43
V. ສາເຫດທີ່ພາໃຫ້ໄດ້ຮັບໄຊຊະນະແລະຄວາມໝາຍປະຫວັດສາດ .............................................44
1. ສາເຫດທີ່ໄດ້ຮັບໄຊຊະນະ ...................................................................................................44
2. ຄວາມໝາຍປະຫວັດສາດ .....................................................................................................46
**ບົດທີ5**......................................................................................................................................48
I. ອານາຈັກລາວລ້ານຊ້າງໃນລາຊະການຂອງພະຍາສາມແສນໄທ1374-1417 ...................................48
1.1. ດ້ານການປົກຄອງ ............................................................................................................48
1.2 ການສຳຫຼວດພົນເສິກ ແລະ ການຈັດຕັ້ງກອງທັບ ..................................................................48
1.3 ການສ້າງສຳພັນທະໄມຕີກັບອານາຈັກອ້ອມຂ້າງ.....................................................................49
II. ອານາຈັກລາວລ້ານຊ້າງໃນລາຊະການຂອງພະເຈົ້າລ້ານຄຳແດງ...................................................50
2.1 ການຂຶ້ນຄອງລາດຂອງພະຍາລ້ານຄຳແດງຄສ1417-1428 ........................................................50
2.2 ສາຍເຫດຄວາມວຸ້ນວາຍໃນນະຄອນຊຽງທອງ ຄ ສ 1428-1438..................................................50
2.3 ການກຳຈັດຄວາມວຸ້ນວາຍ................................................................................................ 51
III. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າໄຊຍະຈັກກະພັດແຜ່ນແພ້ວ ຄສ 1441-1479 .............. 51
3.1 ການຂຶ້ນຄອງລາຊະບັນລັງຂອງເຈົ້າໄຊຍະຈັກກະພັດແຜ່ນແພ້ວ ........................................... 51
3.2 ສົງຄາມລ້ານຊ້າງດາຍຫວຽດ ..............................................................................................52
3.3 ຂະບວນການຕໍ່ສູ້ຕ້ານກັບດາຍຫວຽດນຳພາໂດຍເຈົ້າແທ່ນຄຳ ...................................................55
IV ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າສຸວັນນະບັນລັງຄສ 1479-1486 ...............................55
1. ດ້ານການປົກຄອງ .............................................................................................................55
2. ດ້ານສາສະໜາ ..................................................................................................................55
V ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າຫຼ້າແສນໄຕພູວະນາດ ຄ ສ 1486-1495......................56
1. ການຂຶ້ນຄອງລາດຂອງເຈົ້າຫຼ້າແສນໄຕ.....................................................................................56
2. ການສ້າງວັດວາອາລາມ.......................................................................................................56
VI ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າວິຊຸນນະລາດຄສ 1500-1520 ................................56
1. ການປັບປຸງດ້ານສາສະໜາ.....................................................................................................57

2. ການຈັດຕັ້ງວຽກງານບໍລິຫານຝ່າຍສົງ ........ 57
3. ດ້ານພາສາສາດ ........ 57
VII. ອານາຈັກລາວລ້ານຊ້າງລາຊະການຂອງເຈົ້າໂພທິສາລະລາດ ຄ ສ 1520-1550 ........ 57
1. ນະໂຍບາຍດ້ານວັດທະນະທາຂອງເຈົ້າໂພທິສາລະລາດ ........ 57
2. ສົງຄາມລ້ານຊ້າງອາຍຸດທະຍາ ........ 58
VIII. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າໄຊເສດຖາທິລາດ ........ 60
1. ປະຫວັດຫຍໍ້ເຈົ້າໄຊເສດຖາທິລາດ ........ 60
ຮູບທີ11: ຮູບປັ້ນເຈົ້າໄຊຍະເຊດຖາທິລາດ ແລະ ຮູບທາດວງວຽງຈັນ ........ 60
2. ການຂຶ້ນຄອງລາດທີ່ລ້ານນາຊຽງໃໝ່ປີ ຄ ສ 1538 ........ 60
3. ການຂຶ້ນຄອງລາດທີ່ນະຄອນຊຽງທອງ ຄ ສ 1550 ........ 61
IX. ສົງຄາມລ້ານຊ້າງ-ພະມ້າ ........ 64
1. ສະພາບກ່ອນເກີດສົງຄາມ ........ 64
2. ການດໍາເນີນສົງຄາມ ........ 65
X. ອານາຈັກລາວລ້ານຊ້າງພາຍໃຕ້ແອກປົກຄອງຂອງສັກດີນາພະມ້າ ........ 70
1. ດ້ານການປົກຄອງ ........ 70
2. ການກົດຂີ່ຂູດຮີດປະຊາຊົນລ້ານຊ້າງຂອງພະມ້າ ........ 71
3. ຂະບວນການກອບກູ້ເອກະລາດຈາກພະມ້າຂອງປະຊາຊົນລ້ານຊ້າງຄສ1582-1600 ........ 71
**ບົດທີ6** ........ 74
**ອານາຈັກລາວລ້ານຊ້າງໄລຍະຈະເລີນຮຸ່ງເຮືອງທີ່ສຸດໃນສະຕະວັດທີXVIII** ........ 74
I. ອານາຈັກລາວລ້ານຊ້າງກ່ອນການຂຶ້ນຄອງລາຊະບັນລັງຂອງເຈົ້າສຸລິຍະ ........ 74
1. ການປາບປາມບັນດາຫົວເມືອງທີ່ເປັນກະບົດຂອງພະວໍລະວົງສາ ........ 74
2. ການຍາດຊີງອໍານາດຂອງສັກດີນາລາວ ........ 75
II. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າສຸລິຍະວົງສາທໍາມິກະລາດປີຄສ 1638-1695 ........ 76
1. ການຂຶ້ນຄອງລາດຊະບັນລັງຂອງເຈົ້າສຸລິຍະວົງສາ ........ 76
2. ການປັບປຸງທາງດ້ານການເມືອງ-ການປົກຄອງ ........ 77
3. ວຽກງານດ້ານການປ້ອງກັນອານາຈັກ ........ 82
4. ການປັບປຸງທາງດ້ານເສດຖະກິດ ........ 83
5. ການປັບປຸງທາງດ້ານວັດທະນະທໍາ-ສັງຄົມ ........ 84

III. ຊີວິດບັ້ນທ້າຍຂອງເຈົ້າສຸລິຍະວົງສາ ....................................................................................87
IV. ອານາຈັກລາວລ້ານຊ້າງພາຍຫຼັງລາຊະການຂອງເຈົ້າສຸລິຍະວົງສາ.............................................87
ເອກະສານອ້າງອີງ...................................................................................................................89

**ພາກທີ 1**

# ປະຫວັດສາດລາວບູຮານ
# ບົດທີ 1 ຫຼັກຖານທາງປະຫວັດສາດໃນແຜ່ນດິນລາວ
## I. ຄວາມໝາຍ ແລະ ຄວາມສຳຄັນຂອງຫຼັກຖານທາງປະຫວັດສາດ

### 1. ຄວາມໝາຍຂອງຫຼັກຖານ

ຫຼັກຖານໝາຍເຖິງສິ່ງທີ່ນຳໃຊ້ເຂົ້າໃນການຄົ້ນຄວ້າ ແລະ ສຶກສາກ່ຽວກັບປະຫວັດສາດ ຫຼື ເຫດການໃດໜຶ່ງເປັນບ່ອນອ້າງອີງ ແລະ ຢັ້ງຢືນພິສູດຄວາມຈິງ. ບັນດາຄວາມຮູ້ທາງປະຫວັດສາດໃນປັດຈຸບັນແມ່ນໝາກຜົນແຫ່ງການຄົ້ນຄວ້າຫາຫຼັກຖານທີ່ເກີດໃນອາດີດ ຄວາມຮູ້ພື້ນຖານທາງປະຫວັດສາດຂຶ້ນຢູ່ກັບການຮູ້ຈັກນຳໃຊ້ຫຼັກຖານເຂົ້າໃນການຄົ້ນຄ້ວາໂດຍອາໄສວິທີທາງວິທະຍາສາດເຂົ້າຊ່ວຍ.

### 2. ຄວາມສຳຄັນຂອງຫຼັກຖານ

ຫຼັກຖານທາງປະຫວັດສາດມີຄວາມສຳຄັນໃນຂະບວນການຄົ້ນຄວ້າກໍ່ຄືຂະບວນການຈັດການຮຽນ-ການສອນ ເຊິ່ງຈະແຕກຕ່າງຈາການຟັງບັນລະຍາຍ ຫຼື ການເລົ່າເລື່ອງ ເພາະຫຼັກຖານຊ່ວຍຢັ້ງຢືນ, ອ້າງອີງ ແລະ ພິສູດຄວາມຈິງ.

## II. ປະເພດຫຼັກຖານທີ່ຄົ້ນພົບໃນແຜ່ນດິນລາວ

ນັກປະຫວັດສາດໄດ້ຈັດແບ່ງຫຼັກຖານທາງປະຫວັດສາດອອກເປັນ 3 ປະເພດລາຍລະອຽດມີດັ່ງລຸ່ມນີ້:

### 1. ຫຼັກຖານປະເພດວັດຖຸ

ຫຼັກຖານທາງວັດຖຸໄດ້ແກ່ຊາກສິ່ງທີ່ມີຊີວິດ ແລະ ວັດຖຸທີ່ຄົນເຮົາສ້າງຂຶ້ນມາໃນແຕ່ລະໄລຍະທີ່ຍັງຄົງຄ້າງມາຮອດປັດຈຸບັນເຊັ່ນ:

**ກ. ປະເພດວັດຖຸສິ່ງຂອງ**

ໄດ້ແກ່ສິ່ງກໍ່ສ້າງ ແລະ ວັດຖຸຕ່າງໆທີ່ຄົນເຮົາສ້າງຂຶ້ນທີ່ຍັງຫຼົງເຫຼືອມາຮອດປັດຈຸບັນ ເຊິ່ງຫຼັກຖານເຫຼົ່ານີ້ຊ່ວຍໃຫ້ຂໍ້ມູນກ່ຽວກັບຮູບແບບການດຳລົງຊີວິດ, ຄ່ານິຍົມຄວາມເຊື່ອຖື ຂະນົບທຳນຽມໃນສະໄໝບູຮານ ໂດຍອາໄສການວິເຄາະ ການແປຄວາມໝາຍຂອງນັກບູຮານຄະດີ, ນັກທໍລະນີສາດ ແລະ ມະນຸດວິທະຍາ ຫຼັກຖານປະເພດນີ້ມີຄວາມສຳຄັນນຳໃຊ້ເພື່ອອະທິບາຍຄວາມເປັນມາຂອງເຫດການ ໂດຍສະເພາະແມ່ນເຫດການທີ່ເກີດຂຶ້ນໃນໄລຍະທີ່ມະນຸດເຮົາຍັງບໍ່ທັນມີຕົວອັກສອນເພື່ອບັນທຶກເຫດການໄວ້.

**ຂ. ຊາກສິ່ງທີ່ມີຊີວິດ**

ໝາຍເຖິງຊາກຂອງສິ່ງທີ່ມີຊີວິດທີ່ເກີດຂຶ້ນໃນອາດີດ ເມື່ອຕາຍໄປຈະຖືກທັບຖົມຢູ່ໃນຊັ້ນດິນຕ່າງໆຈົນກາຍເປັນຫີນ ໄດ້ແກ່ ຊາກໂຄງກະດູກຂອງມະນຸດ, ສັດ ແລະ ພືດ ການສຶກສາຊາກຂອງສິ່ງທີ່ມີຊີວິດເຮັດໃຫ້ຮູ້ວິວັດທະນາການຂະຫຍາຍຕົວແລະການປ່ຽນແປງຂອງສິ່ງທີ່ມີຊີວິດໃນແຕ່ລະຍຸກສະໄໝ ຕະຫຼອດຮອດສິ່ງທີ່ມີຊີວິດທີ່ສູນພັນໄປແລ້ວ.

### 2. ຫຼັກຖານປະເພດບັນທຶກ

ເປັນຫຼັກຖານທີ່ເກີດຂຶ້ນໃນໄລຍະທີ່ມະນຸດມີການນຳໃຊ້ຕົວອັກສອນເພື່ອບັນທຶກເຫດການຕ່າງໆໄດ້ແກ່ ສິລາຈາລຶກ, ຈົດໝາຍເຫດ, ພົງສະວະດານ, ບັນທຶກເຫດການ, ສົນທິສັນຍາ, ຖະແຫລ່ງການຂອງລັດຖະບານ.

**ກ. ຫຼັກຖານຊັ້ນໜຶ່ງ ຫຼື ຫຼັກຖານປະຖົມມະພູມ**

ເປັນຫຼັກຖານຕົ້ນສະບັບ ຫຼື ຫຼັກຖານດັ້ງເດີມທີ່ເກີດຂຶ້ນພ້ອມກັບເຫດການ ສ້າງຂຶ້ນໂດຍບຸກຄົນທີ່ຢູ່ໃນເຫດການນັ້ນ. ຫຼັກຖານປະເພດນີ້ໄດ້ແກ່: ພົງສະວະດານ, ສີລາຈາລຶກ, ຈົດໝາຍເຫດ, ສົນທິສັນຍາ, ຖະແຫຼງການຂອງລັດຖະບານ, ກົດໝາຍ, ບົດບັນທຶກຄວາມຊົງຈຳ, ເອກະສານທາງການທູດ ແລະ ອື່ນໆ.

**ຂ. ຫຼັກຖານຊັ້ນສອງ ຫຼື ຫຼັກຖານທຸຕິຍະພູມ**

ຫຼັກຖານຂັ້ນທີສອງແມ່ນຫຼັກຖານທີ່ຜູ້ຂຽນອາໄສຫຼັກຖານຂັ້ນຕົ້ນໂດຍການນຳເອົາມາຮຽບຮຽງຄືນໃໝ່ ເຊັ່ນ: ເອກະສານການວິໄຈ, ວິທະຍານິພົນ, ບົດລາຍງານການຄົ້ນຄວ້າ, ບົດຄວາມ, ປຶ້ມຕຳລາຕ່າງໆທີ່ໃຊ້ເປັນເອກະສານປະກອບການສຶກສາ ຫຼື ປະກອບການຄົ້ນຄວ້າ.

**ຄ. ຫຼັກຖານຊັ້ນສາມ ຫຼື ຕິຕະຍະພູມ**

ແມ່ນຂໍ້ມູນທີ່ໄດ້ຈາກຫຼັກຖານຂັ້ນທີໜຶ່ງ ແລະ ຂັ້ນສອງ ນຳມາປະມວນວິເຄາະຮຽບຮຽງຄືນເພື່ອສະເໜີຂໍ້ຄິດ ຫຼື ສິ່ງທີ່ຈະເປັນໄປໄດ້ບາງປະການ ເຊັ່ນ: ຕຳລາ, ໜັງສືຄູ່ມື, ໜັງສືອ້າງ ບົດຄວາມ ຂໍ້ດີຂອງແຫຼ່ງຂໍ້ມູນຕົ້ນຕໍຕິຕະຍະພູມຄື:ຄົ້ນງ່າຍກະທັດຮັດ ແລະ ເປັນຂໍ້ມູນສະຫຼຸບຈາກຂໍ້ມູນອື່ນ.

**3. ຫຼັກຖານປະເພດບອກເລົ່າ.**

ໝາຍເຖິງຫຼັກຖານທີ່ໃຫ້ຂໍ້ມູນຄວາມຈິ່ງຈາກການສຳພາດ, ການເລົ່າປາກຕໍ່ປາກກັນມາແຕ່ອາດີດຈົນຮອດປັດຈຸບັນໄດ້ແກ່: ຕຳນານ, ນິທານ, ນິຍາຍ ແລະ ເລື່ອງຕ່າງໆກ່ຽວກັບຂະນົບທຳນຽມ-ຮີດຄອງປະເພນີ ແລະ ແບບແຜນການດຳລົງຊີວິດ.

## III. ຮ່ອງຮອຍຫຼັກຖານທາງປະຫວັດສາດໃນແຜ່ນດິນລາວ

**1. ຮ່ອງຮ່ອຍປະຫວັດສາດໃນຍຸກຫີນ**

ນັກວິຊາການຫຼາຍທ່ານໄດ້ທຳການຄົ້ນຄວ້າກ່ຽວກັບວັດຖຸທີ່ມະນຸດນຳໃຊ້ເຂົ້າໃນການດຳລົງຊີວິດໄດ້ແກ່: ໄມ້, ກະດູກແລະຫີນເພິ່ນເອີ້ນຍຸກທີ່ມະນຸດເຮົານຳໃຊ້ຫີນເຂົ້າໃນການດຳລົງຊີວິດວ່າ: ຍຸກຫີນ Stone Age ເຊິ່ງແບ່ງເປັນ 3 ຍຸກດ້ວຍກັນ.

**ກ. ຮ່ອງຮອຍໃນຍຸກຫີນເກົ່າ**

ຍຸກຫີນເກົ່າກວມເອົາປະມານ 2.000.000 ປີກ່ອນຄ.ສຫາ 12.000 ປີກ່ອນຄ.ສແບ່ງເປັນ 3 ໄລຍະຄື:

- **ຍຸກຫີນເກົ່າຕອນຕົ້ນ**Lower Pleolithic ແຕ່ 2.000.000 ປີ ກ່ອນ ຄ.ສຫາ 700.000 ປີ ກ່ອນຄ.ສ ເປັນໄລຍະແຫ່ງການກໍ່ສ້າງສັງຄົມໃໝ່ຂອງມະນຸດຜູ້ລິເລີ່ມແມ່ນພວກ ອິດສະຕາໂຮປີເຕັກ ເຂົາເຈົ້າດຳລົງຊີວິດເຄື່ອນທີ່ຕະຫຼອດຢູ່ເປັນໝູ່ເປັນຝູງ, ຝູງໜຶ່ງປະກອບມີ 10-20 ຄົນ ການດຳລົງຊີວິດແມ່ນອາໄສທຳມະຊາດເຊັ່ນ: ທີ່ຢູ່ອາໄສ, ອາຫານການກິນ ເຄື່ອງມືໃນການຫາກິນແມ່ນຫີນທີ່ມີໃນທຳມະຊາດ ເພື່ອແກວ່ງ, ທັບ ແລະ ຂຸດ ເອີ້ນວ່າ: ເຄື່ອງມືຫີນຕ່ອຍ, ເຄື່ອງມືຫີນຂຸດ ຫຼື ເຄື່ອງມືຫີນຫຍາບ ມີປະສິດທິພາບຕໍ່າ ການດຳລົງຊີວິດຂອງເຂົາເຈົ້າດຳລົງຊີວິດແມ່ນອາໄສທຳມະຊາດມີການເຄື່ອນໄຫວຍ້າຍໄປຕາມແຫຼ່ງອາຫານ ໝາຍຄວາມວ່າ ທີ່ພັກອາໄສຍັງບໍ່ຖາວອນ ສ່ວນໃຫຍ່ຢູ່ຕາມຖໍ້າ, ເຫງີບຫີນບາງກຸ່ມກໍ່ຍັງອາໄສຢູ່ຕາມຕົ້ນໄມ້ ອາຊີບທີ່ເຮັດແມ່ນ ອາຊີບເກັບເດັດ, ລ່າສັດ ແຕ່ຍັງມີນ້ອຍເປັນມະນຸດທີ່ຍັງບໍ່ທັນມີເຄື່ອງນຸ່ງຫົ່ມເພື່ອປົກປິດຮ່າງກາຍ.
- **ຍຸກຫີນເກົ່າຕອນກາງ**Middle Pleolithic ແຕ່ 700.000-40.000 ປີ ກ່ອນ ຄ.ສ ຍຸກນີ້ກວມເອົາການດຳລົງຊີວິດຂອງມະນຸດ 3 ຈຳພວກຄື:
  - **ເລີ່ມຈາກມະນຸດປິເຕກຣັງຕຣົບ** ມີອາຍຸປະມານ 700.000 ປີ ກ່ອນ ຄ.ສ ການດາລົງຊີວິດຄ້າຍຄືກັບມະນຸດ ອິດສະຕາໂຮປີເຕັກ ພຽງແຕ່ມີຄວາມສະດວກສະບາຍກວ່າເທົ່ານັ້ນ.
  - **ສຳລັບມະນຸດຊີນານຕຣົບ**ແມ່ນຮູ້ຈັກປະດິດເຄື່ອງມືອອກແຮງງານດ້ວຍຫີນ, ໄມ້ແລະ ກະດູກ ຮູ້ດັດແປງໃຫ້ແຫຼມຄົມ, ມີການເຈາະຮູໃສ່ດ້າມ ພິເສດແມ່ນການນຳໃຊ້ໄຟ ເຊິ່ງໄດ້ສັງເກດເມື່ອເວລາເອົາກ້ອນຫີນມາກະທົບເຂົ້າໃສ່ກັນພາໃຫ້ເກີດມີປະກາຍໄຟ ເມື່ອເປັນແນວນັ້ນມະນຸດຈຶ່ງເອົາຫີນ 2 ກ້ອນມາຕ່ອຍ ຫຼື ຖູກັນເພື່ອຜະລິດໄຟຂຶ້ນມາໃຊ້ ນອກນີ້ຍັງສັງເກດຈາກທຳມະຊາດຄື ຟ້າຜ່າ ການຄົ້ນພົບໄຟ

ຂອງມະນຸດມີຄວາມສຳພັນຕໍ່ກັບການຂະຫຍາຍຕົວຂອງສັງຄົມມະນຸດເຊັ່ນ: ຊ່ວຍເຂົ້າໃນການປ້ອງກັນການຄຸກຄາມຂອງທຳມະຊາດ ປ້ອງກັນຄວາມໜາວກໍ່ໃຫ້ເກີດຄວາມອົບອຸ່ນ ແລະ ແສງສະຫວ່າງໃນຍາມກາງຄືນ ທ່ານອັງແກນໄດ້ເວົ້າວ່າ: "ການຄົ້ນພົບໄຟຂອງມະນຸດໄດ້ກາຍເປັນບາດກ້າວທຳອິດທີ່ມະນຸດບັງຄັບທຳມະຊາດໄດ້ ແລະ ເຮັດໃຫ້ມະນຸດແຍກອອກຈາກການເປັນສັດຢ່າງຈະແຈ້ງ" ມີການປ່ຽນແປງໃນການກິນອາຫານກິນດິບມາເປັນກິນສຸກ. ສ່ວນການລ່າເນື້ອມີຄວາມກ້າວໜ້າກວ່າແຕ່ກ່ອນຫຼາຍເພາະມີການນຳໃຊ້ໄຟເຂົ້າໃນການລ່າສັດ.

- **ມະນຸດເນອັງແດກຕານ** ອາໄສຢູ່ກາງແຈ້ງຮູ້ຈັກສະແຫວງຫາຄວາມປອດໄພ, ຮູ້ຈັກໃຊ້ສັນຍາລັກ, ມີຄວາມເຊື່ອທາງດ້ານຈິດວິນຍານວ່າຄົ້ນພົບຫຼຸມຝັງສົບ, ປະດິດເຄື່ອງນຸ່ງຫົ່ມຈາກເປືອກໄມ້ ແລະ ໜັງສັດ ເຄື່ອງມືທີ່ໃຊ້ແມ່ນມີດ້າມຍາວ.

❖ **ຍຸກຫີນເກົ່າຕອນປາຍ**Upper Pleolithic 40.000-12.000 ປີ ກ່ອນ ຄ.ສ

ຍຸກນີ້ກວມເອົາໄລຍະການດຳລົງຊີວິດຂອງມະນຸດໂກຣມາຍົງ ມີອາຍຸປະມານ 40.000-35.000 ປີ ກ່ອນ ຄ.ສ ເຊິ່ງຮູ້ຈັກປະດິດເຄື່ອງມືທີ່ມີຄວາມລະອຽດສູງ, ສວຍງາມ ແລະ ເໝາະກັບການໃຊ້ງານເຊັ່ນ: ເຂັມ, ຂວານ, ເລື່ອຍ ທີ່ເຮັດດ້ວຍກະດູກ ແລະ ຫີນ ຮູ້ຈັກສ້າງທີ່ພັກພາອາໄສດ້ວຍດິນໜຽວ ເຄື່ອງນຸ່ງຫົ່ມຍັງຄົງເປັນເປືອກໄມ້ ແລະ ໜັງສັດ.

ເວົ້າລວມແລ້ວຍຸກຫີນເກົ່າເປັນຍຸກສະໄໝທຳອິດ ເຊິ່ງມີວັດທະນະທຳທີ່ຍັງບໍ່ທັນມີຄວາມສີວິໄລເທົ່າໃດຕົວແທນຂອງມະນຸດທີ່ດຳລົງຊີວິດໃນຍຸກນີ້ແມ່ນມະນຸດ ເນອັງແດກຕານ (Neanderthal Man) ຮູ້ຈັກແຕ້ມຮູບສີໃສ່ພະໜັງຝາຖໍ້າ, ມີພິທີກຳຝັງສົບ, ອາໄສຢູ່ໃນຖໍ້າ ມີການນຳໃຊ້ເຄື່ອງມືຫີນຫຍາບ ໂດຍການນຳໃຊ້ຫີນເຮັດເປັນອາວຸດລ່າສັດ ແລະ ເວລາຂ້າສັດກໍ່ນຳເອົາໜັງສັດມາເຮັດເຄື່ອງນຸ່ງຫົ່ມ. ມະນຸດໃນຍຸກຫີນເກົ່າດຳລົງຊີວິດດ້ວຍການລ່າສັດ ແລະ ຊອກສະແຫວງຫາພືດຜັກ ແລະ ໝາກໄມ້ເປັນອາຫານ, ມີການເພິ່ງພາອາໄສທຳມະຊາດ ແລະ ສະພາບແວດລ້ອມອ້ອມຂ້າງ ເຊິ່ງສະແດງອອກຄື: ເມື່ອຝູງສັດທີ່ລ່າເປັນອາຫານໝົດລົງກໍ່ພາກັນອົບພະຍົບຍ້າຍຖິ່ນຕາມຝູງສັດໄປເລື້ອຍໆ ການດຳລົງຊີວິດຕິດພັນກັບການສະແຫວງຫາອາຫານ, ການປ້ອງກັນຕົວຈາກສັດຮ້າຍ, ໄພທຳມະຊາດລວມໄປເຖິງການຕໍ່ສູ້ໃນໝູ່ດຽວກັນເພື່ອຄວາມຢູ່ລອດຈິ່ງເຮັດໃຫ້ການພັດທະນາເຄື່ອງມືກ່ຽວກັບການລ່າສັດໂດຍພັດທະນາເປັນເຄື່ອງມື ຫີນທີ່ສາມາດຂຸດ ແລະ ຕັດ.

ລະບົບການຢູ່ຮ່ວມສຳພັນເລີ່ມມີການຢູ່ຮ່ວມກັນເປັນຄອບຄົວແຕ່ຍັງບໍ່ທັນແມ່ນການພົວພັນແບບຊຸມຊົນບໍ່ທັນມີຜູ້ເປັນໃຫຍ່ເປັນທີ່ແນ່ນອນໃນສັງຄົມຢ່າງແທ້ຈິງ ຍ້ອນການດຳລົງຊີວິດແບບເລື່ອນລອຍເປັນອຸປະສັກ

ມະນຸດໃນຍຸກນີ້ມີແນວຄິດກ່ຽວກັບການແຕ້ມຮູບ ໂດຍສະເພາະແມ່ນການແຕ້ມຮູບສັດທີ່ເຂົາເຈົ້າລ່າ ຫຼັກຖານຢັ້ງຢືນກໍ່ຄືການຄົ້ນພົບຮູບພາບຕາມພະໜັງຂອງຖໍ້າອັລຕະມີຣະ ທາງພາກໃຕ້ຂອງປະເທດສະເປນ ເຊິ່ງເປັນຮູບງົວກະທິງຢືນຮຽງກັນເປັນແຖວ.

**ຂ. ຮ່ອງຮອຍໃນຍຸກຫີນກາງ**

ຍຸກຫີນກາງ ເປັນຊ່ວງໄລຍະເວລາທີ່ເຫດການຫຼາຍຢ່າງເກີດຂຶ້ນ, ເປັນໄລຍະເຊື່ອມຕໍ່ລະຫວ່າງຍຸກຫີນເກົ່າກັບຍຸກຫີນໃໝ່ ເປັນເວລາຈາກການປ່ຽນແປງຈາກການສະແຫວງຫາອາຫານມາເປັນການຜະລິດອາຫານເຊິ່ງແມ່ນແນວຄິດລິເລີ່ມໃນການຜະລິດກະສິກຳແຕ່ວ່າຍັງບໍ່ທັນກາຍເປັນອາຊີບທີ່ແນ່ນອນເທື່ອເພາະອາຊີບຕົ້ນຕໍກໍ່ຍັງແມ່ນການເກັບເດັດ-ລ່າເນື້ອຄືເກົ່າ. ການດຳລົງຊີວິດຍັງອາໄສທຳມະຊາດ ເລີ່ມອອກສູ່ກາງແຈ້ງ ມະນຸດປະຖົມບູຮານໄດ້ມີການນຳໃຊ້ແຜ່ນແພເພື່ອເປັນເຄື່ອງນຸ່ງຫົ່ມບວກກັບເປືອກໄມ້ ແລະ ໜັງສັດ. ໃນການປະດິດເຄື່ອງມືມີຄວາມປານີດຂຶ້ນກວ່າເກົ່າ, ສາມາດຜະລິດທະນູ, ລູກທະນູ ແລະ ເບັດຕຶກປາ.

ຮອດຕອນທ້າຍຂອງຍຸກຫີນເກົ່າຕອນປາຍເຊື່ອມໃສ່ຍຸກຫີນກາງຮູບການຈັດຕັ້ງເດີມຂອງມະນຸດປະຖົມບູຮານ (ຢູ່ເປັນຝູງ) ໄດ້ມີການປ່ຽນແປງເປັນຮູບການຈັດຕັ້ງການປົກຄອງໃໝ່ທີ່ມີຄວາມຈະເລີນກ້າວໜ້າຂຶ້ນກວ່າ

ເກົ່າຄືຮູບການຈັດຕັ້ງທາງສັງຄົມທີ່ສືບທອດສາຍເລືອດອັນດຽວກັນ, ການດຳລົງຊີວິດໃນອານາເຂດດຽວກັນ ເຊິ່ງຮູບການປົກຄອງແບບນີ້ເອີ້ນວ່າ: ສັງຄົມກົກເຫຼົ່າ ຫຼື ສັງຄົມສະຫະຊີບວົງສະກຸນສັງຄົມກົກເຫຼົ່າໄດ້ເກີດຂຶ້ນທຳອິດເອີ້ນວ່າ: ກົກມານດາສິດທິລາດ (ລະບອບມາດາທິປະໄຕ) ເຊິ່ງເປັນຍຸກແຫ່ງການເລີ່ມຕົ້ນທີ່ຜູ້ຍິງມີບົດບາດ ຫຼື ມີອຳນາດໃນສັງຄົມ ພາລະໜ້າທີ່ຂອງແມ່ຍິງນອກຈາກເກັບຜັກຫັກໜໍ່ໄມ້ຂຸດມັນມາໃຫ້ຄອບຄົວແລ້ວຍັງມີໜ້າທີ່ດູແລເບິ່ງແຍງຄອບຄົວຫຼາຍກວ່າຜູ້ຊາຍ ພ້ອມທັງເປັນຜູ້ໃຫ້ກຳເນີດລູກອີກດ້ວຍ (ການຖືພາ) ດັ່ງນັ້ນ, ຈຶ່ງເກີດມີການສົມລົດແບບລວມໝູ່ (ຜູ້ຍິງຄົນດຽວສາມາດແຕ່ງງານກັບຜູ້ຊາຍຫຼາຍຄົນ) ການສືບທອດທາງສາຍເລືອດແມ່ນສືບທອດທາງແມ່ເພາະວ່າເດັກຈະຮັບຮູ້ແຕ່ສາຍພົວພັນທາງແມ່ເທົ່ານັ້ນ ສ່ວນສາຍພົວພັນທາງພໍ່ແມ່ນບໍ່ຮັບຮູ້ (ແມ່ມີຜົວຫຼາຍ) ເຮັດໃຫ້ກຳລັງແຮງງານໃນສັງຄົມຂອງຜູ້ຍິງມີຫຼາຍກວ່າຜູ້ຊາຍ ແມ່ຈຶ່ງກາຍເປັນຜູ້ມີບົດບາດສູງໃນສັງຄົມ ແຕ່ຮູບການປົກຄອງແບບນີ້ຂະຫຍາຍຕົວທີ່ສຸດໃນຍຸກຫີນໃໝ່ປະມານ 9.000 B.c-5.000 Bc

**ຄ. ຮ່ອງຮອຍໃນຍຸກຫີນໃໝ່**

❖ **ການດຳລົງຊີວິດແບບຖາວອນ**

ການດຳລົງຊີວິດຂອງມະນຸດເວລານີ້ມີການປ່ຽນແປງຄືການດຳລົງຊີວິດແບບເຄື່ອນທີ່ໄປຕາມແຫລ່ງອາຫານເປັນການດຳລົງຊີວິດແບບຄົງທີ່ຖາວອນ; ມີການສ້າງທີ່ພັກພາອາໄສກໍ່ສ້າງບ້ານເຮືອນນັ້ນເອງເຮັດໃຫ້ຄຸນນະພາບທີ່ພັກພາອາໄສມີຄຸນນະພາບສູງຂຶ້ນ ເພາະສາມາດປ້ອງກັນໄພຂົ່ມຂູ່ຈາກທຳມະຊາດ ເຊັ່ນ: ຄວາມໜາວ, ແສງແດດ ແລະ ນ້ຳຝົນ ພ້ອມທັງສາມາດປ້ອງກັນການຄຸກຄາມຈາກສັດຮ້າຍອີກດ້ວຍ ຮູບການຈັດຕັ້ງທາງສັງຄົມຍັງແມ່ນແມ່ຍິງມີບົດບາດລື່ນຜູ້ຊາຍຄືເກົ່າ.

❖ **ການຜະລິດເຄື່ອງມື**

ກ້າວເຂົ້າສູ່ຍຸກຫີນໃໝ່ຮູບແບບໃນການຜະລິດເຄື່ອງມື-ເຄື່ອງໃຊ້ມີການພັດທະນາຂຶ້ນຫຼາຍ, ມີການປະສົມປະສານລະຫວ່າງເຕັກນິກອັນເກົ່າ ແລະ ເຕັກນິກອັນໃໝ່ເຂົ້າໃນການຜະລິດ ວັດຖຸດິບໃນການຜະລິດຍັງແມ່ນ ຫີນ, ກະດູກສັດ ແລະ ໄມ້. ໄລຍະນີ້ມີການເລື່ອຍຫີນ, ຝົນຫີນ ແລະ ສີ່ຫີນ ມາເປັນເຄື່ອງມືໃຊ້ແບບເບົາບາງ, ງ່າຍດາຍແຕ່ມີຄວາມປານີດ ແລະ ງົດງາມຂຶ້ນ ເຊັ່ນ: ດາບ, ຂວານ, ຫຼາວແຫຼມ, ມີດ, ທະນູ, ລູກສອນ ແລະ ອື່ນໆ.

❖ **ການຜະລິດກະສິກຳ ແລະ ຫັດຖະກຳ**

ເຕັກນິກໃນການຜະລິດຢູ່ໃນຍຸກຫີນໃໝ່ມີຄວາມກ້າວໜ້າມີການຈັດແບ່ງວຽກງານລະຫວ່າງຍິງ-ຊາຍໄດ້ຢ່າງຊັດເຈນ ຄື ເພດຍິງມີໜ້າທີ່ປູກຝັງ-ເກັບເດັດ, ເບິ່ງແຍງຄອບຄົວ, ລ້ຽງລູກ ສ່ວນຜູ້ຊາຍແມ່ນເຮັດໜ້າທີ່ລ້ຽງສັດ ແລະ ລ່າສັດມາລ້ຽງຄົນໃນຄອບຄົວ ເຮັດໃຫ້ສັງຄົມມີການຂະຫຍາຍຕົວ ແລະ ພັດທະນາຂຶ້ນກວ່າເກົ່າ, ມີການຢູ່ຮ່ວມກັນເປັນສັງຄົມຕາມແບບປະຊາທິປະໄຕສືບຕາມເຊື້ອສາຍທາງແມ່ຍິງ

ແນວຄິດລິເລີ່ມໃນການປູກຝັງແມ່ນມະນຸດບູຮານໄດ້ສັງເກດເຫດການທີ່ເກີດຂຶ້ນໃນເວລາທີ່ເຂົາເຈົ້າເກັບພືດຜັກ ແລະ ໝາກໄມ້ມາກິນເປັນຈຳນວນຫຼາຍ ເຮັດໃຫ້ເຫຼືອກິນຈົນຖິ້ມ ເຮັດໃຫ້ແກ່ນໝາກໄມ້ຫຼື ພືດ ງອກຂຶ້ນມາເປັນຕົ້ນ ແລະ ເຕີບໃຫຍ່ຂະຫຍາຍຕົວພືດຊະນິດທຳອິດທີ່ປູກແມ່ນ ເຂົ້າ, ພືດຕະກູນຖົ່ວ ແລະ ອື່ນໆ. ສ່ວນການລ້ຽງສັດແມ່ນເກີດຂຶ້ນຍ້ອນມະນຸດລ່າສັດມາໄດ້ຫຼາຍໆ ໂຕທີ່ຍັງມີຊີວິດເຮັດໃຫ້ເຫຼືອກິນຈຶ່ງຂັງໄວ້ແລ້ວເອົາອາຫານໃຫ້ສັດກິນ ເມື່ອຂັງໄວ້ຫຼາຍໆໂຕ ເຮັດໃຫ້ສັດມີການເກີດແມ່ແຜ່ລູກຫຼາຍຂຶ້ນ ສັດທີ່ເຂົາເຈົ້າລ້ຽງທຳອິດແມ່ນ ໝາ,ໝູ , ງົວ, ຄວາຍ ແລະ ກະຕ່າຍ.

ເວລານີ້ໄດ້ປະກົດມີໜໍ່ແໜງຂອງຫັດຖະກຳເກີດຂຶ້ນເຊັ່ນ: ການປັ້ນໝໍ້, ເຜົາດິນ, ຕ່ຳຫູກ ນອກນີ້ຍັງມີການຄວັດ ການແຕ້ມຕາມຝາຂອງພະໜັງໃນຖ້ຳ, ການເອຢ້ອງ ແລະ ການປະດັບປະດາ ເວລານີ້ຕົວອັກສອນກໍ່ໄດ້ກຳເນີດຂຶ້ນ ການກຳເນີດຕົວອັກສອນເປັນຂີດໝາຍແຫ່ງປະຫວັດສາດ.

## 2. ຮ່ອງຮອຍປະຫວັດສາດໃນຍຸກໂລຫະ

ຍຸກໂລຫະເປັນຍຸກທີ່ມະນຸດຮູ້ຈັກນຳໃຊ້ໂລຫະເຂົ້າໃນການປະດິດເຄື່ອງມື-ເຄື່ອງໃຊ້ ໂລຫະຊະນິດທຳອິດທີ່ນຳມາໃຊ້ແມ່ນທອງແດງປະມານ 4.000 Bc

ຍຸກໂລຫະແບ່ງອອກເປັນ 3 ຍຸກຍ່ອຍໂດຍອີງໃສ່ຊະນິດຂອງໂລຫະທີ່ໃຊ້ເຂົ້າໃນການຜະລິດເຄື່ອງມື-ເຄື່ອງໃຊ້.

- ຍຸກທອງແດງ
- ຍຸກທອງສຳລິດ
- ຍຸກເຫຼັກ

➢ **ຍຸກທອງແດງ**

ເມື່ອປະມານ 4.000 ປີກ່ອນ ຄ.ສ ມະນຸດທີ່ດຳລົງຊີວິດຢູ່ບໍລິເວນລ້ອງແມ່ນ້ຳຕີເກີ-ເອີພັສ ໄດ້ຮູ້ຈັກນຳໃຊ້ທອງແດງກ່ອນໝູ່ໃນໂລກໂດຍນຳເອົາທອງແດງມາປະດິດເປັນອາວຸດປະຫວັດສາດເອີ້ນໄລຍະນີ້ວ່າຍຸກທອງແດງເຖິງວ່າຈະມີການຄົ້ນພົບທອງແດງແລ້ວກໍ່ຕາມແຕ່ຄວາມສາມາດ ແລະ ເຕັກນິກໃນການນຳເອົາທອງມາປະດິດເປັນເຄື່ອງມືອອກແຮງງານຂອງມະນຸດເຮົາແມ່ນຍັງມີຄຸນນະພາບຕ່ຳດັ່ງນັ້ນ, ຈຶ່ງມີການນຳໃຊ້ກະດູກສັດ, ໄມ້ ແລະ ຫີນເຂົ້າໃນການປະດິດເຄື່ອງມື-ເຄື່ອງໃຊ້ເພິ່ນຈຶ່ງເອີ້ນຍຸກນີ້ວ່າ: ຍຸກ ຫີນ-ທອງ

➢ **ຍຸກທອງສຳລິດ**

ຍຸກທອງສຳລິດແມ່ນຍຸກທີ່ມະນຸດຮູ້ຈັກນຳໃຊ້ທອງແດງປະສົມກັບໂລຫະຊະນິດອື່ນເພື່ອເຮັດໃຫ້ທອງມີຄວາມແຂງແກ່ນ, ທົນທານ ແລະ ໃຊ້ງານໄດ້ເຫິງນານ

ພາຍຫຼັງທີ່ມີການຄົ້ນພົບທອງແດງແລ້ວມະນຸດເຮົາກໍ່ພະຍາຍາມຊອກຫາວິທີໃນການນຳໃຊ້ທອງຢ່າງມີຄຸນນະພາບເນື່ອງຈາກວ່າທອງແດງເປັນໂລຫະທີ່ເປັນເນື້ອອ່ອນເຮັດໃຫ້ເຄື່ອງມືທີ່ເຮັດດ້ວຍທອງມີຄວາມແຂງແກ່ນ, ທົນທານ ແລະ ມີຄຸນນະພາບໃນການໃຊ້ງານສູງຂຶ້ນກວ່າເກົ່າ ຕໍ່ມາປະມານ 3.500 ປີກ່ອນຄ.ສ ມະນຸດທີ່ອາໄສຢູ່ບໍລິເວນເຂດ Susa ປະເທດອີຣານ ແລະ ເຂດເມໂຊໂປຕາມີ ປະເທດອີຣັກ ໄດ້ນຳເອົາທອງແດງມາປະສົມກັບໂລຫະອື່ນ ເຊິ່ງໂລຫະຊະນິດທຳອິດທີ່ມາປະສົມກັບທອງແດງ ແມ່ນ ກົ່ວ ເພິ່ນເອີ້ນຍຸກນີ້ວ່າຍຸກທອງ-ກົ່ວ ຫຼື ຍຸກທອງສຳລິດ ນອກຈາກກົ່ວແລ້ວມະນຸດບູຮານຍັງນຳເອົາໂລຫະອື່ນອີກມາປະສົມກັບທອງແດງ ເພື່ອເພີ່ມຄວາມແຂງແກ່ນຂອງທອງແດງ ເຊັ່ນ: ມັງການ, ຟົດສະຟໍ ແລະ ອາລູມິນີອອມ.

ຂັ້ນຕອນໃນການເຮັດທອງສຳລິດຂ້ອນຂ້າງຫຍຸ້ງຍາກສັບສົນນັບທັງການຊອກຫາແຫຼ່ງແຮ່ທາດ, ການກະກຽມທາດ ແລະ ການປະສົມທາດເຂົ້າເປົ້າຫຼອມ, ເຄື່ອງມື-ເຄື່ອງໃຊ້ທີ່ເຮັດດ້ວຍທອງສຳລິດໄດ້ແກ່ ຂວານ, ຫອກ, ພາຊະນະເຄື່ອງໃຊ້, ເຄື່ອງປະດັບ-ເຄື່ອງເອ້ຍ້ອງເຊັ່ນ: ປ້ອງແຂນ, ຕຸ້ມຫູ ແລະ ໝາກເບັດ(ໝາກຕຸ້ມ) ນອກຈາກເຄື່ອງມືທອງສຳລິດແລ້ວເພິ່ນຍັງຄົ້ນພົບເຄື່ອງປັ້ນດິນເຜົາ ແລະ ເຄື່ອງມືທີ່ເຮັດດ້ວຍແຮ່ທາດອື່ນອີກ.

ໃນຍຸກນີ້ຊີວິດການເປັນຢູ່ຂອງມະນຸດມີການປ່ຽນແປງໂດຍສະເພາະດ້ານສັງຄົມ ແລະ ດ້ານການປົກຄອງຊຸມຊົນກະສິກອນໄດ້ມີການຂະຫຍາຍຕົວຈົນກາຍມາເປັນສັງຄົມເມືອງ ຫຼື ຊຸມຊົນເມືອງ ມີການແບ່ງຖານະໃນສັງຄົມຕາມຄວາມສາມາດ ຕົວຢ່າງ ກຸ່ມອາຊີບມີການຈັດລະບຽບການເຮັດວຽກເພື່ອຄວາມໝັ້ນຄົງຂອງວຽກງານກໍ່ຄືຄວາມໝັ້ນຄົງໃນສັງຄົມ ຈຸດປະສົງກໍ່ເພື່ອໃຫ້ສັງຄົມມີຄວາມປອດໄພ ແລະ ມີຄວາມສະດວກສະບາຍຫຼາຍຂຶ້ນກວ່າເກົ່າ. ເຊິ່ງເປັນຈຸດລິເລີ່ມຂອງການກ້າວໄປສູ່ການຈັດລະບຽບການປົກຄອງແບບນະຄອນລັດໃນເວລາຕໍ່ມາ.

ແຫຼ່ງອະລິຍະທຳທີ່ສຳຄັນຂອງໂລກ ຫຼາຍແຫ່ງກໍ່ໄດ້ກຳເນີດ ແລະ ພັດທະນາຕັ້ງແຕ່ຍຸກທອງສຳລິດ ເຊັ່ນ: ອະລິຍະທຳເຂດເມໂຊຕາມີ, ອະລິຍະທຳເຂດລ້ອງແມ່ນ້ຳນິນ(ເອຢິບ) ອະລິຍະທຳເຂດລ້ອງແມ່ນ້ຳສິນທຸ(ອິນເດຍ) ແລະ ອະລິຍະທຳເຂດລ້ອງແມ່ນ້ຳຮວງໂຫ (ຈີນ).

➢ **ຍຸກເຫຼັກ**

ເມື່ອປະມານ 1.000 ປີກ່ອນຄ.ສ ມະນຸດໄດ້ຄົ້ນພົບເຫຼັກ ແລະ ນຳໃຊ້ເຫຼັກເຂົ້າໃນການຜະລິດເຄື່ອງມືອອກແຮງງານ ແລະ ເຄື່ອງໃຊ້ໃນຊີວິດປະຈຳວັນ. ເຊິ່ງເປັນຊ່ວງ, ເວລາແຫ່ງການພັດທະນາທາງດ້ານເຕັກໂນໂລຊີການຜະລິດເຄື່ອງມືໂດຍນຳໃຊ້ໂລຫະກໍ່ຄືເຫຼັກ ເຊິ່ງກຳມະວິທີໃນການນຳເອົາເຫຼັກມາແປຮູບເປັນເຄື່ອງມືແມ່ນໃຊ້ວິທີການຫຼອມເຫຼັກດ້ວຍຄວາມຮ້ອນມີອຸນຫະພູມສູງເພື່ອເຮັດໃຫ້ເຫຼັກອ່ອນລົງຈຶ່ງສາມາດແປຮູບເປັນເຄື່ອງມືຕາມຄວາມຕ້ອງການ ເຖິງວ່າກຳມະວິທີການນຳເອົາເຫຼັກມາໃຊ້ນັ້ນຈະຫຍຸ້ງຍາກກໍ່ຕາມ ແຕ່ເຫຼັກກໍ່ເປັນໂລຫະທີ່ມີຄວາມແຂງແກ່ນ ແລະ ທົນທານກວ່າທອງສຳລິດ ກຸ່ມຄົນທຳອິດທີ່ສາມາດນຳໃຊ້ເຫຼັກກ່ອນໝູ່ຂອງໂລກແມ່ນອານາຈັກຂອງເຜົ່າຮິດຕິດທີ່ເຄື່ອນມາຈາກເຂດອານາໂຕລີ(ປະເທດຕວກກີໃນປັດຈຸບັນ)ແລ້ວມາດຳລົງຊີວິດຢູ່ຕາເວັນອອກໃກ້(ເຂດເມໂຊໂປຕາມີ)

ການນຳໃຊ້ເຫຼັກເຂົ້າໃນການຜະລິດເຄື່ອງມື-ເຄື່ອງໃຊ້ ໃນການອອກແຮງງານນັ້ນໄດ້ເຮັດໃຫ້ວຽກງານໃນຂະແໜງອື່ນມີການຂະຫຍາຍຕົວເຊັ່ນ: ເກີດມີການປ່ຽນແປງ, ຫັດຖະກຳ ແລະ ກະສິກຳ ໂດຍສະເພາະແມ່ນຂະແໜງກະສິກຳ ໄດ້ມີການບຸກເບີກເນື້ອທີ່ທຳການຜະລິດ ພ້ອມທັງມີການນຳໃຊ້ເຄື່ອງມືທີ່ທັນສະໄໝ ແລະ ມີຄຸນນະພາບກວ່າເກົ່າມັນມີຄວາມຈຳເປັນຕ້ອງໃຊ້ ຜູ້ທີ່ມີກຳລັງວັງຊາທີ່ແຂງແຮງນັ້ນກໍ່ຄືກຳລັງແຮງງານຂອງຜູ້ຊາຍນັ້ນເອງ ເຮັດໃຫ້ບົດບາດໃນສັງຄົມຂອງເພດຍິງຕົກຕ່ຳລົງ ແລະ ປ່ຽນແທນມາເປັນເພດຊາຍ. ສາເຫດເນື່ອງມາຈາກວຽກງານ ແລະ ວິຊາອາຊີບຂອງເພດຍິງກໍ່ບໍ່ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ຫຼື ຄອບຄົວອີກແລ້ວ ໂດຍສະເພາະແມ່ນການເກັບເດັດ ແລະ ປູກຝັງຈຶ່ງແຍກອອກມາຈາກການເຮັດການຜະລິດ ປ່ຽນມາເປັນການເບິ່ງແຍງດູແລເຮືອນຊານແທນ ສຸດທ້າຍກຳມະສິດໃນການຄອບຄອງອິງຕະກູນໄດ້ຕົກມາເປັນຂອງຜູ້ຊາຍ ເຊິ່ງເປັນຈຸດກຳເນີດຂອງລະບອບບິດາສິດທິລາດການພົວພັນຂອງຄົນໃນສັງຄົມກໍ່ຄືຄອບຄົວມີການປ່ຽນແປງລູກຈະສືບເຊື້ອສາຍທາງພໍ່ ການຈັດຕັ້ງສັງຄົມມີລັກສະນະສັບຊ້ອນ, ມີການເອົາລັດເອົາປຽບ ແລະ ຂູດຮີດກັນ ເຊິ່ງຮູບແບບຂູດຮີດທຳອິດ ແມ່ນຂູດຮີດທາງເພດຈາກນັ້ນກ້າວໄປສູ່ການຂູດຮີດທາງຊົນຊັ້ນ.

ສະຫຼຸບແລ້ວ ຍຸກເຫຼັກມີຄວາມແຕກຕ່າງຈາກຍຸກທອງສຳລິດຫຼາຍປະການຄື: ການພັດທະນາເຕັກໂນໂລຊີຜະລິດເຄື່ອງມືດ້ວຍເຫຼັກເຮັດໃຫ້ຜົນຜະລິດເພີ່ມຂຶ້ນ, ການຜະລິດອາວຸດດ້ວຍເຫຼັກເຮັດໃຫ້ກອງທັບມີຄວາມແຂງແກ່ນນຳໄປສູ່ການພັດທະນາລັດຈົນກາຍເປັນລັດທີ່ມີຄວາມເຂັ້ມແຂງທາງການທະຫານ ແລະ ສາມາດນຳເອົາກຳລັງຍຶດຄອງສັງຄົມອື່ນເຊິ່ງເປັນການເລີ່ມຕົ້ນຂອງການຂະຫຍາຍອານາເຂດຣຸກຮານອານາຈັກອື່ນໃນໄລຍະຕໍ່ມາ.

## 3. ຮ່ອງຮອຍປະຫວັດສາດຢູ່ແຂວງຫຼວງພະບາງ

ຢູ່ໃນຂອບເຂດແຂວງຫຼວງພະບາງນັກບູຮານວິທະຍາໄດ້ຄົ້ນພົບວັດຖຸບູຮານຢູ່ຫຼາຍແຫ່ງເຊັ່ນ: ຢູ່ຖ້ຳຫົວພູເພິ່ນຄົ້ນພົບຂວັນຫີນ, ຕໍ່ມາເພິ່ນໄດ້ຈັດເຂົ້າໃນກຸ່ມວັດທະນະທຳຮົວບິງ(ແມ່ນຊື່ຂອງບູຮານສະຖານຢູ່ຫວຽດນາມເຊິ່ງເປັນບ່ອນທຳອິດທີ່ຄົ້ນພົບ ມີອາຍຸປະມານ 80.000 ຫາ 60.000 ປີກ່ອນ ຄ ສ ) ຈົກຫີນ, ໄຫຫີນເຜົາ, ເຄື່ອງທອງສຳລິດ (ບົ້ງໂອ, ກະດິ່ງ, ປອກແຂນ, ເຄື່ອງເຮັດດ້ວຍເຫຼັກ, ໃບຫອກ, ກ່ຽວ, ຕະປູ, ມີດ, ເຄື່ອງເອ້.) ນອກນັ້ນຍັງຄົ້ນພົບເຫັນຢູ່ຜາຊຽງທອງ ແລະ ຢູ່ບາງທ້ອງຖິ່ນເປັນຕົ້ນ ບ້ານຊຽງ, ບ້ານເຫຼັກ, ບ້ານໂພນເໜືອ, ບ້ານຜາໂຄມເພິ່ນຄົ້ນພົບເຄື່ອງມືທີ່ເຮັດດ້ວຍກະດູກສັດ ແລະ ກ້າງປາ ເຊັ່ນ: ເບັດ ແລະ ສິ່ວ,ຢູ່ບ້ານນາພາກຕາເວັນຕົກຂອງຫຼວງພະບາງຢູ່ຖ້ຳແອ່ນ ຫ່າງຈາກຫຼວງພະບາງປະມານ 10 ກິໂລແມັດກໍ່ຄົ້ນພົບເຄື່ອງມືທີ່ເຮັດດ້ວຍຫີນຝົນທີ່ນຳໃຊ້ຢູ່ໃນສັງຄົມຫີນໃໝ່.

ຄຽງຄູ່ກັນນີ້ຍັງຄົ້ນພົບກະດູກແລະແຂ້ວຄົນ, ແຂ້ວສັດ...ຢູ່ຖ້ຳຫົວພູເຊິ່ງສັນນິຖານວ່າໃນໄລຍະຕົ້ນເປັນທີ່ອາໄສແບບຖາວອນຂອງມະນຸດບູຮານສະໄໝສັງຄົມລ່າສັດ ແລະ ເກັບເດັດຕາມທຳມະຊາດ. ໃນໄລຍະຕໍ່ມາລະຫວ່າງ10.000 ຫາ 500 ປີ ກ່ອນ ຄ ສ ມະນຸດບູຮານໄດ້ໃຊ້ຖ້ຳນີ້ເປັນບ່ອນຝັງໄຫກະດູກ(ປ່າຊ້າ).

ທີ່ຖ້ຳນາງແອ່ນເພິ່ນໄດ້ຄົ້ນພົບສະຖານທີ່ຝັງສົບສະໄໝຫີນຝົນ,ເຊິ່ງໃນນັ້ນໄດ້ຄົ້ນພົບໄຫກະດູກ, ຂວານຫີນ.ຢູ່ໃນຖ້ຳແຫ່ງນີ້ຍັງໄດ້ຄົ້ນພົບຂວັນຫີນອີກຈຳນວນໜຶ່ງ, ມາໃນປີຄສ 1983 ນັກບູຮານຄະດີໄດ້ຄົ້ນພົບຕັ່ງເຈື່ອງ(

ຄ້ອງບັ້ງຫີນ) ຢູ່ເຂດພູເຂົາລີບ ແລະ ພູສາມສຸມເຊິ່ງສັນນິຖານວ່າແມ່ນພວກເຄື່ອງໃຊ້ທີ່ເຮັດດ້ວຍຫີນທີ່ມີອາຍຸເກົ່າແກ່ບໍ່ຕໍ່າກວ່າ 400 ປີກ່ອຍ ຄ ສ




**ຮູບທີ1: ຮູບຄ້ອງບັ້ງ**

## 4. ຮ່ອງຮອຍປະຫວັດສາດຢູ່ແຂວງຫົວພັນ

ເປັນແຂວງໜຶ່ງທີ່ມີຮ່ອງຮອຍບູຮານຄະດີທີ່ເກົ່າແກ່ໃນປີຄສ 1936 ນັກບູຮານຄະດີຊາວຝຣັ່ງຊື່ວ່າໂຊແຣງ ແລະ ຟໂຣມາເຍ ໄດ້ຄົ້ນພົບສິ້ນສ່ວນກະດູກບູຮານ ແລະ ຂວານຫີນຈໍານວນ 150 ດວງ. ຜ່ານການພິສູດເຂົາເຈົ້າໄດ້ຢັ້ງຢືນວ່າ ເປັນກະດູກຂອງມະນຸດບູຮານທີ່ເກົ່າແກ່ກວ່າໝູ່ໝົດທີ່ພົບເຫັນໃນອິນດູຈີນ ແລະ ຖືວ່າເປັນມະນຸດທີ່ອາໃສຢູ່ໃນຂົງເຂດອາຊີອາຄະເນລຸ້ນປະຖົມມະລຶກ.

ຢູ່ເມືອງຫົວເມືອງແຂວງຫົວພັນເພິ່ນໄດ້ຄົ້ນພົບສຸສານຄົນສະໄໝບູຮານເຊິ່ງເຮັດດ້ວຍຫີນສ້າງເປັນອຸມົງໃນພື້ນດິນ. ສ່ວນຢູ່ໜ້າດິນມີຫີນຕັ້ງເປັນຈໍານວນຫຼວງຫຼາຍ ຫຼື ຍັງເອີ້ນວ່າກຸ່ມເສົາຫີນ ທີ່ເຮັດດ້ວຍຫີນກະດານ ມີຮູບຊົງຄ້າຍຄື ແຜ່ນສີລາເລກ, ແຜ່ນຕໍ່າສຸດແທກໄດ້ປະມານ 50 ຊັງຕີແມັດ, ແຜ່ນສູງສຸດແທກໄດ້ປະມານ2,50 ແມັດ,ໜາປະມານ 10-15 ຊັງຕີແມັດ. ບ່ອນທີ່ມີ

ຫຼາຍກວ່າໝູ່ມີເຖິງ 150 ແຜ່ນຢູ່ບ່ອນດຽວເສົາຫີນ ຫຼື ຫີນຕັ້ງນີ້ຍັງຄົ້ນພົບຢູ່ເມືອງເປີນອີກເຊິ່ງມີປະມານ 430 ແຜ່ນ.

ຈາກນີ້ນັກບູຮານວິທະຍາຊາວຝຣັ່ງຊື່ໂກລານີໄດ້ຄົ້ນພົບແຂ້ວຄົນບູຮານຢູ່ຖ້ໍາປາລອຍ (ຜາເລີຍ) ມີຮູບຮ່າງລັກສະນະຄ້າຍຄືແຂ້ວມະນຸດປັກກິ່ງ(ຊີນານຕົບ), ສະນັ້ນຈຶ່ງສັນນິຖານວ່າແຂ້ວມະນຸດບູຮານຢູ່ຖ້ໍາປາລອຍ ອາດແມ່ນແຂ້ວມະນຸດບູຮານສະໄໝຊີນານຕົບເຊິ່ງມີອາຍຸປະມານ 6 ແສນ ຫາ 5 ແສນປີ ກ່ອນ ຄ ສ.

## 5. ຮ່ອງຮອຍປະຫວັດສາດຢູ່ແຂວງຊຽງຂວາງ

ເປັນແຂວງໜຶ່ງມີວັດຖຸບູຮານເປັນຢູ່ຢ່າງຫຼວງຫຼາຍ ແລະ ມີຊື່ສຽງໂດ່ງດັງໄປທົ່ວໂລກ. ໂດຍສະເພາະກຸ່ມໄຫຫີນຊຽງຂວາງນີ້ ໄດ້ຈັດເຂົ້າໃນວັດທະນະທໍາຫີນໃຫຍ່ ຫຼື ຫີນໂຕະ ເຊິ່ງມີອາຍຸເກົ່າແກ່ອາດສ້າງຂຶ້ນໃນລະຫວ່າງປີ 400 ກ່ອນ ຄ.ສ ໄຫຫີນທີ່ພູພຽງຊຽງຂວາງຍັງຢັງຢາຍຢູ່ຫຼາຍແຫ່ງ ເຊັ່ນ ບ້ານຊຽງດີ , ບ້ານສ່ວງ, ບ້ານບານ, ເມືອງສຸ້ຍ, ເມືອງຄໍາ, ນາມອນ ແລະ ບ້ານນາດາວ. ໄຫຫີນມີນໍ້າໜັກຕັ້ງແຕ່ 3 ໂຕນຂຶ້ນໄປ ກຸ່ມທີ່ຢູ່ເຂດບ້ານສ່ວງມີໄຫຫີນ 200 ໜ່ວຍ, ໜ່ວຍທີ່ໃຫຍ່ທີ່ສຸດມີນໍ້າໜັກປະມານ 15 ໂຕນ, ລວງສູງວັດແທກໄດ້ 3,25 ແມັດ, ເສັ້ນຜ່າໃຈກາງປາກໄຫ ຫຼື ລວງກວ້າງວັດແທກໄດ້ 3 ແມັດ ສາມາດບັນຈຸຄົນໄດ້ 6 ຄົນ ໄຫຫີນລວມທັງໝົດມີປະມານ 630 ໜ່ວຍ. ເພິ່ນໄດ້ສັນນິຖານວ່າໄຫຫີນທີ່ບັນຈຸສົບຄົນຕາຍ ຫຼື ເປັນສຸສານ. ເພາະຢູ່ເຂດໃກ້ກັບໄຫຫີນ ເພິ່ນໄດ້ຄົ້ນພົບໂຄງກະດູກ, ປ່ຽງຫີນຝົນ, ໝໍ້ນ້ອຍ (2-3 ຊັງຕີແມັດ) ທີ່ໃຊ້ໃນພິທີກໍາ ພ້ອມທັງເຄື່ອງໃຊ້ສອຍທີ່ເຮັດດ້ວຍ

ທອງ ສຳລິດ ແລະ ເຫຼັກ, ພາຊະນະເຄື່ອງປັ້ນດິນເຜົາ, ປອກແຂນ, ມີດ, ພ້າ, ຫມາກປັດ....ຈາກບັນດາຮູບຮ່າງລັກສະນະໄຫຫີນທີ່ກ່າວມານັ້ນ ພວກເຮົາສັນນິຖານໄດ້ວ່າ ເທັກນິກໃນການເລື່ອຍຫີນ, ເຈາະຫີນໃນສະໄໝນັ້ນສູງສົມຄວນ.

ນອກນີ້ເພິ່ນໄດ້ຄົ້ນພົບເຄື່ອງມືທີ່ເຮັດດ້ວຍທອງສຳລິດ ແລະ ເຫຼັກທີ່ບ້ານອ່າງຊຽງຂວາງ

**6. ຮ່ອງຮອຍປະຫວັດສາດຢູ່ແຂວງຄຳມ່ວນ**

ນັກບູຮານຄະດີຊາວຝຣັ່ງຊື່ທ່ານໂກລານີໄດ້ຄົ້ນພົບວັດຖຸບູຮານຢູ່ເມືອງມະຫາໄຊເຊັ່ນ: ຂວານຫີນມີບ່າ 29 ດວງ, ເຄື່ອງປັ້ນດິນເຜົາ ແລະ ເປືອກຫອຍທີ່ຝົນລະອຽດເຫຼື້ອມງາມປະມານ 8000ອັນ. ນອກນີ້ມີກຸ່ມຊ້າງຫີນຢູ່ຕາມແສງຕົ່ງ ເມືອງຍົມມະລາດ ແລະ ກຸ່ມນົກຍຸງຢູ່ຕາແສງວຽງເມືອງຍົມມະລາດ. ບູຮານສະຖານທີ່ທັງສອງແຫ່ງນີ້ໄດ້ຖືກຈັດເຂົ້າໃນວັດທະນະທຳຫີນໃໝ່.

ນອກຈາກນີ້ ຢູ່ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກນັກບູຮານຄະດີຍັງຄົ້ນພົບຄ້ອງທອງສຳລິດ ຫຼືເອີ້ນວ່າ "ຄ້ອງບັ້ງທອງສຳລິດດົງເຊີນ" ເອີ້ນຕາມຊື່ ບັ້ງທອງສຳລິດ ໜ່ວຍທຳອິດ ທີ່ຄົ້ນພົບ ຢູ່ເຂດດົງເຊີນແຂວງແທງຮອາ (ຫວຽດນາມປັດຈຸບັນ). ເຊິ່ງມີອາຍຸລະຫວ່າງ 300 ປີ ກ່ອນຄ.ສ



**ຮູບທີ2: ຄ້ອງບັ້ງທອງສາລິດດົງເຊີນ**

ນອກຈາກແຫລ່ງວັດຖຸບູຮານທີ່ກ່າວມາຂ້າງເທິງນັ້ນແລ້ວ, ຍັງມີອີກຫຼາຍແຫ່ງທີ່ຍັງບໍ່ທັນຂຸດຄົ້ນເທື່ອ. ສ່ວນແຫ່ງທີ່ຂຸດຄົ້ນແລ້ວນັ້ນ ກໍ່ບໍ່ໄດ້ທຳການວິໄຈລະອຽດເທື່ອ ເຖິງຢ່າງໃດກໍ່ຕາມຈາກບັນດາຫຼັກຖານທາງບູຮານຄະດີທີ່ກ່າວມານັ້ນໄດ້ຢັ້ງຢືນໃຫ້ພວກເຮົາເຫັນວ່າ ແແຜ່ນດິນລາວໄດ້ມີມະນຸດບູຮານອາໄສຢູ່ ມາຕັ້ງແຕ່ຍຸກຫີນເກົ່າຕອນຕົ້ນ ໃນລະຫວ່າງ 6 ແສນຫາ 5 ແສນປີກ່ອນ ຄ.ສ ເຂົາເຈົ້າຕໍ່ສູ້ກັບໄພທຳມະຊາດ, ອາໄສຢູ່ຕາມເຫງີບຫີນ, ໃນຖ້ຳ, ດຳລົງຊີວິດດ້ວຍການລ່າເນື້ອ ແລະ ເກັບເດັດ, ປະດິດເຄື່ອງມືດ້ວຍຫີນແບບງ່າຍດາຍ. ຕໍ່ມາໄດ້ມີການພັດທະນາສາມາດຜະລິດເຄື່ອງມືດ້ວຍໂລຫະ. ໂດຍເພາະແມ່ນທອງ ແລະ ຕໍ່ມານຳໃຊ້ເຫຼັກເຂົ້າໃນການປະດິດເຄື່ອງມືຜ່ານຂະບວນວິວັດຫຼາຍແສນປີນັ້ນ. ສັງຄົມບູຮານກໍ່ກ້າວໄປສູ່ຮູບການຈັດຕັ້ງທີ່ສູງກວ່າເກົ່າຄືສັງຄົມກົກເຫຼົ່າແລ້ວກ້າວໄປເຖິງສັງຄົມຊົນຊັ້ນທີ່ເອົາລັດເອົາປຽບກັນຢູ່ໃນສັງຄົມ. ຈາກນັ້ນກ້າວໄປສູ່ການກຳເນີດລັດ, ນັ້ນແມ່ນບັນດາເມືອງລາວບູຮານທີ່ຈັດຕັ້ງກັນຂຶ້ນຢູ່ຕາມລ້ອງແມ່ນ້ຳຂອງ ແລະ ສາຂາຂອງແມ່ນ້ຳຂອງ.

**7. ຮ່ອງຮອຍປະຫວັດສາດຢູ່ນະຄອນຫຼວງວຽງຈັນ**

ນັກບູຮານຄະດີໄດ້ຄົ້ນພົບສະຖານບູຮານເຫຼົ່າປາໂກ (ເມືອງໄຊທານີໃນປັດຈຸບັນ). ຢູ່ແຫ່ງນີ້ເພິ່ນໄດ້ຄົ້ນພົບເຄື່ອງມືທີ່ເຮັດດ້ວຍທອງ, ເຫຼັກ (ຂວານ, ມີດ...) ຕາມສັນນິຖານໃຫ້ຮູ້ວ່າ ຮ່ອງຮອຍເຫຼົ່າປາໂກນີ້ ແມ່ນສະແດງເຖິງສັງຄົມກະເສດຕະກຳ ແລະ ຫັດຖະກຳທີ່ຂະຫຍາຍຕົວແລ້ວ.

# ບົດທີ 2

# ຄວາມເປັນມາຂອງຄໍາວ່າລາວ ແລະ ຊົນຊາດລາວ

## I. ຄວາມໝາຍແລະຄວາມເປັນມາຂອງຄໍາວ່າລາວ

### 1. ບັນດາທັດສະນະກ່ຽວກັບຄໍາວ່າລາວ

ກົກເຄົ້າຂອງຄໍາວ່າ”ລາວ”ກໍ່າເນີດມາຈາກໃສ? ເປັນຫຍັງຈິ່ງເອີ້ນວ່າ”ລາວ” ບັນຫາດັ່ງກ່າວບໍ່ສາມາດຢັ້ງຢືນໄດ້ແນ່ນອນແຕ່ໄດ້ມີນັກປະຫວັດສາດຫຼາຍທ່ານໃຫ້ທັດສະນະແຕກຕ່າງກັນດັ່ງນີ້:

- ໃນພົງສະວະດານຊາດໄທຂອງຫຼວງວິຈິດວາທະການໄດ້ກ່າວໄວ້ວ່າ “ລາວ” ມາຈາກຄໍາວ່າ “ລົວະ” ຫຼື “ລະວາ” ເຊິ່ງເປັນຊື່ຂອງຄົນຊາດໜຶ່ງທີ່ຕັ້ງຖິ່ນຖານໃນດິນແດນແຫ່ງນີ້ມາກ່ອນ.
- ໜັງສືຂຸນບູລົມ ຣາຊາທິລາດ ກ່າວໄວ້ວ່າ ຊົນຊາດລາວເຮົາກໍາເນີດມາຈາກນໍ້າເຕົ້າປຸງ(ໃຫຍ່) ເຊິ່ງຄໍາບາລີເອີ້ນນໍ້າເຕົ້າປຸງວ່າ “ລາວ” ດັ່ງນັ້ນ ຄົນລາວຈິ່ງເອີ້ນນາມຕົນເອງວ່າ “ລາວ”ຕາມຊື່ຂອງໝາກນໍ້າເຕົ້າ.

- ພະຍາອະນຸມານ ຣາຊະທົນ ໄດ້ກ່າວໄວ້ໃນຕຳນານເລື່ອງຊາດໄທວ່າ ກ່ອນຈະມີຊື່"ລາວ" ແມ່ນມີເລື່ອງກ່າວໄວ້ດັ່ງນີ້: ແຕ່ກ່ອນມີກຸ່ມຄົນຕັ້ງຖິ່ນຖານຢູ່ຕາມລ້ອງແມ່ນ້ຳຂອງ ຂ້າງພູເຂົາ ໃນເຂດມົນທົນເສສອນຂອງຈີນໃນທຸກວັນນີ້. ໃນກຸ່ມຄົນພວກນີ້ມີຍິງໜຶ່ງຄົນມີລູກຊາຍ 9 ຄົນ . ໃນເວລາທີ່ລາວຈະມີລູກຊາຍຄົນທີ່ 9 ນັ້ນ ນາງໄດ້ໄປສ້ອນເອົາປາຕາມລຽບແຄມຝັ່ງແມ່ນ້ຳຂອງ ແລະ ໃນນັ້ນປາກົດມີຂອນໄມ້ເປັນເກັດຊາມາພາດເອົາຂາຂອງນາງ. ຕໍ່ມານາງກໍ່ໄດ້ຖືພາ ແລ້ວໃຫ້ກຳເນີດລູກຊາຍຄົນທີ 9 . ເມື່ອລູກໃຫຍ່ພໍແລ່ນໄດ້ນາງກໍ່ພາລູກທັງ 9 ໄປສ້ອນເອົາປາລຽບຕາມແຄມຝັ່ງແມ່ນ້ຳຂອງອີກ. ໃນນັ້ນໄດ້ມີນາກໂຕໜຶ່ງຮ້ອງມາຖາມນາງວ່າ "ລູກເຮົາຢູ່ໃສ" ນາງມີຄວາມຕົກໃຈຈຶ່ງຮ້ອງຂຶ້ນວ່າ " ເກົ້າຫຼົງ" ແລ້ວກໍ່ແລ່ນໜີໄປພ້ອມກັບລູກຜູ້ໃຫຍ່, ສ່ວນລູກຜູ້ນ້ອຍຄົນທີ 9 ນັ້ນ ບໍ່ສາມາດແລ່ນໜີໄປທັນໝູ່ໄດ້ນາກໂຕນັ້ນກໍ່ເລີຍແລບລີ້ນເລຍຫຼັງເດັກຊາຍຄົນນັ້ນ ຕໍ່ມາເມື່ອຊາຍທັງເກົ້າໃຫຍ່ຂຶ້ນມາແລ້ວມີຄອບຄົວທຸກຄົນ, ກຸມມານຄົນທີ່ 9 ເປັນຜູ້ມີປັນຍາສະຫຼາດກວ່າໝູ່ ແລະ ເປັນຫົວໜ້າຄອບຄົວສືບໝູ່ຕໍ່ມາ, ໃນພົງສະດານຈີນເອີ້ນຊາຍທັງ 9 ນີ້ວ່າ "ພວກລີ"  ແລະ ເອີ້ນເມືອງຊາຍທັງ 9 ວ່າ "ປະເທດຈີກ" ໃນລະຫວ່າງປີ ກ່ອນ ພ.ສ 2055 ນັ້ນປະເທດພວກລີ 9 ເມືອງ ເຊິ່ງເປັນອ້າຍນ້ອງກັນນັ້ນໄດ້ທາສົງຄາມກັບຈີນເປັນການໃຫຍ່. ດັ່ງຄຳວ່າ "ຫລົ້ງ" ກັບ "ລີ" ຄືງແມ່ນຄຳດຽວກັນ. ຕໍ່ມາສຽງ "ລີ"ເລີຍປ່ຽນມາເປັນ "ລຸງ" ແລະ ປ່ຽນມາເປັນ" ລວງ" ຕໍ່ມາເລີຍເປັນ "ລາວ".
- ມີນັກປາດຫຼາຍທ່ານໄດ້ໃຫ້ທັດສະນະຄຳວ່າ "ລາວ" ແມ່ນຄຳດຽວຂອງຄຳວ່າ "ດາວ"ເນື່ອງຈາກຄົນລາວດຳລົງຊີວິດຢູ່ບ່ອນສູງ ແລະ ມີວັດທະນະທຳຈະເລີນກວ່າຈີນຈຶ່ງຖືກເອີ້ນວ່າພວກດາວ ຫຼື ທຽນ, ແຖນ, ໄທ້ ເຊິ່ງມີຄວາມໝາຍວ່າ"ຟ້າ" ດັ່ງດຽວກັນເມື່ອພວກຈີນມາພົບພໍ້ຈຶ່ງເຫັນວ່າພວກລາວທີ່ມີວັດທະນະທຳສູງກວ່າ ມີຮີດຄອງປະເພນີອັນດີງາມ ຈຶ່ງຍົກຍ້ອງນັບຖື ແລະ ເອີ້ນກຸ່ມຄົນລາວວ່າ "ອ້າຍລາວ"  ແຕ່ດ້ວຍເຫດວ່າຄົນຈີນສະກົດສຽງຕົວ "ດ" ບໍ່ຊັດເຈນ. ສະນັ້ນຄຳວ່າ "ດ" ຈຶ່ງອອກສຽງເປັນ "ລ" ຄຳວ່າ"ອ້າຍດາວ" ຈຶ່ງກາຍເປັນອ້າຍ"ລາວ"ໃນໄລຍະຕໍ່ມາ. ເມື່ອສັງລວມເບິ່ງທັງ 4 ທັດສະນະອີງຕາມເຫດຜົນ ແລະ ຄຳສັບສຳນວນເຫັນວ່າ ທັດສະນະທີ 4 ນີ້ ພໍເປັນໜ້າເຊື່ອຖືໄດ້.

## II. ຖິ່ນກຳເນີດຂອງຊົນຊາດລາວ

ລະຫວ່າງຕົ້ນຄຣິດຕະສັກກະຣາດເທິງແຜ່ນດິນໂຫຼ່ງນ້ຳຂອງແມ່ນບ່ອນອາໄສປະປົນກັນຂອງກຸ່ມຄົນມອນ, ຂອມ, ລະວ້າແລະໄຕ. ໃນນີ້ກຸ່ມຄົນລະວ້າໄດ້ຕັ້ງກວມເອົາທັງໝົດຂອງຂົງເຂດພູພຽງບໍລິເວນທາງເໜືອ ໂດຍສະເພາະແມ່ນບັນດາບ່ອນຮາບພຽງຕາມຕີນພູ ແລະ  ລຽບຕາມແຄມແມ່ນ້ຳລຳເຊ. ໃນພົງສາວະດານໂຍນົກກໍ່ໄດ້ບົ່ງບອກໃຫ້ເຫັນແຈ້ງການຢູ່ປະປົນກັນລະຫວ່າງ ມອນ, ຂອມ,ລະວ້າ ແລະ ໄຕ ເຊິ່ງເອກະສານດັ່ງກ່າວເອີ້ນຄົນພວກນີ້ວ່າ ຂອມສະໄໝ, ໄທສະໄໝ, ຈາມ(ມອນ)ສະໄໝ ແລະ ລາວສະໄໝ.

ຂອບເຂດການຕັ້ງພູມລຳເນົາຂອງເຂດຄົນພວກນີ້ຈະເອົາແນ່ບໍ່ໄດ້, ແຕ່ທີ່ວໆໄປແລ້ວແມ່ນຍອມຮັບວ່າມອນ-ຂະແມຢູ່ທາງພາກໃຕ້, ໄຕ-ລາວຢູ່ທາງພາກເໜືອອັນນີ້ເວົ້າຕາມປະລິມານແຕ່ຕົວຈິງມີການປະປົນກັນຢູ່ກ່ອນແລ້ວ, ສ່ວນໄທ (ໄຕ) ຈະຢູ່ໃນເຂດສິບສອງພັນນາ ແລະ ສິບສອງຈຸໄທ(ໄຕ) ລວມທັງຕອນໃຕ້ຢູ່ນານຂອງຈີນ. ຕາມຜົນການຄົ້ນຄວ້າຂອງນັກວິທະຍາສາດຫວຽດນາມໄດ້ຊີ້ໃຫ້ເຫັນວ່າ ປະມານ 2000ປີກ່ອນຄ.ສ ຄຣິດຕະສັກກະຣາດຄົນໄທບູຮານ (ໄຕ,ບຸງ)  ຢູ່ຫວຽດນາມໝາຍເຖິງຄົນ "ເອົາ-ຫວຽດ" ໄດ້ຮ່ວມປະສານສົມທົບກັບຄົນລາກ-ຫວຽດ ສ້າງເປັນລັດ "ເອົາ-ລາກ" ຢູ່ບໍລິເວນເນີນສູງ ພາກເໜືອຫວຽດນາມ ແລະ ບໍລິເວນສາມຫລ່ຽມປາກແມ່ນ້ຳແດງໄດ້ມີບັນດາຊົນເຜົ່າຕ່າງໆດຳລົງຊີວິດຢູ່ ໃນນັ້ນກຸ່ມຄົນພວກໄຕ ໄດ້ລຸຫຼັ່ງລົງມາອາໄສຢູ່ທົ່ງພຽງພາກເໜືອຫວຽດນາມ.

ເບິ່ງຕາມສະພາບລວມຂອງທົ່ວບໍລິເວນອາຊີອາຄະເນພວກເຮົາຈະເຫັນວ່າໃນໄລຍະກ່ອນຄຣິດຕະສັກກະຣາດ ຫຼື ອາດຈະໄວກວ່ານັ້ນອີກ, ບໍລິເວນດິນແດນທີ່ເປັນປະເທດລາວໃນປັດຈຸບັນນີ້ ໂດຍສະເພາະບໍລິເວນໂຫຼ້ງແມ່ນ້ຳຂອງໄດ້ມີເຜົ່າຊົນຈຳນວນໜຶ່ງທີ່ເປັນຕົວແທນໄດ້ແກ່ຊາວໄຕຄີ ຊາວລື້ເມືອງສິງ, ອູໃຕ້, ອູເໜືອ ຫຼື ຊາວຜູ້ໄທຢູ່ເຂດກາງ, ເຂດໃຕ້ຂອງລາວເປັນຕົ້ນເຂົາເຈົ້າຢູ່ຮ່ວມກັນກັບຊາວລະວ້າ ແລະ ປະສົມກັບພາກສ່ວນໜຶ່ງຂອງຊົນເຜົ່າມອນ-ຂະແມໃນໄລຍະນີ້ຊາວລະວ້າຍັງມີບົດບາດກວ່າເຜົ່າອື່ນໆ.

ກຸ່ມລະວ້າຕັ້ງຖິ່ນຖານຢູ່ນັບຕັ້ງແຕ່ລົບບູລີຈົນຮອດເມືອງຊຽງແສນແລະກວມເກືອບທົ່ວທຸກເມືອງຂອງລາວປັດຈຸບັນ ເຊິ່ງເປັນດິນແດນທີ່ກວ້າງໃຫຍ່ ລວມມີທົ່ງພຽງ, ພູພຽງ, ພູຜາປ່າດົງຢູ່ລຽບຕາມສອງຝັ່ງໂຫຼ້ງແມ່ນ້ຳຂອງ, ຍ້ອນເງື່ອນໄຂທາງພູມສາດເຮັດໃຫ້ກຸ່ມຄົນລະວ້າ ໄດ້ຄ່ອຍກາຍເປັນສອງພາກສ່ວນ ຄື ພາກສ່ວນເບື້ອງຕາເວັນຕົກ ແລະ ພາກສ່ວນເບື້ອງຕາເວັນອອກຫຼືພາກສ່ວນນ້ຳເຈົ້າພະຍາ ແລະ ແມ່ນ້ຳຂອງ. ຊາວລະວ້າເບື້ອງຕາເວັນຕົກຕັ້ງຖິ່ນຖານໃກ້ກັບຊາວມອນ-ຂອມ ຍ້ອນແນວນັ້ນວັດທະນະທຳຈຶ່ງໄດ້ປະສົມກັນຢ່າງເລິກເຊິ່ງ. ມາໃນຕົ້ນຄຣິດຕະສັກກະຣາດ ວັດທະນະທຳອິນເດຍໄດ້ສິ່ງຜົນສະທ້ອນມາຈາກວັດທະນະທຳມອນ-ຂອມ ແລະ ອິນເດຍເຊັ່ນດຽວກັນ. ຕໍ່ມາຊາວລະວ້ານີ້ກໍ່ໄດ້ສ້າງຈຸດໃຈກາງທາງການເມືອງ, ວັດທະນະທຳຂອງຕົນໃນຫຼາຍແຫ່ງ ເຊັ່ນ: ເມືອງວຽງພູຄຳ (ຫຼວງນ້ຳທາ), ເມືອງຊຽງລາວ ຫຼື ເມືອງສຸວັນນະໂຄມຄຳ, ເມືອງເງິນຍາງ ຫຼື ຊຽງແສນ, ເມືອງຊວາດ ເມືອງພວນ, ວຽງຈັນ , ສີໂຄດຕະບອງເປັນຕົ້ນ.

ສະຫລຸບແລ້ວຢູ່ໂຫຼ້ງແມ່ນ້ຳຂອງແລະແມ່ນ້ຳເຈົ້າພະຍາແມ່ນມີກຸ່ມເຜົ່າມອນ, ຂະແມແລະລາວ-ໄຕຢູ່ປະປົນກັນໂດຍສະເພາະຢູ່ບໍລິເວນແມ່ນ້ຳຂອງຕອນເໜືອແມ່ນມີຊາວລະວ້າ-ໄຕອາໄສຢູ່ຮ່ວມກັນການຢູ່ຮ່ວມກັນຂອງເຜົ່າເຫຼົ່ານັ້ນມັນໄດ້ຜ່ານຂະບວນວິວັດອັນຍາວນານສົມຄວນໄດ້ມີການຫັນປ່ຽນທາງປະຫວັດສາດ ວັດທະນະທຳ, ເສດຖະກິດ ແລະ ສັງຄົມ. ຍ້ອນຄວາມກ້າວໜ້າທາງດ້ານການຜະລິດ, ການດັດແປງເຄື່ອງມືໃຊ້ສອຍ ແລະ ບົດຮຽນໃນການເຮັດນາປູກເຂົ້າມາດົນນານນັ້ນ. ໂດຍສະເພາະເສດຖະກິດວັດທະນະທຳໃນລຸ່ມແມ່ນ້ຳຂອງໄດ້ມີການຂະຫຍາຍຕົວເຮັດໃຫ້ການເຄື່ອນຍ້າຍພົນລະເມືອງຈາກບໍລິເວນ ນ້ຳອູ, ນ້ຳມ້າ, ນ້ຳຊຳ ແລະ 12 ຈຸໄທທີ່ເຄື່ອນຍ້າຍລົງມາຕາມທົ່ງພຽງຕ່າງໆໃນລາວປັດຈຸບັນແລ້ວມີການໄປມາຫາສູ່ກັນ ແລະ ຄ້າຂາຍ ເຊິ່ງກັນ ແລະ ກັນນັບມື້ນັບຫຼາຍຂຶ້ນ ດັ່ງຫຼັກຖານທີ່ປະກົດຢູ່ໃນນິທານຂຸນບູລົມໄດ້ກ່າວໄວ້ວ່າ ຊາວໄຕ ທີ່ລົງມາບຸກເບີກທົ່ງພຽງເຮັດນາປູກເຂົ້າບໍ່ໄດ້ຊິງດິນດອນຕອນຫຍ້າກັບພວກມອນ-ຂະແມ ທີ່ດຳລົງຊີວິດຢູ່ເທິງພູເປັນຕົ້ນຕໍ, ຍ້ອນແນວນັ້ນຊາວມອນຂະແມ ແລະລະວ້າ-ໄທ (ໄຕ) ຈຶ່ງຢູ່ຮ່ວມກັນໄດ້ງ່າຍ, ມາຮອດສະຕະວັດທີ VIII ໂດຍສະເພາະພາຍລັງການປົກຄອງເມືອງຊວາຂອງຂຸນລໍ. ຊົນເຜົ່າລາວ(ອ້າຍລາວ) ຍິ່ງເຄື່ອນຍ້າຍລົງມາສູ່ດິນແດນແຫ່ງນີ້ຢ່າງຫຼວງຫຼາຍ ແລະ ໄດ້ມີການປະສົມປະສານກັບເຜົ່າພື້ນເມືອງ ໃນດິນແດນແຫ່ງນີ້ແລ້ວ ພ້ອມກັນສ້າງສາວັດທະນະທຳຈົນກາຍມາເປັນພື້ນຖານວັດນະທຳຂອງລາວ. ສ່ວນຊົນເຜົ່າມົ້ງຢ້າວກໍ່ໄດ້ເຄື່ອນຍ້າຍລົງມາຕັ້ງຖິ່ນຖານຢູ່ທົ່ງພຽງ ແລະ ພູພຽງ ຕັ້ງແຕ່ເຂດເໜືອຮອດພາກກາງຂອງແຜ່ນດິນລາວທຸກວັນນີ້.

## 1. ຖິ່ນກຳເນີດຂອງຊົນເຜົ່າອ້າຍລາວ

ຕາມພົງສາວະດານລາວກຸ່ມຄົນຕະກຸນໄທລາວ ໄດ້ພາກັນມາຕັ້ງຖິ່ນຖານຂອງຕົນເອງຂຶ້ນ ທຳອິດໃນແມ່ນ້ຳຮວງໂຫ ແລະ ແມ່ນ້ຳຢັງຊີກຽງ. ເຊິ່ງເປັນດິນແດນຂອງປະເທດຈີນ ທຸກວັນນີ້ ໃນລະຫວ່າງ 4000 ຫາ 3000 ປີກ່ອນຄ.ສ ຄົນລາວສ່ວນໃຫຍ່ດຳລົງຊີວິດ ຢູ່ເຂດເສສວນ, ເຂດຮູເປ, ອັນຫຸຍເຊິ່ງເປັນເຂດພູເຂົາສູງ ທຸກວັນນີ້ຈີນຍັງເອີ້ນວ່າ “ພູເຂົາອ້າຍລາວ” ຄົນລາວໄດ້ສ້າງເມືອງຂອງຕົນຂຶ້ນ ມີ 3 ເມືອງຄື:

- ເມືອງລຸງ ຕັ້ງຢູ່ຕອນຕົ້ນຂອງແມ່ນ້ຳຮວງໂຫ ຈີນເອີ້ນວ່າລຸງເຈົາ
- ເມືອງປາ ຕັ້ງຢູ່ຕອນໃຕ້ຂອງແມ່ນ້ຳຮວງໂຫ ຈີນເອີ້ນວ່າ ລຸງກົງ
- ເມືອງງ້ຽວ ຕັ້ງຢູ່ຕອນກາງຂອງແມ່ນ້ຳຢັງຊີກຽງ ຈີນເອີ້ນວ່າ ຈາງຊາ

ເມືອງລາວບູຮານທັງ 3 ເມືອງນີ້ ໄດ້ມີການປົກຄອງພໍໃຜພໍລາວ ຢູ່ເປັນເອກະລາດເຂົາເຈົ້າໄດ້ສ້າງບ້ານເມືອງຂອງຕົນເອງໃຫ້ມີຄວາມຈະເລີນຂຶ້ນ ແລະ ການດໍາລົງຊີວິດຂອງພວກເຂົາແມ່ນອາໄສທາງພາກກະສິກໍາ ເປັນບັນຫາຕົ້ນຕໍດ້ວຍການປູກຝັງ ແລະ ລ້ຽງສັດ.

ມາເຖິງປີ 943 ກ່ອນ ຄ.ສ ພວກຈີນເກີດມີຄວາມຂັດແຍ້ງກັນນັ້ນພວກຕາກຕາໄດ້ສວຍໂອກາດເຂົ້າຮຸກຮານຈີນ. ພວກຈີນຕ້ານທານບໍ່ໄດ້ ຍ້ອນຢູ່ພາຍໃນມີຄວາມວຸ້ນວາຍກັນ. ສະນັ້ນຈຶ່ງເຮັດໃຫ້ພວກຈີນອົບພະຍົບເຂົ້າມາອາໄສຢູ່ກັບພວກອ້າຍລາວ. ຕໍ່ຈາກນັ້ນມາພວກຈີນກໍ່ໄດ້ບຸກຕີເອົາເມືອງລຸງ ໃນປີ 843 ກ່ອນຄ.ສ ຄົນລາວຕ້ານທານບໍ່ໄດ້ເຮັດໃຫ້ພວກຈີນເຂົ້າຢຶດເອົາເມືອງລຸງ ອັນເຮັດໃຫ້ອ້າຍລາວຢູ່ນະຄອນລຸງ ໄດ້ພາກັນອົບພະຍົບລົງມາຢູ່ເມືອງປາ ແລະ ເມືອງງ້ຽວ

ມາເຖິງ ພ.ສ 205 ກົງກັບປີ 338 ກ່ອນ ຄ.ສ ພວກຄົນລາວຢູ່ນະຄອນປາ ກໍ່ຖືກພວກຈີນຢຶດຄອງອີກ. ຍ້ອນຊົນຊາດລາວສູ້ຈີນບໍ່ໄດ້ ຈຶ່ງພາກັນໜີລົງມາໂຮມກັບພວກທີ່ມາກ່ອນ ຢູ່ນະຄອນງ້ຽວ.

ໃນເວລານັ້ນຈີນຢູ່ໃນລາຊະການປົກຄອງຂອງພະເຈົ້າແຜ່ນດິນມີນາມວ່າຈິນຊີຮ່ອງເຕ້ (ຜູ້ສ້າງກໍາແພງໃຫຍ່ຂອງປະເທດຈີນມີຄວາມຍາວເຖິງ 10.000 ລີ້(1ລີ້ເທົ່າກັບ500ແມັດ) ເປັນລູກຂອງພະເຈົ້ນຊົນຊຽງອອງ ຜູ້ປົກຄອງແຂວງຈີນ) ພາຍຫຼັງຕີໄດ້ນະຄອນປາຂອງຄົນລາວ ແລ້ວພວກຈີນມີຄວາມເຂັ້ມແຂງ ຈຶ່ງທໍາການບຸກຕີເອົາເມືອງນ້ອຍໃຫຍ່ ທີ່ຍັງບໍ່ທັນໄດ້ຂຶ້ນກັບເຈົ້າແຜ່ນດິນຈີນ ຕໍ່ຈາກນັ້ນກໍ່ຍົກທັບມາຕີນະຄອນງ້ຽວຂອງອ້າຍລາວໃນປີ 195 ກ່ອນຄ.ສ ກຸ່ມຄົນອ້າຍລາວຢູ່ເມືອງງ້ຽວ ທໍາການຕອບໂຕ້ຈີນເຖິງ 6 ເດືອນ ແຕ່ສຸດທ້າຍກໍ່ເສຍເມືອງງ້ຽວໃຫ້ແກ່ຈີນອີກ. ລວມເວລາທີ່ອ້າຍລາວມີອິດສະຫຼະພາບຢູ່ໃນຍຸກນັ້ນ ເປັນເວລາຍາວນານເຖິງ 3000 ປີ ແລ້ວຄົນລາວຈຶ່ງໄດ້ແຕກລົງມາທາງໃຕ້ເລື້ອຍໆ ແຕ່ໄລຍະນີ້ຄົນລາວຈໍານວນໜຶ່ງໄດ້ຖືກເກນ ໄປສ້າງກໍາແພງຈີນເຊັ່ນດຽວກັນກັບກຸ່ມຄົນອື່ນໆ.

ສ່ວນຄົນລາວພວກທີ່ຮັກເອກະລາດ ແລະ ອິດສະຫຼະພາບກໍ່ບໍ່ພໍໃຈຢູ່ໃຕ້ອໍານາດຂອງພວກຈີນ ຈຶ່ງພາກັນອົບພະຍຸບຖອຍລົງມາທາງໃຕ້ ແລະ ໄດ້ສ້າງຕັ້ງອານາຈັກໃໝ່ຂອງຕົນເອງຂຶ້ນ ເອີ້ນວ່າອານາຈັກແຖນ.

## 2. ຖິ່ນກໍາເນີດຂອງພວກມອນ-ຂອມ

ກຸ່ມຄົນມອນ-ຂອມເປັນໜຶ່ງໃນບັນດາຊາດພັນທີ່ໃຫຍ່ທີ່ສຸດໃນອາຊີຕາເວັນອອກສ່ຽງໃຕ້ມີອະລິຍະທໍາທີ່ຈະເລີນຮຸ່ງເຮືອງມາກ່ອນໄດ້ຮັບອິດທິພົນມາຈາກວັດທະນະທໍາອິນເດຍອາໃສຫຼາຍທີ່ສຸດໃນປະເທດກໍາປູເຈຍ ແລະ ພະມ້າ ເຊິ່ງມີຕົນກໍາເນີດມາຈາກອິນເດຍໃນສະໄໝຂອງພະເຈົ້າອະໂສກະມະຫາລາດເຮັດສົງຄາມແຜ່ອໍານາດເຮັດໃຫ້ກຸ່ມຄົນມອນ-ຂອມເລີ່ມເຂົ້າມາມີບົດບາດໃນດິນແດນສຸວັນນະພູມເປັນຕົ້ນແມ່ນ: ໄທ, ລາວ, ຫວຽດນາມ, ກໍາປູເຈຍ, ພະມ້າຈາກນັ້ນໄດ້ມາຕັ້ງອານາຈັກຂອງຕົນຂຶ້ນໃນແຖບດິນແດນຂອງອາຊີຕາເວັນອອກສ່ຽງໃຕ້ເຊັ່ນ: ອານາຈັກຟູນັນ, ອານາຈັກຈັນລາ, ອານາຈັກທະຣະວະດີ, ອານາຈັກເມືອງຊວາ ແລະ ອານາຈັກອິນທະປັດ. ບັນດາຮ່ອງຮອຍຂອງພວກມອນ-ຂອມຍັງຫຼົງເຫຼືອໃຫ້ເຮົາໄດ້ເຫັນໃນສະຖານທີ່ຕ່າງໆຢ່າງຫຼວງຫຼາຍຮອດທຸກວັນນີ້.

## 3. ຊົນເຜົ່າດັ້ງເດີມຂອງລາວ

ໃນສະໄໝບູຮານຢູ່ດິນແດນແຫ່ງນີ້ມີຫຼາຍຊົນເຜົ່າທີ່ແຕກຕ່າງກັນໄດ້ເຂົ້າມາອາໄສແລະຕັ້ງຖິ່ນຖານໄດ້ຢ່າງໝັ້ນຄົງ. ອີງໃສ່ດ້ານພາສາ, ວັດທະນະທໍາຮີດຄອງປະເພນີ ແລະ ອີງໃສ່ປະຫວັດຄວາມເປັນມາຂອງບັນດາຊົນຊາດ-ຊົນເຜົ່າຢູ່ໃນຂົງເຂດນີ້ແລ້ວ ບັນດານັກຄົ້ນຄວ້າກ່ຽວກັບຊົນເຜົ່າໄດ້ຈັດແບ່ງຊົນເຜົ່າລາວເດີມອອກເປັນຫຼາຍກຸ່ມແຕກຕ່າງກັນດັ່ງນີ້:

- ທັດສະນະທີ1 ເພິ່ນໄດ້ແບ່ງຊົນເຜົ່າລາວອອກເປັນ 4 ກຸ່ມ:
  - ກຸ່ມຄົນເຜົ່າລະວ້າ(ລາວເດີມ)
  - ກຸ່ມຄົນເຜົ່າມອນ-ຂະແມ

- ກຸ່ມຄົນເຜົ່າລາວ-ໄທ
- ກຸ່ມຄົນເຜົ່າມົ້ງ-ຢ້າວ
- ທັດສະນະທີ2 ເພິ່ນໄດ້ແບ່ງຊົນເຜົ່າໃນລາວອອກເປັນ5 ກຸ່ມໂດຍອີງໃສ່ພາສາເປັນຫຼັກ
- ກຸ່ມຄົນເຜົ່າປາກພາສາລາວ
- ກຸ່ມຄົນເຜົ່າປາກພາສາມອນ-ຂະແມ
- ກຸ່ມຄົນເຜົ່າປາກພາສາມົ້ງ-ຢ້າວ
- ກຸ່ມຄົນເຜົ່າປາກພາສາຕິເບດ
- ກຸ່ມຄົນເຜົ່າປາກພາສາຫໍ້ຫານ
- ສ່ວນນັກມະນຸດວິທະຍາໃຫ້ທັດສະນະວ່າ ກຸ່ມຄົນທີ່ສ້າງຕັ້ງຮາກຖານການທຳມາຫາກິນຢູ່ໃນອາຊີມີ 4 ກຸ່ມໃຫຍ່.
- ພວກຈີນຫາກິນດ້ວຍການລ້ຽງສັດຢູ່ເລາະລຽບທະເລສາບກາສະປ່ຽນ ແຖບທາງພາກຕາເວັນອອກສ່ຽງໃຕ້
- ພວກຕາກອາໄສຢູ່ຕາມຕາມລຽບທະເລຊາຍຫາກິນດ້ວຍການປຸ້ນຈີ້ໃຊ້ມ້າເປັນພາຫານະ
- ພວກຊະນິງຢູ້ອາໄສຢູ່ປະເທດເກົາຫຼີ, ມົງໂກນຫາກິນດ້ວຍການປຸ້ນຈີ້ເຊັ່ນດຽວກັນ.
- ພວກຄົນລາວເປັນພວກທີ່ຕັ້ງຖິ່ນຖານເປັນຫຼັກເປັນແຫຼ່ງກ່ອນພວກອື່ນໆຢູ່ໃນເຂດແມ່ນ້ຳຮວງໂຫ, ແມ່ນ້ຳຢັງຊີກຽງ ອັນເປັນປະເທດຈີນປັດຈຸບັນ ທຳມາຫາກິນດ້ວຍການກະສິກຳປະມານ3000 ປີມາແລ້ວ.

## III. ການສ້າງຕັ້ງນະຄອນລັດທຳອິດຂອງຊົນເຜົ່າອ້າຍລາວ

### 1. ອານາຈັກອ້າຍລາວ

ຕາມພົງສາວະດານລາວກຸ່ມຄົນຕະກຸນໄທລາວໄດ້ພາກັນມາຕັ້ງຖິ່ນຖານຂອງຕົນເອງທຳອິດຂຶ້ນຢູ່ໃນລະຫວ່າງແມ່ນ້ຳຮວງໂຫແລະແມ່ນ້ຳຢັງຊີກຽງເຊິ່ງເປັນດິນແດນຂອງປະເທດຈີນໃນທຸກວັນນີ້. ໃນລະຫວ່າງ 4000 ຫາ 3000 ປີກ່ອນຄສ. ຄົນລາວສ່ວນໃຫຍ່ດຳລົງຊີວິດຢູ່ເຂດເສສວນ, ເຂດຮູເປ, ອັນຫຸຍເຊິ່ງເປັນເຂດພູເຂົາສູງທຸກວັນນີ້ຈີນຍັງເອີ້ນວ່າ" ພູເຂົາອ້າຍລາວ" ຄົນລາວສ້າງເມືອງຂອງຕົນຂຶ້ນມີ 3 ເມືອງຄື:

- ເມືອງລຸງຕັ້ງຢູ່ຕອນຕົ້ນຂອງແມ່ນ້ຳຮ່ວງໂຫຈີນເອີ້ນວ່າລຸງເຈົ້າ
- ເມືອງປາຕັ້ງຢູ່ຕອນໃຕ້ຂອງແມ່ນ້ຳຮ່ວງໂຫຈີນເອີ້ນວ່າລຸງກົງ
- ເມືອງງ້ຽວຕັ້ງຢູ່ຕອນກາງຂອງແມ່ນ້ຳຢັ່ງຊີກຽງຈີນເອີ້ນວ່າຈາງຊາ

ເມືອງລາວບູຮານທັງ3 ນີ້ໄດ້ມີການປົກຄອງພໍໃຜພໍລາວຢ່າງເປັນເອກະລາດເຂົາເຈົ້າໄດ້ສ້າງບ້ານເມືອງຂອງຕົນເອງໃຫ້ມີຄວາມຈະເລີນຂຶ້ນ ແລະ ການດຳລົງຊີວິດຂອງພວກເຂົາແມ່ນອາໃສການກະສິກຳເປັນບັນຫາຕົ້ນຕໍດ້ວຍການປູກຝັງ ແລະ ລ້ຽງສັດ.

ມາເຖິງ 943 ປີກ່ອນຄສ. ພວກຈີນເກີດມີຄວາມຂັດແຍ່ງກັນກັບພວກ ຕາກຕາ ໄດ້ສວຍໂອກາດເຂົ້າຮຸກຮານຈີນ ພວກຈີນຕ້ານທານບໍ່ໄດ້ ຍ້ອນຢູ່ພາຍໃນມີຄວາມວຸ້ນວາຍກັນສະນັ້ນໄດ້ເຮັດໃຫ້ພວກຈີນອົບພະຍົບເຂົ້າມາອາໃສຢູ່ກັບພວກອ້າຍລາວ ຕໍ່ຈາກນັ້ນມາພວກຈີນກໍ່ບຸກຕີເມືອງລຸງໃນປີ 843 ກ່ອນ ຄ ສຄົນລາວຕ້ານທານບໍ່ໄດ້ເຮັດໃຫ້ພວກຈີນເຂົ້າມາຍຶດເອົາເມືອງລຸງ, ອັນເຮັດໃຫ້ອ້າຍລາວທີ່ອາໃສຢູ່ເມືອງລຸງໄດ້ພາກັນລົງມາອາໄສຢູ່ເມືອງປາ ແລະ ເມືອງງ້ຽວ.

ມາເຖິງພສ 205 ກົງກັບປີ 338 ກ່ອນຄສພວກຄົນລາວຢູ່ນະຄອນປາກໍ່ຖືກພວກຈີນຍຶດຄອງອີກຍ້ອນຊົນຊາດລາວສູ້ພວກຈີນບໍ່ໄດ້ຈິ່ງພາກັນໜີລົງມາໂຮມກັນທີ່ມາກ່ອນຢູ່ນະຄອນງ້ຽວ. ໃນເວລານັ້ນຈີນຢູ່ໃນລາຊະການຂອງເຈົ້າແຜ່ນດິນທີ່ມີນາມວ່າຈີນຊີຮ່ອງເຕ້ ຜູ້ສ້າງກຳແພງໃຫຍ່ຂອງເມືອງຈີນທີ່ມີຄວາມຍາວເຖິງ10000 ລີ້ 1ລີ້ເທົ່າກັບ 500 ແມັດ ເປັນລູກຂອງພະເຈົ້າຊິນຊຽງອອງຜູ້ປົກຄອງແຂວງຈີນ)ພາຍຫຼັງຕີໄດ້ນະຄອນປາຂອງອ້າຍລາວແລ້ວ

ພວກຈີນມີຄວາມເຂັ້ມແຂງຈິ່ງທຳການບຸກຕີເອົານະຄອນນ້ອຍໃຫຍ່ທີ່ບໍ່ທັນຂຶ້ນກັບເຈົ້າແຜ່ນດິນຈີນ. ຕໍ່ຈາກນັ້ນກໍ່ຍົກທັບມາຕີນະຄອນງ້ຽວຂອງຊົນເຜົ່າອ້າຍລາວໃນປີ 195 ກ່ອນ ຄ ສກຸ່ມຄົນອ້າຍລາວຢູ່ເມືອງງ້ຽວທຳການຕອບໂຕ້ຈີນຄືນເຖິງ 6 ເດືອນ, ແຕ່ສຸດທ້າຍກໍ່ເສຍເມືອງງ້ຽວໃຫ້ແກ່ຈີນອີກ. ລວມໄລຍະເວລາທີ່ອ້າຍລາວມີອິດສະຫຼະພາບຢູ່ເວລານັ້ນ ເປັນເວລາຍາວນານເຖິງ 3000ປີ ແລ້ວຄົນລາວຈິ່ງໄດ້ແຕກລົງມາຢູ່ທາງໃຕ້ເລື້ອຍໆ ແຕ່ໃນໄລຍະນີ້ຄົນລາວໄດ້ຖືກເກນໄປສ້າງກຳແພງຈີນເຊັ່ນດຽວກັນກັບກຸ່ມຄົນອື່ນໆ.

ສ່ວນຄົນລາວພວກທີ່ຮັກເອກະລາດແລະອິດສະຫຼະພາບກໍ່ບໍ່ພໍໃຈຢູ່ໃຕ້ອຳນາດຂອງພວກຈີນຈິ່ງພາກັນອົບພະຍົບຖອຍລົງມາທາງໃຕ້ແລະໄດ້ສ້າງຕັ້ງອານາຈັກໃໝ່ຂອງຕົນຂຶ້ນເອີ້ນວ່າ ອານາຈັກແຖນ.

## 3. ອານາຈັກແຖນ

ເມື່ອຄົນລາວໄດ້ສູນເສຍເມືອງລຸງ,ເມືອງປາແລະເມືອງງ້ຽວໃຫ້ຈີນແລ້ວລາວກໍ່ພາກັນເຄື່ອນຍ້າຍລົງມາທາງໃຕ້ເລື້ອຍໆແລ້ວເຕົ້າໂຮມກັນໃໝ່ຢູ່ເຂດມົນທົນເສສວນແລະເຂດຮຸນນຳ(ປະເທດຈີນປັດຈຸບັນ) ມາເຖິງປີ 122 ກ່ອນຄສຂຸນເມັງໄດ້ເຕົ້າໂຮມຄົນລາວໃນເຂດນີ້ ແລ້ວສ້າງຕັ້ງອານາຈັກແຖນຂຶ້ນ ມີເມືອງຫຼວງຊື່ວ່າ "ນະຄອນເພງາຍ" ຈີນເອີ້ນວ່າ"ປູເອີພູ"ໂດຍມີຂຸນເມັງ "ຂຸນເມືອງ" ເປັນກະສັດປົກຄອງ. ໃນເວລານີ້ກະສັດຈີນ ຊື່ວ່າ "ວູ້ຕີ້" ແຫ່ງລາຊະວົງຫານຊຶ່ງມີຄວາມເຫຼືອມໃສໃນສາສະໜາຫຼາຍ ຈິ່ງແຕ່ງໃຫ້ຂຸນນາງຈຳນວນໜຶ່ງໄປພົວພັນເອົາສາສະໜາຢູ່ດິນແດນຂອງອິນເດຍ. ໃນປີ 110 ກ່ອນ ຄ ສ ແຕ່ຫົນທາງຈະໄປນັ້ນຈີນຕ້ອງໄດ້ຜ່ານດິນແດນອ້າຍລາວ ເວລານີ້ຈີນກັບອ້າຍລາວບໍ່ໄດ້ເປັນມິດກັນ. ເຮັດໃຫ້ຂຸນເມັງກະສັດອ້າຍລາວບໍ່ເຊື່ອໃຈຈີນ ເພາະຢ້ານຈີນເປັນນັກສືບຈິ່ງບໍ່ໃຫ້ຈີນຜ່ານດິນແດນອ້າຍລາວໄປໄດ້ ພະເຈົ້າຈີນ"ວູ້ຕີ້" ຈິ່ງມີຄວາມໂກດແຄ້ນ ແລ້ວຍົກທັບມາຕີນະຄອນເພງາຍໃນປີ 90 ກ່ອນ ຄ ສ ຂຸນເມັງໄດ້ນຳພາຄົນລາວຕໍ່ຕ້ານກັບພວກຈີນເປັນເວລາ 3 ປີ. ສຸດທ້າຍກໍ່ຖືກປະລາໄຊ ແລະ ນະຄອນເພງາຍ ກໍ່ຖືກພວກຈີນຍຶດໃນປີ 87 ກ່ອນ ຄ ສ ຈີນໄດ້ອານາຈັກແຖນແລ້ວກໍ່ໄດ້ແບ່ງອອກເປັນສອງພາກສ່ວນປົກຄອງຄື:

- ພວກນະຄອນເພງາຍ( ພາກເໜືອ)ເອີ້ນວ່າ "ພວກອ້າຍລາວ"
- ພວກຢູ່ທາງພາກໃຕ້ເອີ້ນວ່າ"ພວກງ່າຍລາວ"

ອານາຈັກແຖນໄດ້ຕົກຢູ່ໃຕ້ອຳນາດການປົກຄອງຂອງຈີນນານເຖິງ 100 ກວ່າປີ.ມາເຖິງ ພ ສ 552 ກົງກັບ ຄ ສ 9 ຢູ່ພາຍໃນລາຊະວົງຈີນໄດ້ເກີດຂໍ້ຂັດແຍ່ງກໍ່ຄວາມວຸ້ນວາຍຂຶ້ນ. ສະນັ້ນ ຂຸນວັງເມືອງເຊິ່ງເປັນເຊື້ອສາຍຂອງຂຸນເມັງເຫັນເປັນໂອກາດດີ ກໍ່ໄດ້ນຳພາປະຊາຊົນອ້າຍລາວລຸກຮື້ຂຶ້ນຍຶດອຳນາດ ແລະ ປະກາດອິດສະຫຼະພາບບໍ່ຍອມຂຶ້ນກັບຈີນ ແລະ ຂຸນວັງເມືອງກໍ່ໄດ້ຂຶ້ນປົກຄອງເມືອງເພງາຍສືບຕໍ່ມາຈົນເຖິງ ພສ 593 ກົງກັບປີ ຄ ສ 50 ຈຶ່ງຖືກພວກຈີນຍົກລົງມາຕີອີກເຮັດໃຫ້ອານາຈັກແຖນຖືກພວກຈີນຢຶດຄອງຄືເກົ່າ. ມາຮອດສະໄໝການປົກຄອງຂຸນຫຼວງລິເມົາກໍ່ໄດ້ຢຶດອຳນາດຈາກຈີນຄືນມາ. ໃນລາຊະການຂອງຂຸນຫຼວງລິເມົາກະສັດອ້າຍລາວອົງນີ້ໄດ້ນຳເອົາສາສະໜາພຸດລັດທິມະຫາຍານເຂົ້າມາໃນອານາຈັກແຖນນັບແຕ່ນັ້ນມາຄົນອ້າຍລາວໄດ້ພາກັນນັບຖືສາສະໜາພຸດ ແລະພ້ອມກັນທຳມາຫາກິນຢ່າງສັນຕິເຮັດໃຫ້ອານາຈັກມີຄວາມສະຫງົບ.

ພາຍຫຼັງຂຸນຫຼວງລິເມົາສິ້ນພະຊົນໃນປີ ຄ ສ 78 ຂຸນໄລລາວຜູ້ເປັນໂອລົດກໍ່ຂຶ້ນປົກຄອງແທນ. ໃນເວລານີ້ສາສະໜາພຸດພວມຂະຫຍາຍຕົວຢູ່ຈີນ, ຍ້ອນແນວນັ້ນພວກເຂົາຈິ່ງເອກອ້າງວ່າອານາຈັກໃດຖືສາສະໜາພຸດກໍ່ຄືເປັນຫົວເມືອງຂຶ້ນຂອງຕົນ ຕໍ່ມາຈິ່ງມີແຜນສົ່ງຂ້າຫຼວງໃຫຍ່ເຂົ້າມາປົກຄອງອານາຈັກແຖນ, ແຕ່ຂຸນໄລລາວບໍ່ຍິນຍອມຈິ່ງເປັນສາເຫດໜຶ່ງເຮັດໃຫ້ເປັນສົງຄາມລະຫວ່າງອ້າຍລາວແລະຈີນ, ດັ່ງນັ້ນພວກຈີນຈິ່ງນຳກຳລັງມາຮຸກຮານອານາຈັກແຖນອີກກຸ່ມຄົນອ້າຍລາວໄດ້ທຳການຕໍ່ສູ້ກັບຈີນຢ່າງສຸດຄວາມສາມາດ. ແຕ່ກໍ່ສູ້ຈີນບໍ່ໄດ້ຂຸນໄລລາວຖືກຂ້າຕາຍຄາສະໜາມຮົບ, ພວກຈີນເຂົ້າຢຶດຄອງນະຄອນເພງາຍໃນ ປີ ຄ ສ 87ຈາກນັ້ນອານາຈັກແຖນຂອງຊົນຊາດອ້າຍ ກໍ່ຕົກເປັນຫົວເມືອງຂຶ້ນຂອງຈີນອີກແລ້ວຈີນຍັງບັງຄັບໃຫ້ຄົນອ້າຍລາວເສຍຊ່ວຍອີກຄື: ຊາຍສະກັນຜູ້ໜຶ່ງຕ້ອງເສຍເສື້ອສອງຜືນກັບເກືອທໍໜຶ່ງ. ຍ້ອນຖືກກົດດັນຈາກອິດທິພົນຂອງຈີນຄົນອ້າຍລາວກໍ່ໄດ້ພາກັນອົບພະຍົກລົງມາທາງໃຕ້

ເລື້ອຍໆ ເວລາຖອຍລົງມາທາງໃຕ້ຄົນອ້າຍລາວກໍ່ເອີ້ນກັນວ່າ ພວກແຖນ, ພວກໄທ້, ພວກໄທ ທັງໝົດເລົ່ານີ້ກໍ່ແມ່ນພວກຕະກຸນແຖນອັນເປັນຊົນຊາດອ້າຍລາວດັ່ງນັ້ນ ຄຳວ່າ ໄຕ, ໄທ້ ຫຼື ໄທ ໝາຍເຖິງພວກມັກອິດສະຫຼະພາບເຊິ່ງແມ່ນພວກອ້າຍລາວນັ້ນເອງ.




**ຮູບທີ3: ແຜນທີ່ລັດຕ່າງໆໃນແຜ່ນດິນອາຊີອາຄະເນລະຫວ່າງຄິດຕະສັດຕະວັດທີ8**

## 4. ອານາຈັກໜອງແສ

ພາຍຫຼັງຄົນອ້າຍລາວໄດ້ສູນເສຍອານາຈັກແຖນໃຫ້ແກ່ຈີນ ໃນປີ ຄ ສ 87ແລ້ວ, ຄົນອ້າຍລາວໄດ້ເຄື່ອນຍ້າຍລົງມາທາງໃຕ້ເລື້ອຍໆ ພວກໜຶ່ງຖອຍລົງມາທາງພະມ້າ, ພາກໜຶ່ງຖອຍລງທາງຕັງເກຍ(ຕອງກິນ) ພວກໜຶ່ງຖອຍລົງໄປທາງຮຸນນຳ ແລະ ພວກໜຶ່ງຖອຍລົງໄປທາງພາກເໜືອຂອງແຫຼມສຸວັນນະພູມ. ອີກພວກໜຶ່ງທີ່ຍັງຮັກສາຈຳນວນພົນຫຼວງຫຼາຍ ກໍ່ໄດ້ພາກັນອົບພະຍົບລົງມາຕັ້ງຖິ່ນຖານຢູ່ເລາະລຽບໜອງແສ(ເປັນໜອງທີ່ກວ້າງໃຫຍ່ຕັ້ງຢູ່ທາງທິດຕາເວັນອອກແມ່ນ້ຳຂອງໃນເຂດແຂວງມົນທົນຢູນ່ານ ຂອງປະເທດຈີນປັດຈຸບັນ).ແຕ່ບູຮານເຮົາເອີ້ນໜອງນີ້ວ່າ ໜອງແສ ຫຼື ໜອງກະແສແສນຍ່ານ ຈີນເອີ້ນ"ຕາລີ້ຟູ".ມາໃນທ້າຍ ຄ ສ 221 ພວກຈີນໄດ້ແຕກແຍກເປັນ 3 ກົກ ຄື: ກົກໂຈໂສ, ກົກເລົ່າປີ ແລະ ກົກຊຸນກວານ. ອາໄສເຫດການທີ່ພວກຈີນເກີດຄວາມແຕກແຍກກັນ ແລະ ເມົາມົວຕໍ່ສູ້ເຊິ່ງກັນ ແລະ ກັນຢູ່ນີ້. ພວກຄົນອ້າຍລາວຈິ່ງມີໂອກາດໄດ້ຕັ້ງຕົວ ແລະ ພາກັນສ້າງຕັ້ງເມືອງໃຫຍ່ຂອງຕົນເອງຂຶ້ນມີ 6 ເມືອງ. ແຕ່ລະເມືອງປົກຄອງເປັນເອກະລາດພໍໃຜພໍລາວ (ໃນບໍລິເວນມົນທົນຢູນານຂອງປະເທດຈີນປັດຈຸບັນ). ເຊິ່ງປະກົດເປັນພາສາຈີນ-ລາວ ດັ່ງນີ້:

- ເມືອງໝົ້ງຂວຍເຈົ້າ= ເມືອງມົ້ງຊຸຍ (ເຫັນຈະແມ່ນເມືອງສຸຍ)
- ເມືອງຫຍິດຊິກເຈົ້າ= ເມືອງເອັ້ຍເຊ້
- ເມືອງເຖັ່ງຍິ້ມເຈົ້າ= ເມືອງເທັ່ງຊ້ຽງ(ເຫັນຈະແມ່ນເມືອງທົ່ງຊ້າງ)
- ເມືອງຊີຫຼົງເຈົ້າ= ເມືອງຊີລ້ານ (ເຫັນຈະແມ່ນເມືອງຊຽງລ້ານ)
- ເມືອງຫຼົງກຸ້ງເຈົາ= ເມືອງລ້າງກົງ (ເຫັນຈະແມ່ນເມືອງລ້ານກຸງ)
- ເມືອງມົ້ງເສເຈົ້າ= ເມືອງແສ (ເມືອງໜອງແສ)

ໃນບັນດາ 6 ເມືອງນີ້ເມືອງໜອງແສເຊິ່ງພາສາຈີນເອີ້ນວ່າ" ເມືອງມົ້ງເສເຈົ້າ" ເປັນເມືອງທີ່ໃຫຍ່ກວ່າໝູ່.

ພວກອ້າຍລາວໃນອານາຈັກໜອງແສໄດ້ຕັ້ງຕົວເປັນເອກະລາດປົກຄອງບ້ານເມືອງດ້ວຍຄວາມສະຫງົບສຸກຢູ່ນານເຖິງ 100 ກວ່າປີ ເມື່ອມາຮອດ ພສ 768 ກົງກັບ ຄສ 225 ຂົງເບັ້ງແມ່ທັບຄົນສໍາຄັນຂອງພະເຈົ້າເລົ່າປີໄດ້ຍົກທັບລົງມາຕີ 6 ນະຄອນຂອງອ້າຍລາວເຖິງ 7 ຄັ້ງ. ແຕ່ກໍ່ຖືກຄົນອ້າຍລາວທໍາການຕໍ່ສູ້ຕ້ານຄືນຢູ່ຫຼາຍປີ ສຸດທ້າຍກໍ່ຕົກເປັນເມືອງຂຶ້ນຂອງຈີນອີກຄັ້ງໜຶ່ງ. ແຕ່ນັ້ນມາພວກອ້າຍລາວຈຶ່ງຖືກຈີນບຽດບຽນຂົ່ມເຫັງເຮັດໃຫ້ຄົນອ້າຍລາວຈໍານວນໜຶ່ງໄດ້ອົບພະຍົກລົງມາທາງໃຕ້ອີກ.

ມາຮອດປີພສ 938 ກົງກັບປີຄສ 395 ກຸ່ມຄົນອ້າຍລາວທີ່ຍັງຢູ່ໃນເມືອງທັງ6ນັ້ນກໍ່ໄດ້ຕັ້ງຕົວເປັນອິດສະຫຼະພາບອີກຄັ້ງໃໝ່ແລະໄດ້ປົກຄອງຕົນເອງຕໍ່ມາຈົນເຖິງພສ 1192 ກົງກັບປີຄສ 649 ເອີ້ນວ່າອານາຈັກໜອງແສຈຶ່ງມີພະມະຫາກະສັດລາວອົງໜຶ່ງມີນາມວ່າ ເຈົ້າສີນະທະນະຣະ ຫຼື ເຈົ້າສີນຸໂລ, ຈີນ ເອີ້ນວ່າ “ຊີວໂນວຫລໍ້(ພະອົງເກີດທີ່ເມືອງເວງຊຽງ ເມື່ອ ພສ 1159)ໄດ້ທ້ອນໂຮມເອົາບັນດາຫົວເມືອງລາວທັງ6ເຂົ້າເປັນເອກະພາບອັນດຽວກັນຈີນເອີ້ນວ່າ “ນານເຈົ້າ” ມີຄວາມໝາຍວ່າ ເຈົ້າແຫ່ງທິດໃຕ້. ຕັ້ງແຕ່ນັ້ນມາອານາຈັກອ້າຍລາວໜອງແສກໍ່ມີຄວາມຈະເລີນຮຸ່ງເຮືອງ ແລະ ກວ້າງຂວາງຂຶ້ນອີກ. ດັ່ງນັ້ນ, ເຈົ້າສີຫະນະຣະ ຈຶ່ງໄດ້ສົ່ງລາຊະທູດໄປຜູກສໍາພັນໄມຕີກັບພະເຈົ້າແຜ່ນດິນຈີນທີ່ມີນາມວ່າ “ພະເຈົ້າເກົາຈົງຮອງເຕ້”ກໍ່ຊົງຕ້ອນຮັບເປັນຢ່າງດີ.

ມາເຖິງປີພສ 1228 ກົງກັບປີຄສ 685 ພະເຈົ້າສີນຸໂລ (ສີຫະນະຣະ) ສິ້ນພະຊົນ, ພະເຈົ້າໂລເສັງ (ຂຸນຫຼວງແສ) ລາຊະໂອລົດ ໄດ້ຂຶ້ນຄອງລາຊະສົມບັດແທນໃນອານາຈັກໜອງແສ ຂຸນຫຼວງແສໄດ້ປັບປຸງອໍານາດການປົກຄອງໃຫ້ເຂັ້ມແຂງຮອບດ້ານ ແລະ ພະອົງກໍ່ໄດ້ສືບຕໍ່ກັບຜູກພັນໄມຕີກັບອານາຈັກຈີນຄື: ໃນ ພສ 1233 ກົງກັບປີ ຄສ 690 ພະອົງໄດ້ສະເດັດໄປອານາຈັກຈີນໃນງານລາຊາພິເສກພະນາງບູເຊັກທຽນ. ແຕ່ນັ້ນມາ ອານາຈັກໜອງແສຂອງຄົນອ້າຍລາວກໍ່ໄດ້ມີການຂະຫຍາຍຕົວຈະເລີນຮຸ່ງເຮືອງ.



**ຮູບທີ4: ແຜນທີ່ອານາຈັກໜອງແສ**

ອານາຈັກໜອງແສມີວົງກະສັດອ້າຍລາວໄດ້ຂຶ້ນສະເຫວີຍລາຊະສົມບັດໃນນະຄອນໜອງແສສືບຕໍ່ກັນມາຈາກພະເຈົ້າໂລເສັງ (ຂຸນຫຼວງແສ) ລົງມາເຖິງອີກ 3ອົງຈຶ່ງເຖິງສະໄໝການປົກຄອງຂອງພະເຈົ້າຂຸນບູຣົມລາຊາທິລາດ ປີ ຄສ 729ເຊິ່ງພົງສາວະດານຈີນເອີ້ນວ່າ”ພີລໍ້ໂກ” ເຊິ່ງພະອົງຂຶ້ນຄອງລາຊະສົມບັດໃນປີ ພສ 1272 ກົງກັບ (ເວລານີ້ພະອົງມີອາຍຸໄດ້32ປີ) ໃນລາຊະການຂອງພະອົງນີ້ບ້ານເມືອງມີຄວາມສະຫງົບສຸກ. ເພາະພະເຈົ້າຂຸນບູລົມລາຊາທິລາດ ຫຼື ພະເຈົ້າພີລໍ້ໂກະເປັນກະສັດອ້າຍລາວຜູ້ທີ່ມີຄວາມກ້າຫານ ແລະ ມີຄວາມຊໍານິຊໍານານໃນການເຮັດສົງຄາມ. ມີກອງທັບທີ່ເຂັ້ມແຂງ ແລະ ສາມາດຂະຫຍາຍອານາເຂດອອກຢ່າງກວ້າງຂວາງພ້ອມດຽວກັນ

ນັ້ນພະອົງກໍ່ໄດ້ຜູກສຳພັນທະໄມຕີກັບຈີນ ເພື່ອຫຼີກລ້ຽງສົງຄາມຄືຜ່ານມາ ແລະ ພະເຈົ້າແຜ່ນດິນຈີນຊື່ວ່າ"ພະເຈົ້າຫງວນຈົງເໜັງຮອງເຕ້" ກໍ່ໄດ້ສົ່ງເຄື່ອງບັນນາການມາຕອບແທນເຊັ່ນດຽວກັນ.



**ຮູບທີ5: ຮູບແຜນທີ່ອານາຈັກໜອງແສ(ນ່ານເຈົ້າ)**

ຂຸນບູຣົມລາຊາທິລາດກະສັດແຫ່ງອາຈັກໜອງແສ ຫຼື ນ່ານເຈົ້າ ກໍ່ເຄີຍຖືກຍົກທັບໂຍທາມາບຽດບຽນນະຄອນຫນອງແສຢູ່ສະເໝີ ເຖິງແມ່ນວ່າພະອົງຈະຜູກພັນໄມຕີໄວ້ແລ້ວກໍ່ຕາມ ສະນັ້ນ, ມາຮອດປີ ພ.ສ 1227 ກົງກັບປີຄ.ສ 731 ພະອົງໄດ້ຍຸກພະບໍຣົມມະວົງສານຸວົງ. ເສນາອາມາດ ແລະ ໄພ່ພົນຈຳນວນຫຼວງຫຼາຍລົງມາສ້າງເມືອງໃໝ່ຢູ່ທີ່ທົ່ງນານ້ອຍອ້ອຍໜູ. ຂະໜານເມືອງໃໝ່ນີ້ວ່າ: "ເມືອງແຖນ ຫຼື ເມືອງກາລົງ (ເກົາຫຼົງນັ້ນເອງ)"ມີສູນກາງຢູ່ເມືອງ ຊຽງຮຸ່ງແລ້ວພະອົງກໍ່ໄດ້ປະທັບຢູ່ເມືອງນີ້ເປັນເວລາ 8 ປີ ໃນລະຫວ່າງພະອົງປະທັບຢູ່ເມືອງກາຫຼົງນີ້ພະອົງໄດ້ຍຸກທັບໄປຕີເອົາເມືອງຂອງຈີນຢູ່ໃນເຂດແດນຕີເບດໄດ້ຫລາຍເມືອງ ພະອົງໄດ້ສັ່ງໃຫ້ພວກມ່ານລີສ້າງເມືອງໃໝ່ຂຶ້ນອີກເມືອງໜຶ່ງສຳລັບເປັນທີ່ປະທັບເອີ້ນວ່າ: "ເມືອງຕ້າຫໍ່" ລາວເຮົາເອີ້ນເມືອງຫໍແຕ້ ຫຼື ຫໍໄຕ. ຕໍ່ມາເລີຍເອີ້ນວ່າ "ຫໍໃຫຍ່" ເມືອງນີ້ຢູ່ຫ່າງຈາກເມືອງໜອງແສໄປທາງທິດເໜືອ 40 ລີ້ ເທົ່າກັບ 20 ກິໂລແມັດ. ແລ້ວພະອົງກໍ່ສະເດັດໄປປະທັບຢູ່ ເມືອງຕ້າຫໍ່ນີ້ ເມື່ອປີ ພ.ສ 1283 ກົງກັບປີ ຄ.ສ 740.

ຂຸນບູຣົມລາຊາທິລາດ ມີລາຊາໂອຣົດປະສູດຈາກນາງ ຍົມມະລາ ເອກອັກຄະມະເຫສີ ແລະ ພະນາງເອັດແຄງ ເທວີຊ້າຍ ທັງໝົດຢູ່ 7 ອົງ ຄື ທ້າວຂຸນລໍ, ທ້າວຜາລ້ານ,ທ້າວຈູລຸງ, ທ້າວ ຄຳຜົງ
ຫຼື ທ້າວຄຳຟອງ, ທ້າວອິນ, ທ້າວກົມ ແລະ ທ້າວເຈືອງ.

ໃນເວລາພະອົງໄດ້ສະເດັດຂຶ້ນໄດ້ປົກຄອງເມືອງຕ້າຫໍ່ນັ້ນ ທາງນະຄອນກາຫຼົງ ໄດ້ຊົງມອບໃຫ້ຂຸນລໍລາຊະໂອຣົດເບິ່ງແທນ.

ມາເຖິງປີພ.ສ 1286 ກົງກັບປີ ຄ.ສ 743 ຂຸນບູຣົມລາຊາທິລາດ ໄດ້ແຕ່ງລາຊະທູດໄປຜູກພັນໄມຕີກັບພະເຈົ້າແຜ່ນດິນຈີນມີນາມວ່າ: "ພະເຈົ້າຮ້ອນຈິງ" ອີກແລ້ວພະອົງຈຶ່ງສະເດັດກັບຄືນມາສະເຫວີຍລາຊະສົມບັດຢູ່ນະຄອນໜອງແສ ສ່ວນເມືອງຕ້າຫໍ່ນັ້ນ ໄດ້ຊົງມອບໃຫ້ທ້າວຜາລ້ານພະລາຊະໂອຣົດຄົນທີ່ສອງຄອບຄອງແທນ.

ເວົ້າລວມແລ້ວໃນສະໄໝ ຂຸນບູຣົມລາຊາທິຣາດ ນີ້ອານາຈັກໜອງແສ ຂອງຂຸນບູຣົມມະຫາລາດນີ້, ອານາຈັກໜອງແສມີເຂດກວ້າງຂວາງທີ່ສຸດຄື:

- ທິດເໜືອ ແລະ ທິດຕາເວັນອອກສ່ຽງເໜືອຕິດກັບຈີນ
- ທິດຕາເວັນຕົກຕິດກັບອານາຈັກຟູການ(ປາການ) ແລະ ແຄ້ນມະຄະທະ(ອິນເດຍ)
- ທິດຕາເວັນຕົກສ່ຽງເໜືອຕິດກັບຕີເບດ
- ທິດຕາເວັນອອກຕິດກັບເຂດແດນເກົ້າຈີ້(ຕັງເກຍ)
- ທິດໃຕ້ຕິດກັບດິນແດນຂອງພວກຂອມ

ເພື່ອເຕົ້າໂຮມກຸ່ມຊົນເຜົ່າຕ່າງໆທີ່ມີຄວາມສາມັກຄີຮັກແພງກັນ, ຂຸນບູລົມລາຊາທິລາດຈຶ່ງໄດ້ວາງນະໂຍບາຍອອກວ່າ ຄົນລາວເກີດມາຈາກບ່ອນດຽວກັນຄື: "ເກີດມາຈາກໝາກນ້ຳເຕົ້າປຸງ"ເຊິ່ງຕໍ່ມາໄດ້ກາຍເປັນນິທານສືບທອດຕໍ່ກັນມາຈົນຮອດທຸກວັນນີ້.

ເພື່ອເປັນການຂະຫຍາຍອານາເຂດ ຂຸນບູລົມລາຊາທິລາດ ໄດ້ມີນະໂຍບາຍສົ່ງລູກຊາຍທັງ7 ຂອງຕົນໄປປົກຄອງເມືອງຕ່າງໆດັ່ງນີ້.

- ຂຸນລໍ ໄປປົກຄອງເມືອງຊວາ (ຫຼວງພະບາງ)
- ຂຸນຜາດ່ານໄປປົກຄອງເມືອງທໍໄຕ(ສິບສອງປັນນາ-ໜອງແສ)
- ຂຸນຈຸລຸງໄປປົກຄອງເມືອງຈຸລະນີ(ເໜືອເຂດຕັງເກຍ ຫຼື ອານາມ)
- ຂຸນຄຳຜົງໄປປົກຄອງເມືອງໂຍນົກ(ລ້ານນາ-ຊຽງໃໝ່)
- ຂຸນອິນໄປປົກຄອງເມືອງລ້ານເພຍ(ອາຍຸດທະຍາ)
- ຂຸນກົມໄປປົກຄອງເມືອງຫຼ້າ(ຄຳມ່ວນ)
- ຂຸນເຈັດເຈືອງໄປປົກຄອງພວນ(ຊຽງຂວາງ)

ເພື່ອສະດວກໃນການປົກຄອງຂຸນບູລົມລາຊາທິລາດໄດ້ແບ່ງອານາຈັກອອກເປັນ10 ຫົວເມືອງຄື:

1. ເມືອງຫວັ່ນນານ(ຍູນານ)
2. ເມືອງປ້ານຕ້ານ
3. ເມືອງປາກງ່າຍ(ປຸດລົ້ງ)
4. ເມືອງໄຕຫຼີ(ໄທຫຼີ)
5. ເມືອງຈີວຊຸ້ນ
6. ເມືອງຈ້ອຍແມ
7. ເມືອງມົງແສ
8. ເມືອງມົ້ງສີນ
9. ເມືອງເຕັ່ງຊຸ້ນ
10. ເມືອງໄຕ້ຫວໍ່(ໄທ້ຫວໍ່ ຫຼື ຕ້າຫໍ່)

ຂຸນບູລົມລາຊາທິລາດຂຶ້ນສະເຫວີຍລາຊາສົມບັດຢູ່ນະຄອນໜອງແສ ຕໍ່ມາຮອດປີ ພສ 1293ກົງກັບ ຄສ 750 ຂຸນບູລົມໄດ້ສິ້ນພະຊົນລວມອາຍຸໄດ້53 ປີ ພາຍຫຼັງສິ້ນພະຊົນແລ້ວຂຸນລໍ(ໂກະລໍ້ຜົງ) ຜູ້ເປັນລູກຊາຍກໍ່ຂຶ້ນຄອງລາຊະບັນລັງແທນພໍ່ ທີ່ນະຄອນໜອງແສ. ແຕ່ເວລານັ້ນຂຸນລໍຍັງປະທັບຢູ່ເມືອງກາຫຼົງ ເມື່ອຊາບຂ່າວພະບິດາສະເດັດສະຫວັນນະຄົດ ກໍ່ສະເດັດໄປນະຄອນໜອງແສ ແລະ ແຕ່ງລາຊະທູດໄປຜູກໄມຕີກັບຈີນຄືດັ່ງແຕ່ກ່ອນ. ຕໍ່

ມາພະອິງໄດ້ໄປຢ້ຽມຢາມຈີນເຖິງເມືອງຮຸນໜໍາ ຂ້າລາຊະການຈີນຜູ້ຮັກສາເມືອງບໍ່ສະແດງຄວາມເຄົາລົບ ພະອິງຈຶ່ງມີຄວາມເຄືອງພະໄທ ແລະ ນໍາເອົາກໍາລັງໄປບຸກຕີເອົາເຂດແດນໄດ້ຫົວເມືອງຕ່າງໆໃນເຂດຮຸນນໍາ 32 ຫົວເມືອງ ແລ້ວພະອິງກໍ່ປະທັບຢູ່ເມືອງຮຸນໜໍາ.

ພໍເຖິງ ພສ 1294 ກົງກັບປີ ຄສ 751 ເຈົ້າແຜ່ນດິນຈີນກໍ່ຍົກທັບມາຕີເມືອງຮຸນໜໍາອີກຄາວນີ້ຂຸນລໍໄດ້ລໍ້ໃຫ້ກໍາລັງຂອງຈີນຍົກມາເຖິງເມືອງຕ້າຫໍ້ແລ້ວພະອິງໄດ້ແຕ່ງຕັ້ງໃຫ້ກອງທະຫານມາລັດດ້ານຫຼັງໄວ້ ກອງທະຫານຈີນຂາດສະບຽງອາຫານ ແລະ ເກີດໂລກອະຫິວາຂຶ້ນໃນກອງທະຫານຈຶ່ງເຮັດໃຫ້ກອງທັບຈີນຍົກທັບຖອຍຄືນ ແລ້ວຂຸນລໍໃຫ້ກອງທະຫານນໍາຕີເຮັດໃຫ້ທະຫານຈີນລົ້ມຕາຍເປັນຈໍານວນຫຼວງຫຼາຍ.

ຕໍ່ມາຈີນໄດ້ສົ່ງລາຊະທູດໄປເຈລະຈາດິນແດນດັ່ງກ່າວຄືນ, ຂຸນລໍພິຈາລະນາເຫັນວ່າຄວນສ້າງສັນສໍາພັນກັບຈີນໄວ້ ດັ່ງນັ້ນພະອິງຈຶ່ງສົ່ງເມືອງທີ່ຍຶດໄດ້ນັ້ນເຄິ່ງໜຶ່ງໃຫ້ຈີນຄືນເມື່ອເຫັນວ່າທາງພາກເໜືອມີຄວາມສະຫງົບລົງ ພະອົງຈຶ່ງມອບເມືອງໜອງແສໃຫ້ແກ່ ອີເມົາຊຶນ ຜູ້ເປັນຫຼານຊາຍ ປົກຄອງແທນ ໃນປີ ພສ 1294 ກົງກັບ ຄສ 754 ສ່ວນພະອົງໄດ້ລົງມາປົກຄອງເມືອງກາຫຼົງອັນເປັນດິນແດນອານາຈັກທີ່ຕິດກັບອິດທິພົນຂອງພວກຂອມ ມາເຖິງ ພສ 1300 ກົງກັບ ປີ ຄສ 757 ຂຸນລໍໄດ້ຍົກທັບລົງມາຕີເມືອງຊວາ(ຫຼວງພະບາງປັດຈຸບັນ)ຈາກອິດທິພົນຂອງພວກຂອມ(ດິນແດນແຫ່ງນີ້ໄດ້ມີຄົນລາວດັ່ງເດີມອາໃສຢູ່ມາກ່ອນແລ້ວ)ນັບແຕ່ນັ້ນມາຊົນເຜົ່າອ້າຍລາວຈຶ່ງຫຼັ່ງໄຫຼລົງມາຢູ່ເມືອງຊວາ ແລະ ເມືອງພວນນັບມື້ນັບຫຼາຍຂຶ້ນ.

ອານາຈັກໜອງແສອ້າຍລາວມີຄວາມຈະເລີນຮຸ່ງເຮືອງ ແລະກວ້າງຂວາງມາແຕ່ສະໄໝພະເຈົ້າສີນຸໂລປົກຄອງ ໄດ້ມີວົງກະສັດລາວສືບຕໍ່ກັນມາຄອງປົກເຖິງ12 ພະອົງຄິດເປັນເວລານານເຖິງ 225 ປີ ຕໍ່ຈາກນັ້ນມາກໍ່ລາຊະວົງເຊື້ອຊາດປະປົນກັບຈີນປົກຄອງເມືອງ, ເຮັດໃຫ້ປະເພນີແບບແຜນການດໍາລົງຊີວິດຂອງອານາຈັກໜອງແສ, ມີການປ່ຽນແປງໄປຕາມແຜນການດໍາລົງຊີວິດຂອງຈີນ ມາເຖິງ ພສ 1792 ກົງກັບປີ ຄສ 1254ພວກມົງໂກນໄດ້ເຂົ້າມາມີອິດທິພົນຢູ່ໃນດິນແດນຂອງຈີນແລ້ວສ້າງຕັ້ງເປັນລາຊະວົງຍ້ວນເມື່ອຕີເອົາຈີນໄດ້ໝົດແລ້ວຈຶ່ງຂະຫຍາຍອານາເຂດລົງມາທາງຕາເວັນຕົກສ່ຽງໃຕ້ ແລ້ວເຂົ້າຍຶດເອົາອານາຈັກໜອງແສ. ເຮັດໃຫ້ອານາຈັກໜອງແສຕົກຢູ່ພາຍໃຕ້ການປົກຄອງຂອງຈີນນັບແຕ່ນັ້ນເປັນຕົ້ນມາ. ຄົນລາວກໍ່ຍິ່ເຄື່ອນຍ້າຍລົງມາທາງໃຕ້ເລື້ອຍໆ.ບາງພວກກໍ່ເຄື່ອນຍ້າຍໄປທາງພາກຕາເວັນອອກຂອງອິນເດຍ, ພະມ້າ, ພາກເໜືອດາຍຫວຽດ, ລົງມາຕາມລໍາແມ່ນ້ໍາຂອງ ແລະ ແມ່ນ້ໍາເຈົ້າພະຍາ.

# ບົດທີ3
# ການສ້າງຕັ້ງອານາຈັກບູຮານໃນແຜ່ນດິນລາວ

## I. ການເຄື່ອນຍ້າຍເຂົ້າສູ່ແຫຼມສຸວັນນະພູມຂອງພວກຂອມ

ແຜ່ນດິນລາວໃນເມື່ອກ່ອນໄດ້ກວມເອົາຝັ່ງຂວາແມ່ນ້ຳຂອງ ລວມທັງເຂດທີ່ເປັນດິນແດນຂອງພະມ້າ, ໄທ , ມະເລເຊຍ, ກາປູເຈຍ ແລະ ຫວຽດນາມ. ໃນເມື່ອກ່ອນ ຄຣິດຕະສັງກາດເພີ່ນເອີ້ນຂົງເຂດນີ້ວ່າ"ດິນແດນສຸວັນນະພູມ" ເປັນຂົງເຂດທີ່ອຸດົມສົມບູນໄປດ້ວຍເງິນຄຳຈຶ່ງຖືກຂະໜານາມວ່າ "ແຫຼມທອງຄຳສຸວັນນະພູມ".

ໃນລະຫວ່າງສະຕະວັດທີVI ພວກຂອມໄດ້ເຄື່ອນຍ້າຍຈາກອິນເດຍເຂົ້າມາສູ່ດິນແດນສຸວັນນະພູມເພື່ອຫາການທ່ອງທ່ຽວ, ເຜີຍແຜ່ສາສະໜາ, ພ້ອມທັງເຂົ້າມາຊອກຫາແຫຼ່ງວັດຖຸເງິນຄຳ ແລະ ທຳການຄ້າຂາຍ. ນອກຈາກນັ້ນ ສາເຫດທີ່ພວກຂອມເຄື່ອນຍ້າຍເຂົ້າມາສູ່ຂົງເຂດນີ້ຢ່າງຫຼວງຫຼາຍຍ້ອນວ່າໄດ້ອົບພະຍົບໜີຈາກສົງຄາມຂອງສະໄໝພະເຈົ້າອະໂສກະມະຫາລາດ(273-232 ກ່ອນ ຄສ). ເມື່ອພວກຂອມໄດ້ຫຼັ່ງໄຫຼເຂົ້າມາດິນແດນສຸວັນນະພູມນັບມື້ນັບຫຼາຍຂຶ້ນແລ້ວພວກເຂົາກໍ່ໄດ້ຮ່ວມກັບຊາວພື້ນເມືອງສ້າງຕັ້ງອານາຈັກຕ່າງໆຂອງຕົນຂຶ້ນເຊັ່ນ: ອານາຈັກຟູນັນ, ອານາຈັກຈັນລາ, ອານາຈັກທະວາຣະວະດີ, ອານາຈັກເມືອງຊວາ ແລະ ອານາຈັກອິນທະປັດ.

## II. ການສ້າງຕັ້ງອານາຈັກຕ່າງໆໃນແຜ່ນດິນລາວ

### 1. ອານາຈັກສີໂຄດຕະບອງ

ອານາຈັກສີໂຄດຕະບອງແມ່ນອານາຈັກໜຶ່ງທີ່ເກົ່າແກ່ຂອງລາວມີສູນກາງທຳອິດຕັ້ງຢູ່ລ່ອງເຊບັ້ງໄຟ (ນັບແຕ່ປາກແມ່ນ້ຳເຂົ້າໄປເຖິງ15 ກິໂລແມັດ) ໄລຍະຕໍ່ມາອານາຈັກສີໂຄດຕະບອງມີອານາເຂດກວ້າງຂວາງ ກວມເອົາທົ່ງພຽງສອງຝັ່ງແມ່ນ້ຳຂອງແຕ່ວຽງຈັນລົງຮອດຫຼີ່ຜີ, ທາງທິດຕາເວັນຕົກ(ຝັ່ງຂວາແມ່ນ້ຳຂອງ) ກວມເອົາຫຼາຍແຂວງໃນພາກຕາເວັນອອກຂອງໄທ ຕິດກັບອານາຈັກທາຣາວາຣະວະດີ, ທິດຕາເວັນອອກຕິດກັບອານາຈັກຈຳປາ ຊົນເຜົ່າດັ້ງເດີມທີ່ເປັນເຈົ້າຂອງອານາຈັກນີ້ ແມ່ນຊົນເຜົ່າລະວ້າ (ລາວເດີມ) ຄຳວ່າສີໂຄດຕະບອງແມ່ນໄດ້ມາຈາກ "ໂຄຕະປຣະ" ແປວ່າເມືອງທິດຕາເວັນອອກ ເຊິ່ງໄດ້ກຳນົດຂຶ້ນໃນສະຕະວັດທີ 1 ກ່ອນ ຄ.ສ (ຈາກນັ້ນໄດ້ປ່ຽນມາເປັນອານາຈັກສີໂຄດຕະບອງໃນເວລາຕໍ່ມາ).

ມາເຖິງຕົ້ນສະຕະວັດທີ 3 ອານາຈັກສີໂຄດຕະບອງໄດ້ຕົກຢູ່ໃຕ້ອຳນາດຂອງພວກຂອມແຫ່ງອານາຈັກຟູນັນ. ເວລານັ້ນອານາຈັກຟູນັນມີສູນກາງຕັ້ງຢູ່ສາມລ່ຽມປາກແມ່ນ້ຳຂອງໄດ້ມີຄວາມເຂັ້ມແຂງແລະໄດ້ແຜ່ອຳນາດກວມເອົາອານາຈັກອ້ອມຂ້າງ ອີກບັນຫາໜຶ່ງນັກບູຮານຄະດີ ຍັງໄດ້ຄົ້ນພົບເຫັນບັນດາຮ່ອງຮອຍວັດທະນະທຳຂອງຂອມຫຼາຍແຫ່ງ ເທິງແຜ່ນດິນລາວ ໂດຍສະເພາະແມ່ນຢູ່ເຂດທົ່ງຮາບວຽງຈັນ, ສະຫວັນນະເຂດ, ຄຳມ່ວນ... ເປັນຕົ້ນແມ່ນຮ່ອງຮອຍສາສະໜາອິນດູ ເຊັ່ນ: ພະພຸດທະຮູບ, ເທວະຮູບ, ພະຊີວະເທບ, ແລະ ໃບເສມາເປັນຕົ້ນ.

ມາຮອດສະຕະວັດທີ 4 ອານາຈັກຟູນັນຊຸດໂຊມລົງພະຍານັນທະເສນຈຶ່ງໄດ້ນຳພາຊາວສີໂຄດຕະບອງແຍກຕົວອອກເປັນເອກະລາດແລະປັບປຸງອານາຈັກໃຫ້ເຂັ້ມແຂງເຊິ່ງມີອານາເຂດກວ້າງຂວາງກວ່າເກົ່າເຊິ່ງກວມເອົາສອງຝັ່ງຂອງແຕ່ເຂດແດນວຽງຈັນລົງຮອດເຂດແດນອານາຈັກຈັນລາ. ອານາຈັກຈັນລາເວລານັ້ນມີສູນກາງຢູ່ປາກແມ່ນ້ຳມູນຕອນໃຕ້ກວມເອົາເຂດວັດພູຈຳປາສັກ. ເຊິ່ງມີສູນກາງຊື່ວ່າ ເສດຖະປຸຣະ ແລະໃນທີ່ສຸດອານາຈັກຟູນັນກໍ່ແຕກມ້າງລົງໃນປີ ຄ.ສ 550 ໂດຍການປົກຄອງຈາກພວກຂອມແຫ່ງຈັນລາ.

ໃນເງື່ອນໄຂທີ່ອານາຈັກຟູນັນພວມອ່ອນເພຍຊຸດໂຊມຢູ່ນັ້ນພະເຈົ້າສຸລິຍະວົງສາສິດທິເດດ(ພະອົງເປັນບຸດຊາຍຂອງເຈົ້າສີອະນໍຣະນີເຈົ້າເມືອງຮ້ອຍເອັດປະຕູ). ເຊິ່ງເປັນເຊື້ອສາຍຂອງເຈົ້າພະຍາສີໂຄດຕະບອງ. ໄດ້ຖືເອົາກາລະໂອກາດດັ່ງກ່າວທ້ອນໂຮມບັນດາຫົວເມືອງຂຶ້ນຕ່າງໆບໍລິເວນທົ່ງຮາບພຽງຂອງສອງຝັ່ງແມ່ນໍ້າຂອງ ໂດຍປະກາດຕັດສາຍສໍາພັນກັບປະເທດດສະລາດ (ຫົວເມືອງຂຶ້ນຂອງພູນັນ) ຂອງຟູນັນ ຈາກນັ້ນພະອົງໄດ້ປັບປຸງອານາຈັກໃຫ້ຈະເລີນຮຸ່ງເຮືອງ ແລະ ເຂັ້ມແຂງ ມີອານາເຂດກວ້າງຂວາງ, ທາງເໜືອຮອດເຂດແດນວຽງຈັນ, ທາງທິດຕາເວັນຕົກຕິດກັບທຣາວະດີ, ທາງຕາເວັນອອກຕິດກັບອານາຈັກຈໍາປາ ແລະ ທິດໃຕ້ຕິດກັບອານາຈັກຈັນລາ. ແຕ່ພາຍຫຼັງເຈົ້າສຸລິຍະວົງສາ ສິດທິເດດສິ້ນພະຊົນ ອານາຈັກສີໂຄດຕະບອງກໍ່ເລີ່ມອ່ອນເພຍລົງ ສົມທົບກັບການເກີດໄພທໍາມະຊາດ (ໄພນໍ້າຖ້ວມ) ເຮັດໃຫ້ປະຊາຊົນພົບກັບຄວາມອຶດຫິວ. ສະນັ້ນບັນດາຫົວເມືອງຂຶ້ນນ້ອຍໃຫຍ່ແຍກຕົວອອກເປັນເອກະລາດ. ສວຍໂອກາດນີ້ສອງອານາຈັກຄື: ອານາຈັກຈັນທຣາວະດີ ແລະ ອານາຈັກຈັນລາ ກໍ່ໄດ້ທໍາການບຸກຍຶດເອົາຫົວເມືອງຂຶ້ນຕ່າງໆຂອງອານາຈັກ ສີໂຄດຕະບອງ.

ຕົກມາຮອດໄລຍະທ້າຍຂອງສະຕະວັດທີVII ອານາຈັກຈັນລາ ກ້າວສູ່ຄວາມອ່ອນເພຍ.ພາຍໃນເກີດຄວາມວຸ້ນວາຍ ສວຍໂອກາດນີ້ພະຍາສຸມິດຕະທໍາມະວົງສາໄດ້ທ້ອນໂຮມເອົາຫົວເມືອງຕ່າງໆແລ້ວປະກາດແຍກຕົວອານາຈັກຈັນລາ. ຈາກນັ້ນພະອົງກໍ່ໄດ້ປັບປຸງອໍານາດການປົກຄອງຄືນໃໝ່ ພ້ອມທັງຟື້ນຟູສໍາພັນທະໄມຕີກັບບັນດາຫົວເມືອງຂຶ້ນຕ່າງໆ. ອານາຈັກສີໂຄດຕະບອງເວລານີ້ມີຂອບເຂດຢ່າງກວ້າງຂວາງເຊິ່ງກວມເອົາ 7 ຫົວເມືອງຄື:

1. ເມືອງວຽງຈັນ
2. ເມືອງວຽງຄໍາ(ເຂດວຽງແກ້ວ, ວຽງຄໍາ ແຂວງວຽງຈັນໃນປັດຈຸບັນ)
3. ເມືອງນໍ້າຮຸ່ງ (ປາກຊັນ)
4. ເມືອງສີໂຄດ (ຄໍາມ່ວນ)
5. ເມືອງສາມແທ (ປາກເຊບັ້ງໄຟ)
6. ເມືອງຈໍາປານາຄະລີ (ຈໍາປາສັກ)
7. ເມືອງຕະບອງ (ອຸບົນ)
8. ເມືອງຕະເນນ(ສະຫວັນນະເຂດ)
9. ເມືອງຟ້າແດດ(ກາລະສິນ)
10. ເມືອງພູພານ(ອຸດອນ)
11. ເມືອງບົວບານ(ໜອງຄາຍ)
12. ເມືອງໜອງຫານຫຼວງ(ສະກົນນະຄອນ)
13. ເມືອງໜອງຫານນ້ອຍ(ອຸດອນ)
14. ເມືອງສີແກ້ວ(ມະຫາສາລະຄາມ)
15. ເມືອງຊຽງຫຽນ(ມະຫາສາລະຄາມ)
16. ເມືອງຮ້ອຍປະຕູ(ຈັ່ງຫວັດຮ້ອຍເອັດ)
17. ເມືອງມະລຸຂະນະຄອນ(ນະຄອນພະນົມ) ແລະ ເມືອງອື່ນໆສອງຝັ່ງແມ່ນໍ້າຂອງ (ໃນລາຊະການເຈົ້າສຸມິດຕະທໍາມະວົງສາເມືອງຫຼວງຂອງສີໂຄດຕະບອງແມ່ນເມືອງມະລຸກຂະນະຄອນແຕ່ຕໍ່ມາຈຶ່ງມີການຍົກຍ້າຍມາຢູ່ວຽງຈັນ).

ພາຍຫຼັງເຈົ້າສຸມິດ ຕະທໍາມະວົງສາ ສິ້ນພະຊົນແລ້ວ ເຈົ້າ ສຸມິນທະລາດ ໄດ້ຂຶ້ນຄອງອໍານາດໃນອານາຈັກສີໂຄດຕະບອງ ໃນເວລານີ້ສະພາບການບ້ານເມືອງມີຄວາມສະຫງົບສຸກ. ຈົນຮອດສະໄໝການປົກຄອງຂອງພະຍານິລຸດຖະລາດ, ລາຊະດອນໄດ້ຮັບຄວາມເດືອດຮ້ອນສາເຫດເນື່ອງມາຈາກເຈົ້ານິລຸດຖະລາດເປັນກະສັດທີ່ອ່ອນແອ.

ດັ່ງນັ້ນ, ຫົວເມືອງຕ່າງໆທີ່ເປັນຫົວເມືອງສ່ວຍ ກໍ່ໄດ້ແຍກຕົວອອກເປັນເອກະລາດພໍໃຜພໍລາວ. ໃນເວລາດຽວກັນນັ້ນພວກຂອມແຫ່ງອັງກໍ່ໄດ້ແຜ່ອິດທິພົນຂຶ້ນມາຍຶດດິນແດນສີໂຄດຕະບອງແຕ່ຫຼີ່ຜີຈິນຮອດວຽງຈັນ, ຫຼັກຖານທີ່ຍັງຄົງເຫຼືອໄວ້ໃຫ້ເຮົາໄດ້ເຫັນທຸກວັນນີ້ກໍ່ຄືວັດພູຈຳປາສັກ, ຮ່ອງຮອຍເມືອງເກົ່າຊາຍຟອງ(ນະຄອນຫລວງວຽງຈັນ) ແລະ ອື່ນໆມາເຖິງສະຕະວັດທີ XIIIອັງກໍໄດ້ຊຸດໂຊມລົງຫົວເມືອງຂຶ້ນຕ່າງໆກໍ່ໄດ້ແຍກຕົວອອກເປັນເອກະລາດກະແຈກກະຈາຍພໍໃຜພໍລາວ.

## 2. ເມືອງວຽງຈັນ

ເມືອງວຽງຈັນແລະເມືອງວຽງຄຳແມ່ນເມືອງໜຶ່ງທີ່ເກົ່າແກ່ຂອງລາວຕັ້ງຢູ່ລ້ອງແມ່ນ້ຳຂອງແລະນ້ຳງື່ມບໍລິເວນແຂວງວຽງຈັນໃນປັດຈຸບັນເປັນເມືອງທີ່ມີບົດບາດທາງດ້ານການເມືອງແລະເສດຖະກິດແຕ່ສະໄໝບູຮານ. ຊົນເຜົ່າດັ້ງເດີມໃນດິນແດນແຫ່ງນີ້ແມ່ນຊົນເຜົ່າລະວ້າ, ມອນ, ຂອມ ແລະ ເຜົ່າໄຕ-ລາວ. ວຽງຈັນເປັນຖິ່ນຖານທີ່ອຸດົມສົມບູນໄປດ້ວຍເຂົ້າປາອາຫານ ແລະ ເຄີຍມີຊື່ສຽງທາງດ້ານກະສິກຳ ແຕ່ສະໄໝບູຮານເກືອບສອງພັນປີ ຜ່ານມາແລ້ວ ອີງຕາມຫຼັກຖານຮ່ອງຮອຍທີ່ສຳຄັນ ເຊິ່ງຕິດພັນກັບຕຳນານອຸລັງຄະທາດ ໄດ້ກ່າວໃນສະໄໝພະຍາ ສຸມິດຕະທຳມະວົງສາ ເປັນໃຫຍ່ໃນອານາຈັກສີໂຄດຕະບອງ ທີ່ມີນະຄອນຫຼວງຢູ່ເມືອງ ມະລຸກຄະນະຄອນ ໃນສະຕະວັດທີ VIII ທ້າວຄຳບາງເຊິ່ງມີເຊື້ອສາຍຂອງພະຍາເມືອງໜອງຫານໄດ້ນາພາໄພ່ພົນຂ້າມແມ່ນ້ຳຂອງມາສ້າງເມືອງຂອງຕົນຂຶ້ນທີ່ປາກຫ້ວຍເກົ້າລ້ຽວ, ເກົ້າຄົດ (ບ້ານເກົ້າລ້ຽວໃນປັດຈຸບັນ) ໃນເວລານັ້ນຢູ່ເມືອງໜອງຄັນແທຜີເສື້ອນ້ຳ (ເຂດໂພນພະເນົາດຽວນີ້) ມີຊາວນາຜູ້ໜຶ່ງຊື່ວ່າ ບູລິຈັນ ອ່ອຍລ່ວຍ, ລາວເປັນຄົນເອື້ອເຟື້ອເພື່ອແຜ່ ແລະມີສັດທາໃນສາສະໜາພຸດຫຼາຍ ຍ້ອນຄວາມດີຄວາມງາມນັ້ນ ທ້າວຄຳບາງຈຶ່ງໄດ້ຍົກລູກສາວທີ່ມີຊື່ວ່ານາງອິນທະສະຫວ່າງ ລົງຮອດໃຫ້ແຕ່ງງານກັບບູຣິຈັນອ່ອຍລ່ວຍ ຈາກນັ້ນພະເຈົ້າສຸມິດຕະທຳມະວົງສາ ຜູ້ປົກຄອງສີໂຄດຕະບອງໄດ້ແຕ່ງຕັ້ງຜູ້ຊົງຄຸນວຸດທິນຳເອົາເຄື່ອງຂອງຕ່າງໆຂຶ້ນມາຫົດສົງບູຣິຈັນ ອ່ອຍລ່ວຍ ໃຫ້ຂຶ້ນເປັນເຈົ້າພະຍາປົກຄອງເມືອງວຽງຈັນແລ້ວປ່ຽນຊື່ມາເປັນພະຍາຈັນທະບູລີ ປະສິດທິຈັກ.

ໃນສະໄໝນີ້ໄດ້ມີອໍລະຫັນລາວ 5 ອົງທີ່ສຳເລັດໃນການຮຽນພະໄຕປິດົກຈາກປະເທດອິນເດຍເວລາກັບມາລາວພະທັງ 5 ໄດ້ນຳເອົາພະສາລີລິກະທາດ ຂອງພະພຸດເຈົ້າມາວຽງຈັນ ດ້ວຍຄວາມເຫຼື້ອມໃສໃນພະພຸດສາສະໜາ ພະເຈົ້າຈັນທະບູລີ ປະສິດທິຈັກ ຈຶ່ງໄດ້ນຳປະຊາຊົນສ້າງພະທາດນ້ອຍອັນບັນຈຸພະບໍລົມພະສາລີລິກະທາດ (ກະດູກຫົວເນົ່າ) ຂອງພະພຸດທະເຈົ້າ (ທາດດັ່ງກ່າວຢູ່ໃນພະທາດຫຼວງປັດຈຸບັນ)

## 3. ເມືອງຈຳປາສັກ

ນະຄອນຈຳປາສັກເປັນເມືອງໜຶ່ງທີ່ເກົ່າແກ່ຂອງລາວ ຕັ້ງຢູ່ຕອນໃຕ້ຂອງແຜ່ນດິນລາວ ເຊິ່ງກວມເອົາສອງຝັ່ງຂອງແມ່ນ້ຳຂອງ ແລະ ກໍ່ເປັນຂົງເຂດທີ່ອຸດົມສົມບູນເໝາະແກ່ການປູກຝັງ ແລະ ລ້ຽງສັດ ນະຄອນຈຳປາສັກ ຊື່ດັ້ງເດີມແມ່ນຈຳປານະຄະບູລີ ເຊິ່ງຕັ້ງຢູ່ບໍລິເວນເມືອງ ຈຳປາສັກ ໃນປັດຈຸບັນທີ່ຄົນອາໄສຢູ່ກ່ອນໝູ່ໃນຂົງເຂດນີ້ແມ່ນພວກລະວ້າ. ແຕ່ຕໍ່ມາໄດ້ມີຊົນເຜົ່າອື່ນເຂົ້າມາຢູ່ຮ່ວມກັນ ເຊັ່ນ: ພວກຈາມ ແລະ ພວກຂອມເປັນຕົ້ນ.

ນະຄອນຈຳປາສັກກ່ອນຄິດຕະສະກະຣາດ ພວກຈາມໄດ້ເຄື່ອນຍ້າຍມາຈາກແຄມຝັ່ງທະເລ ຫວຽດນາມ ແລະ ຂະຫຍາຍອານາເຂດເຂົ້າມາຄອບຄອງຂົງເຂດຈຳປາສັກ ເຊິ່ງມີທ້າວຄັດທະນາມເປັນຜູ້ປົກຄອງພໍມາເຖິງສະຕະວັດທີ 3 ພວກຂອມແຫ່ງອານາຈັກ ຟູນັນ ໄດ້ເຮືອງອຳນາດກວມເຖິງ 5000-6000 ລີ້ (1ລີ້ເທົ່າກັບ 575 ແມັດ) ເຊິ່ງກວມອານາຈັກໃກ້ຄຽງເຖິງ 10 ອານາຈັກ ສະນັ້ນຈຶ່ງເຮັດໃຫ້ອານາຈັກຈຳປາສັກ ຕ້ອງຢູ່ໃຕ້ອຳນາດຂອງພວກຂອມແຫ່ງ ຟູນັນ ໂດຍສະເພາະແມ່ນໄລຍະພະຍາກຳມະທາ ເປັນຜູ້ປົກຄອງ ໃນໄລຍະນີ້ພະອົງໄດ້ສ້າງວັດພູຂຶ້ນແຕ່ບໍ່ສຳເລັດ

ມາເຖິງສະຕະວັດທີ 6 ມີກະສັດຂອມຊື່ວ່າ ເທວະນິກະ (ພະວໍລະມັນ) ໄດ້ມາປົກຄອງ ແລະ ສືບຕໍ່ສ້າງວັດພູ ຈຳປາຂຶ້ນ ໂດຍມີສິລະປະແບບພວກຂອມ ນັບແຕ່ນັ້ນມາພວກຂອມໄດ້ຄວບຄຸມ ແລະ ຂະຫຍາຍອຳນາດຢູ່ໃນ

ຂົງເຂດນີ້ ປີຄ.ສ 539 ພະ ອະນຸຊາ ຂອງກະສັດແຫ່ງຈຳປາສັກ ໄດ້ຍົກທັບເຂົ້າຕີອານາຈັກຟູນັນ ເຮັດໃຫ້ອານາຈັກຟູນັນ ອ່ອນເພຍ  ແລະ ແຕກມ້າງລົງໃນປີ ຄ.ສ 550 ຕໍ່ມາພະເຈົ້າວໍລະມັນ ກໍ່ໄດ້ລວບລວມເອົາດິນແດນ ເຂດໂຫຼ້ງແມ່ນ້ຳຂອງຕອນໃຕ້ ທັງໝົດ ພ້ອມກັບອານາຈັກ ຟູນັນ ແລ້ວສ້າງຕັ້ງອານາຈັກຈັນລາຂອງຕົນຂຶ້ນ ຈາກນັ້ນໄດ້ເຄື່ອນຍ້າຍສູນກາງລົງໄປສູ່ພາກໃຕ້ເລື້ອຍໆ ຈົນມາຮອດສະຕະວັດທີ 8 ອານາຈັກຈັນລາໄດ້ຊຸດໂຊມລົງ ອັນໄດ້ເຮັດໃຫ້ອານາຈັກສີໂຄດຕະບອງ ແຍກຕົວອອກເປັນເອກະລາດ ໃນປີ ຄ.ສ 713 ເຊິ່ງແຜ່ນດິນກວມເອົານະຄອນຈຳປາສັກ.

ມາຮອດສະຕະວັດທີ 9-10 ນະຄອນຈຳປາສັກໄດ້ຕົກຢູ່ໃຕ້ອິດທິພົນຂອງພວກອັງກໍ່ ຈົນເຖິງທ້າຍສະຕະວັດທີ 13 ພວກຂອມຈຶ່ງເຊື່ອມອຳນາດລົງ ສະນັ້ນຊາວເມືອງຈຳປາສັກຈຶ່ງແຍກຕົວ ເປັນເອກະລາດອີກຄັ້ງໃໝ່ນັບແຕ່ນັ້ນມາອານາຈັກຈຳປາສັກ ກໍ່ຄືເມືອງລາວບູຮານອື່ນໆ ຕ່າງໆກໍ່ປົກຄອງເມືອງພໍໃຜພໍລາວ ຈົນຮອດກາງສະຕະວັດທີ 14 ເຈົ້າຟ້າງຸ່ມຈຶ່ງໄດ້ທ້ອນໂຮມບັນດາເມືອງລາວບູຮານ ເຫຼົ່ານັ້ນເຂົ້າເປັນອານາຈັກລາວລ້ານຊ້າງ  ເອກະພາບ.



**ຮູບທີ6: ຮູບວັດພູຈຳປາສັກ**

## 4. ເມືອງພວນ

ເມືອງພວນຊຽງຂວາງແມ່ນເມືອງໜຶ່ງທີ່ເກົ່າແກ່ຂອງລາວແລະກໍ່ມີຊື່ສຽງໂດ່ງດັງໄປທົ່ວໂລກທັງນີ້ກໍ່ຍ້ອນວ່າມີຮ່ອງຮອຍປະຫວັດສາດທີ່ສຳຄັນປະໄວ້ໃຫ້ພວກເຮົາເຫັນຫຼາຍຢ່າງນັ້ນກໍ່ຄືໄຫຫີນໃຫຍ່ທີ່ມີໃນຂົງເຂດພູພຽງຊຽງຂວາງມີປະມານ 630 ໜ່ວຍນອກຈາກນັ້ນຍັງມີເຄື່ອງມືຫີນ ຂວານຫີນ.

ຊົນເຜົ່າທີ່ອາໄສຢູ່ເຂດເມືອງພວນກ່ອນໝູ່ແມ່ນຊົນເຜົ່າລາວເດີມ (ລະວ້າ) ຕໍ່ມາແມ່ນພວກຂອມແລະພວກມອນໄດ້ເຂົ້າມາອາໄສຢູ່ດິນແດນຕອນນີ້ຮ່ວມກັບຊົນເຜົ່າພື້ນເມືອງມາຢູ່ໃນລະຫວ່າງຕົ້ນຄິດຕະສັງກາດຊົນເຜົ່າອ້າຍລາວໄດ້ເຄື່ອນລົງມາດຳລົງຊີວິດຮ່ວມກັນແລະຕໍ່ມາກໍ່ໄດ້ຕັ້ງເປັນລັດຂຶ້ນ ຕົກມາຮອດສະຕະວັດທີ 8 ຂຸນເຈັດເຈືອງລູກຊາຍຂອງຂຸນບຸລົມຄົນທີ 7 ໄດ້ຍົກທັບມາຍຶດເມືອງພວນ ແລະ ສ້າງເປັນອານາຈັກເມືອງພວນຂຶ້ນ ພ້ອມດຽວກັນກັບຂຸນລໍລົງມາປົກຄອງເມືອງຊວາ.

**5. ເມືອງຊວາ**

ດິນແດນດັ້ງເດີມຂອງເມືອງຊວາແມ່ນຕັ້ງຢູ່ບໍລິເວນແຂວງຫຼວງພະບາງໃນປັດຈຸບັນມີເນື້ອທີ່ກວມເອົາ 12 ພັນນາລີ້ ແລະ 12 ຈຸໄທ ມີເຂດແດນຕິດກັບອານາຈັກລ້ານນາ ທິດຕາເວັນອອກສ່ຽງເໜືອຕິດກັບດາຍຫວຽດ ເມືອງຊວາມີສູນກາງຢູ່ຊຽງດົງ ຊຽງທອງທີ່ປາກນ້ຳດົງ ນ້ຳຄານ.

ຕາມຕຳນານພົງສາວະດານລ້ານຊ້າງ, ພື້ນຂຸນບໍລົມແລະໜັງສືອຸລັງຄະທາດໄດ້ກ່າວເຖິງກະສັດປົກຄອງເມືອງຊວາໃນໄລຍະກ່ອນສະຕະວັດທີ 13ວາ ມີເຖິງ 3 ຕະກູນຄອບຄອງຄື: ເລີ່ມຕົ້ນຈາກວົງຕະກູນນັນທາ ໂດຍໄດ້ມີຂຸນຊວາເປັນກະສັດອົງທຳອິດ ຕັ້ງຊື່ເມືອງວ່າ "ເມືອງຊວາ ຫຼື ວ່າອານາຈັກຊວາ"

ພາຍຕະກູນນັນທາສິ້ນສຸດລົງ ມີຕະກູນ"ພະຍານາກ" ຂຶ້ນກຳອຳນາດໃນເມືອງຊວາ. ວົງຕະກູນນີ້ມີຄວາມເຊື່ອກັນວ່າ ແມ່ນຊົນເຜົ່າອ້າຍລາວລຸ້ນທຳອິດ ທີ່ຍ້າຍມາຈາກອານາຈັກ ແຖນ (ຖືກຮຸກຮານຈາກຈີນ) ແລ້ວມາຕັ້ງຖິ່ນຖານກັບຊົນເຜົ່າພື້ນເມືອງຢູ່ດິນແດນແຫ່ງນີ້ ເມື່ອວົງຕະກູນພະຍານາກສິ້ນສຸດລົງ ກໍ່ແມ່ນຕະກູນ"ຈັນທະພານິດ" ຂຶ້ນກຳອຳນາດແທນ ຕະກູນນີ້ແມ່ນມີອາຊີບຄ້າຂາຍທີ່ມາຈາກວຽງຈັນ. ສຸດທ້າຍໄດ້ກາຍເປັນຜູ້ມີບົບບິດບາດ ຂຶ້ນປົກຄອງເມືອງຊວາ , ວົງຕະກູນຈັນທະພານິດແມ່ນວົງຕະກູນພວກຂອມ ເຊິ່ງປະກົດມີຊື່ຜູ້ຂຶ້ນກຳອຳນາດຢູ່ເມືອງຊວາ ດັ່ງນີ້:

1. ຂຸນຊວາ
2. ຂຸນຍີ່ບາ
3. ຂຸນວິລິຍະ
4. ຂຸນກັນຮາງ

ມາຮອດປີຄ.ສ 757 ຂຸນລໍ ເຊິ່ງແມ່ນວົງຕະກູນອ້າຍລາວ ແຫ່ງເມືອງໜອງແສ ໄດ້ຍົກທັບລົງມາຕີເມືອງຊວາ ເຊິ່ງໄລຍະນີ້ແມ່ນຂຸນກັນຮາງ ເປັນຜູ້ປົກຄອງ ເມືອງພະອົງຂຶ້ນຄອງລາດແລ້ວ ພະອົງໄດ້ພະນາມຂອງພະອົງເປັນ ຂຸນຊວາ ແລະ ປ່ຽນນາມຂອງເມືອງຊວາ ເປັນນະຄອນຊຽງທອງ.

ອານາຈັກເມືອງຊວານັບແຕ່ ຂຸນລໍ ລົງມາກໍ່ຕັ້ງອານາຈັກໃນລະຫວ່າງກາງສະຕະວັດທີ 8 ນັ້ນໄດ້ມີກະສັດປົກຄອງສືບທອດ ກັນມາຈົນເຖິງກາງສະຕະວັດທີ 14.

ນອກຈາກການກໍ່ຕັ້ງອານາຈັກເມືອງຊວາແລ້ວຢູ່ທາງທິດຕາເວັນຕົກ ຍັງມີອານາຈັກລ້ານນາ(ຊຽງໃໝ່) ເຊິ່ງແມ່ນລາວຈົກເປັນຜູ້ກໍ່ຕັ້ງ ສາເຫດເນື່ອງມາຈາກວ່າ ຊົນເຜົ່າອ້າຍລາວໄດ້ສູນເສຍອານາຈັກແຖນໃຫ້ແກ່ຈີນ ຄົນລາວກໍ່ພາກັນຖອຍລົງມາທາງພາກໃຕ້ເລື້ອຍໆ. ພວກໜຶ່ງຖອຍລົງໄປທາງອານາຈັກໜອງແສ ແລະ ອີກພາກ ສ່ວນໜຶ່ງໄດ້ລົງມາທາງເຂດ ລ້ານນາຊຽງໃໝ່. ກະສັດລາວຈົກປະກົດມີ 7 ອົງ, ເຖິງສະໄໝລາວຄຽງ ຈຶ່ງພາກັນສ້າງເມືອງໃໝ່ຂຶ້ນ ຊື່ວ່າໄຊບູລີ ຊຽງແສນ (ຊຽງແສນ) ໃນປີ ຄ.ສ 934.

ກະສັດລາວຈົກລວມມີ 8 ອົງ ຈຶ່ງເຖິງສະໄໝຈອມຍາເລືອງ (ຜູ້ເປັນບິດາຂອງຂຸນເຈືອງ) ພໍ່ລູກໄດ້ອອກເຮັດສົງຄາມກັບດາຍຫວຽດ ແລະ ແຖນລໍ ຕໍ່ຈາກນັ້ນ ລາວເງິນເລືອງ ຜູ້ເປັນໂອຣົດກໍ່ຂຶ້ນປົກຄອງອານາຈັກ ແລະ ສືບທອດບັນລັງເຖິງ 5 ລາຊະການ ຈຶ່ງລົງມາເຖິງລາຊະການຂອງລາວເມັງ ພະອົງມີລູກຊາຍຜູ້ໜຶ່ງ ຊື່ວ່າ ເມັງລາຍ (ເຈົ້າເມັງລາຍ) ເຊິ່ງໄດ້ຂຶ້ນປົກຄອງ ໃນປີ ຄ.ສ 1258 ແລະ ໄດ້ຕັ້ງນະຄອນຊຽງໃໝ່ ນັບແຕ່ນັ້ນມາອານາຈັກລ້ານນາໄດ້ຢຸດເຊົາຄຳວ່າ"ລາວ"ອອກໜ້າໃນການຕັ້ງຊື່ເມືອງ ແລະ ພາຍຫຼັງລາຊະວົງເມັງລາຍ ພວກພະມ້າໄດ້ເຂົ້າມາຮຸກຮານແລ້ວຢຶດເອົາລ້ານນາໄປຂຶ້ນກັບພະມ້າ.

## II. ວັດທະນະທຳລາວໃນສະໄໝບູຮານ

ຄົນລາວບູຮານບັນດາເຜົ່າຕ່າງໆທີ່ໄດ້ດຳລົງຊີວິດຢູ່ກັບອານາຈັກບູຮານສອງຝັ່ງແມ່ນ້ຳຂອງເຄີຍມີວັດທະນະທຳເປັນຂອງຕົນເອງຫຼາຍພັນປີທີ່ຜ່ານມາແລ້ວ. ຕໍ່ມາເມື່ອປະມານຕົ້ນສະຕະວັດແຫ່ງ ຄິດຕະສັງກາດ ໄດ້

ຮັບອິດທິພົນວັດທະນະທຳອິນເດຍ ທີ່ເຂົ້າມາທາງຝັ່ງທະເລຫວຽດນາມ ກຳປູເຈຍ ແລະ ສະຫຍາມໃນເວລາດຽວກັນນັ້ນ ຄົນລາວທາງພາກເໜືອໄດ້ຮັບອິດທິພົນວັດທະນະທຳຈາກຈີນ ໂດຍຜ່ານທາງມົນທົນຢູ່ນ່ານ ຕໍ່ມາເມື່ອຮອດທ້າຍສະຕະວັດທີ 11-12 ວັດທະນະທາຂອມ (ຂະເມນ) ແຫ່ງອັງກໍ່ໄດ້ເຂົ້າມາມີບົດບາດ ໂດຍກົງຢູ່ສອງຝັ່ງແມ່ນ້ຳຂອງແຕ່ພາກກາງລົງໄປຫາພາກໃຕ້ ຈຶ່ງເຮັດໃຫ້ວັດທະນະທຳຂອງລາວ ທີ່ມີຢູ່ນັ້ນຖືກປະສົມປະສານກັບວັດທະນະທຳຕ່າງຖິ່ນອີກ.

ພື້ນຖານວັດທະນະທຳປະເພນີບູຮານສ່ວນຫຼາຍແມ່ນຕິດພັນກັບຄວາມເຊື່ອຖື ແບບຈິດຕະນິຍົມ ເຊື່ອຜີພໍ່ຜີແມ່, ຜີຟ້າຜີແຖນ, ຜີເຫສັກຫຼັກເມືອງ ຕໍ່ມາຈຶ່ງໄດ້ມີການເຊື່ອຖື ສາສະໜາພຸດ ຄົນລາວບູຮານກໍ່ຄືເຜົ່າອື່ນໆ ຫຼື ວ່າຊາດອື່ນໆໃນອາຊີອາຄະເນ ເວົ້າລວມແລ້ວໄດ້ມີຄວາມເຊື່ອຖື ໃນວິນຍານຂອງບັນພະບຸລຸດຂອງຕົນ ການເຊື່ອຖືແບບນີ້ໄດ້ມີຮ່ອງຮອຍສືບທອດກັນມາ ແລະ ຖືວ່າເປັນປະເພນີອັນຫນຶ່ງຂອງຄົນລາວ ທີ່ມີການວິວັດທະນາການ ສືບທອດມາແຕ່ບູຮານນະການ ຈົນເຖິງປະຈຸບັນ.

### 1. ດ້ານສາສະໜາ

ແຕ່ກ່ອນຄົນລາວຍັງບໍ່ທັນມີສາສະນາມີແຕ່ການເຊື່ອຖືແບບຜີສາງນາງໄມ້, ຜີພໍ່ຜີແມ່ແລະອື່ນໆເປັນຕົ້ນຕໍຈົນມາຮອດຄິດຕະສັງກາດລັດທິສາສະໜາກໍ່ໄດ້ຂະຫຍາຍມາຈາກອິນເດຍເຂົ້າມາໂດຍສະເພາະສາສະໜາພາມ ເຊັ່ນ: ເທບພະເຈົ້າ 3 ອົງໃນສາສະໜາຄື ພະພົມ, ພະວິສະນຸ(ພະນະລາຍ) ແລະ ພະສິວະທີ່ແຜ່ມາຈາກອິນເດຍ ເລີ່ມແຕ່ຫຼັງສະຕະວັດທີ 5-6 ມີສູນກາງຢູ່ວັດພູຈຳປາສັກ ແລະ ທົ່ງຣາບວຽງຈັນ.

ໄປຄຽງຄູ່ກັບການເຊື່ອຖືສາສະໜາພາມຢູ່ນີ້, ສາສະໜາພຸດກໍ່ໄດ້ເຂົ້າມາມີບົດບາດຢູ່ພາກໃຕ້ແລະພາກກາງສອງຝັ່ງແມ່ນ້ຳຂອງ ແລະ ສາຂາແມ່ນ້ຳຂອງເຊິ່ງປະກອບມີຫລັກຖານຢູ່ໃນລະຫວ່າງສະຕະວັດທີ 7-8 ຢູ່ບໍລິເວນລ້ອງແມ່ນ້ຳມູນ, ນ້ຳຊີ ແລະ ນ້ຳຂອງ

ສາສະໜາພຸດແມ່ນສາສະໜາໜຶ່ງທີ່ເກີດຂຶ້ນຢູ່ປະເທດອິນເດຍເມື່ອປະມານ 500 ປີກ່ອນຄິດຕະສັງກາດເປັນສາສະໜາທີ່ຮັບຮູ້ເຖິງຄວາມອາດສາມາດຂອງມະນຸດໃນສັງຄົມອິນເດຍສະໄໝບູຮານ. ສະເພາະຢູ່ລາວໃນການເຊື່ອຖື ຄຳສອນຂອງພຸດທະສາສະໜາ ເຫັນວ່າມີເຫດຜົນ ແລະ ອ່ອນໂຍນ ດັ່ງນັ້ນ, ສາສະໜາພຸດ ຈຶ່ງຖືກຕ້ອນຮັບຈາກຄົນລາວ ບູຮານເປັນຈຳນວນຫຼາຍ ແລະ ກໍ່ມີການປັບປຸງເຮັດການເຊື່ອຖືຜີ ແລະ ພາມຫຼຸດໜ້ອຍລົງ.

### 2. ດ້ານສັງຄົມ

ຢູ່ໃນສັງຄົມບູຮານເວົ້າລວມແລ້ວປະກອບມີ 2 ຊົນຊັ້ນໃຫຍ່ຄື: ຊົນຊັ້ນທີ 1 ແມ່ນຊົນຊັ້ນປົກຄອງທີ່ມີຖານະ ເອີ້ນວ່າ "ເຈົ້າຂຸນ", ຊົນຊັ້ນທີ່ 2 ແມ່ນຊົນຊັ້ນ ທີ່ຖືກປົກຄອງ ເຊິ່ງພວກເຈົ້າຂຸນ ເອີ້ນວ່າ ໄພ່, ຂ້ອຍ, ຂ້າໄດ້ແກ່ຊາວໄຮ່ນາ ແລະ ບ່າວໄພ່ລາຊະດອນທີ່ເປັນຜູ້ອອກແຮງງານ ລ້ຽງສັງຄົມ. ຊີວິດຂອງຄົມບູຮານໄດ້ຕິດພັນກັບຮີດຄອງປະເພນີ ແລະ ການເຊື່ອຖື ເຊັ່ນ: ພິທີການ ເກີດ, ການບວດ, ການແຕ່ງງານ...ແຕ່ວ່າພິທີການຕ່າງໆລ້ວນແຕ່ມີເນື້ອໃນ ແລະຮູບການເປັນຂອງຕົນເອງ ແລະ ມີວິວັດທະນາການຕາມຍຸກສະໄມເລື້ອຍໆມາ.

### 3. ດ້ານສິລະປະ

ຢູ່ບໍລິເວນສອງຝັ່ງແມ່ນ້ຳຂອງທີ່ເປັນຫົວເມືອງລາວບູຮານລ້ວນແຕ່ເຄີຍມີສີໄມ້ລາຍມືແລະ ມີຫົວຄິດປະດິດສ້າງນັບເປັນເວລາຫຼາຍພັນປີຜ່ານມາແລ້ວ ສະແດງອອກໃນການຄົ້ນພົບເຄື່ອງມືປັ້ນດິນເຜົາໃນບ້ານຊຽງ (ແຂວງອຸດອນ) ເຂດຝັ່ງຂວາຂອງແມ່ນ້ຳຂອງ ເປັນເຄື່ອງປັ້ນດິນເຜົາທີ່ມີລວດລາຍງົດງາມຄ້າຍຄືສີທຳມະຊາດ ໄຫຫີນຊຽງຂວາງ ກໍ່ແມ່ນຜະລິດຕະພັນໜຶ່ງ ທີ່ແຝງດ້ວຍຄວາມງົດງາມ ໃນຮູບລັກສະນະສິລະປະການກໍ່ສ້າງ, ຄ້ອງບັ້ງ ຫຼື ຕັ່ງເຈື່ອງພະບາງ ກໍ່ເປັນຜະລິດຕະພັນໜຶ່ງທີ່ປະກອບດ້ວຍ ລວດລາຍການຕົກແຕ່ງງົດງາມເປັນພິເສດ.

ສັງລວມແລ້ວສິລະປະບູຮານ ສະໄໝກ່ອນເຈົ້າຟ້າງຸ່ມສ້າງຕັ້ງອານາຈັກລາວລ້ານຊ້າງໄດ້ຈັດອອກເປັນ 3 ໄລຍະປະຫວັດສາດທີ່ແຕກຕ່າງກັນ ທີ່ມີເນື້ອໃນບົ່ງບອກເຖິງລັກສະນະຂອງສິລະປະໃນແຕ່ລະໄລຍະ ເຊັ່ນ: ໄລຍະ

ທີ 1 ສະຕະວັດທີ 6-10 ເຊິ່ງທ່ານຈຳປາ ແກ້ວມະນີ ໄດ້ຕັ້ງຊື່"ສິລະປະສະໄໝສີໂຄດຕະບອງ" ສະໄໝນີ້ສ່ວນຫຼາຍແມ່ນພົວພັນເຖິງ ສາສະໜາພາມ ແລະ ສາສະໜາພຸດ ເຊັ່ນ: ທາດອີງຮັງ, ທາດພະນົມ,ໃບເສມາທີ່ສະຫຼັກໃສ່ຫີນຮູບສິ່ວະລິງທີ່ເຮັດດ້ວຍຫີນ ແລະ ອື່ນໆ , ໄລຍະທີ 2 ແມ່ນໄລຍະສະຕະວັດທີ 11-12 ມີຊື່ວ່າ ສິລະປະສະໄໝຊາຍຟອງ(ສະໄໝສິນລະປະຂອມ) ສັນຍາລັກເດັ່ນກວ່າໝູ່ແມ່ນພະພຸດທະຮູບ, ເທວະຮູບຫີນທີ່ໄ້ດ້ມາຈາກບ່ອນຕ່າງໆ ໂດຍສະເພາະບໍລິເວນເມືອງຫາດຊາຍຟອງປັດຈຸບັນ , ໄລຍະທີ 3 ແມ່ນໄລຍະສະຕະວັດທີ 13-14 ເປັນສິລະປະທີ່ວິວັດມາຈາກຫຼາຍຕະກູນ ຊ່າງສິລະປະທີ່ແຕກຕ່າງ ແຕ່ມີຄວາມງົດງາມພິເສດ ສິລະປະໃນ 3 ໄລຍະນີ້ ໄດ້ກາຍເປັນຕະກູນສິລະປະລ້ານຊ້າງໃນສະໄໝຕໍ່ມາ ໄດ້ພົວພັນລະຫວ່າງວຽງຈັນ ແລະ ຫຼວງພະບາງ.

**4. ດ້ານພາສາ ແລະ ວັນນະຄະດີ**

ຕາມຫຼັກຖານຮ່ອງຮອຍແຕ່ບູຮານຮອດປັດຈຸບັນສາມາດສັນນິຖານໄດ້ວ່າຄົນລາວບູຮານໄດ້ມີພາສາປາກເວົ້າແລະຕົວໜັງສືໃຊ້ສຳລັບການຂີດຂຽນເປັນຂອງຕົນເອງ ນັບເປັນເວລາຫຼາຍພັນປີກວ່າມາແລ້ວ ສະເພາະຕົວໜັງສືໃນເບື້ອງຕົ້ນໄດ້ຮັບອິດທິພົນ ຈາກໜັງສືສັນສະກິດຂອງອິນເດຍ ທີ່ນັບຖືລັດທິສາສະໜາພາມນຳເຂົ້າມາເຜີຍແຜ່ຢູ່ແຫຼມສຸວັນນະພູມ. ຈາກນັ້ນຄົນລາວຈຶ່ງໄດ້ດັດແກ້ມາເປັນຕົວໜັງສືຂອງຕົນເອງ ໜັງສືນີ້ປະກົດແຜ່ຫຼາຍ ໃນສະໄໝບູຮານແຕ່ເໜືອເຖິງໃຕ້ ນອກຈາກນັ້ນກໍ່ຍັງມີວັນນະຄະດີລາວທີ່ມີສີສັນ ແລະ ສ່ອງແສງເຖິງນິໄສໃຈຄໍຂອງຄົນລາວ ແລະ ຊີວິດສັງຄົມລາວ ຍ້ອນແນວນັ້ນຈຶ່ງເຮັດໃຫ້ພົນແຜ່ນນິທານຕ່າງໆລ້ວນແລ້ວແຕ່ສ່ອງແສງເຖິງການພົວພັນການດຳລົງຊີວິດຂອງຊາວບູຮານ ການອອກແຮງງານທີ່ຕິດພັນກັບທຳມະຊາດ ຂອງຄົນລາວບູຮານໃນໄລຍະກ່ອນ.

**ສະຫຼຸບໃຈຄວາມສຳຄັນຂອງບົດນີ້:**

ເນື້ອໃນທີ່ສຳຄັນຂອງບົດນີ້ແມ່ນເວົ້າເຖິງການເຄື່ອນຍ້າຍຂອງພວກຂອມເຂົ້າມາສູ່ດິນແດນສຸວັນນະພູມ ໂດຍເຂົ້າມາປະປົນກັບຊົນເຜົ່າພື້ນເມືອງ ແລ້ວສ້າງຕັ້ງເປັນອານາຈັກຕ່າງໆ ໃນສະໄໝບູຮານດິນແດນສຸວັນນະພູມນີ້ມີຫຼາຍອານາຈັກທີ່ ສຳຄັນ ເຊັ່ນ: ອານາຈັກສີໂຄດຕະບອງ, ອານາຈັກວຽງຈັນ, ອານາຈັກຈຳປາສັກ, ອານາຈັກເມືອງພວນ(ຊຽງຂວາງ), ອານາຈັກເມືອງຊວາ(ຫຼວງພະບາງ) ທີ່ເປັນອານາຈັກທີ່ເກົ່າແກ່ ແລະ ມີຄວາມສຳຄັນທາງປະຫວັດສາດ ບາງອານາຈັກກໍ່ຍັງປະຮ່ອງຮອຍວັດຖຸບູຮານ ຫຼາຍຢ່າງໄວ້ໃຫ້ແກ່ຄົນຮຸ່ນຫຼັງ ໄດ້ພົບເຫັນ ແລະ ສຶກສາຮ່ຳຮຽນ ພ້ອມດຽວກັນນັ້ນວັດທະນະທຳ ສະໄໝບູຮານ ກໍ່ມີຄວາມສຳຄັນ ໂດຍສະເພາະເຄົ້າກຳເນີດສາສະໜາ ແລະ ພາສາຂອງລາວ

## ພາກທີ 2
## ປະຫວັດສາດລາວສະໄໝກາງ
## ບົດທີ 4
## ການທ້ອນໂຮມອານາຈັກລາວລ້ານຊ້າງ

### I. ທີ່ມາຂອງຄຳວ່າ: ອານາຈັກລາວລ້ານຊ້າງ

ຄຳວ່າ**ລ້ານຊ້າງ**ກຳເນີດຂຶ້ນໃນສະຕະວັດທີ 14 ເຊິ່ງເປັນຊື່ອານາຈັກຂອງຄົນລາວທີ່ມີອານາເຂດກວ້າງໃໝ່ໄພສານ ເຊິ່ງໄດ້ກວມເອົາດິນແດນໃນປະເທດລາວໃນປັດຈຸບັນ ແລະ ລວມໄປເຖິງດິນແດນທາງພາກອີສານຂອງປະເທດໄທ ເຊິ່ງໃນອາດີດເປັນດິນແດນຂອງອານາຈັກລ້ານຊ້າງ ຄຳວ່າ"ລ້ານຊ້າງ"ເທົ່າທີ່ສຶກສາພົບວ່າ ຄຳນີ້ປະກົດຂຶ້ນທຳອິດໃນຕຳນານຂຸນບູລົມສະບັບທີ1 ຕໍ່ມາກໍ່ພົບອີກໃນພົງສາວະດານລາວສະບັບຕ່າງໆນັກວິຊາການທີ່ຄົ້ນຄວ້າກ່ຽວກັບປະຫວັດສາດລາວ ໄດ້ກ່າວໄວ້ກ່ຽວກັບທີ່ມາຂອງຄຳວ່າ "ລ້ານຊ້າງ" ໄວ້ໃນຫຼາຍທັດສະນະທີ່ແຕກຕ່າງກັນດັ່ງນີ້:

1. ລ້ານຊ້າງມາຈາກຄຳວ່າ "ສະຕະນາຄະນະຫຸດ" ໃນພາສາບາລີນັກປາດເອົາມາໃຊ້ເອີ້ນຊື່ ອານາຈັກຂອງຄົນລາວ. ຄຳວ່າ "ສະຕະ" ແປວ່າຮ້ອຍ "ນາຄະ" ແປວ່າ ຊ້າງ ແລະ "ນະຫຸດ" ແປວ່າ ໝື່ນ. ດັ່ງນັ້ນເມື່ອລວມເຂົ້າກັນແລ້ວ ຈິ່ງມີຄວາມໝາຍວ່າ "ຊ້າງຮ້ອຍໝື່ນໂຕ ຫຼືວ່າ "ຊ້າງລ້ານໂຕ" ແລ້ວຄຳນີ້ກໍ່ກາຍມາເປັນຊື່ອານາຈັກລ້ານຊ້າງໃນໄລຍະຕໍ່ມາ.

   **ສີ** ມາຈາກພາສາສັນສະກິດ "ສີຣິ" ເຊິ່ງມີຄວາມໝາຍວ່າ: ມິ່ງ, ສະຫງ່າ, ແສງ,ສຸກໃສ, ສະຫວ່າງ,ຈະເລີນ, ສຳເລັດ, ເປັນໃຫຍ່ ແລະ ມຸງຄຸນສະຕະ ຄຳບາລີຂຽນວ່າ: "ສັຕ" ແປວ່າ ໜຶ່ງຮ້ອຍ.

   **ນາຄະ** ຄຳບາລີແປໄດ້ທັງສາມຢ່າງ: ຊ້າງ, ນາກ, ຜູ້ບໍ່ມີບາບ

   **ນະຫຸດ** ຄຳບາລີຂຽນວ່າ: "ນະຫຸຕະ" ແປວ່າ ໜຶ່ງໝື່ນ

   ສະນັ້ນ "ກຸງສີສະຕະນາຄະນະຫຸດ"ຈຶ່ງ ແປວ່າ ເມືອງມຸງຄຸນ ຮ້ອຍຊ້າງ-ໝື່ນ

   ເທົ່າກັບຄຳວ່າ: "ລ້ານຊ້າງ"

   ດ້ວຍເຫດຜົນທີ່ກ່າວມາເມືອງນີ້ມີຊ້າງຫຼາຍພາຍມາກຈຶ່ງເອີ້ນເມືອງນີ້ວ່າ"ລ້ານຊ້າງ" ເພື່ອເປັນການຍົກຍ້ອງສະເຫຼີມກຽດຕິຍົດໃຫ້ແກ່ບ້ານເມືອງເພາະວ່າຊ້າງເປັນສັດໃຫຍ່ ແລະ ເປັນສີຣິມຸງຄຸນ (ເດຊານຸລາດ ແສງດວງເດດ. 2003.ເອກະສານຮຽບຮຽງປະຫວັດສາດລາວລ້ານຊ້າງ)

2. ລ້ານຊ້າງ ມາຈາການເອີ້ນຊື່ຂອງແມ່ນ້ຳຄື "ແມ່ນ້ຳຂອງ" ຊຶ່ງພາສາຈີນເອີ້ນແມ່ນນ້ຳນີ້ວ່າ "ລ້ານຈຽງ ຫຼື ລູ້ຈ້ຽງ" ຕໍ່ມາເອີ້ນວ່າ "ລ້ານຊ້າງ"

### II. ສະພາບກ່ອນການທ້ອນໂຮມແແຜ່ນດິນຂອງເຈົ້າຟ້າງຸ່ມ

ໃນທ້າຍສະຕະວັດທີ 13 -14 ບັນດາອານາຈັກອ້ອມຂ້າງຕົກຢູ່ໃນສະພາບທີ່ມີຄວາມສັບສົນທາງດ້ານການເມືອງແລະສັງຄົມເຊັ່ນ: ອານາຈັກສຸໂຂໄທ, ອານາຈັກອັງກໍ່ຊ, ອານາຈັກ ດາຍຫວຽດ, ຈຳປາ, ອານາຈັກປາການ ແລະ ອານາຈັກຈີນບູຮານລ້ວນແລ້ວແຕ່ຢູ່ໃນສະພາບສັບສົນ ແລະ ຂັດແຍ່ງ, ຍາດຊີງຄວາມເປັນໃຫຍ່ເຊິ່ງກັນ ແລະ ກັນ ຢູ່ພາຍໃນກໍ່ຄືລະຫວ່າງອານາຈັກ ດ້ວຍກັນສະແດງອອກດັ່ງນີ້:

#### 1. ສະພາບຂອງອານາຈັກອ້ອມຂ້າງ

- **ອານາຈັກຈີນ**

ນັບແຕ່ ຄ.ສ 1269 ເປັນຕົ້ນມາ ຈີນຕົກຢູ່ໃຕ້ແອກປົກຄອງຂອງມົງໂກນ(ລາຊະວົງຢວນ) ເຈົ້າຈັກກະພັດມົງໂກນ ໄດ້ວາງກົດໝາຍບີບບັງຄັບຊາວຈີນ, ເຮັດໃຫ້ຊາວຈີນກາຍເປັນທາດກະສິກອນ ເຊິ່ງພວກເຂົາໄດ້ຮີບໂຮມເອົາບັນດານາຍຊ່າງຫັດຖະກຳ, ເກັບເກນຊາວຈີນເຂົ້າເປັນທະຫານຮັບໃຊ້ສົງຄາມຮຸກຮານອານາຈັກຕ່າງໆ ເຊັ່ນ: ຮຸກຮານດາຍຫວຽດ, ຮຸກຮານພະມ້າ ແລະ ອິນເດຍ




**ຮູບທີ7: ຮູບບັນດາອານາຈັກຕ່າງໆທີ່ຢູ່ອ້ອມຂ້າງລ້ານຊ້າງ**

ຈາກນະໂຍບາຍດັ່ງກ່າວເຮັດໃຫ້ຊາວຈີນມີຄວາມທຸກຍາກທໍລະມານຢ່າງສາຫັດ ເຖິງກາງສະຕະວັດທີ 14 ປະມານປີ ຄ.ສ 1354 ຊາວຈີນໄດ້ພ້ອມກັນລຸກຂຶ້ນຕໍ່ສູ້ຕ້ານກັບລາຊະວົງຢວນຢູ່ພາກກາງ ເດັ່ນແມ່ນຂະບວນຫົ້ງຢີນ (Hongjin) ສາມາດຕັ້ງອຳນາດປົກຄອງໃໝ່ຂຶ້ນໄດ້ ຢູ່ທາງພາກໃຕ້ໃນປີຄ.ສ 1368 ຂະບວນການຕໍ່ສູ້ຂອງຊາວນາ ນຳພາໂດຍຊູຢວນຊັງ ສາມາດໂຄ່ນລົ້ມລາຊະວົງຢວນລົງໄດ້ ແລ້ວສ້າງຕັ້ງລາຊະວົງໃໝ່ຂຶ້ນ ໂດຍແມ່ນລາຊະວົງມິງ.

ເວົ້າລວມແລ້ວນັບແຕ່ທ້າຍສະຕະວັດທີ 13 ຫາຕົ້ນສະຕະວັດທີ 14 ບັນດາອານາຈັກອ້ອມຂ້າງອານາຈັກລາວບູຮານທັງຫຼາຍ ລ້ວນແຕ່ເຕັມໄປດ້ວຍຂໍ້ຂັດແຍ່ງສັບສົນວຸ້ນວາຍ ຍາດຊີງຄວາມເປັນໃຫຍ່ເຊິ່ງກັນ ແລະ ກັນທັງຢູ່ພາຍໃນ ແລະ ລະຫວ່າງອານາຈັກດ້ວຍກັນ. ນັ້ນເປັນສິ່ງອຳນວຍຄວາມສະດວກໃຫ້ແກ່ຄົນລາວບັນດາເຜົ່າພາຍໃຕ້ການນຳພາຂອງເຈົ້າຟ້າງຸ່ມດຳເນີນການຕໍ່ສູ້ເພື່ອທ້ອນໂຮມບັນດາເມືອງລາວບູຮານ ທີ່ຢູ່ທັງສອງຝັ່ງແມ່ນ້ຳຂອງເຂົ້າເປັນອານາຈັກເອກະພາບໃນກາງສະຕະວັດທີ 14.

- **ອານາຈັກສຸໂຂໄທ**

ສຸໂຂໄທ(ອານາຈັກສະຫຍາມ) ທີ່ຕັ້ງຫຼັກແຫຼ່ງຢູ່ແຫຼມສຸວັນນະພູມບໍລິເວນຕອນລຸ່ມຂອງແມ່ນ້ຳເຈົ້າພະຍາ. ດຳລົງຊີວິດຮ່ວມກັບກຸ່ມຄົນມອນ-ຂະແມຫຼືມອນ-ຂອມ.ເຊິ່ງຜ່ານໄລຍະເວລາອັນຍາວນານ. ມາເຖິງ ຄສ 1238 ກຸ່ມຄົນໄທພາຍໃຕ້ການນຳຂອງ ຂຸນສີອິນ ທະລາດທິດ ໄດ້ທຳການຂັບໄລ່ພວກມອນ-ຂະແມ ຫຼື ມອນ-ຂອມອອກ

ຈາກດິນແດນແລ້ວສ້າງເປັນອານາຈັກຂອງຕົນເອງຂຶ້ນ ໃນບໍລິເວນຂອງລ່ອງແມ່ນ້ຳເຈົ້າພະຍາແລ້ວເອີ້ນວ່າ "ອານາຈັກສຸໂຂໄທ" ນັບແຕ່ນັ້ນມາພວກກຸ່ມຄົນໄທສະຫຍາມ ກໍ່ໄດ້ຕັ້ງຕົວເປັນເອກະລາດເລື່ອຍມາ, ເຖິງລະຫວ່າງ ຄສ 1269- ຄສ 1300 ພາຍໃຕ້ການປົກຄອງຂອງຂຸນລາມຄຳແຫງອານາຈັກສຸໂຂໄທໄດ້ມີຄວາມເຂັ້ມເຂັ້ມແຂງທີ່ສຸດ. ພະອົງໄດ້ເອົາໃຈໃສ່ໃນທຸກດ້ານເຊັ່ນ: ການເມືອງ, ເສດຖະກິດ ແລະ ການທະຫານ, ຈາກນັ້ນພະອົງໄດ້ຂະຫຍາຍອຳນາດອິດທິພົນດ້ວຍການເຮັດສົງຄາມຂະຫຍາຍອານາເຂດຢ່າງກວ້າງຂວາງ.

ພາຍຫຼັງສິ້ນຊີວິດຂອງພະເຈົ້າຂຸນລາມຄຳແຫງແລ້ວ. ໃນທ້າຍສະຕະວັດທີ 8ບັນດາລາຊະວົງສັກດິນາສຸໂຂໄທຂັດແຍ່ງກັນຂຶ້ນກຳອຳນາດກາຍເປັນເຫດໃຫ້ອານາຈັກອ່ອນແອຊຸດໂຊມລົງ, ບັນດາລັດຕ່າງໆທີ່ຂຶ້ນກັບອຳນາດສຸໂຂໄທ ໄດ້ແຍກຕົວອອກເປັນເອກະລາດ ແລ້ວສ້າງຕັ້ງເປັນອານາຈັກຂອງຕົນຂຶ້ນຊື່ວ່າ"ກຸງສີອາຍຸດທະຍາ" ໃນປີ ຄສ 1350.

ພາຍຫຼັງປະກາດເປັນອານາຈັກອາຍຸດທະຍາແລ້ວ, ພະຍາອູທອງໄດ້ເອົາໃຈໃສ່ປັບປຸງອຳນາດໂດຍສະເພາະເອົາໃຈໃສ່ດ້ານການທະຫານ. ຈາກນັ້ນພະອົງໄດ້ດຳເນີນນະໂຍບາຍຂະຫຍາຍອານາເຂດຂຶ້ນໄປທາງພາກເໜືອກວມເອົາດິນແດນຂອງອານາຈັກລ້ານນາ, ພ້ອມກັນນັ້ນພະເຈົ້າອູທອງຍັງຂະຫຍາຍອານາເຂດລົງໄປທາງພາກໃຕ້ກວມເອົາດິນແດນຂອງອານາຈັກອັງກໍ່ອີກດ້ວຍ.

- **ອານາຈັກອັງກໍ່**

ອານາຈັກອັງກໍ່ໄດ້ຮັບການສ້າງຕັ້ງຂຶ້ນໂດຍພະເຈົ້າໄຊຍະວໍລະມັນທີ II (xaiya) ໃນປີ ຄ ສ 802ເຈົ້າໄຊຍະວໍລະມັນ II ໄດ້ມີການປັບປຸງອານາຈັກໃຫ້ມີຄວາມເຂັ້ມແຂງຂຶ້ນໃນທຸກດ້ານເຊັ່ນ:ດ້ານການເມືອງ, ດ້ານການທະຫານ ແລະ ດ້ານເສດຖະກິດ. ຢູ່ໃນລາຊະການຂອງພະເຈົ້າສຸລິຍະວໍລະມັນທີ I (suriya varman I) ນັ້ນປົກຄອງລະຫວ່າງ ຄ ສ 1002-1050 ພະອົງໄດ້ເຮັດສົງຄາມຂະຫຍາຍອານາເຂດຂຶ້ນມາທາງພາກເໜືອ ຢ່າງກວ້າງຂວາງກວມເອົາຮອດເຂດແດນເມືອງຊວາ. ການຂະຫຍາຍອານາເຂດໄດ້ເຮັດໃຫ້ອັງກໍ່ ແລະ ອາຍຸດທະຍາເກີດສົງຄາມກັນຂຶ້ນລະຫວ່າງ ຄ ສ 1350-1394ເຊິ່ງພາຍຫຼັງຂອງການສິ້ນຊີວິດຂອງພະເຈົ້າໄຊຍະວໍລະມັນທີVII(jaya varman vii)ທາຍາດຂອງເຈົ້າໄຊຍະວໍລະມັນທີVIIບໍ່ສາມາດຕໍ່ຕ້ານກັບການຂະຫຍາຍອານາເຂດຂອງພວກສັກດິນາສະຫຍາມໄວ້ໄດ້ໃນທີ່ສຸດອານາຈັກອັງກໍ່ກໍ່ຖືກສູນເສຍດິນແດນນະຄອນທົມໃຫ້ແກ່ສະຫຍາມ ແລະ ຈາກນັ້ນອານາຈັກອັງກໍ່ໄດ້ຖືກຮຸກຮານຈາກພວກຈັກກະພັດມົງໂກນຈາກຈີນຕື່ມອີກ.

- **ອານາຈັກພະມ້າ**

ພະມ້າປະກອບດ້ວຍຫຼາຍເຜົ່າຊົນທີ່ມີຈຳນວນເກືອບເທົ່າກັນ, ແຕ່ການຂະຫຍາຍຕົວທາງດ້ານວັດທະນະທຳບໍ່ເທົ່າທຽມກັນ, ອັນໄດ້ເຮັດໃຫ້ເຜົ່າຊົນໃນພະມ້າເກີດຂໍ້ຂັດແຍ່ງກັນຈົນກະທັ່ງເກີດມີອານາຈັກໃໝ່ຂຶ້ນເຊັ່ນ: ອານາຈັກປາການເກີດຂຶ້ນໃນສະຕະວັດທີIX ພໍເຖິງທ້າຍສະຕະວັດທີ XIII ອານາຈັກປາການຖືກແຕກອອກເປັນຫຼາຍແຄ້ວນທີ່ຂັດແຍ່ງກັນຄື: ພາກເໜືອແຄ້ວນອັງວະ, (ພະມ້າພູການ), ພາກໃຕ້ແຄ້ວນເປກູ(ຂອບເຂດກຸ່ມຄົນມອນ) ແລະ ພາກຕາເວັນອອກສ່ຽງໃຕ້ແຄ້ວນຕ່ອງອູ.

ເຖິງຢ່າງໃດກໍ່ຕາມບັນດາແຄ້ວນເຫຼົ່ານີ້ຍັງຕົກຢູ່ພາຍໃຕ້ອິດທິພົນຂອງພວກມົງໂກນແຫ່ງຈີນ ຄ ສ 1287 ແລ້ວຫຼັງຈາກນັ້ນອານາຈັກປາການກໍ່ຖືກກຸ່ມຄົນຊານເຂົ້າມາຢຶດໄດ້ໃນ ຄ ສ 1325 ແລ້ວຕົກຢູ່ພາຍໃຕ້ອິດທິພົນຂອງກຸ່ມຄົນຊານນານເປັນເວລາ 230 ປີ.ຄວາມຂັດແຍ່ງພາຍໃນເກີດຂຶ້ນຍາວນານມາເຖິງສະຕະວັດທີXVI ພະມ້າຈຶ່ງສາມາດທ້ອນໂຮມເປັນເອກະພາບໄດ້.

- **ອານາຈັກດາຍຫວຽດ**

ອານາຈັກດາຍຫວຽດແມ່ນອານາຈັກທີ່ຕັ້ງຢູ່ທາງພາກຕາເວັນອອກໃນແຫຼມສຸວັນນະພູມເມື່ອພາຍຫຼັງການຫຼຸດພົ້ນອອກຈາກແອກປົກຄອງຂອງພວກສັກດິນາຈີນ ເມື່ອ ຄສ 939ພາຍໃຕ້ການນຳພາຂອງນາຍພົນໂງ່ກວ່ຽນ. ແຕ່ນັ້ນມາດາຍຫວຽດໄດ້ພະເຊີນໜ້າກັບຂໍ້ຂັດແຍ່ງນາໆປະການ ໃນກຸ່ມສັກດິນາພາຍໃນດ້ວຍກັນ. ພິເສດຄວາມຂັດ

ແຍ່ງຂອງດາຍຫວຽດທີ່ຢູ່ພາກເໜືອ ແລະ ພວກຈາມທີ່ຢູ່ພາກໃຕ້, ເມື່ອລາຊະວົງເລໄດ້ປະກົດຕົວຂຶ້ນໃນ ຄ ສ 979-1009ພະເຈົ້າເລໂຫ່ນ ແຫ່ງລາຊະວົງເລ ໄດ້ມີບົດບາດທີ່ສຸດທາງດ້ານອານາດ ແລະ ການເຮັດສົງຄາມຮຸກຮານເຂົ້າອານາຈັກຈາມປາຂອງພວກຈາມທີ່ຢູ່ທາງໃຕ້. ໃນ ຄສ 986 ທຳລາຍເຂັ່ນຂ້າກະສັດຈາມປາກວດຕ້ອນເອົາປະຊາຊົນ ແລະ ສິນບັດທັງມວນໄປອານາຈັກດາຍຫວຽດເປັນຈຳນວນຫຼວງຫຼາຍ.

ເຖິງຄສ 1009-1225 ເປັນຊ່ວງໄລຍະຂອງລາຊະວົງລີປົກຄອງອານາຈັກດາຍຫວຽດຄວາມເຄັ່ງຕຶງລະຫວ່າງດາຍຫວຽດແລະຈາມນັບມື້ນັບຮຸນແຮງຂຶ້ນ ກົງກັນຂ້າມໃນປີ ຄສ 1253 ອານາຈັກຈາມປາຂອງພວກຈາມພັດຖືກຮຸກຮານຈາກພວກຈັກກະພັດມົງໂກນນຳພາໂດຍກຸບໄລຂານ ແລະ ເຖິງ ຄສ 1281 ຈັກກະພັດມົງໂກນໄດ້ທຳການຍຶດຄອງບັນລັງ(ຮ່າໂນ້ຍ)ທັງສອງອານາຈັກດາຍຫວຽດ ແລະ ຈາມປາກໍ່ລ້ອນແລ້ວແຕ່ຕົກຢູ່ພາຍໃຕ້ອິດທິພົນຂອງມົງໂກນເຊັ່ນກັນ. ຮອດປີ ຄ ສ 1285 ດາຍຫວຽດ ແລະ ຈາມໄດ້ມີຄວາມສຳພັນຄືນດີຕໍ່ກັນໂດຍສະເພາະທັງສອງຝ່າຍໄດ້ຊອກຫາໂອກາດທີ່ຈະປົດປ່ອຍຕົນເອງ.ເພື່ອຄວາມເປັນເອກະລາດຈາກຈັກກະພັດມົງໂກນ. ເຖິງ ຄສ 1293 ດາຍຫວຽດໃຕ້ການນາພາຂອງນາຍພົນແຫຼັງນານຕົງ(TranNhanton) ໄດ້ນາພາປະຊາຊົນຂັບໄລ່ພວກມົງໂກນອອກຈາກທັງສອງໄດ້ສຳເລັດເຮັດໃຫ້ສະພາບທາງການເມືອງ, ເສດຖະກິດ, ການທະຫານຂອງມົງໂກນຖືກສັ່ນສະເທືອນໄປທົ່ວແຫຼມສຸວັນນະພູມ.

ພາຍຫຼັງການຂັບໄລ່ຈັກກະພັດມົງໂກນໄດ້ສຳເລັດໃນປີ ຄ ສ 1312ທັງສອງຝ່າຍກໍ່ເກີດການຂັດແຍ່ງຄືນອີກເຊິ່ງຕ່າງຝ່າຍໄດ້ອ້າງສິດຂອງຕົນເອງຢູ່ເໜືອດິນແດນກວາງຈິ ແລະ ເທືອທຽນ(ເຫ້ວ).ສົງຄາມໄດ້ແກ່ຍາວຈົນໄປເຖິງປີ ຄສ 1371 ທີ່ອານາຈັກຈາມປາທຳການບຸກຍຶດເອົາທັງລອງໄດ້ສຳເລັດ.

## 2. ສະພາບຂອງຫົວເມືອງລາວກ່ອນການທ້ອນໂຮມແຜ່ນດິນ

ນັບແຕ່ສະຕະວັດທີ 8 ມາຢູ່ໃນບັນດາຫົວເມືອງລາວບູຮານ ແມ່ນໄດ້ດຳເນີນມີໜໍ່ແໜງສັງຄົມແບບສັກດີນາຢູ່ຫຼາຍເມືອງ ເຊັ່ນ: ເມືອງສິງ, ເມືອງໄຊ, ເມືອງບາງ, ເມືອງຊວາ, ເມືອງວຽງຄຳ, ເມືອງວຽງຈັນ, ເມືອງພວນ, ເມືອງຈຳປານະຄະບູຣີ...ບັນດາຫົວເມືອງລາວບູຮານດັ່ງກ່າວໄດ້ປົກຄອງຢູ່ຢ່າງເປັນເອກະລາດພໍໃຜພໍລາວ ເຖິງສະຕະວັດທີ 11 ບັນດາຫົວເມືອງດັ່ງກ່າວແຕ່ພາກໃຕ້ ແລະ ພາກກາງຂຶ້ນຈົນຮອດເຂດແດນເມືອງຊວາ. ໄດ້ຕົກຢູ່ໃຕ້ສິດອຳນາດພວກຂອມແຫ່ງອັງກໍ່ໂດຍອີງຕາມຫຼັກຖານບູຮານຄະດີໄດ້ພົບຄື  ສີລາຈາລຶກພົບເຫັນທີ່ ເມືອງຊາຍຟອງ(ກຳແພງນະຄອນວຽງຈັນ) ໃນປີຄ.ສ 1977, ໄດ້ເວົ້າເຖິງການໂຮງພະຍາບານຂອງພະເຈົ້າໄຊຍະ ວໍລະມັນທີ 12  ໃນປີ ຄ.ສ 1186 ເມື່ອອີງຕາມຫຼັກຖານດັ່ງນີ້ ສະແດງໃຫ້ເຫັນວ່າບັນດາຫົວເມືອງລາວດັ່ງກ່າວນັ້ນແມ່ນຂຶ້ນຕໍ່ພວກຂອມແຫ່ງອັງກໍ່, ເມື່ອຂອມເສື່ອມອຳນາດລົງບັນດາຫົວເມືອງລາວດັ່ງກ່າວໄດ້ແຍກຕົວອອກຢູ່ຢ່າງເປັນເອກະລາດພໍໃຜພໍລາວແບບກະແຈກກະຈາຍມາຮອດສະຕະວັດທີ 14 ນັ້ນໄດ້ເປັນເງື່ອນໄຂອັນດີງາມ ການເຄື່ອນໄຫວເພື່ອທ້ອນໂຮມເອົາບັນດາຫົວເມືອງລາວບູຮານເປັນເອກະພາບ.

### ກ. ສະພາບຂອງນະຄອນຊຽງທອງ

- **ຄວາມຂັດແຍ້ງຂອງສັກດີນາພາຍໃນເມືອງຊວາ**

ອີງຕາມຕຳນານໜັງສືຂອງຂຸນບູຣົມໄດ້ກວ່າໄວ້ໃນພົງສະວະດານລ້ານຊ້າງວ່າຄວາມຂັດແຍ່ງໃນກຸ່ມສັກດີນາລາວ ໃນລະຫວ່າງສະຕະວັດທີXIII ແລະ ຕົ້ນສະຕະວັດທີXIV ,ພະຍາລັງເປັນກະສັດອົງທີ XX ໃນປີ ຄສ 1271-1316 ແຫ່ງລາຊະວົງຂຸນລໍ,ເຊື້ອສາຍໄທ-ລາວໄດ້ຂຶ້ນຄອງຄວາມເປັນໃຫຍ່ຢູ່ເມືອງຊວາ ກາຍເປັນກະສັດ ຊົນເຜົ່າອ້າຍລາວອົງທຳອິດຂອງນະຄອນຊຽງທອງ. ພາຍຫຼັງໄດ້ຂຶ້ນຄອງອຳນາດແລ້ວໄດ້ຂະໜານາມຂອງຕົນເອງວ່າ"ຂຸນຊວາ" ຕາມຕຳນານເດີມຂອງເມືອງຊວາໃນສະໄໝຂອມປົກຄອງ.

ພາຍຫຼັງຂຸນຊວາຂຶ້ນປົກຄອງເມືອງຊຽງທອງແລ້ວບັນດາຊົນເຜົ່າອ້າຍລາວໄດ້ຫຼັ່ງໄຫຼມາຈາກພາກເໜືອ (ອານາຈັກໜອງແສ) ລົງມາຕັ້ງຖິ່ນຖານຢູ່ທາງໃຕ້(ທາງພາກເໜືອຂອງປະເທດລາວປັດຈຸບັນ). ນັບມື້

ນັບຫຼາຍຂຶ້ນ, ຈາກນັ້ນກະສັດລາວກໍ່ສືບຕໍ່ປົກຄອງກັນມາຈົນເຖິງ22 ອົງຈຶ່ງເຖິງລາຊະການຂອງເຈົ້າຟ້າງຸ່ມປົກຄອງຄື:

| | |
|---|---|
| 1. ຂຸນຊວາ(ຂຸນລໍ) | 12. ຂຸນມີ |
| 2. ຂຸນຊວຍ | 13. ຂຸນຄໍາ |
| 3. ຂຸນສູງ | 14. ຂຸນຮຸ່ງ |
| 4. ຂຸນເຄັດ | 15. ທ້າວແກ່ນ |
| 5. ຂຸນຄຸ້ມ | 16. ທ້າວເຢີກ |
| 6. ຂຸນຄິມ | 17.ທ້າວພິນ |
| 7. ຂຸນຄີວ | 18. ທ້າວພາດ |
| 8. ຂຸນຄາງ | 19. ທ້າວຫວ່າງ |
| 9. ຂຸນເຄັມ | 20. ພະຍາລັງ |
| 10. ຂຸນແມງ | 21. ພະຍາຄໍາຜົງ |
| 11. ຂຸນເມີງ | 22. ເຈົ້າຟ້າງ້ຽວ |

ໃນຕະຫຼອດໄລຍະການຄອງລາດຂອງກະສັດອົງທີ 21(ເຈົ້າຄໍາຜົງ) ນັ້ນ ແຕ່ປີ ຄສ 1289 ອານາຈັກເມືອງຊວາມີຄວາມເຂັ້ມແຂງ ສາມາດບຸກຍຶດເອົາແຄວ້ນຕ່າງໆໄດ້ສໍາເລັດ, ເຖິງຈະມີຄວາມເຂັ້ມແຂງກໍ່ຕາມ ແຕ່ຄວາມຂັດແຍ່ງພາຍໃນກຸ່ມສັກດິນາຍັງມີອັນເງື່ອນງໍາຢູ່ຢ່າງຫຼວງຫຼາຍພະຍາສຸວັນນະຄໍາຜົງມີໂອລົດຢູ່2 ອົງຄື: ເຈົ້າຟ້າງ້ຽວ(ຂຸນຜີຟ້າ) ແລະ ເຈົ້າຄໍາຮຽວ(ເຈົ້າຟ້າຄໍາຮຽວ). ເມື່ອພະຍາສຸວັນນະຄໍາຜົງສິ້ນພະຊົນແລ້ວເຈົ້າຟ້າງ້ຽວຈຶ່ງໄດ້ຂຶ້ນຄອງບັນລັງແທນພະອົງມີບຸດ 4 ອົງເຊິ່ງເປັນບຸດຊາຍ2ອົງຄື: ເຈົ້າຟ້າງຸ່ມ ແລະ ເຈົ້າຟ້າຄໍາງ້ຽວ ແລະ ລາຊະທິດາ2 ອົງຄື: ເຈົ້າຟ້າພະຍານ ແລະ ເຈົ້າຄອນຄໍາໃນບຸດທັງ 4 ອົງນີ້ຜູ້ທີ່ສະຫຼຽວສະຫຼາດກວ່າໝູ່ໝົດແມ່ນເຈົ້າຟ້າງຸ່ມເຊິ່ງກາຍເປັນຜູ້ທີ່ມີຄວາມປີຊາສາມາດ ແລະ ກາຍເປັນມະຫາລາດຂອງອານາຈັກລາວລ້ານຊ້າງໃນໄລຍະຕໍ່ມາ.

### 3. ປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ

ເຈົ້າຟ້າງຸ່ມເກີດເມື່ອປີຄສ 1316 ປີມະໂລງຈຸລະສັງກາດ 678 ເປັນລູກຊາຍຄົນທີ1 ຂອງຂຸນຜີຟ້າ ຫຼື ຟ້າງ້ຽວເປັນຜູ້ໄດ້ຮັບການສຶກສາອົບຮົມຈາກອ້າຍຜາວຽງ ຜູ້ເປັນປູ່ລ້ຽງ ເຈົ້າຟ້າງຸ່ມ ເກີດໃນທ່າມກາງສະພາບການບ້ານເມືອງເກີດຄວາມປັ່ນປ່ວນວຸ້ນວາຍຂັດແຍ່ງກັນຢ່າງຮຸນແຮງລະຫວ່າງສັກດິນາລາວດ້ວຍກັນທີ່ສືບເນື່ອງມາເປັນເວລາຍາວນານເມື່ອພາຍຫຼັງທີ່ເຈົ້າຟ້າງ້ຽວ ຫຼື ຂຸນຜີຟ້າໄດ້ຂຶ້ນຄອງອໍານາດ ໃນກຸ່ມຄົນຂອງເຈົ້າຟ້າຄໍາຮຽວ ໄດ້ຫາທຸກວິທີທາງພະຍາຍາມໂຄ່ນລົ້ມທັນທີ.

ສ່ວນເຈົ້າຂຸນຜີຟ້າຫຼືເຈົ້າຟ້າງ້ຽວເຫັນເປັນເຊັ່ນນັ້ນໄດ້ຊອກຫາວິທີການທີ່ຈະກອບກູ້ບ້ານເມືອງໃຫ້ເຂົ້າສູ່ລະບຽບຕາມລາຊະປະເພນີຕາມຂັ້ນຕອນນັ້ນກໍ່ໄດ້ຈັດຂະບວນການສົ່ງລູກຊາຍອອກຈາກເມືອງເພື່ອຊອກຫາຮຽນຮູ້ທີ່ຈະນໍາມາກອບກູ້ແລະທ້ອນໂຮມບັນດາຫົວເມືອງລາວບູຮານທີ່ຍັງຢູ່ກະແຈກກະຈາຍໃຫ້ເຂົ້າເປັນເອກະພາບອັນໜຶ່ງອັນດຽວກັນພາຍໃຕ້ອໍານາດຂອງສັກດິນາລາວລວມສູນໃນຂັ້ນຕໍ່ໄປ. ເຈົ້າຟ້າງ້ຽວຜູ້ເປັນບິດາໄດ້ທໍາກົນອຸບາຍວ່າເຈົ້າຟ້າງຸ່ມເປັນຄົນເຂັດຂວາງແພ້ບ້ານແພ້ເມືອງຕ້ອງເອົາໃສ່ແພໄຫຼນໍ້າເສຍ...ເພາະເກີດມາມີແຂ້ວ33 ເຫຼັ້ມ.



**ຮູບທີ8: ຮູບປັ້ນເຈົ້າຟ້າງຸ່ມ**

ເຈົ້າຟ້າງຸ່ມເດີນທາງອອກຈາກເມືອງຊວາພ້ອມກັບພັກພວກ33ຄົນ ໃນນັ້ນມີປູ່ລ້ຽງ,ຕາລ້ຽງ, ນ້າລ້ຽງ, ອ້າຍລ້ຽງ ແລະ ພີ່ນ້ອງພ້ອມດ້ວຍທະຫານເອກ 6 ຄົນຄື: ບາໂບ,ບາຄຸ້ມ,ບາສຽມ, ບາຈີ່ແຂ້, ບາຈິມ ແລະ ບາລູ. ພ້ອມທັງບໍລິວານອີກຈຳນວນໜຶ່ງໃຊ້ເວລາເດີນທາງ1 ປີ ຈຶ່ງຮອດຫຼີ່ຜີ (ບໍລິເວນບ້ານຄອນ ເຂດເມືອງໂຂງ ແຂວງ ຈຳປາສັກ). ແຕ່ໃນໄລຍະນັ້ນດິນແດນແຫ່ງນີ້ຍັງຢູ່ພາຍໃຕ້ອິດທິພົນຂອງພວກຂະເໝນຢູ່.

ໃນໄລຍະຕົ້ນເຈົ້າຟ້າງຸ່ມ ແລະ ພັກພວກເມື່ອໄປເຖິງ ຫຼີ່ຜີກໍ່ສະແຫວງຫາການສຶກສາຮໍ່າຮຽນວິຊາອາຄົມຕ່າງໆຢູ່ກັບສຳນັກວັດພະມະຫາປາສະມັນ( ຄ ສ 1341-1343) ເຈົ້າທີ່ຖ້ຳາຫົວຫາດຫຼີ່ຜີ ແລະ ຫຼັງຈາກນັ້ນພະເຈົ້າຟ້າງຸ່ມ ພ້ອມພັກພວກຍັງໄດ້ທ່ອງທ່ຽວຊອກຫາຮໍ່າຮຽນວິຊາສາດຕະສິນຕ່າງໆ ຈົນຮອດນະຄອນຂະເໝນ(ອັງກໍ່ທົມ). ພ້ອມທັງຜູກສາຍສຳພັນອັນດີງາມກັບເຈົ້າຊີວິດຂະເໝນ ຄ ສ 1332 ຊື່ເຈົ້າໄຊຍະວໍລະມັນ ປະລະເມສວນເຫັນວ່າເປັນຄວາມໝາຍອັນດີເລີດ ໃນການສ້າງຜູກສາຍສຳພັນອັນໜັກແໜ້ນກັບອານາຈັກລາວລ້ານຊ້າງໄວ້ ເພື່ອຄວາມໝັ້ນຄົງຂອງຕົນເອງ, ເພື່ອເພິ່ງໃນຂ້າງໜ້າ ດັ່ງນັ້ນຈຶ່ງໄດ້ຕົກລົງຊື່ນາງລັດຕະນະກັນຍາເຊິ່ງປະຊາຊົນທົ່ວໄປເອີ້ນວ່ານາງແກ້ວເກງຍາໃຫ້ເປັນມະເຫສີແກ່ເຈົ້າຟ້າງຸ່ມ.

ເບິ່ງລວມແລ້ວສະພາບການຂອງເມືອງລາວບູຮານກ່ອນການທ້ອນໂຮມນັ້ນແມ່ນບໍ່ມີຄວາມສະຫງົບ, ກ່ອນໜ້ານັ້ນຄືນັບແຕ່ສະຕະວັດທີ 8 ປະມານຄ.ສ 757 ເຊິ່ງເວົ້າວ່ານະຄອນຊຽງທອງ (ເມືອງຊວາ) ກາຍເປັນເມືອງລາວຊະທານີ ຂອງຊົນເຜົ່າອ້າຍລາວ ໂດຍເລີ່ມຈາກຂຸນລໍຜູ້ເປັນກະສັດຂອງຊົນເຜົ່າອ້າຍລາວ ຈົນເຖິງກະສັດລາວອົງທີ 20 ພະຍາລັງ ໄລຍະຜ່ານມານັ້ນ ສະພາບການບ້ານເມືອງມີຄວາມສະຫງົບປະຊາຊົນຢູ່ເຢັນເປັນສຸກ, ແຕ່ເຖິງກະສັດອົງທີ 21 ຕໍ່ໆມາ ເຫດການບ້ານເມືອງເຕັມໄປດ້ວຍຂໍ້ຂັດແຍ່ງພາຍໃນກຸ່ມສັກດີນາຂອງລາວດ້ວຍກັນ.

### 4. ການກະກຽມກຳລັງເພື່ອທ້ອນໂຮມແຜ່ນດິນຂອງເຈົ້າຟ້າງຸ່ມ

ສະພາບທົ່ວແຫຼມສຸວັນນະພູມ ໄດ້ເກີດການປ່ຽນແປງໄປຂະໜາດໃຫຍ່, ບັນດາລັດຕ່າງໆເຊິ່ງແຕ່ກ່ອນຢູ່ໃຕ້ອຳນາດການປົກຄອງຂອງຂະເໝນທີ່ອັງກໍ່ທົມນັ້ນ, ຕໍ່ມາໃນໄລຍະໜຶ່ງຫົວເມືອງດັ່ງກ່າວ ແມ່ນບໍ່ຍອມຂຶ້ນຕໍ່ຂະເໝນ ພະຍາຍາມຕັ້ງຕົນພໍໃຜພໍລາວ ພວກໄທສະຫຍາມທີ່ຢູ່ທາງທິດຕາເວັນຕົກໄດ້ທຳການບຸກໂຈມຕີ ເຂົ້າໃນດິນແດນຂອງຂະເໝນ ຢ່າງໜັກໜ່ວງ, ດັ່ງນັ້ນ ເຫດການທາງພາຍໃນ ແລະ ພາຍນອກ ໄດ້ສ້າງເງື່ອນໄຂທີ່ເປັນໂອກາດອັນດີໃຫ້ແກ່ພະຍາເຈົ້າຟ້າງຸ່ມ ໃນການນຳກຳລັງທ້ອນໂຮມເອົາບັນດາຫົວເມືອງລາວບູຮານ ທີ່ຕັ້ງຢູ່ສອງຝັ່ງແມ່ນ້ຳຂອງ ເຂົ້າເປັນອານາຈັກອັນໜຶ່ງເປັນເອກະພາບໄດ້ຢ່າງແທ້ຈິງ.

ແຕ່ໃນນັ້ນຢູ່ທາງນະຄອນຊຽງທອງ (ເມືອງຊວາ) ໄດ້ເກີດມີເຫດການໂຄ່ນລົ້ມລາຊະບັນລັງ ຂອງຂຸນຜີຟ້າຈາກຂະບວນການຂອງກຸ່ມເຈົ້າຄຳຮຽວ ຜູ້ເປັນນ້ອງຊາຍ ເຮັດໃຫ້ເຈົ້າຟ້າງ້ຽວ (ຂຸນຜີຟ້າ) ເສຍຊີວິດຈາກສະພາບການດັ່ງກ່າວນັ້ນ ເຈົ້າຟ້າງຸ່ມພ້ອມດ້ວຍພັກພວກຈຶ່ງໄດ້ຕັດສິນໃຈ ດຳເນີນການເຄື່ອນໄຫວ ເພື່ອເຕົ້າໂຮມກຳລັງ ຢູ່ພື້ນຖານທາງພາກໃຕ້ຕ່າງໆ ໂດຍໄດ້ຮັບການສົມທົບກັບກຳລັງ ຊ່ວຍເຫຼືອຈາກເຈົ້າຊີວິດຂອງຂະເໝນ ທີ່ອັງກໍ່ ໃນເບື້ອງຕົ້ນນັ້ນຂະບວນບໍ່ມີກຳລັງພຽງພໍ ຈຶ່ງຈຳເປັນຕ້ອງວາງແຜນ ການບຸກຕີເອົາຫົວເມືອງນ້ອຍໃຫຍ່ ເພື່ອເປັນການທ້ອນໂຮມກຳລັງເທື່ອລະນ້ອຍ ພະເຈົ້າຟ້າງຸ່ມ ໄດ້ຊັ່ງຊາກຳລັງພາກພື້ນຢ່າງຖີ່ຖ້ວນ ເຊິ່ງກ່ອນອື່ນໝົດ ແມ່ນໄດ້ຊັ່ງຊາກຳລັງຂອງຕົນ ກັບກຳລັງບັນດາຫົວເມືອງ ທີ່ຢູ່ສອງຝັ່ງແມ່ນ້ຳຂອງ ເພື່ອເປັນການກຽມຄວາມພ້ອມ ຢ່າງເຂັ້ມແຂງ ກ່ອນເຄື່ອນທັບອອກຈາກພາກໃຕ້.

## III. ການທ້ອນໂຮມອານາຈັກລາວລ້ານຊ້າງໃນສະຕະວັດທີ 14

### 1. ການທ້ອນໂຮມແຜ່ນດິນຄັ້ງທີ 1 ປີຄ.ສ 1349-1353

### 1.1. ການບຸກຕີຫົວເມືອງລາວພາກກາງ ແລະ ພາກໃຕ້

**ກ. ການບຸກຕີແຄວ້ນພົມມະທັດ**

ໃນປີຄ.ສ 1349 ພະເຈົ້າຟ້າງຸ່ມພ້ອມດ້ວຍພະຊາຍາ (ເມຍ) ນາງແກ້ວເກງຍາແລະພັກພວກປະກອບດ້ວຍກຳລັງພົນປະມານ 10 ພັນຄົນໄດ້ເຄື່ອນທັບອອກຈາກບໍລິເວນ ພະວິຫານ (ເຂົາວິຫານ) ທາງທິດເໜືອຂອງນະຄອນອັງກໍ່ ເຂົ້າສູ່ພາກໃຕ້ຂອງອານາຈັກລາວໃນເຂດຂອງພະຍາພົມມະທັດ ມີສູນກາງທີ່ພິມາຍ ເຊິ່ງຕັ້ງຢູ່ທິດຕາເວັນຕົກຂອງວັດພູຈຳປາສັກ  ເຂດນີ້ນະຄອນລັດໜຶ່ງປະກອບດ້ວຍ ຫຼາຍຫົວເມືອງເຊັ່ນ ເມືອງປາກກັບ, ເມືອງຂຸນຂອມ, ເມືອງດອນແດງ, ເມືອງຄຳແຫງ, ເມືອງໂສດ, ເມືອງຄ້ອງທອງ, ເມືອງຈັນທອມ ແລະ ເມືອງອ້າຍ ຫົວເມືອງທັງຫຼາຍນັ້ນພະຍາພົມມະທັດ ເປັນຜູ້ມີບົດບາດກວ່າເຈົ້າເມືອງອື່ນໆ. ເຄື່ອນທັບຄັ້ງນີ້ພະເຈົ້າຟ້າງຸ່ມໄດ້ນຳກອງທັບເຂົ້າໂຈມຕີເມືອງປາກກັບ ເປັນເມືອງຂອງພະຍາກົມມະທັດ ພໍເຄື່ອນທັບເຖິງເຂດແດນ ເຈົ້າຟ້າງຸ່ມໄດ້ສົ່ງສານ ໄປເຖິງພະຍາພົມມະທັດ  ເພື່ອຂໍອະນຸຍາດຜ່ານດິນແດນ  ແຕ່ພະຍາພົມມະທັດບໍ່ອະນຸຍາດໃຫ້ຜ່ານ  ພ້ອມທັງເກນກຳລັງທັບອອກມາຕໍ່ສູ້ກັບກຳລັງກອງທັບຂອງເຈົ້າຟ້າງຸ່ມຢ່າງເຕັມຄວາມສາມາດ ແຕ່ໃນທີ່ສຸດພະຍາພົມມະທັດ ກໍ່ຖືກເຈົ້າຟ້າງຸ່ມຂ້າຕາຍຢູ່ເທິງຫຼັງຊ້າງ ດັ່ງນັ້ນບັນດາກອງທະຫານຂອງພະຍາພົມມະທັດ ເຂົ້າຍອມຈຳນົນຕໍ່ກອງທັບຂອງເຈົ້າຟ້າງຸ່ມຈາກນັ້ນເຈົ້າຟ້າງຸ່ມໄດ້ແຕ່ງຕັ້ງຫຼານຊາຍຂອງພະຍາພົມມະທັດ ຂຶ້ນປົກຄອງເມືອງຕໍ່ໄປ.

**ຂ. ການບຸກຕີແຄ້ນກະບອງ**

ພາຍຫຼັງຍຶດເມືອງປາກກັບເຈົ້າຟ້າງຸ່ມໄດ້ຍົກທັບບຸກໂຈມຕີເມືອງກະບອງ (ເມືອງສີໂຄດຕະບູນ) ໃນເມື່ອກ່ອນເມືອງນີ້ເປັນອານາຈັກທີ່ເຂັ້ມແຂງ  ໃນອານາເຂດທີ່ກວ້າງຂວາງ ເອີ້ນວ່າ "ອານາຈັກຕະບອງ ຫຼື ສີໂຄດຕະບູນ ຫຼື ສີໂຄດຕະບອງ"ເປັນເມືອງທີ່ຕັ້ງຢູ່ພາກໃຕ້ຂອງເມືອງທ່າແຂກ ປະມານ 6 ກິໂລແມັດ, ໃນກາງສະຕະວັດທີ 14 ອານາຈັກສີໂຄດຕະບອງ ຖືກແບ່ງອອກເປັນ 3 ແຄວ້ນຄື , ແຄວ້ນຕະບອງ, ແຄວ້ນຈຳປາສັກ ແລະ ແຄວ້ນເຈັດວຽງ (ຢູ່ບໍລິເວນນ້ຳຫີນບູນ ແລະ ນ້ຳກະດິງ) ແຕ່ລະແຄວ້ນມີເອກະລາດພໍໃຜພໍລາວ

ເມື່ອກອງທັບຂອງເຈົ້າຟ້າງຸ່ມມາເຖິງເມືອງຕະບອງແລ້ວພະຍາແປດບໍ່ຫຼືພະຍາສາມລ້ານເຈົ້າຄອງແຄວ້ນຕະບອງໄດ້ຂີ່ຊ້າງອອກມາແຕ່ບໍ່ທັນຮອດຂະບວນທັບຂອງພະຍາຟ້າງຸ່ມ ກໍ່ເກີດຄວາມສະທ້ານຢ້ານກົວແລ້ວຂີ່ຊ້າງແລ່ນໜີ ພະຍາຟ້າງຸ່ມໄດ້ແຕ່ງຕັ້ງກອງທັບຂອງຕົນ ຕາມຈັບເອົາມາປະຫານຊີວິດ ຈາກນັ້ນເຈົ້າຟ້າງຸ່ມໄດ້ຈັດລະບຽບແຕ່ງຕັ້ງນ້ອງຊາຍ ຂອງພະຍາສາມລ້ານຂຶ້ນປົກຄອງ ພ້ອມທັງໃຫ້ຫົວເມືອງດັ່ງກ່າວສົ່ງສ່ວຍ ເງິນ, ຄຳ, ແຜ່ນແພ, ຊ້າງ, ມ້າກຳລັງທະຫານ ແລະ ເຂົ້າປາອາຫານ ໃຫ້ແກ່ກຳລັງທັບຂອງພະອົງ ພະອົງໄດ້ປັບປຸງກຳລັງຢູ່ທີ່ນັ້ນໃຫ້ເຂັ້ມແຂງຮອບດ້ານເພື່ອເປັນການຮັບປະກັນ ໃຫ້ບັ້ນເຄື່ອນໄຫວສູ້ຮົບຕໍ່ໄປມີໄຊ.

**ຄ. ການບຸກຕີແຄວ້ນຈຳປາສັກ**

ຫຼັງຈາກກະກຽມພ້ອມຮຽບຮ້ອຍແລ້ວເຈົ້າຟ້າງຸ່ມກໍ່ໄດ້ຍົກທັບລົງໄປຕີແຄວ້ນຈຳປາສັກເປັນເມືອງຂອງພະຍາຈຳປາທິລາດເປັນຜູ້ໃຫຍ່ເຂດແຄ້ວນນີ້ເມື່ອງກອງກຳລັງຂອງພະຍາເຈົ້າຟ້າງຸ່ມໄປເຖິງພະຍາຈຳປາທິລາດ ກໍ່ຍົກທັບອອກມາສູ້ເຕັມຄວາມສາມາດ ແຕ່ສູ້ກອງກຳລັງເຈົ້າຟ້າງຸ່ມບໍ່ໄດ້ ພະຍາຈຳປາທິລາດ ຖືກຂ້າຕາຍຄາຄໍຊ້າງ ກອງທັບຂອງພະຍາເຈົ້າຟ້າງຸ່ມເຂົ້າຍຶດເອົາເມືອງນະຄອນຈຳປາສັກ ໄດ້ຢ່າງງ່າຍດາຍ ຈາກນັ້ນບັນດາຫົວເມືອງຂຶ້ນທີ່ຂຶ້ນກັບຈຳປາສັກ ກໍ່ເຂົ້າມາຂໍອ່ອນຍອມ, ພ້ອມນັ້ນ, ເຈົ້າຟ້າງຸ່ມ ຈຶ່ງໄດ້ຈັດລະບຽບການປົກຄອງຄືນໃໝ່ ທັງໃຫ້ບັນດາຫົວເມືອງຂຶ້ນຕ່າງໆເສຍສ່ວຍ ຄືດັ່ງຫົວເມືອງອື່ນໆ ທີ່ປະຕິບັດມາທຸກໆປີ.

**ງ. ການບຸກຕີແຄວ້ນເຈັດຈວງ**

ພາຍຫຼັງທີ່ຈັດລະບຽບໃນແຄວ້ນຈຳປາສັກຮຽບຮ້ອຍແລ້ວກຳລັງກອງທັບຂອງເຈົ້າຟ້າງຸ່ມກໍ່ເຄື່ອນທັບກັບຄືນແຄວ້ນກະບອງເພື່ອຕີເອົາແຄວ້ນເຈັດຈວງ.ແຄວ້ນນີ້ເມື່ອກ່ອນມີເຈັດຈວງ (ເມືອງ) ຄື ວຽງເຈັດຈື່ອ, ວຽງກວາງສຸມ, ວຽງກວ້າງທີ່ງ, ວຽງມ່ອນ, ວຽງວັງ, ວຽງກະຕາກ ແລະ ວຽງຊຸມພອນ ຕໍ່ມາໄດ້ເພີ່ມຂຶ້ນອີກສາມວຽງ ຄື: ວຽງສະໂປນ, ວຽງຫຼວງ ແລະ ວຽງປອບເລັງ ແຄວ້ນເຈັດຈວງດັ່ງກ່າວຕັ້ງຢູ່ທິດຕາເວັນອອກ ແລະ ທິດຕາເວັນອອກສ່ຽງເໜືອຂອງແຄວ້ນກະບອງ (ເມືອງທ່າແຂກເກົ່າ)

ແຄວ້ນນີແຕ່ກ່ອນເປັນສ່ວນໜຶ່ງຂອງອານາຈັກກະບອງຊົນເຜົ່າພື້ນຖານແມ່ນພວກເຜົ່າ"ໄທລາວ" ເຊັ່ນ: ໄທດຳ, ໄທຂາວ, ໄທຍໍ້, ໄທພວນ, ຜູ້ໄທ ແລະ ລາວເທິງ.

ເມື່ອກອງທັບເຈົ້າຟ້າງຸ່ມມາເຖິງແຄວ້ນເຈັດຈວງທີ່ວຽງເຈັດຈື່ອ (ບໍລິເວນນໍ້າຫີນບູນແລະນໍ້າກະດິງ) ພະຍາເຈັດຈື່ອ (ພະຍາວຽງ) ໄດ້ເອົາກຳລັງອອກຕໍ່ສູ້, ແຕ່ຍ້ອນເກີດຄວາມສະທ້ານຢ້ານກົວ ຈຶ່ງໄດ້ຂີ່ຊ້າງພ່າຍໜີໄປ ພະເຈົ້າຟ້າງຸ່ມໄດ້ແຕ່ງຕັ້ງບາກີມນຳທັບໄລ່ຕິດຕາມພະຍາເຈັດຈື່ອໄປ, ທັງສອງໄດ້ຕໍ່ສູ້ກັນຢ່າງດຸເດືອດ ໃນທີ່ສຸດບາກີມກໍ່ຕັດຄໍພະຍາເຈັດຈື່ອຕາຍຄາຫຼັງຊ້າງ ເມື່ອພະຍາເຈັດຈື່ອຕາຍແລ້ວ ບັນດາພະຍາວຽງອື່ນໆພ້ອມເສນາອາມາດທັງຫຼາຍກໍ່ເຂົ້າອ່ອນຍອມຕໍ່ພະເຈົ້າຟ້າງຸ່ມ, ຫຼັງຈາກນັ້ນພະອົງໄດ້ຈັດແຈງການປົກຄອງໃໝ່ໃຫ້ບັນດາຫົວເມືອງຕ່າງໆເຫຼົ່ານີຢູ່ພາຍໃຕ້ການເບິ່ງແຍງຂອງພະອົງໂດຍໃຫ້ຫົວເມືອງເຫຼົ່ານັ້ນ ເກັບເກນກຳລັງພົນເຂົ້າໃນ ກອງທັບ ແລະ ເສຍສ່ວຍໃຫ້ທຸກໆປີ.

**ຈ. ການບຸກຕີເຂົ້າວຽງພະນໍ້າຮຸ່ງ-ຊຽງສາ**

ເມື່ອສຳເລັດການຈັດແຈງການປົກຄອງທີ່ແຄວ້ນເຈັດຈວງແລ້ວເຈົ້າຟ້າງຸ່ມໄດ້ນຳທັບຂຶ້ນໄປແຄວ້ນວຽງຜານໍ້າຮຸ່ງ-ຊຽງສາຕັ້ງຢູ່ເຂດບໍລິເວນສອງຝັ່ງແມ່ນໍ້າຂອງລະຫວ່າງນໍ້າກະດິງ, ນໍ້າງຽບແລະນໍ້າຊັນທິດຕາເວັນອອກຕິດກັບແດນເມືອງພວນ (ຊຽງຂວາງ) ແລະແດນຫວຽດນາມ, ທິດຕາເວັນຕົກຕິດກັບເມືອງໜອງຫານ, ທິດໃຕ້ຕິດກັບແຄວ້ນເຈັດຈວງ ແລະ ທິດເໜືອຕິດກັບວຽງຈັນ, ວຽງຄຳ ແຄວ້ນນີ້ປະກົດມີຫຼາຍຫົວເມືອງຄື: ເມືອງຊຽງສາ, ເມືອງມອດ, ເມືອງນຽກ. ສ່ວນເມືອງຜານໍ້າຮຸ່ງ ໄດ້ເປັນເມືອງແມ່ຂອງເມືອງອື່ນໆ ພະຍາສາມຄ້ອນເຈົ້າເມືອງ ວຽງຜານໍ້າຮຸ່ງໄດ້ເກນກຳລັງອອກມາສູ້ຮົບ ລວມຂຸນເສິກ 400,000 ຄົນ, ຊ້າງເສິກ 500 ໂຕ ແລະ ມ້າເສິກເປັນຈຳນວນ

ຫຼວງຫຼາຍ. ສ່ວນເຈົ້າຟ້າງຸ່ມແຕ່ງຕັ້ງໃຫ້ບາຈິແຂ້ ນຳກຳລັງເຂົ້າຮັບມື ທັງສອງຝ່າຍໄດ້ຕໍ່ສູ້ກັນຈົນສຸດຄວາມສາມາດ ພະຍາສາມຄ້ອນສູ້ຈົນເສຍຊີວິດ ກຳລັງຖືກກະຈາຍ ແລະ ຍອມຕໍ່ກໍ່ທັບຂອງເຈົ້າຟ້າງຸ່ມ,.

ພາຍຫຼັງໄດ້ຈັດແຈງຫົວເມືອງຜານ້ຳຮຸ່ງ ສຳເລັດແລ້ວພະເຈົ້າຟ້າງຸ່ມກໍ່ແຕ່ງຕັ້ງກຳລັງເຫຼົ່າທັບໄປຕີເອົາເມືອງປາກຊັນ ເມືອງຂອງເຈົ້າຄຳນ້ຳຊື່ ແລະ ເມືອງນຽກ ຂອງເຈົ້າຄຳນ້ຳເມັດ ເຈົ້າເມືອງທັງສອງຄາດສູ້ບໍ່ໄຫວ ກໍ່ໄດ້ພາກັນຫຼົບໜີໄປອາໄສຢູ່ກັບທ້າວ ຄຳວັງ  ແລະ ທ້າວ ຄຳຄັງ ທີ່ເມືອງດອກໄມ້ ສະຫຼຸບໄດ້ວ່າເຈົ້າຟ້າງຸ່ມ ທີ່ເຄື່ອນທັບຈາກພາກໃຕ້ ໃນການທ້ອນໂຮມຊາດ ໄລຍະທຳອິດຢູ່ເຂດພາກໃຕ້  ແລະ ພາກກາງ ສາມາດນຳກຳລັງຕີເຂົ້າເຂດແດນຂອງພະຍາພິມມະທັດ  ອານາຈັກກະບອງ ແລະ ອານາຈັກເຈັດວຽງໄດ້ແນວນັ້ນ, ພະເຈົ້າຟ້າງຸ່ມສາມາດລວບລວມເຂົ້າກຳງລັງພົນເສິກໄດ້ເປັນຈຳຫຼວງຫຼາຍ ມີຊ້າງເສິກ, ມ້າເສິກ ມີຊາຍ ໜຸ່ມຍິງສາວ ທີ່ສະກັນປະກອບສ່ວນເຂົ້າກອງທັບຈາກຫົວເມືອງຕ່າງໆທີ່ ເຈົ້າຟ້າງຸ່ມທ້ອນໂຮມມາໄດ້ໃນໄລຍະຂອງການທ້ອນໂຮມແຜ່ນດິນຄັ້ງນີ້.

### 1.2  ການບຸກຕີຫົວເມືອງລາວຝ່າຍຕາເວັນອອກ

#### ກ. ການບຸກຕີເຂົ້າເມືອງພວນ

ພາຍຫຼັງທີ່ເຈົ້າຟ້າງຸ່ມຕີເອົາເມືອງຜານ້ຳຮຸ່ງໄດ້ແລ້ວ ພະອົງໄດ້ນຳເອົາກຳລັງເຄື່ອນທັບຂຶ້ນໄປພາກເໜືອ ມີຄວາມຫວັງບຸກຕີເອົາເມືອງພວນ ເຈົ້າຄອງແຄວ້ນພວນຊາບຂ່າວ ກໍ່ເກີດຄວາມຢ້ານກົວຫຼາຍ ກໍ່ແຕ່ງທູດນຳເອົາສານມາຖວາຍເພື່ອຂໍອ່ອນຍອມຕໍ່ພະເຈົ້າຟ້າງຸ່ມ ທີ່ພັກເຊົາຢູ່ວຽງຜານ້ຳຮຸ່ງ-ຊຽງສາ ໃນສານຂຽນວ່າ **ຜູ້ຂ້ານີ້ຫາກເປັນຫຼານເປັນເຫຼັນເຊື້ອແນວຂຸນບໍລົມລາຊາທິລາດ ເຈົ້າທັງຂຸນລໍ ແຕ່ບູລົມມາດີ ຫຼື ດາຍ, ໃນທີ່ນີ້ແລ ພະເຈົ້າຟ້າແລ ຈັກຜາບບ້ານຜາບເມືອງທີ່ໃດກໍ່ດີຂ້າຈະແຕ່ງຣິພົນໄປຊ່ອຍໄປເຕີມຊູທັງແຮ່ຊູທັດແລ** ພໍເມື່ອພະເຈົ້າຟ້າງຸ່ມໄດ້ຮັບອ່ານສານດັ່ງນັ້ນແລ້ວ ພະອົງກໍ່ຕອບລາຊະສານໄປວ່າ ***ພີ່ນ້ອງເຮົາແລຍັງຄິດເຖິງເຮົາດັ່ງນັ້ນກໍ່ຊອບດີແລບ້ານເມືອງກັບຫລານເຮົາກັບນ້ອງເຮົາ ແຕ່ກ່ອນທີ່ໃດກໍ່ດີໄອ້ແກ່ນ້ອງເຮົາເຖິ້ນ ເຄື່ອງເສິກ, ເຄື່ອງວຽກ, ເຄື່ອງເຫຼັກອັນໃດກໍ່ດີ ເຮົາຫາກຈັກໃຫ້ເອົາດອມ. ອັນໜຶ່ງບ້ານເມືອງ ແຕ່ເຮົາຜາບໄດ້ທີ່ເມືອງຊ້ຳ. ເມືອງມ່ວນກໍ່ໃຫ້ມາໄຫວ້ພະນິບແກ່ນ້ອງເຮົາ***

#### ຂ. ການແບ່ງປັນເຂດແດນກັບດາຍຫວຽດ

ເມື່ອຈັດຄວາມເປັນລະບຽບຮຽບຮ້ອຍແລ້ວຈາກນັ້ນພະອົງໄດ້ສັ່ງໃຫ້ເມືອງພວນສົ່ງກອງທະຫານມາສົມທົບເພື່ອເຂົ້າຕີເອົາເມືອງລາວ ທີ່ຢູ່ໃກ້ຊາຍແດນດາຍຫວຽດ ໃນປີຄ.ສ 1351ເມື່ອທາງຝ່າຍກະສັດດາຍຫວຽດເຈີນດູໂຕນ(Tnan Duton) ໄດ້ຊາບຂ່າວກໍ່ເກີດຄວາມຢ້ານກົວ ຈຶ່ງໄດ້ແຕ່ງຕັ້ງທູດນຳສານມາຖວາຍພ້ອມກັບເຈລະຈາແບ່ງປັນເຂດແດນລະຫວ່າງລາວກັບດາບຍຫວຽດ ເຊິ່ງຜົນການເຈລະຈາໄດ້ອອກມາດັ່ງນີ:

- ພົນລະເມືອງທີ່ຢູ່ເຮືອນຮ້ານກວ້ານມີເສົາ (ເຮືອນຍົກພື້ນ) ແມ່ນພົນລະເມືອງລາວລ້ານຊ້າງ
- ເຂດແດນປະເທດນັ້ນ ໃຫ້ນັບແຕ່ຕົ້ນສ້ານສາມງ່າ ໄປເຖິງນ້ຳມ້າສາມແຄວ(ນ້ຳມ້າສາມຄອນ) ຫຼື ຫີນສາມເສົາ ໄປເຖິງນ້ຳເຕົ້າສາມແຄວ
- ຫຼັກການແບ່ງປັນດິນແດນໃຫ້ຖືເອົາຕາມສັນພູແບ່ງນ້ຳຄືຝົນຕົກນ້ຳໄຫລມາທາງດ້ານລາວນັ້ນແມ່ນເຂດແດນຂອງລາວ ແລະ ນ້ຳໄຫຼມາຮອດແດນຫວຽດບ່ອນໃດໃຫ້ຖືກເຂດນັ້ນເປັນດິນແດນດາຍຫວຽດ(ເດຊານຸລາດ ແສນດວງເດດ 2003.ເອກະສານຮຽນປະຫວັດສາດສະໄໝລ້ານລ້ານຊ້າງ).

  ນັບແຕ່ນັ້ນມາອານາຈັກລາວລ້ານຊ້າງ ແລະ ດາຍຫວຽດຈຶ່ງໄດ້ຖືເອົາສັນຍາດັ່ງກ່າວເປັນຂໍ້ກຳນົດເຂດແດນຂອງສອງອານາຈັກ.

### 1.3 ການບຸກຕີເຂົ້າທາງພາກເໜືອ

ພາຍຫຼັງໄດ້ແບ່ງເຂດແດນກັບດາຍຫວຽດສຳເລັດແລ້ວ. ພະເຈົ້າຟ້າງຸ່ມກໍ່ຍົກກຳລັງພົນຂຶ້ນໄປຕີເອົາບັນດາເມືອງລາວຝ່າຍເໜືອ ເຊິ່ງຫົວເມືອງລາວດັ່ງກ່າວນີ້ເມື່ອກ່ອນແມ່ນດິນແດນເມືອງກາຫຼົງ. ໄດ້ແກ່ເມືອງແຖນ, ເມືອງ

ໄຊ, ເມືອງໄລ່, ເມືອງກວ້າງ, ເມືອງໂຮມ, ເມືອງກາງລ້ານ, ເມືອງສິງທ້າວ, ເມືອງຫຸມ, ເມືອງວາດ ແລະ ເມືອງອື່ນໆ ອີກ. ບັງຄັບໃຫ້ເຈົ້າເມືອງເຫຼົ່ານີ້ ສົ່ງສ່ວຍເປັນເງິນ, ຄຳ, ຜ້າໄໝ, ຂ້ອຍຂ້າ ແລະ ເຄື່ອງເສິກ...ຈາກນັ້ນສະເດັດໄປຕີເອົາເມືອງບຸນເໜືອ, ບຸນໃຕ້ໄດ້ທັງສອງເມືອງ ເຈົ້າຝ່າຍເມືອງຊຽງຮຸ່ງໄດ້ຊາບຂ່າວ ການເຄື່ອນໄຫວອັນປີຊາສາມາດຂອງພະເຈົ້າຟ້າງຸ່ມ ກໍ່ເກີດຄວາມກະວົນກະວາຍຢ້ານກົວ ຈຶ່ງຟ້າວແຕ່ງພະລາຊະສານ ພ້ອມກັບເຄື່ອງບັນນາການມີຈຳນວນໜຶ່ງແສນ, ມ້າ 100 ໂຕ ພ້ອມກັບອານເງິນ, ອານຄຳ ແລະ ຜ້າແພເປັນຈຳນວນຫຼວງຫຼາຍນຳມາຖວາຍພະອົງ.

ຕີເອົາຫົວເມືອງຝ່າຍເໜືອໝົດແລ້ວ ພະເຈົ້າຟ້າງຸ່ມແຕ່ງຕັ້ງໃຫ້ບາຈິ່ມແມ່ທັບໃຫຍ່ເປັນເຈົ້າເມືອງໝື່ນຂວາ (ເຈົ້າເມືອງຝ່າຍຂວາ). ເປັນຜູ້ປົກຄອງຫົວເມືອງລາວຝ່າຍເໜືອແລ້ວກໍ່ເຄື່ອນພົນມາເຖິງເມືອງນ້ອຍ, ເຈົ້າເມືອງນ້ອຍໄດ້ອອກໄປອ່ອນນ້ອມ ພ້ອມທັງບາສີຖວາຍໃຫ້ພະອົງຢ່າງສົມກຽດ ຫລັງຈາກນັ້ນໄດ້ເຄື່ອນທັບລົງມາຕາມລ້ອງແມ່ນ້ຳອູ (ເຖິງປາກອູ) ແລະ ໄດ້ຢຸດປະທັບຕັ້ງຄ້າຍຢູ່ທີ່ນັ້ນ ເພື່ອກະກຽມຢຶດນະຄອນຊຽງທອງ.

### 1.4 ການບຸກຕີເຂົ້ານະຄອນຊຽງທອງ

ນະຄອນຊຽງທອງໃນເວລານີ້ແມ່ນເຈົ້າຄຳຮຽວ (ຜູ້ເປັນອາວ) ໄດ້ປົກຄອງເມື່ອຊາບຂ່າວການເຄື່ອນທັບຂອງເຈົ້າຟ້າງຸ່ມ ມາເຖິງປາກອູແລ້ວປະທັບຢູ່ທີ່ນັ້ນ, ພະເຈົ້າຄຳຮຽວກໍ່ເກີດຄວາມຢ້ານກົວຄວາມເດຊານຸພາບຂອງຫຼານຕົນ ຈຶ່ງຮີບຮ້ອນເກນໄພ່ພົນກອງທະຫານ ອອກໄປຮັບມືຂອງກອງທັບ ເຈົ້າຟ້າງຸ່ມທີ່ປາກອູເຖິງ 3 ຄັ້ງ ແຕ່ກໍ່ຖືກກອງທັບຂອງພະເຈົ້າ ຟ້າງຸ່ມຕີຕອບໂຕ້ໃຫ້ປະລາໄຊໄປທຸກຄັ້ງ. ເມື່ອພະເຈົ້າຄຳຮຽວບໍ່ສາມາດເອົາຊະນະກັບກອງທັບຫຼານຕົນເອງໄດ້ຈຶ່ງຕັດສິນໃຈກິນສານງ້ວນ (ຢາເບື່ອ) ຂ້າຕົວເອງຕາຍ ພ້ອມກັບມະເຫສີ. ເມື່ອເຈົ້າຟ້າຄຳຮຽວ ສິ້ນພະຊົນລົງແລ້ວ ພວກເສນາອາມາດພ້ອມທັງບ່າວໄພ່ລາຊະດອນໄດ້ພ້ອມພຽງຮຽງກັນອອກໄປເຊີນເອົາພະເຈົ້າຟ້າງຸ່ມທີ່ປະທັບຢູ່ປາກກອູນັ້ນ ເຂົ້າມາສະເຫວີຍລາຊະສົມບັດໃນນະຄອນຊຽງທອງ ໃນປີ ຄ.ສ 1353 ມີອາຍຸຄົບ 37 ປີ ພ້ອມເສນາອາມາດຊັ້ນຜູ້ໃຫຍ່ ໄດ້ຖວາຍພະນາມໃຫ້ແກ່ພະອົງ **ພະຍາຟ້າຫຼ້າທໍລະນີ ສີສັດຕະນາຄະນະຫູດ**

ເມື່ອພະເຈົ້າຟ້າງຸ່ມ ໄດ້ຂຶ້ນສະຫວີຍລາດທີ່ນະຄອນຊຽງທອງແລ້ວ ພະອົງໄດ້ຈັດແຈງລະບຽບການປົກຄອງບ້ານເມືອງຂຶ້ນໃໝ່ ໃຫ້ສອດຄ່ອງກັບຈຸດປະສົງຂອງພະອົງ ເປັນຕົ້ນການຄຸ້ມຄອງດ້ານແນວຄິດ ຈິດໃຈຂອງພະອົງໃຫ້ມີຄວາມຢູ່ເຢັນເປັນສຸກ ພິເສດພະອົງໄດ້ເອົາໃຈໃສ່ເສນາອາມາດຕ່າງໆ ຜູ້ທີ່ໄດ້ຕິດຕາມພະອົງ ໄປອານາຈັກອົງກໍ່ໃຫ້ຢູ່ໃນຖານະຕຳແໜ່ງທີ່ສຳຄັນ ຕາມຄຸນງາມຄວາມດີດັ່ງນີ້:

ໃຫ້ປູ່ລ້ຽງເປັນແສນເມືອງ (ມະຫາອຸປະລາດ)

ໃຫ້ຕາລ້ຽງເປັນໝື່ນຫຼວງ

ໃຫ້ອາວລ້ຽງເປັນເຈົ້າພູມເຫນືອ

ໃຫ້ນ້າລ້ຽງເປັນເຈົ້າພູມໃຕ້

ໃຫ້ພີ່ລ້ຽງເປັນພະຍາກະຊັກ (ປົກຄອງພວກຊົນເຜົ່າລາວເທິງ).

## 2. ການທ້ອນໂຮມແຜ່ນດິນຄັ້ງທີ 2 ປີ ຄ.ສ 1354-1357

ພາຍຫຼັງທີ່ເຈົ້າຟ້າງຸ່ມ ຂຶ້ນສະເຫວີຍລາດທີ່ນະຄອນຊຽງທອງ ແລະ ຈັດລະບຽບບ້ານເມືອງຄືນໃໝ່ແລ້ວ. ພະອົງໄດ້ມອບໝາຍບ້ານເມືອງໃຫ້ມະເຫສີ (ເມຍ) ນາງແກ້ວເກງຍາຜູ້ຮັກສາການແທນ ເຖິງປີຄ.ສ 1354 ພະອົງໄດ້ສັ່ງໃຫ້ບັນດາເຫລົ່າເສນາອາມາດທັງຫຼາຍ ກະກຽມກຳລັງທະຫານ ເພື່ອທ້ອນໂຮມເອົາບັນດາເມືອງລາວ ທີ່ຢູ່ທາງພາກຕາເວັນຕົກສ່ຽງເໜືອ ແລະ ເຂດຫົວເມືອງທາງຝັ່ງຂວາແມ່ນ້ຳຂອງ ທີ່ຍັງກະແຈກກະຈາຍຢູ່ເປັນຕົ້ນແມ່ນຕີເອົາອານາຈັກລ້ານນາ (ຊຽງແສນ) ເປັນສຳຄັນ.

## 2.1. ການບຸກຕີເອົາເມືອງຊຽງແສນແລະການແບ່ງປັນເຂດແດນກັບລ້ານນາ

ໃນປີຄ.ສ 1354 ພະເຈົ້າຟ້າງຸ່ມໄດ້ຍົກທັບຂຶ້ນໄປທາງພາກຕາເວັນຕົກສ່ຽງເໜືອທາງເຮືອບຸກຕີເອົາເມືອງແສນເໜືອ. ເມື່ອພະອົງໄດ້ເຄື່ອນທັບເຖິງເມືອງເຫຼືອກ ທ້າວອູລອງ ເຈົ້າຄອງເມືອງກໍ່ໄດ້ນໍາເອົາກອງກຽດຕິຍົດພ້ອມທັງເຖົ້າແກ່ປະຊາຊົນອັນມີທັງພະສົງອົງຄະເຈົ້າອອກມາຕ້ອນຮັບ ແລະ ອ່ອນນ້ອມຕໍ່ພະເຈົ້າຟ້າງຸ່ມ ຢູ່ທີ່ທ່າຊ້າງຄໍາຄໍາ ເມື່ອເຫັນດັ່ງນັ້ນພະອົງກໍ່ໄດ້ແຕ່ງຕັ້ງໃຫ້ເຈົ້າອູລອງຂຶ້ນປົກຄອງເມືອງຄືເກົ່າ ໃນຖານະເປັນເມືອງກາງຢ້າວ ແລ້ວຫຼັງຈາກນັ້ນພະເຈົ້າຟ້າງຸ່ມ ໄດ້ສົ່ງກອງທັບຂຶ້ນຕີເອົາບັນດາຫົວເມືອງຕ່າງໆຕັ້ງຢູ່ແຄມແມ່ນໍ້າຂອງເຊັ່ນ: ເມືອງຊຽງຂອງ, ເມືອງຄົກຣໍາ,ເມືອງຊຽງທອງ ແລະ ເມືອງຊຽງຕຶ້ນ. ເມື່ອນັ້ນພະອົງໄດ້ແຕ່ງຕັ້ງເມືອງເຫຼົ່ານັ້ນເປັນເມືອງ4 ໝື່ນທາງນໍ້າມອບໝາຍໃຫ້ເຈົ້າຊຽງຕຶ້ນເປັນເຈົ້າ4  ໝື່ນທາງນໍ້າມີສູນກາງຢູ່ຊຽງຕຶ້ນ.

ຈາກນັ້ນພະອົງໄດ້ສົ່ງກອງທັບເຂົ້າບຸກຕີເອົາບັນດາຫົວເມືອງທີ່ຢູ່ທາງທິດຕາເວັນອອກຂອງແມ່ນໍ້າຂອງເຊັ່ນ: ເມືອງພິ້ວ, ເມືອງຄູນ, ເມືອງຜາແລະເມືອງແຫງແລ້ວແຕ່ງຕັ້ງໃຫ້ຫົວເມືອງທັງ4ເປັນເມືອງ 4 ໝື່ນທາງບົກ ມອບໝາຍໃຫ້ເຈົ້າເມືອງຜາເປັນເຈົ້າເມືອງ4 ໝື່ນທາງບົກສູນກາງເມືອງແມ່ນຢູ່ເມືອງຜາ. ເມື່ອເຈົ້າຟ້າງຸ່ມໄດ້ຈັດລະບຽບໃຫ້ບັນດາຫົວເມືອງ4 ໝື່ນທາງນໍ້າ ແລະ 4 ໝື່ນທາງບົກແລ້ວພະອົງໄດ້ສໍາຫຼວດພົນເສີກຄືນ ທາງດ້ານຊາຍສະກັນ, ຊ້າງເສີກ, ມ້າເສີກ ແລະ ອາວຸດຕ່າງໆຢ່າງພຽງພໍເພື່ອກະກຽມບຸກຕີເຂົ້າຢຶດເອົາອານາຈັກລ້ານນາ(ຊຽງໃໝ່)ທີ່ເປັນອານາຈັກໃຫຍ່ຕັ້ງຢູ່ທາງທິດຕາເວັນຕົກສ່ຽງເໜືອຂອງອານາຈັກລາວລ້ານຊ້າງ. ເຊິ່ງລວມມີພົນເສີກ400.000ຄົນ, ຢ້າວ ແລະ ແກ 100.000ຄົນ, ຊ້າງເສີກ 500ໂຕ ແລະ ມ້າເສີກຈໍານວນຫຼວງຫຼາຍ. ຜ່ານການສໍາຫຼວດພົນເສີກທີ່ຮຽບຮ້ອຍ ແລ້ວພະອົງເຄື່ອນທັບຂຶ້ນຕີເອົາເມືອງຫີນ, ເມືອງ ງາວ ໄດ້ທັງສອງເມືອງແລ້ວໄດ້ສະເດັດໄປປະທັບຢູ່ເມືອງມູນ(ເຂດເມືອງຊຽງລາຍປະເທດໄທປັດຈຸບັນ).ເພື່ອກຽມຕີເອົານະຄອງຊຽງໃໝ່ອານາຈັກລ້ານນາຕໍ່ໄປ.

ຝ່າຍເຈົ້າສາມພະຍາຫຼືພະຍາຜາຍູ້ຜູ້ເປັນໃຫຍ່ຂອງອານາຈັກນີ້ທີ່ມີສູນກາງຕັ້ງຢູ່ຊຽງແສນໄດ້ຍົກກໍາລັງພົນ 400.000ຄົນອອກມາສູ້ຮົບກັບກາລັງຂອງເຈົ້າຟ້າງຸ່ມ. ບາຈິ່ມແມ່ທັບໃຫຍ່ຂອງເຈົ້າຟ້າງຸ່ມ ສາມາດຕີໃຫ້ກອງທັງຂອງພະຍາແສນເມືອງແຕກໜີໄປກອງທັບຂອງເຈົ້າຟ້າງຸ່ມໄລ່ຕົກຕາມໄປຈົນເຖິງເມືອງຊຽງແສນ, ເມືອງແພວ, ເມືອງເລັນ, ເມືອງໄຮ, ເມືອງຍວງຈົນເຖິງເມືອງຊຽງແຂງ.ເຈົ້າສາມພະຍາເຫັນວ່າສູ້ຕ້ານທ້ານບໍ່ໄດ້ຈຶ່ງໄດ້ແຕ່ງຕັ້ງໃຫ້ໝື່ນຂຸນແລະໝື່ນກາງເມືອງອອກມາອ່ອນນ້ອມເປັນເມືອງຊ່ວຍຂໍສົ່ງສ່ວຍເປັນເຂົ້າເປືອກປີລະ1000ຫາບ ຄໍາ2ໝື່ນ,ເງິນສອງແສນ, ແຫວນນິນລູກໜຶ່ງ, ແກ້ວພິທູນລູກໜຶ່ງ ແລະ ແຫວນແດງລູກໜຶ່ງ. ພ້ອມນັ້ນເຈົ້າສາມພະຍາຍັງໄດ້ໃຫ້ຄໍາສັນຍາໃນສານວ່າ: ***ເມື່ອໃດລູກສາວຂອງຜູ້ຂ້ານາງນ້ອຍອ່ອນສໍ ໃຫຍ່16ປີຈະຈັດໃຫ້ເມືອປັດເຊື່ອປູໝອນແກ່ເຈົ້າຟ້າແລ. ບັດນີ້ຍັງນ້ອຍຂໍແກ່ເຈົ້າເອົາແຕ່ຜາໃດໄປໃຫ້ເປັນບ້ານເປັນເມືອງແກ່ເຈົ້າເຖີ້ນ .***

ຫຼັງຈາກນັ້ນກະສັດລ້ານນາແລະລ້ານຊ້າງກໍ່ຕົກລົງແບ່ງເຂດແດນຕັ້ງແຕ່ຜາໃດຜາດ່ານລົງມາໃຫ້ເປັນເຂດແດນຂອງອານາຈັກລາວລ້ານຊ້າງ. ພະເຈົ້າຟ້າງຸ່ມໄດ້ໃຊ້ເວລາເຖິງ2ປີຈຶ່ງສໍາເລັດໃນການທ້ອນໂຮມເອົາຫົວເມືອງລາວຝ່າຍເໜືອ ພະອົງຈຶ່ງໄດ້ສະເດັດກັບຄືນນະຄອນຊຽງທອງ. ກ່ອນທີ່ພະອົງເຄື່ອນທັບສູ່ນະຄອນຊຽງທອງນັ້ນພະເຈົ້າຟ້າງຸ່ມໄດ້ພິຈາລະນາສະພາບຄວາມເປັນຢູ່ຂອງພວກລາວເທິງ(ລາວເດີມ) ເຊິ່ງຮ້ອງກັນວ່າ “ຂ້າ” ຊີວິດການເປັນຢູ່ຟືດເຄືອງຫຼາຍ ພະອົງຈຶ່ງໄດ້ຍົກຍ້າຍພວກເຜົ່າດັ່ງກ່າວນີ້ຈໍານວນ 100.000ຄົນ. ຈາກເຂດ 12ປັນນາລື້ລົງມາຢູ່ຊຽງທອງ ພ້ອມນັ້ນເຈົ້າຟ້າງຸ່ມບອກສອນວ່າ ***ສູ້ຢ່າວ່າຢ່າງານແກ່ໄທແກ່ລາວ ສູຢ່າຍາດເອົາສິ່ງຂອງລາວອັນໃດກໍ່ດີ, ອັນໜຶ່ງຢ່າຜິດກັນ ເມື່ອຈັກໄປເລວ ໄປຮົບກັນກໍ່ດີ ໃຫ້ສູຈື່ຄວາມກູ, ສິ່ງໜຶ່ງມື້ກາບ, ມື້ຮັບ, ມື້ຮວາຍ, ມື້ເມິງ, ມື້ເປີກ ຫ້າມື້ນີ້ໃຫ້ເປັນມື້ເສີກ, ສູຈັກຮົບຈັກເລວກັນກໍ່ຕາມສູ. ມື້ກັດ, ມື້ກົດ, ມື້ຮ່ວງ, ມື້ເຕົ່າ, ມື້ກາ ຫ້າມື້ນີ້ຢ່າໃຫ້ສູຮົບເລວກັນຢ່າໄດ້ຍຸບເອົາຄາຍບາຍເອົາເງິນກັນ, ຜູ້ໃດຫາກບໍ່ຟັງຄວາມກູສັ່ງຫີນໜ່ວຍນີ້ໜັກສອງພັນຫ້າຮອຍບາດ, ຜູ້ໃດຫາກບໍ່ຟັງຄວາມກູຜູ້ເປັນເຈົ້າແຜ່ນດິນ ໃຫ້ສູທັງສີ່ຂຸນນີ້ສັ່ງເອົາເງິນເທົ່າຫີນໜ່ວຍນີ້ເລົ່າເອົາຄວາຍໂຕໜຶ່ງກັນແກ່ສູ.***

ເມື່ອພະອົງກັບຄືນຈາກການທ້ອນໂຮມເອົາບັນດາຫົວເມືອງລາວພາກຕາເວັນຕົກສ່ຽງເໜືອເຖິງວັງຊຽງທອງ ແລ້ວໃນປີຄສ 1356 ເວລານັ້ນນາງແກ້ວເກງຍາໄດ້ປະສູດລູກເສນາອາມາດທັງຫຼາຍໄດ້ໃຫ້ນາມຊື່ວ່າ: ທ້າວອຸ່ນເຮືອນ ມີອາຍຸຄົບ1 ປີພໍດີເມື່ອພະອົງປະທັບຢູ່ວັງຊຽງທອງໄດ້1 ປີກໍ່ກຽມເຄື່ອນທັບລົງມາທາງໃຕ້ຕີເອົາເມືອງວຽງຈັນ.

## 2.2. ການບຸກຕີເມືອງວຽງຈັນ-ວຽງຄຳ

ວຽງຈັນແລະວຽງຄຳໃນຕົ້ນສະຕະວັດທີXIV ແມ່ນເຖົ້າຊຽງມຸ່ງ ຫຼື ເຖົ້າຊຽງເຫຼັກເປັນຜູ້ປົກຄອງເມືອງ ມີລູກຊາຍຜູ້ໜຶ່ງຊື່ວ່າພະຍາເພົາ ໄດ້ສົ່ງລົງໄປປົກຄອງເມືອງວຽງຄຳ ເຂດທົ່ງພຽງໂຫຼ້ງແມ່ນ້ຳງື່ມ ເປັນເມືອງຢູ່ທາງທິດເໜືອນະຄອນວຽງຈັນ ທັງເປັນເມືອງທີ່ສອງຂອງບັນດາເມືອງໃຫຍ່ຮອງຈາກອານາຈັກລ້ານນາ.

ເຖິງຄສ 1356 ພະເຈົ້າຟ້າງຸ່ມໂດຍຜ່ານການຕີລາຄາສັງເກດແລ້ວຈຶ່ງນຳທັບມາບຸກຕີເອົາເມືອງວຽງຈັນ. ທຳອິດພະອົງໄດ້ແຕ່ງຕັ້ງບາໂບແລະ ບາຈີແຂ້ເປັນມາທັບລົງໄປຕີເອົາເມືອງດ່ານຊ້າຍ (ເຂດມະຫາສາລະຄາມ ປະເທດໄທປັດຈຸບັນ) ຈັບຕົວທ້າວໄຄ ເຈົ້າຄອງເມືອງດ່ານຊ້າຍໄປປະຫານຊີວິດ. ກຳລັງເຈົ້າຟ້າງຸ່ມ ນຳທັບໄປຕັ້ງຢູ່ທ່ານາເໜືອ (ທິດຕາເວັນຕົກບ້ານສີໄຄນະຄອນຫຼວງວຽງຈັນ) ເມື່ອຂ່າວເຖິງເຈົ້າຊຽງມຸ່ງ ເຈົ້າຄອງເມືອງວຽງຈັນກໍ່ຕົກໃຈຢ້ານກົວ ຈຶ່ງແຕ່ງທູດໄປເຖິງພະຍາເພົາ ໃຫ້ມາຊ່ວຍປ້ອງກັນຕົວເມືອງວຽງຈັນສຸດຄວາມສາມາດ, ພະຍາຊຽງມຸ່ງກໍ່ມີກຳລັງ 20 ພັນຄົນ, ຊ້າງເສິກ 500ໂຕ. ຜ່ານສູ້ຮົບພະຍາຊຽງມຸ່ງ ຖືກແມ່ທັບບາຈີ່ແຂ້ຟັນຄໍຕາຍຄາຫຼັງຊ້າງ. ຕາມຕຳລາໜັງສືບູຮານໄດ້ກ່າວວ່າ ທ້າວຊຽງມຸ່ງຂີ່ຊ້າງຊື່ "ວັງບູລີ" ສູງ8ສອກພະຍາເພົາຂີ່ຊ້າງຊື່"ແສນນາງຄອຍ"ສ່ວນຝ່າຍພະເຈົ້າຟ້າງຸ່ມ ຄື ບາໂບ ຫຼື ໝື່ນຊ້າຍ ຂີ່ຊ້າງຊື່"ແພ້ວຈັກກະວານ" ບາຈີ່ແຂ້ ຂີ່ຊ້າງຊື່ "ຂວັນລວງຟ້າ" ໄດ້ເຄື່ອນທັບເຂົ້າມາຕັ້ງຢູ່ຖິ່ນຈຳປີ ສ່ວນເຈົ້າຟ້າງຸ່ມຂີ່ຊ້າງຊື່ "ຮົ່ມຊຽງທອງ" ນຳທັບເຄື່ອນເຂົ້າມາຕັ້ງຢູ່ທົ່ງນາເໜືອ. ການສູ້ຮົບລະຫວ່າງກຳລັງຂອງວຽງຈັນ, ວຽງຄຳກັບກຳລັງຝ່າຍຂອງເຈົ້າຟ້າງຸ່ມ ໄດ້ດຳເນີນໄປຢ່າງດຸເດືອດທີ່ສຸດ. ສ່ວນພະຍາເພົາເຈົ້າວຽງຄຳ ເຫັນທ່າສູ້ບໍ່ໄດ້ກໍ່ເລີຍຂີ່ຊ້າງໜີກັບເມືອວຽງຄຳ ເຈົ້າຟ້າງຸ່ມແຕ່ໃຫ້ບາສຽມ ແລະ ບາຈີແຂ້ໄລຕາມຈົນເຖິງເມືອງວຽງຄຳ ແຕ່ແມ່ທັບຂອງເຈົ້າຟ້າງຸ່ມບໍ່ສາມາດຍົກທັບເຂົ້າຕີເມືອງວຽງຄຳໄດ້ຍ້ອນເມືອງດັ່ງກ່າວຖືກອ້ອມຮອບດ້ວຍກໍ່ໄຜ່ໜາມຢ່າແໜ້ນໜາ ແລະ ຖືກຕ້ານທ້ານຄືນຈາກກອງທະຫານເມືອງວຽງຄຳຢ່າງແຂງແຮງ.

ເມື່ອກອງທັບຂອງເຈົ້າຟ້າງຸ່ມເຂົ້າຍຶດເອົາເມືອງວຽງຈັນໄດ້ແລ້ວພະເຈົ້າຟ້າງຸ່ມເຫັນວ່າເມືອງວຽງຄຳເປັນເມືອງທີ່ຖືກອ້ອມຮອບດ້ວຍກໍ່ໄຜ່ໜາມແໜ້ນໜາແລະຫຍຸ້ງຍາກຫຼາຍໃນການບຸກໂຈມຕີເມືອງດັ່ງກ່າວນີ້ ດັ່ງນັ້ນເຈົ້າຟ້າງຸ່ມຈຶ່ງເວົ້າວ່າ ***ບໍ່ຍາສັງເມືອໜ້າຫາກຈະຮູ້ບໍ່ຍ່າຊະແລ*** ເຈົ້າຟ້າງຸ່ມໄດ້ຫັນປ່ຽນຍຸດທະວິທີ ແລະ ຍຸດໂທບາຍໃນການຕີເອົາເມືອງວຽງຄຳດັ່ງຕໍ່ໄປນີ້:

- ເຈົ້າຟ້າງຸ່ມໄດ້ຖອນກຳລັງອອກຈາກເມືອງວຽງຄຳມາວຽງຈັນຄືນ ແລ້ວຍົກພົນຂ້າມຂອງໄປຕີເອົາເມືອງແກ່ນທ້າວ ແລະ ເມືອງນະຄອນໄທ (ຕິດເຂດແດນກຸງສີອາຍຸດທະຍາ)ຫັນເຫຄວາມສົນໃຈຂອງພວກສັກດີນາວຽງຄຳ ໃຫ້ເກີດຄວາມຕາຍໃຈ ແລະ ຄິດວ່າວຽງຄຳບໍ່ເປັນທີ່ສົນໃຈຂອງເຈົ້າຟ້າງຸ່ມ.
- ສັ່ງໃຫ້ກອງກຳລັງທະຫານຕີລູກຈຽງໜ້າດ້ວຍເງິນດ້ວຍຄຳ ແລ້ວນຳມາຍິງສຸມໃສ່ກຳແພງໄຜ່ໜາມ ເພື່ອດຶງດູດຄວາມສົນໃຈຂອງປະຊາຊົນເມືອງວຽງຄຳໃນການຊອກຫາສິ່ງຂອງອັນມີຄ່າ ຄືດັ່ງພົງສາວະດານລາວລ້ານຊ້າງຂຽນວ່າ "ພະອົງໄດ້ສັ່ງໃຫ້ກອງພະຄັງຫຼວງເບີກເອົາເງິນ, ຄຳ ມາຕີເປັນລູກຈຽງໜ້າ ແລ້ວຍິງສຸມໃສ່ກຳແພງໄຜ່ໜາມສາມວັນສາມຄືນເມື່ອປະຊາຊົນອອກໄປທຳມາຫາກິນ ພົບເຫັນລູກຈຽງເງິນ ຄຳດັ່ງກ່າວກໍ່ພາກັນຖາກຖາງກໍ່ໄຜ່ອັນເປັນສາເຫດເຮັດໃຫ້ກຳແພງເມືອງຖືກທຳລາຍ ແລ້ວພະເຈົ້າຟ້າງຸ່ມກໍຍົກພົນເຂົ້າໄປຕີເອົາເມືອງໄດ້ງ່າຍ

ເມື່ອເຈົ້າຟ້າງຸ່ມຊາບຂ່າວກ່ຽວກັບເຫດການເມືອງວຽງຄຳກຳແພງຖືກຖາກຖາງຂາດ ເປັນບັ້ນເປັນຕອນນັ້ນພະອົງໄດ້ສັ່ງໃຫ້ກອງທະຫານບຸກຕີເຂົ້າເມືອງວຽງຄຳໃນທຸກດ້ານ. ພະຍາເພົາເຈົ້າຄອງເມືອງວຽງຄຳອອກຕໍ່ສູ້ຈົນສຸດຄວາມສາມາດ ແລະ ສູ້ບໍ່ໄດ້ສຸດທ້າຍຖືກຈັບ. ເພື່ອສະແດງເຖິງຄວາມປີຊາສາມາດຂອງພະຍາເພົາ, ເຈົ້າຟ້າງຸ່ມ ໄດ້

ອະນຸຍາດໃຫ້ພະຍາເພົາເຂົ້າຊິນຊ້າງກັບພະອົງ. ແຕ່ບໍ່ມີໃຜເອົາຊະນະກັນໄດ້ດ້ວຍເຫດນັ້ນເຈົ້າຟ້າງຸ່ມ ໄດ້ຕົກລົງແຕ່ງຕັ້ງໃຫ້ພະຍາເພົາຂຶ້ນຄອງເມືອງຄືເກົ່າ. ແຕ່ພະຍາເພົາບໍ່ຍອມຂຶ້ນກັບເມື່ອຢູ່ນໍາພີ່ນ້ອງທີ່ຊຽງດົງຊຽງທອງ.

ເມື່ອກອງທັບຂອງເຈົ້າຟ້າງຸ່ມຕີໄດ້ເມືອງວຽງຈັນ ແລະ ວຽງຄໍາ ພະອົງໄດ້ແຕ່ງຕັ້ງໃຫ້ບາຄຸ້ມເປັນ"ໝື່ນຈັນ" ປົກຄອງເຂດແຄ້ວນວຽງຈັນ, ແຕ່ງຕັ້ງໃຫ້ບາສຽມເປັນ"ໝື່ກະບອງ"ປົກຄອງບັນດາຫົວເມືອງລາວຝ່າຍໃຕ້ ແຕ່ເມືອງຜານໍ້າຮຸ່ງລົງໄປເຖິງເຂດແດນຂອມທີ່ຫົວຫາດຫຼີ່ຜີ(ເຂດແຄ້ວນສີໂຄດຕະບອງ) ໄລຍະດຽວກັນພະອົງໄດ້ສັ່ງໃຫ້ພະຍາເມືອງຂວານໍາເອົາເຜົ່າລາວເທິງທີ່ຕັ້ງຖິ່ນຖານໃນແຕ່ລະບ່ອນ ຄື ສິບພັນຄອບຄົວໄປຕັ້ງຫຼັກຖານຢູ່ກະແດຟ້າແຖບແຄມງື່ມວຽງຈັນ,ສິບພັນຄອບຄົວໄປຕັ້ງຫຼັກຖານຢູ່ໜອງຫານນ້ອຍ ແລະ ໜອງຫານຫຼວງ ແລະ ອີກພວກໜຶ່ງໄປຕັ້ງຢູ່ພູຈານເຖົ້າ(ກາລະສິນປະເທດໄທປັດຈຸບັນ).

## 2.3 ການບຸກຕີເອົາເມືອງລາວທາງຝັ່ງຂວາແມ່ນໍ້າຂອງ

ພາຍຫຼັງການຈັດແຈງຮູບແບບການປົກຄອງຢູ່ວຽງຈັນແລະວຽງຄໍາສໍາເລັດແລ້ວມາໃນຄສ 1357ເຈົ້າຟ້າງຸ່ມໄດ້ເຄື່ອນກໍາລັງທັບໃຫຍ່ລົງໄປແຄ້ວນຮ້ອຍເອັດ, ໂຄລາດ, ກຸງສີອາຍຸດທະຍາ(ລ້ານເພຍ)ການເຄື່ອທັບຄັ້ງນີ້ເຈົ້າຟ້າງຸ່ມ ໄດ້ແຕ່ງຕັ້ງໃຫ້ໝື່ນແກ່ ແລະ ໝື່ນກະບອງເປັນແມ່ທັບອອກໜ້າ ໃຫ້ພະຍາເມືອງຂວາເປັນປີກຂວາ, ໃຫ້ພະຍາເມືອງຊ້າຍເປັນປີກຊ້າຍ ແຕ່ງໃຫ້ໝື່ນຈັນເປັນແມ່ທັບຫຼວງ ລວມພົນເສິກໄດ້ 60.000 ຄົນ ຊ້າງເສິກ 500 ໂຕ, ມ້າເສິກ 1000 ໂຕ ແລະ ເຫຼືອນັ້ນໄວ້ຮັກສາເມືອງ.

ໄລຍະການເດີນທາງໄປຕີເອົາລ້ານເພຍ(ອາຍຸດທະຍາ) ເຈົ້າຟ້າງຸ່ມໄດ້ນໍາເອົາກໍາລັງຕີເອົາບັນດາຫົວເມືອງທີ່ຢູ່ທາງພາກຕາເວັນອອກສ່ຽງໃຕ້ ຄື ແຄ້ວນຮ້ອຍເອັດ ແລະ ໂຄລາດໄດ້ແລ້ວຈັບເອົາພະຍາເມືອງດັ່ງກ່າວໄປຂັງໄວ້. ຈາກນັ້ນ.ເຈົ້າຟ້າງຸ່ມກໍ່ໃຫ້ກອງທະຫານຕີເອົາຫົວເມືອງຕ່າງໆທີ່ຂຶ້ນກັບແຄ້ວນຮ້ອຍເອັດມີ ເມືອງສາດ, ເມືອງພະສະຊຽນ, ເມືອງພະລົງ, ເມືອງພະນາລາຍ,ເມືອງພະນາຫຽນ, ເມືອງເຊຂະມາດ, ເມືອງສະພັງສີ່ແຈ, ເມືອງໂພນຟັງແດດແລ້ວຈັບເອົາພະຍາເມືອງດັ່ງກ່າວນັ້ນມາຂັງໄວ້ຢູ່ເມືອງຮ້ອຍເອັດ.

ຈາກນັ້ນພາຍຫຼັງທີ່ພະອົງໄດ້ຈັບກຸ່ມບັນດາພະຍາເມືອງດັ່ງກ່າວໄດ້ໝົດແລ້ວພະອົງໄດ້ຂຽນສານເຖິງພະຍາອູ່ທອງແຫ່ງອານາຈັກລ້ານເພຍ(ອາຍຸດທະຍາ) ໃນສານນັ້ນຂຽນວ່າ "ຈັກຣົບຫຼືຈັກຮູ້ວ່າສິ່ງໃດນັ້ນຈາ" ເມື່ອພະເຈົ້າອູ່ທອງໄດ້ຮັບຂ່າວແລ້ວ ກໍ່ເກີດຄວາມສະທ້ານຍ້ານກົວ ແລ້ວຕອບສານທັນທີວ່າ ***ເຮົາຫາກເປັນພີ່ນ້ອງກັນມາແຕ່ຂຸນບູລົມພຸ້ນດາຍເຈົ້າຢາກໄດ້ບ້ານໄດ້ເມືອງໃຫ້ເຈົ້າເອົາແຕ່ເຂດດົງສາມເສົ້າ(ດົງພະຍາໄຟ)ເມືອເທົາພູພະຍາພໍ່ ແລະ ແດນເມືອງນະຄອນເປັນເຈົ້າທ້ອນ, ອັນໜຶ່ງຂ້ອຍຈັດສົ່ງນໍ້າອ້ອຍນໍ້າຕານທຸກປີ ອັນໜຶ່ງລູກຂ້າຊື່ນາງແກ້ວຍອດຟ້າໃຫຍ່ມາແລ້ວຈັດສົ່ງໃຫ້ເມືອປັດເຊື່ອປູໝອນແກ່ເຈົ້າຟ້າແລ***ພ້ອມນັ້ນພະຍາອູ່ທອງກໍ່ຈັດແຈງເຄື່ອງບັນາການມາທະຫວາຍໃຫ້ແກ່ເຈົ້າຟ້າງຸ່ມອັນມີຊ້າງພາຍ(ຊ້າງຜູ້) 51ໂຕຊ້າງພັງ(ຊ້າງແມ່)50ໂຕ, ຄໍາສອງໝື່ນ, ເງິນສອງແສນ, ບໍ່ແສນໜ່ວຍພ້ອມກັບເຄື່ອງທີ່ມີຄ່າອື່ນໆອີກຢ່າງລະຮ້ອຍ, ພະເຈົ້າອູ່ທອງໄດ້ອ່ອນຍອມເປັນບ້ານພີ່ເມືອງນ້ອງຢ່າງແທ້ຈິ່ງ.

ພະເຈົ້າຟ້າງຸ່ມເກີດຄວາມເພິ່ງພໍໃຈຕໍ່ພະຍາອູ່ທອງແລ້ວຕົກລົງປ່ອຍຕົວພະຍາເມືອງເຫຼົ່ານັ້ນໃຫ້ເປັນອິດສະຫຼະພ້ອມທັງສັ່ງສອນວ່າ "ໃຫ້ຢູ່ໃນຫຼັກສິນທໍາບໍ່ໃຫ້ບຽດບຽນຜູ້ອື່ນ"ແລ້ວພະອົງກໍ່ເຄື່ອນທັບກັບວຽງຈັນຢ່າງມີໄຊເມື່ອກໍາລັງເຄື່ອນມາເຖິງວຽງຈັນໃນຕົ້ນລະດູຝົນປີ1357ພະອົງໄດ້ພັກເຊົາຢູ່ທີ່ນີ້ເພື່ອເປັນການຕອບສະໜອງຄຸນງາມຄວາມດີຂອງແມ່ທັບນາຍກອງແລະ ເຫຼົ່າທະຫານທັງໝົດທຸກຄົນທີ່ມີຜົນງານນັ້ນພະອົງໄດ້ຈັດພິທີສະຫຼອງໄຊຢ່າງຍິ່ງໃຫຍ່ພ້ອມທັງຈັດແຈງລະບອບການປົກຄອງຄືນໃໝ່ໃຫ້ແໜ້ນໜາເຂັ້ມແຂງ ແລະ ໝັ້ນຄົງ.

## 3. ການສະຫຼອງໄຊໃຫຍ່ທີ່ວຽງຈັນປີຄ.ສ 1357

### ກ. ພິທີສະເຫຼີມສະຫຼອງໄຊ

ພາຍຫຼັງທີ່ສໍາເລັດການທ້ອນໂຮມບັນດາຫົວເມືອງລາວບູຮານເຈົ້າຟ້າງຸ່ມກໍ່ຈັດຕັ້ງການສະເຫຼີມສະຫຼອງໄຊຄັ້ງຍິ່ງໃຫຍ່ຂຶ້ນເຊິ່ງງານດັ່ງກ່າວໄດ້ຈັດຂຶ້ນໃນມື້ອອກໃໝ່3ຄໍ່າເດືອນຍີ່ປີ ຄສ 1357 ບໍລິເວນປາກປ່າສັກຄືບຽັນເປັນ

ເວລາ 7ມື້ 7 ຄືນ ມີສະບ່ຽງອາຫານເປັນຈຳນວນຫຼວງຫຼາຍເຊັ່ນ: ຊ້າງ10 ໂຕ ງົວ 1.000ໂຕ, ຄວາຍ2000 ໂຕ ແລະ ຊີ້ນປາອາຫານອີກຈຳນວນໜຶ່ງເພື່ອເອົາໄວ້ລ້ຽງໄພ່ຟ້າປະຊາຊົນໃນງານມີການບາສີສູ່ຂວັນ, ຫົດສົງໃຫ້ເຈົ້າຟ້າງຸ່ມແລະຈາກນັ້ນພະອົງຍັງໄດ້ໃຫ້ຄຳໂອວາດແກ່ໄພ່ຟ້າລາຊະດອນ.



**ຮູບທີ9: ແຜນທີ່ອານາຈັກລາວລ້ານຊ້າງ**

**ຂ. ຄຳໂອວາດຂອງເຈົ້າຟ້າງຸ່ມ.**

ເຈົ້າຟ້າງຸ່ມໄດ້ໃຫ້ຄຳໂອວາດເຊິ່ງມີເນື້ອໃນດັ່ງນີ້:

1. ເຈົ້າທັງຫຼາຍຮັກສາບ້ານເມືອງຢ່າໃຫ້ມີຂ້າລັກຄົນໂຈນ ອັນໜຶ່ງຢ່າໄດ້ຂ້າຟັນກັນແມ່ນວ່າຂ້ອຍຕົນຜິດກໍ່ດີ ເມຍຕົນຜິດກໍ່ດີ ເສນາ ແລະ ລູກຄ້າມາຜິດກໍ່ດີ ຕົນຢ່າຫຼອນຂ້າຟັນເສຍໃຫ້ຜູ້ອື່ນຜິດຈາລະນາດູກ່ອນເປັນໂທດອັນໜັກແທ້ຈິ່ງທຳຕາມເຫດນັ້ນ ໂທດບໍ່ໜັກຢ່າໄດ້ຂ້າທໍ່ວ່າໃຫ້ໃສ່ຄອກຂັງໄວ້ສົມໂທດແລ້ວໃຫ້ປ່ອຍຫາວຽກຫາງານ. ສົມບັດອັນຈະເກີດໃນແຜ່ນດິນນີ້ ຖ້າຄົນມີ ສົມບັດກໍ່ຈິ່ງມີ ຄັນບໍມີຄົນສົມເຂົ້າຂອງກໍ່ຫາບໍ່ໄດ້ແລະ ເຮົາໃຫ້ຂ້າຄົນເພື່ອດັ່ງນັ້ນແລ.
2. ອັນໜຶ່ງເຈົ້າທັງຫຼາຍກໍ່ຢ່າຜິດຢ່າຂ້າກັນໃຫ້ພ້ອມກັນດູແລຂອບບ້ານຂອບເມືອງ ຕ່າງບ້ານຕ່າງເມືອງເຮົາເຂົາຈະທຳການບຽດບຽນບ້ານເມືອງເຮົາສິ່ງໃດກໍ່ໃຫ້ເຫັນແຈ້ງ.
3. ອັນໜຶ່ງ ສອງເດືອນໃດໃຫ້ໃຊ້ຄົນໄປໄຫວສາຫາເຮົາສູ່ບ້ານສູ່ເມືອງໃຫ້ເຮົາຮູ້ອັນຮ້າຍອັນດີ ສາມປີຈິ່ງໃຫ້ເຈົ້າທັງຫຼາຍຂຶ້ນເມືອໄຫວເຮົາ ເມືອຮອດຊຽງດົງຊຽງທອງພຸ້ນແລ້ວເຮົາຈະບູຊາຟ້າແຖນຟ້າຄົ້ນທັງແຖນຄົມ ແຖນແຕ່ງ ແຖນເຖືອກ ທັງເຖົ້າເຍີ ເຖົ້າໄລ່ ແມ່ຍ່າງ່າມ ແມ່ມົດ ທັງເທວະດາ ອັນຮັກສາຜາຕົ່ງ ແລະ ຍອດອູ ທັງຫຼັກໝັ້ນທ້າຍຂັນ ທັງນາໄຮ່ດຽວ ພູເຂົາກ້າອ້າຍມ້າ ທ້າວຄ່ອງ.......
4. ອັນໜຶ່ງຢ່າເອົາໄພ່ມາເປັນຂ້ອຍຂ້າ, ໄພ່ຜິດກັນເປັນອັນໜັກເປັນຕົ້ນວ່າມີຊູ້ສູເມຍທ່ານໃຫ້ໄໝເອົາແຕ່5ບາດ ເຂົາຫາກຂ້າກັນຕາຍໃຫ້ເອົາຫົວມັນແທນຜູ້ຕາຍນັ້ນ.
5. ອັນໜຶ່ງ ໄປເສິກຢ່າໄດ້ເອົາຄ່າຫົວໄພ່ແຕ່ບາດໜຶ່ງເຖິງສອງຕໍ່ເທົ່າເຖິງໜ້ອຍວ່າເປັນຄ່າຫົວແລະ ເຈົ້າຂຸນຢ່າໄໝໄພ່ເຖິງຮ້ອຍຂຶ້ນໄປຜູ້ໃດໄໝຈັກເສຍໜ້າຕົວມັນຈັກເອົາໃຊ້ຕ່າງໄພ່

## IV. ການປັບປຸງອານາຈັກຂອງເຈົ້າຟ້າງຸ່ມ

### 1. ການປັບປຸງອຳນາດການປົກຄອງ

### 1.1. ການຈັດຕັ້ງການປົກຄອງ

ເມື່ອສຳເລັດການທ້ອນໂຮມເມືອງລາວບູຮານເປັນເອກະພາບໃນປີ ຄ ສ 1357 ເຈົ້າຟ້າງຸ່ມກໍ່ດຳເນີນການຈັດຕັ້ງການປົກຄອງ ໂດຍຮັກສາຮູບແບບການປົກຄອງເດີມໄວ້ ພຽງແຕ່ປ່ຽນຜູ້ປົກຄອງເທົ່ານັ້ນ. ໂດຍສະເພາະແມ່ນການປັບປຸງອານາຈັກຄືນໃໝ່ເຊັ່ນ: ທຳການເລື່ອນຕຳແໜ່ງຜູ້ທີ່ມີຜົນງານ, ແບ່ງເຂດການປົກຄອງ ແລະ ແຕ່ງຕັ້ງຜູ້ທີ່ມີຜົນງານໄປປົກຄອງເມືອງຕ່າງໆ.

### 1.2. ການເລື່ອນຍົດຕຳແໜ່ງຜູ້ທີ່ມີຜົນງານ

- ແຕ່ງຕັງປູ່ລັ້ຽງເປັນແສນເມືອງ(ອ້າຍຜາວຽງ) ເປັນແມ່ທັບໃຫຍ່(ເສນາທິການສູງສຸດ)ຮັບຜິດຊອບແຜ່ນດິນລ້ານຊ້າງທັງມວນ.
- ແຕ່ງຕັ້ງໃຫ້ໝື່ນກະບອງເປັນຮອງແມ່ທັບໃຫຍ່ ຫຼື ເປັນເສນາທິການທະຫານສູງສຸດຮັບຜິດຊອບແຜ່ນດິນລ້ານຊ້າງທັງມວນ.
- ແຕ່ງຕັ້ງໃຫ້ໝື່ນຫຼວງ, ພະຍາເມືອງຂວາ, ພະຍາເມືອງຊ້າຍ, ເຈົ້າພູມເໜືອ, ເຈົ້າພູມໃຕ້ທັງ5ພະຍາເປັນແມ່ທັບ,ທັງ5ຮັບຜິດຊອບແຜ່ນດິນລ້ານຊ້າງທັງມວນ.ແບ່ງເຂດກັນຮັບຜິດຊອບ
- ແຕ່ງຕັ້ງໃຫ້ພະຍາໝື່ນໜ້າ ດຳລົງຕຳແໜ່ງເປັນເຈົ້າທຳແທນ(ເຈົ້າພູມໜ້າ) ຫຼື ຂຸນລາຊະວັງໜ້າ(ກົມໜ້າ ຫຼື ກົມວັງໜ້າ).
- ແຕ່ງຕັ້ງໃຫ້ເຈົ້າໝື່ນແຜ່ນດຳລົງຕຳແໜ່ງເປັນເຈົ້າທຳແທນ
- ແຕ່ງຕັ້ງເຈົ້າໝື່ນາເໜືອນ, ໃຫ້ດຳລົງຕຳແໜ່ງເຈົ້າທຳຫຼັງ ຫຼື ຂຸນລາຊະວັງກ້ຳຊ້າຍ(ກົມຫຼັງ ຫຼື ກົມວັງຫຼັງ)
- ແຕ່ງຕັ້ງເຈົ້າໝື່ນນາໃຕ້ດຳລົງຕຳແໜ່ງເປັນຮອງເຈົ້າທຳຫຼັງ
- ແຕ່ງຕັ້ງນາຍຫຼວງເໜືອໃນຖານະເປັນຂຸນພົນທະຫານເອກຜູ້ຮັກສານະຄອນຫຼວງໃຫ້ດຳລົງຕຳແໜ່ງເປັນເຈົ້າຄຸ້ມຄອງກ້ຳໜ້າ(ຜູ້ພິພາກສານຝ່າຍໜ້າ)
- ແຕ່ງຕັ້ງນາຍຫຼວງໃຕ້ດຳລົງຕຳແໜ່ງເປັນເຈົ້າຄຸ້ມຄອງໃນກ້ຳຫຼັງ(ສານຝ່າຍຫຼັງຄືສານຝ່າຍນາງສະໜົມ)

ນອກຈາກນີ້ແລ້ວບັນດານາຍທະຫານຂັ້ນຜູ້ນ້ອຍລົງມາສັບຊ້ອນໄປຢູ່ໃນໜ້າທີ່ຕຳແໜ່ງທີ່ເໝາະສົມຂອງໃຜລາວແລະພ້ອມນັ້ນເຈົ້າຟ້າງຸ່ມຍັງໄດ້ຈັດລະບຽບການປົກຄອງຄືນໃໝ່.

- **ການແບ່ງເຂດການປົກຄອງ**

ເຈົ້າຟ້າງຸ່ມແບ່ງເຂດການປົກຄອງອອກເປັນສອງສ່ວນຄື: ເຂດນະຄອນຫຼວງແລະເຂດຫົວເມືອງ(ຂັ້ນທ້ອງຖິ່ນ)

**ກ. ເມືອງຫຼວງ:** ເປັນສູນກາງທາງດ້ານການເມືອງ,ການປົກຄອງ, ເສດຖະກິດ, ວັດທະນະທາ-ສັງຄົມ. ທັງເປັນບ່ອນຢູ່ຂອງເຈົ້າຊີວິດ ແລະ ເຊື້ອສາຍກະສັດ

**ຂ. ຂັ້ນທ້ອງຖິ່ນ:** ແບ່ງເປັນສາມລັກສະນະຄື:

- ❖ **ຂັ້ນເຂື່ອນເມືອງ:** ເປັນເມືອງທີ່ມີຄວາມສຳຄັນ ຮອງລົງມາຈາກເມືອງຫຼວງ, ເປັນເມືອງຍຸດທະສາດມີຄວາມເຂັ້ມແຂງຮອບດ້ານ. ຜູ້ປົກຄອງເມືອງນີ້ຕ້ອງແມ່ນນາຍທະຫານຂັ້ນຂຸນພົນເອີ້ນວ່າ "ຂຸນໃຫຍ່ເຂື່ອນເມືອງ" ມີ6 ເມືອງຄື: - ວຽງຈັນ- ວຽງແກ
 -ວຽງຄຳ- ວຽງພະນ້ຳຮຸ່ງ
 -ວຽງປາກຫ້ວຍຫຼວງ - ວຽງຊຽງສາ
 (ດຣ ສຸເນດ ໂພທິສານ; ປະຫວັດສາດລາວດຶກດຳບັນຫາປັດຈຸບັນ)

- ❖ **ຂັ້ນແຂວງເມືອງ:** ເປັນເມືອງທີ່ມີຄວາມສຳຄັນຮອງຈາກຂັ້ນເຂື່ອນເມືອງຜູ້ປົກຄອງສ່ວນໃຫຍ່ແມ່ນເຈົ້າສັກດີນາ ຫຼື ເຊື້ອສາຍເຈົ້າສັກດີນາທ້ອງຖິ່ນ(ແຕ່ບໍ່ປາກົດມີເມືອງໃດທີ່ເປັນຂັ້ນແຂວງເມືອງໃນຕຳນານລາວບູຮານ).
- ❖ **ຂັ້ນຂອບເມືອງ ຫຼື ເມືອງຂອບດ່ານ:** ເປັນເມືອງຍຸດທະສາດທາງການທະຫານ, ຕັ້ງຢູ່ຊາຍແດນລະຫວ່າງອານາຈັກ ຜູ້ປົກຄອງເມືອງນີ້ແມ່ນ ນາຍທະຫານ ຫຼື ແມ່ທັບຜູ້ທີ່ມີຄວາມເກັ່ງກ້າສາມາດ ແລະ ຈົ່ງຮັກພັກດີຕໍ່ເຈົ້າຟ້າງຸ່ມ ເຊັ່ນ: ເມືອງແກ່ນທ້າວ, ເມືອງໜອງບົວ, ເມືອງສາມໝື່ນ, ເມືອງຊ້າຍ, ເມືອງປ່າກວາງ.

**1.3. ການແຕ່ງຕັ້ງຜູ້ທີ່ມີຜົນງານໄປປົກຄອງເມືອງສຳຄັນ**

- ແຕ່ງຕັ້ງໝື່ນຈັນ (ບາຄຸມ) ໄປປົກຄອງເມືອງວຽງຈັນ
- ແຕ່ງຕັ້ງພະຍາເພົາ (ຄົນໃໝ່) ໄປປົກຄອງເມືອງວຽງຄຳ
- ແຕ່ງຕັ້ງໝື່ແກ (ບາຈິແຂ້) ໄປປົກຄອງເມືອງວຽງແກ
- ແຕ່ງຕັ້ງໝື່ນພະນ້ຳຮຸ່ງ ໄປປົກຄອງເມືອງພະນ້ຳຮຸ່ງ
- ແຕ່ງຕັ້ງພະຍາຊຽງສາໄປປົກຄອງເມືອງຊຽງສາ.

**ຄ. ກົດໝາຍ:** ເວລານີ້ເຈົ້າຟ້າງຸ່ມໄດ້ວາງຂໍ້ກຳນົດເພື່ອຄຸ້ມຄອງສັງຄົມ ໂດຍຍຶດຖືເອົາຂະນົບທານຽມ ແລະ ຮີດຄອງປະເພນີ້ ໃຊ້ໃນການປົກຄອງເຊິ່ງລວມມີສອງປະເພດຄື: ທຳນຽມ(ກົດໝາຍ) ສຳລັບຜູ້ຖືກປົກຄອງຄື: ປະຊາຊົນທົ່ວໄປ ແລະ ທຳນຽມ (ກົດໝາຍ)ສຳລັບຜູ້ປົກຄອງຄື: ເຈົ້າຊີວິດ, ຂຸນນາງ ແລະ ເຈົ້າທາດ.

**2. ການປັບປຸງທາງດ້ານອັດທະນະທຳ**

ສັງຄົມລ້ານຊ້າງໃນເວລານີ້ແບ່ງຖານະທາງສັງຄົມອອກເປັນ2 ຊົນຊັ້ນຄື:

- ຊົນຊັ້ນຜູ້ປົກຄອງ (ເຈົ້າຊີວິດ,ຂຸນນາງ) ຜູ້ມີອຳນາດສູງສຸດແມ່ນກະສັດຮອງລົງມາແມ່ນເຊື້ອສາຍຂອງເຈົ້າຊີວິດ
- ຊົນຊັ້ນຜູ້ຖືກປົກຄອງ (ປະຊາຊົນທົ່ວໄປ)ໃນຊົນຊັ້ນນີ້ກໍ່ມີການແບ່ງຖານະ ຄື:ຜູ້ມີຜົນງານ, ຜູ້ຮັ່ງມີ ແລະ ຜູ້ທຸກຍາກ. ສຳລັບຜູ້ມີຜົນງານຈະໄດ້ເລື່ອນຂັ້ນຂຶ້ນເປັນຜູ້ມີຖານະສູງໃນສັງຄົມ.

**2.1. ການນຳເອົາສາສະໜາພຸດເຂົ້າມາລາວໃນປີຄສ 1359**

ຊົນຊາດລາວແຕ່ບູຮານນະການເຄີຍນັບຖືຜີຟ້າ, ຜີແຖນ, ຜີພໍ່ຜີແມ່ແລະຜີຕ່າງໆນາໆແຕ່ມາເຖິງປີຄສ50 ຂຸນຫຼວງລີເມົາເຈົ້າຄອງນະຄອນເພງາຍຂອງເຜົ່າອ້າຍລາວໄດ້ນຳເອົາສາສະໜາພຸດເຂົ້າມາເຜີຍແຜ່ໃນຊົນເຜົ່າອ້າຍລາວມາແລ້ວແຕ່ເປັນນິກາຍມະຫາຍານ, ແຕ່ຜ່ານມາຫຼາຍຮອຍປີທີ່ຄົນລາວຖືກເຄື່ອນຍ້າຍລົງມາທາງໃຕ້ເລື້ອຍໆ. ນັບທັງສາສະໜາພຸດກໍ່ຄ່ອຍໆຈືດຈາງຫາຍໄປ ແຕ່ກໍ່ຍັງນັບຖືສິ່ງອື່ນໆຕະຫຼອດມາ. ຈົນກະທັ້ງເຖິງປີ ຄ ສ 1359 ພະນາງແກ້ວເກງຍາຜູ້ເປັນອັກຄະລະມະເຫສີຂອງເຈົ້າຟ້າງຸ່ມ ໄດ້ຮ້ອງຂໍໃຫ້ພະອົງລົງໄປນຳເອົາສາສະໜາພຸດຈາກນະຄອນອັງກໍ່ຂຶ້ນມາອານາຈັກລາວລ້ານຊ້າງ, ເວລານັ້ນພະອົງມີຄວາມຍິນດີ ຈຶ່ງແຕ່ງໃຫ້ເສນາອາມາດນຳເຄື່ອງບັນນາການຖວາຍແກ່ເຈົ້າຊີວິດອັງກໍ່ເປັນຄຳສາມໝື່ນ, ແກ້ວນ້ຳຄັ່ງ ແລະ ເພັດອັນມີຄ່າຈຳນວນໜຶ່ງ.

ເຈົ້າຊີວິດຂະເໝນແຫ່ງນະຄອນອັງກໍ່ຜູ້ເປັນພໍ່ເຖົ້າເມື່ອໄດ້ຮັບສານຂອງເຈົ້າຟ້າງຸ່ມຍິນດີທີ່ສຸດ ຈຶ່ງໄດ້ນິມົນເອົາພະມະຫາປາສະມັນ, ມະຫາເທບລັງກາ, ພິຊຸສົງ 20 ຕົນພ້ອມທັງນັກປາດຜູ້ທີ່ຮຽນຈົບພະໄຕປິດົກຊື່ ນໍຣະສິງ, ນໍຣະເດດ, ນໍຣະສາດ ພ້ອມທັງໄດ້ລາຊະທານພະພຸດທະຮູບປັດຈະໂສກະອົງໜຶ່ງ ນາມວ່າ”ພະບາງ” ໃຫ້ເປັນສິ່ງສັກກະລະບູຊາແກ່ຊາວລ້ານຊ້າງພ້ອມນັ້ນເຈົ້າຊີວິດຂະເໝນຍັງໄດ້ມອບໜໍ່ຕົ້ນ

ມະຫາໂພ, ຄໍາພີພະໄຕປີດົກ, ນາຍຊ່າງຫຼໍ່ພະ, ຊ່າງເຫຼັກ, ຊ່າງເງິນ, ຊ່າງຄໍາ ຕະຫຼອດຮອດເຄື່ອງສຸລິຍານ ດົນຕີ, ປີ່ຜາ, ລະນາດ, ຄ້ອງວົງພ້ອມດ້ວຍບໍລິວານອຸປະຖາກວັດ,ອຸປະຖາກນັກບວດອາຈານ100 ຄົນ ພ້ອມທັງບໍລິວານຊ່ວຍນາງແກ້ວເກງຍາ ນໍາອີກ 1000 ຄົນ ແລະ ນັກປາດ 10 ຄົນ ເດີນທາງເຂົ້າສູ່ນະຄອນ ຊຽງທອງ ສ່ວນພະບາງໄດ້ນໍາມາສະຖິດຢູ່ເມືອງວຽງຄໍາວັດຊຽງແກ້ວ ແລະ ນັບຕັ້ງແຕ່ນັ້ນມາສາສະໜາພຸດ ໄດ້ກາຍເປັນສາສະໜາຂອງຊາວລາວຈົນເຖິງທຸກວັນນີ້.



**ຮູບທີ10: ຮູບພະບາງ**

## V. ສາເຫດທີ່ພາໃຫ້ໄດ້ຮັບໄຊຊະນະແລະຄວາມໝາຍປະຫວັດສາດ

### 1. ສາເຫດທີ່ໄດ້ຮັບໄຊຊະນະ

ໃນການທ້ອນໂຮມບັນດາຫົວເມືອງລາວບູຮານເຂົ້າເປັນອານາຈັກລາວລ້ານຊ້າງ ທີ່ມີຄວາມເປັນເອກະລາດ ເອກະພາບ ຢູ່ທັງສອງຝັ່ງໂຫຼ້ງແມ່ນໍ້າຂອງ ຕອນກາງນີ້ພາຍໃຕ້ການນໍາພາຂອງເຈົ້າຟ້າງຸ່ມໃນກາງສະຕະວັດທີ XIV ໄດ້ ຮັບຜົນສໍາເລັດຍ້ອນຫຼາຍປະການຄືດັ່ງນີ້:

ຍ້ອນການຈັດຕັ້ງແລະການນໍາພາຂອງເຈົ້າຟ້າງຸ່ມທີ່ມີຄວາມປີຊາສາມາດເຂັ້ມແຂງ ແລະ ສະຫຼາດ ສອດຄ່ອງ ກັບຄວາມມຸ່ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າຢູ່ໃນຍຸກສະໄໝນັ້ນ.

ປະຊາຊົນເຜົ່າຕ່າງໆທີ່ດໍາລົງຊີວິດຢູ່ສອງຝັ່ງແມ່ນໍ້າຂອງຕອນກາງນີ້ເຫັນວ່າມີຄວາມຈໍາເປັນຕ້ອງໄດ້ຖ້ອນ ໂຮມກັນເຂົ້າເປັນອັນໜຶ່ງອັນດຽວເພື່ອຕ້ານກັບການແຜ່ອໍານາດເຂົ້າມາຂອງພວກສັກດີນາອ້ອມຂ້າງ.ຈາກນັ້ນ ເຂົາເຈົ້າ ໄດ້ສະຫນັບສະໜູນ ຂະບວນທ້ອນໂຮມລາວພາຍໃຕ້ການນໍາພາຂອງພະເຈົ້າຟ້າງຸ່ມ ຢ່າງສຸດໃຈ

- ພະເຈົ້າຟ້າງຸ່ມ ໄດ້ຕີລາຄາເຖິງສະພາບຕ່າງໆຢູ່ພາຍໃນ ແລະ ພາຍນອກຢ່າງຖີ່ຖ້ວນ ແລະ ຖືກຕ້ອງ ທີ່ສຸດ
- ພະເຈົ້າຟ້າງຸ່ມຮູ້ຈັກນໍາໃຊ້ກາລະໂອກາດ ຮູ້ປຽບທຽບສະພາບທາງການເມືອງ ແລະ ການທະຫານ ທາງພາຍໃນ ແລະ ພາຍນອກ ເປັນຢ່າງດີ.

ພະເຈົ້າຟ້າງຸ່ມບໍ່ພຽງແຕ່ມີບຸກຄະລິກລັກສະນະເດັ່ນໃນຕົວເທົ່ານັ້ນ ແຕ່ຫາກມີຄຸນສົມບັດ ຊື່ສັດທ່ຽງທຳຕໍ່ອຸດົມການຂອງຕົນສາມາດດຶງດູດເອົາຄວາມນັບຖື ຈາກມະຫາຊົນຢ່າງຫຼວງຫຼາຍ ເຊັ່ນ ປະຊາຊົນຫຼາຍຫົວເມືອງ ບໍ່ຍອມອອກຕໍ່ສູ້ຕ້ານກັບຂະບວນ ຕາມຄຳສັ່ງຂອງເຈົ້າສັກດິນາທ້ອງຖິ່ນ ຫັນມາສະໜັບສະໜູນທ້ອນໂຮມແຜ່ນດິນລາວ  ຂອງພະເຈົ້າຟ້າງຸ່ມນັບມື້ນັບຫຼາຍຂຶ້ນ ສາເຫດດັ່ງກ່າວນັ້ນສະແດງອອກແຕ່ລະດ້ານດັ່ງນີ້:

- ເຈົ້າຟ້າງຸ່ມເປັນກະສັດທີ່ມີຄວາມສະຫຼາດ ໃນການຈັດຕັ້ງນຳພາ ພິເສດແມ່ນການຈັດຕັ້ງນຳພາເຫຼົ່າລົບ ຮູ້ຮັກສາກຳລັງແຮງພື້ນຖານ ເບື້ອງຕົ້ນມີກຳລັງພຽງແຕ່ 32 ຄົນເທົ່ານັ້ນ ຜ່ານມາຈາກຂະບວນການຕໍ່ສູ້ເພື່ອທ້ອນໂຮມເມືອງລາວບູຮານ ກຳລັງໄດ້ເພີ່ມຂຶ້ນນັບມື້ນັບຫລາຍຂຶ້ນເລື້ອຍໆ ພະເຈົ້າຟ້າງຸ່ມສາມາດຊັ່ງຊາຝ່າຍກົງກັນຂ້າມ ໄດ້ຢ່າງຖືກຕ້ອງ.
- ການກໍ່ສ້າງຫຼັກແຫຼ່ງພື້ນຖານຄວາມສາມັກຄີພາຍໃນ ສັງເກດເຫັນວ່າພະເຈົ້າຟ້າງຸ່ມເຮັດໄດ້ດີເປັນພິເສດ ບໍ່ມີແມ່ທັບຄົນໃດທີ່ຈະທໍລະຍົດຕໍ່ພະອົງແຕ່ຢ່າງໃດ ນັບຕັ້ງແຕ່ພະເຈົ້າຟ້າງຸ່ມເຄື່ອນທັບອອກຈາກພາກໃຕ້ ປີ ຄ.ສ 1349 ໃນເບື້ອງຕົ້ນເຊື່ອວ່າມີກຳລັງສູ້ຮົບປະມານ 10.000 ຄົນເປັນກຳລັງຕົ້ນຕໍພື້ນຖານທີ່ມີຄວາມເຂັ້ມແຂງ ການຈັດຕັ້ງນຳພາເຫຼົ່າລົບລ້ວນແຕ່ ແມ່ນບຸກຄົນສຳຄັນເກັ່ງກ້າສາມາດ ແລະ ເປັນຜູ້ໄວ້ເນື້ອເຊື່ອໃຈ ຕໍ່ພະອົງເປັນຢ່າງດີ ແມ່ທັບນັ້ນໄດ້ຈັດເປັນແມ່ທັບໜ້າ, ແມ່ທັບຫຼັງ, ປີກຊ້າຍ ແລະ ປີກຂວາ ໃນມີກອງພະລາທິການເຄື່ອທີ່ ໄປດ້ວຍເພື່ອກະກຽມສະບຽງອາຫານ ເຄື່ອງນຸ່ງ ແລະ ຢາປົວພະຍາດອື່ນໆ.
- ປະຊາຊົນລາວທີ່ຢູ່ສອງຝັ່ງແມ່ນ້ຳຂອງ ຕອນກາງນີ້ພາຍຫຼັງໄດ້ຫຼຸດພົ້ນ ອອກຈາກແອກປົກຄອງຂອງຂະເໝນ  ໃນລະຫວ່າງທ້າຍສະຕະວັດທີ 13 ນັ້ນແລ້ວ ບັນດາລັດຕ່າງໆກໍ່ໄດ້ແຍກຕົວອອກເປັນເອກະລາດພໍໃຜພໍລາວ ຈາກນັ້ນຕໍ່ມາອິດທິພົນຂອງພວກສະຫຍາມທີ່ຕັ້ງຫຼັກແຫຼ່ງຢູ່ລ້ອງແມ່ນ້ຳເຈົ້າພະຍາ ໄດ້ແຜ່ອິດທິພົນຂຶ້ນມາປົກຄອງໂດຍກົງ ຕ່າງຝ່າຍກໍ່ຕ່າງອາໄສທ່າແຮງເຊິ່ງກັນແລະກັນ ເພື່ອຕ້ານອິດທິພົນຂອງຕ່າງຊາດ.

ຕໍ່ມາເຖິງຕົ້ນສະຕະວັດທີ 14 ອຳນາດອິດທິພົນຂອງອານາຈັກສຸໂຂໄທ ເລີ່ມອ່ອນເພຍຊຸດໂຊມລົງ ໂດຍສະເພາະທີ່ພາຍຫຼັງ ເຈົ້າຂຸນລາບຄຳແຫງ ສິ້ນພະຊົນລົງ ບັນດາລັດຂອງສະຫຍາມຢູ່ລ້ອງແມ່ນ້ຳຂອງ ເຫັນມີຄວາມຈຳເປັນທີ່ສຸດແລ້ວ ທີ່ຕ້ອງໄດ້ເຕົ້າໂຮມກັນເຂົ້າເປັນອານາຈັກ ໜຶ່ງອານາຈັກດຽວ ທີ່ມີເອກະລາດສົມບູນ ແລະເຂັ້ມແຂງ ດັ່ງນັ້ນຈິ່ງເຫັນວ່າປະຊາຊົນສ່ວນໃຫຍ່ ໄດ້ລໍໃຫ້ເຈົ້າຟ້າງຸ່ມ ເຄື່ອນຈາກພາກໃຕ້ຂຶ້ນມາເຕົ້າໂຮມ ບັນດາຫົວເມືອງ ຕ່າງໆເຂົ້າເປັນອັນໜຶ່ງອັນດຽວກັນ ນີ້ແມ່ນສາເຫດໜຶ່ງທີ່ຈະເຮັດໃຫ້ເຈົ້າຟ້າງຸ່ມ ສາມາດໄດ້ຮັບໄຊຊະນະໃນການເຕົ້າໂຮມແຜ່ນດິນລາວ.

ພະເຈົ້າຟ້າງຸ່ມໄດ້ຕີລາຄາສະພາບການທາງການເມືອງ ໃນອາຊີອາຄະເນໄດ້ຢ່າງຖືກຕ້ອງ ຮູ້ສວຍໃຊ້ກາລະໂອກາດທີ່ພວກສັກດິນາເມືອງຊວາ (ຫຼວງພະບາງ) ມີຄວາມຂັດແຍ່ງກັນພາຍໃນ  ແລະໃນຂະນະທີ່ພະເຈົ້າ ຄຳຮຽວຜູ້ເປັນອາຂອງພະເຈົ້າຟ້າງຸ່ມ ຂຶ້ນຄອງອຳນາດໃນເມືອງຊວາ ຄວາມຂັດແຍ່ງໄດ້ເພີ່ມທະວີຂຶ້ນ , ເສນາອາມາດຜູ້ໃຫຍ່ແລະ ເຖົ້າແກ່ປະຊາຊົນ ໄດ້ມີຄວາມຫວັງຕໍ່ພະເຈົ້າຟ້າງຸ່ມ ໂດຍຄິດວ່າຖ້າພະເຈົ້າຟ້າງຸ່ມມີໂອກາດຍາມໃດ ແນ່ນອນຈະຕ້ອງໄດ້ຮັບໄຊຊະນະ ແລະ ບ້ານເມືອງກໍ່ຈະຢູ່ເຢັນເປັນສຸກ ອີກອັນໜຶ່ງໃນໄລຍະຕົ້ນຂອງສະຕະວັດທີ 14 ນັ້ນສະພາບການທີ່ຢູ່ອ້ອມຂ້າງ ອານາຈັກລາວລ້ານຊ້າງ ອຳນວຍຄວາມສະດວກໃຫ້ແກ່ ພະເຈົ້າຟ້າງຸ່ມໃນການທ້ອນໂຮມລາວຄື ທາງທິດຕາເວັນຕົກເຈົ້າອູ່ທອງແຫ່ງອາຍຸດທະຍາ ກໍ່ໄດ້ປະເຊີນໜ້າກັບຂະເໝນຢ່າງໜັກໜ່ວງ ທາງພາກໃຕ້ພະເຈົ້າຟ້າງຸ່ມໄດ້ຜູກສາຍສຳພັນກັບຂະເໝນແລ້ວ ທາງທິດຕາເວັນອອກ(ເຂດອານາມ) ນັ້ນພວກສັກດິນາຈາມ(ພາກກາງ ແລະ ພາກໃຕ້) ຂອງຫວຽດນາມກໍ່ເກີດຄວາມຂັດແຍ່ງຢ່າງຮຸນແຮງ   ແລະ ສຳລັບຢູ່ທາງທິດເໜືອ ພວກສັກດິນາພະມ້າໄດ້ກໍ່ຄວາມບໍ່ສະຫງົບ ສຸກຕາມເຂດຊາຍແດນຂອງອານາຈັກລ້ານນາ (ຊຽງແສນ)  ແລະທັງໝົດໄດ້ເປັນໂອກາດໃຫ້ແກ່ພະເຈົ້າຟຸ້ງຸ່ມ ໃນການທ້ອນໂຮມແຜ່ນດິນລາວເຂົ້າເປັນເອກະພາບກັນຢ່າງສົມບູນ.

**2. ຄວາມໝາຍປະຫວັດສາດ**

ການທ້ອນໂຮມດິນແດນສອງຝັ່ງລ້ອງແມ່ນ້ຳຂອງ ຕອນກາງເຂົ້າເປັນອານາຈັກລາວລ້ານຊ້າງ ເປັນເອກະພາບພາຍໃຕ້ການນຳພາຂອງພເຈົ້າຟ້າງຸ່ມ ເມື່ອກາງສະຕະວັດທີ 14 ນັ້ນຖືວ່າເປັນເຫດການໃຫຍ່ທີ່ສຳຄັນທີ່ສຸດ ທາງດ້ານປະຫວັດສາດລາວ ຍ້ອນວ່າເປັນເວລາຫຼາຍສະຕະວັດຜ່ານມາ ແລ້ວທີ່ຄົນລາວປະກອບເຜົ່າຕ່າງໆ ໄດ້ຕັ້ງຫຼັກແຫລ່ງໝັ້ນຄົງຢູ່ດິນ ດອນຕອນນີ້ແລ້ວສາມາດ ກໍ່ສ້າງອານາຈັກນ້ອຍໃຫຍ່ພໍໃຜພໍລາວ ແລະ ເກີດສົງຄາມກັນຢູ່ເນື່ອງນິດລຽນຕິດ.

ພະເຈົ້າຟ້າງຸ່ມ ເປັນເຊື້ອກະສັດ ເມືອງຊວາ (ຫຼວງພະບາງ) ເຜົ່າ"ໄທ-ລາວ" ຕະກູນຂຸນລໍ ແຫ່ງເມືອງແຖນ (ດຽນບຽນຟູ) ສາມາດເຕົ້າໂຮມລັດຕ່າງໆ ຢູ່ສອງຝັ່ງແມ່ນ້ຳຂອງ ເຂົ້າເປັນອານາຈັກອັນໜຶ່ງເອີ້ນວ່າ"ອານາຈັກລາວລ້ານຊ້າງ" ແລະ ຕໍ່ມາເອີ້ນວ່າ"ລາວລ້ານຊາງ" ມີເອກະລາດ, ເອກະພາບ  ແລະ ເຂັ້ມແຂງຮອບດ້ານທີ່ມີອານາເຂດກວ້າງໄກ ຄື ທາງທິດເໜືອ ແຕ່ແຄມແມ່ນ້ຳດຳແຄວ້ນ 12 ຈຸໄທ ແລະ ສ່ວນໜຶ່ງຂອງພັນນາລີໃນເຂດແຂວງຜົ້ງສາລີ, ບໍແກ້ວ, ຫ້ວຍຊາຍ ແລະ  ສ່ວນໜຶ່ງຂອງພະມ້າ ແລະ ຈີນປັດຈຸບັນ ທາງທິດຕາເວັນຕົກຕັ້ງແຕ່ໂຄລາດ ຫຼື ນະຄອນລາດສະສີມາ, ໄຊຍະພູມ, ເພັດຊະບູນ, ນະຄອນໄທ, ເມືອງແແຜ່, ເມືອງດົງ, ເມືອງຍາງ ຈົນເຖິງເມືອງນ່ານ ທາງທິດຕາເວັນອອກແຕ່ສາຍພູພຽງຊຽງງຂວາງ ແລະ ສາຍພູຫຼວງເຂົ້າມາ ເຂດແດນອານາຈັກລາວລ້ານຊ້າງນີ້ ເຖິງຕົ້ນສະຕະວັດທີ 17 ໄດ້ກ່າວໄວ້ໃນໜັງສືຂຸນບູລົມສະບັບຂຽນໃນລາຊະການຂອງ ພະວໍລະວົງສາ ວ່າ: ດິນແດນລາວອານາຈັກລ້ານຊ້າງຍາວແຕ່ເໜືອເຖິງໃຕ້ 890.000 ວາຫຼວງ (ປະມານ 1780 ກິໂລແມັດ) ລວງຂວາງມີ 480.000 ວາຫຼວງ(ປະມານ 960 ກິໂລແມັດ)

ອານາຈັກລາວລ້ານຊ້າງໄດ້ຈະເລີນເຂັ້ມແຂງເລື້ອຍໆມາ ຄຽງຄູ່ກັບອານາຈັກອ້ອມຂ້າງ ດັ່ງອາຍຸດທະຍາ, ດາຍຫວຽດ, ຂະເໝນ, ພະມ້າເປັນຕົ້ນ ດັ່ງນັ້ນຖືວ່າພະເຈົ້າຟ້າງຸ່ມກໍ່ໄດ້ສ້າງແນວຄິດລວມສູນສັກດີນາ, ມີລະບຽບການປົກຄອງ, ເສດຖະກິດ, ມີວັດທະນາທຳປະເພນີເອກະພາບໃນດິນຕອນນີ້ ແລະ ໄດ້ກາຍເປັນພື້ນຖານໃຫ້ແກ່ຄົນລາວບັນດາເຜົ່າ ໄດ້ສືບທອດມາເຖິງເທົ່າທຸກວັນນີ້ ຖືວ່າເປັນເຫດການທາງດ້ານປະຫວັດສາດອັນສຳຄັນ ສຳລັບຕໍ່ກັບພາຍນອກ ພະເຈົ້າຟ້າງຸ່ມໄດ້ສ້າງສາຍພົວພັນອັນດີງາມ ທີ່ມີລັກສະນະພິເສດກັບພະເຈົ້າໄຊຍະວໍລະມັນພະລາເມສວນສັດຂະເໝນແຫ່ງອັງກໍ່ທົມ.

ການພົວພັນກັບອານາຈັກອ້ອມຂ້າງ ເຫັນວ່າມີການພົວພັນແບບໄມຕີ ຕ່າງຝ່າຍໄດ້ຮັບຮູ້ອານາເຂດຂອງກັນ ແລະ ກັນ.ຫຼາຍອານາຈັກກໍ່ຮັບຮູ້ວ່າ ອານາຈັກລາວລ້ານຊ້າງແມ່ນອານາຈັກໜຶ່ງທີ່ກວ້າງໃຫຍ່, ມີຄວາມສຳຄັນທາງດ້ານປະຫວັດສາດໃນແຫຼມສຸວັນນະພູມໂດຍມີ ຮູບແບບການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມເປັນຂອງຕົນເອງ. ຕໍ່ກັບພາຍໃນພະເຈົ້າຟ້າງຸ່ມໄດ້ສ້າງຄວາມສາມັກຄີກັບປະຊາຊົນບັນດາເຜົ່າເພື່ອເປັນເອກະພາບກັນ, ພ້ອມກັນປົກປັກຮັກສາ ແລະ ສ້າງສາອານາຈັກຂອງຕົນ.

ດັ່ງນັ້ນການສ້າງຕັ້ງອານາຈັກລາວລ້ານຊ້າງຂອງເຈົ້າພະງຸ່ມຈິ່ງມີຄວາມໝາຍສຳຄັນດັ່ງນີ້:

- ມັນເປັນຂີດໝາຍແຫ່ງການກຳເນີດຊາດລາວທີ່ມີຄວາມເປັນເອກະລາດ ແລະ ເອກະພາບກັນເປັນປຶກແຜ່ນແໜ້ນໜາຄັ້ງທຳອິດຂອງຊົນຊາດລາວເພາະວ່າເປັນເວລາຫຼາຍສັດຕະວັດທີ່ຄົນລາວບັນດາເຜົ່າໄດ້ສ້າງຕັ້ງເມືອງ, ນະຄອນ ແລະ ອານາຈັກຂອງຕົນນັບແຕ່ສະໄໝເມືອງລຸງ, ເມືອງປາ ແລະ ເມືອງງ້ຽວ ຢູ່ທາງພາກໃຕ້ຂອງຈີນປະຈຸບັນ; ການສ້າງຕັ້ງອານາຈັກສີໂຄດຕະບອງ, ອານາຈັກເມືອງຊວາ... ບັນດາອານາຈັກເຫຼົ່ານີ້ລ້ວນແລ້ວແຕ່ປົກຄອງເປັນເອກະລາດກະແຈກກະຈາຍຈົນຮອດສະຕະວັດທີ14ບັນດາຫົວເມືອງລາວບູຮານຈິ່ງໄດ້ຮັບການທ້ອນໂຮມໃຫ້ເປັນເອກະພາບກັນເປັນຄັ້ງທຳອິດ.

- ການສ້າງຕັ້ງອານາຈັກລາວລ້ານຊ້າງມີຄວາມເຂັ້ມແຂງນີ້ມັນເປັນພື້ນຖານໃຫ້ແກ່ການກໍ່ສ້າງເສດຖະກິດ, ສັງຄົມ ແລະ ວັດທະນະທຳໃນໄລຍະຕໍ່ມາຈົນກາຍເປັນອານາຈັກທີ່ຮຸ່ງເຮືອງເຂັ້ມແຂງຮອບດ້ານໃນສະຕະວັດທີ17
- ມັນເປັນການກໍ່ສ້າງແນວຄິດສັກດີນາ, ມີລະບຽບການປົກຄອງ ແລະ ມີກົດໝາຍຄຸ້ມຄອງສັງຄົມ
- ມັນເປັນການປະກອບສ່ວນເຂົ້າໃນຂະບວນວິວັດແຫ່ງການສ້າງຕັ້ງລັດສັກດີນາລວມສູນທີ່ມີຄວາມເຂັ້ມແຂງໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ນັບແຕ່ນັ້ນມາອານາຈັກລາວລ້ານຊ້າງໄດ້ຈະເລີນເຂັ້ມແຂງຄຽງຄູ່ກັບບັນດາອານາຈັກອ້ອມຂ້າງເຊັ່ນ: ອານາຈັກອາຍຸດທະຍາ, ອານາຈັກດາຍຫວຽດ, ອານາຈັກຂະແມ ແລະ ພະມ້າເປັນຕົ້ນ.

# ບົດທີ5
# ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າຊີວິດອົງຕ່າງໆນັບແຕ່ສະຕະວັດ ທີXIV-XVI

## I. ອານາຈັກລາວລ້ານຊ້າງໃນລາຊະການຂອງພະຍາສາມແສນໄທ1374-1417

ເມື່ອເຈົ້າຟ້າງຸ່ມສິ້ນພະຊົນ(ປີຄສ 1373ທີ່ເມືອງນ່ານ)ເສນາອາມາດກໍ່ໄດ້ເຊີນເອົາທ້າວອຸ່ນເຮືອນ(ອຸ່ນເມືອງ) ຜູ້ເປັນໂອລົດຂຶ້ນປົກຄອງເມືອງຊຽງທອງ ແທນພະບິດາ ແລະ ພາຍຫຼັງທີ່ພະອົງຂຶ້ນຄອງລາດແລ້ວກໍ່ໄດ້ປ່ຽນພະນາມມາເປັນ "ພະຍາສາມແສນໄທ ໄຕພູວະນາ ຖາທິປັດສີສັດຕະນະຄານະຫຸດ" ພ້ອມນັ້ນເສນາອາມາດ ໄດ້ອະພິເສກສົມລົດ ນາງນ້ອຍນົງຮຽວເປັນເອກອັກຄະຣະມະເຫສີ ຂອງເຈົ້າສາມແສນໄທ ແລະ ຖວາຍພະນາມວ່າ "ເຈົ້ານາງແທ່ນຟ້າ. ພະອົງໄດ້ດໍາເນີນການປັບປຸງ ແລະ ຈັດລະບຽບການປົກຄອງຄືໃໝ່.

### 1.1. ດ້ານການປົກຄອງ

ລະບົບການປົກຄອງຢູ່ນະຄອນຊຽງທອງກໍ່ຄືອານາຈັກລາວລ້ານຊ້າງຍັງຄົງຮັກສາຮູບແບບການເດີມ; ໂດຍສະເພາະແມ່ນການສືບທອດລາຊະບັນລັງແມ່ນສືບທອດທາງສາຍເລືອດ, ຈາກພໍ່ສູ່ລູກ(ລູກຊາຍກົກ, ຖ້າວ່າບໍ່ມີລູກເອົານ້ອງຊາຍຂຶ້ນປົກຄອງແທນ)ການຈັດການປົກຄອງແມ່ນຮັກສາອໍານາດລວມສູນຊຶ່ງມີຄວາມໜັ້ນຄົງກວ່າເກົ່າເພາະມີລັກສານະເຄືອຍາດ ໂດຍການແຕ່ງຕັ້ງໃຫ້ລາຊະບຸດ(ລູດຊາຍ)ເຂົ້າຮັບຕໍາແໜ່ງສໍາຄັນ ແລະ ໄປປົກຄອງເມືອງຕ່າງໆຊຶ່ງຈະເຫັນໄດ້ໃນສະໄໝພະຍາສາມແສນໄທເຊັ່ນ:

- ແຕ່ງຕັ້ງທ້າວລ້ານຄໍາແດງໄປເປັນແສນຫຼວງ
- ແຕ່ງຕັ້ງເຈົ້າກ້ອນຄໍາໄປປົກຄອງເມືອງວຽງຜານໍ້າຮຸ່ງ-ຊຽງສາ
- ແຕ່ງຕັ້ງເຈົ້າວັງບູລີ ໄປປົກຄອງເມືອງວຽງຈັນ
- ແຕ່ງຕັ້ງເຈົ້າຄໍາເຕັມຊາ້ ໄປປົກຄອງເມືອງປາກຫ້ວຍຫຼວງ(ອໍາເພີໂພນພີໄສ ຈັ່ງຫວັດໜອງຄາຍປະເທດໄທ)
- ແຕ່ງຕັ້ງເຈົ້າລືໄຊ ໄປປົກຄອງເມືອງກະບອງ

### 1.2 ການສໍາຫຼວດພົນເສິກ ແລະ ການຈັດຕັ້ງກອງທັບ

ເມື່ເຈົ້າອຸ່ນເຮືອນຂຶ້ນຄອງລາຊະບັນລັງພະອົງໄດ້ສືບຕໍ່ພາລະກິດຂອງພະບິດາໂດຍສະເພາະເອົາໃຈໃສ່ສ້າງກອງກໍາລັງປ້ອງກັນອານາຈັກເຊິ່ງຖືກເອົາວຽກງານສໍາຫຼວດພົນເສິກເປັນວຽກງານທໍາອິດ, ຈາກການສໍາຫຼວດພົນເສິກທີ່ອານາຈັກຄັ້ງນີ້ສາມາດຮູ້ວ່າ ທີ່ອານາຈັກມີພົນລະເມືອງທີ່ເປັນຊາຍສະກັນເຖິງ 700.000 ຄົນ ໃນນັ້ນມີລາວເທີງ400.000ຄົນ ແລະ ພົນລະເມືອງທີ່ເປັນຊາວໄຕ(ກຸ່ມຄົນໄທ) 300.000ຄົນ. ດັ່ງນັ້ນປະຊາຊົນຈຶ່ງເອີ້ນ ເຈົ້າອຸ່ນເຮືອນວ່າ "ພະຍາສາມແສນໄທໄຕພູວະນາ ຖາທິປັດ ສີສັດຕະນາຄານະຫຸດ"

ໃນການຈັດຕັ້ງກອງກໍາລັງພົນພະອົງໄດ້ແບ່ງກໍາລັງອອກເປັນ 2 ກອງທັບໃຫຍ່ຄື: ກອງທັບຫຼວງ ແລະກອງທັບທ້ອງຖິ່ນ.

- ກອງທັບຫຼວງມີ 5 ຫົວເສິກເຊິ່ງມີຈໍານວນພົນທັງໝົດ 300.000ຄົນ (ຫົວເສິກໜຶ່ງມີ6ໝື່ນຄົນ) ແຕ່ລະຫົວເສິກຈະແບ່ງເປັນສາມພົນເສິກອີກເຊັ່ນ:

- ພົນເສິກສູ້ຮົບ( ພົນລໍາຫອກຫົວເສິກ) ມີ 3 ໝື່ນຄົນ
- ພົນເສິກລໍາລຽງ( ພົນຫາບເຂົ້າໄຖ່ເຂົ້າຖົງ)ມີ 2 ໝື່ນຄົນ
- ພົນເສິກແນວຫຼັງ( ພົນເຝົ້າວຽງ) ມີ 1 ໝື່ນຄົນ

- ກອງທັບທ້ອງຖິ່ນ: ເຮັດໜ້າທີ່ເປັນກອງໜູນໃຫ້ແກ່ທັບຫຼວງ, ກອງທັບນີ້ແມ່ນຮັບຄຳສັ່ງໂດຍກົງຈາກກອງທັບຫຼວງເຊິ່ງມີຫົວເມືອງຕ່າງໆເຊັ່ນ:

- ຫົວເສິກວຽງຈັນ
- ຫົວເສິກວຽງແກ
- ຫົວເສິກວຽງກະບອງ
- ຫົວເສິກເມືອງພອນ

ແລະ ຫົວເສິກເມືອງອື່ນໆອີກ.

### 1.3 ການສ້າງສຳພັນທະໄມຕີກັບອານາຈັກອ້ອມຂ້າງ

ຍ້ອນອານາຈັກລ້ານຊ້າງ ຢູ່ໃນຄວາມສະຫງົບ, ມີຄວາມເຂັ້ມແຂງ, ມີກຳລັງປ້ອງກັນແໜ້ນແກ່ນ, ທັງເປັນເຂດທີ່ອຸດົມຮັ່ງມີໄປດ້ວຍຊັບພະຍາກອນທຳມະຊາດ. ຖ້າທຽບໃສ່ອານາຈັກອື່ນໆເຫັນວ່າ ລ້ານຊ້າງມີທ່າອ່ຽງທີ່ດີກວ່າດັ່ງນັ້ນ: ການພົວພັນກັບອານາຈັກອື່ນລ້ານຊ້າງຈຶ່ງຢູ່ໃນສະຖານະສູງກວ່າ ແຕ່ເປັນການພົວພັນແບບບ້ານໃກ້ເຮືອນຄຽງທີ່ດີຕໍ່ກັນ.

**ກ. ອານາຈັກລ້ານນາ**

ຕະຫຼອດໄລຍະແຫ່ງການພົວພັນລະຫວ່າງອານາຈັກລ້ານຊ້າງແລະອານາຈັກລ້ານນາແມ່ນມີສາຍພົວພັນອັນດີນັບຕັ້ງແຕ່ສະໄໝເຈົ້າຟ້າງຸ່ມແຫ່ງລ້ານຊ້າງກັບທ້າວຜາຍູແຫ່ງລ້ານນາແບ່ງເຂດແດນກັນປະຊາຊົນທັງສອງກໍ່ຍອມຮັບຮູ້ເຂດນ້ຳແດນດິນຊຶ່ງກັນແລະກັນ ເຈົ້າແຜ່ນດິນແຫ່ງລ້ານນາຍັງຄົງຮັກສາຄຳໝັ້ນສັນຍາທີ່ມີມາແຕ່ກ່ອນຊຶ່ງຈະເຫັນໃນຊ່ວງການປົກຄອງຂອງພະຍາສາມແສນໄທ(ປີ ຄ ສ 1373-1416)ເຈົ້າຊີວິດແຫ່ງລ້ານນາໄດ້ສົ່ງເຄື່ອງບັນນາການ ແລະ ທຳການຜູກສາຍສຳພັນທະໄມຕີທາງສາຍເລືອດ ໂດຍສົ່ງນາງນ້ອຍອ່ອນສົມາເປັນມະເຫສີຂອງພະຍາສາມແສນໄທ.

**ຂ. ອານາຈັກອາຍຸດທະຍາ**

ເວລານີ້ອາຍຸດທະຍາບໍ່ມີຄວາມເປັນເອກະພາບເພາະຕົກຢູ່ໃຕ້2 ອຳນາດ ຄື: ສຸໂຂໄທ ແລະ ອາຍຸດທະຍາແຕ່ອານາຈັກອາຍຸດທະຍາກໍ່ຍັງປະຕິບັດຕາມຄຳໝັ້ນສັນຍາທີ່ມີມາແຕ່ສະໄໝເຈົ້າຟ້າງຸ່ມລ້ານຊ້າງ-ອາຍຸດທະຍາພົວພັນກັນແບບບ້ານພີ່ເມືອງນ້ອງເຊິ່ງຈະເຫັນໄດ້ໃນສະໄໝການປົກຄອງຂອງພະຍາສາມແສນໄທ ອານາາຈັກອາຍຸດທະຍາໄດ້ຈັດສົ່ງເຄື່ອງບັນນາການພ້ອມດ້ວຍນາງແກ້ວຍອດຟ້າກັນລະຍານີ ມາເປັນມະເຫສີຂອງພະຍາສາມແສນໄທ.

**ຄ. ອານາຈັກດາຍຫວຽດ**

ອານາຈັກລ້ານຊ້າງກັບດາຍຫວຽດມີຊາຍແດນຮ່ວມກັນພົວພັນກັນແບບພີ່ນ້ອງ, ຊ່ວຍເຫຼືອເຊິ່ງກັນແລະກັນຕະຫຼອດມາເຊັ່ນ: ລ້ານຊ້າງຊ່ວຍເຫຼືອດາຍຫວຽດດ້ານສະບຽງອາຫານ ແລະ ອາວຸດໃນການເຮັດສົງຄາມຕ່າງໆ. ໃນລາຊະການຂອງພະຍາລ້ານຄຳແດງ ແລະ ການພົວພັນຍັງສືບຕໍ່ມີໄມຕີທີ່ດີຕໍ່ກັນ. ຕົກມາໃນປີ ຄ ສ 1421 ເຈົ້າຊີວິດເລເລີຍໄດ້ຂໍຄວາມຊ່ວຍເຫຼືອຈາກລ້ານຊ້າງ ເພາະຖືກຮຸກຮານຈາກຈີນ(ລາຊະວົງມິງ) ພະຍາລ້ານຄຳແດງກໍ່ສົ່ງກຳລັງ 30.000ຄົນ. ຊ້າງເສິກ 100 ໂຕເຂົ້າໄປຊ່ວຍແຕ່ໃນຂະນະລ້ານຊ້າງເດີນທາງໄປນັ້ນກຸ່ມກະບົດຂອງດາຍຫວຽດໄດ້ລັດເອົາກອງທະຫານລ້ານຊ້າງມາບຸກຕີເຈົ້າຊີວິດເລເລີຍໃນທີ່ສຸດສົງຄາມຄັ້ງນີ້ເຈົ້າຊີວິດເລເລີຍກໍ່ໄດ້ຮັບໄຊຊະນະ. ດັ່ງນັ້ນລ້ານຊ້າງຈຶ່ງຖືກກ່າວຫາວ່າເປັນຜູ້ທີ່ຮ່ວມມືກັບກະບົດບຸກຕີດາຍຫວຽດ.

ສົງຄາມຄັ້ງນີ້ເຮັດໃຫ້ລ້ານຊ້າງຖືກກ່າວຫາວ່າເປັນເພື່ອທໍລະຍົດ ແຕ່ຜ່ານການສືບສວນຄວາມຈິງແມ່ນລ້ານຊ້າງບໍ່ໄດ້ເຈຕະນາ. ເຖິງຈະບໍ່ເຮັດໃຫ້ຄວາມສຳພັນລະຫວ່າງລ້ານຊ້າງກັບດາຍຫວຽດແຕກຫັກກໍ່ຕາມ ແຕ່ກໍ່ເປັນຈຸດເລີ່ມຕົ້ນຂອງຄວາມຊຸດໂຊມທາງດ້ານສາຍພົວພັນຂອງ 2 ອານາຈັກ.

## II. ອານາຈັກລາວລ້ານຊ້າງໃນລາຊະການຂອງພະເຈົ້າລ້ານຄຳແດງ

### 2.1 ການຂຶ້ນຄອງລາດຂອງພະຍາລ້ານຄຳແດງຄສ1417-1428

ເມື່ອພະເຈົ້າສາມແສນໄທສະຫວັນນາຄົດແລ້ວ, ເສນາອາມາດຈຶ່ງໄດ້ອະພິເສດທ້າວລ້ານຄຳແດງຂຶ້ນຄອງລາຊະສົມບັດແທນໃນປີຄສ 1417 ຊົງພະນາມວ່າ"ພະເຈົ້າລ້ານຄຳແດງ" ເວລານັ້ນພະອົງມີອາຍຸ 30 ປີ ຫຼັງຈາກໄດ້ຂຶ້ນຄອງລາຊະສົມບັດແລ້ວພະອົງກໍ່ໄດ້ສືບຕໍ່ຂະຫຍາຍອຳນາດການປົກຄອງໃຫ້ມີຄວາມເຂັ້ມແຂງຮອບດ້ານໂດຍສະເພາະ ແມ່ນເອົາໃຈໃສ່ເສີມຂະຫຍາຍສາສະໜາພຸດ ເຊິ່ງຖືວ່າເປັນບ່ອນເຜີຍແຜ່ວັດທະນະທຳທີ່ສຳຄັນອີກທາງໜຶ່ງ. ພ້ອມນັ້ນພະອົງໄດ້ສ້າງວັດຕ່າງໆ ເຊັ່ນ: ວັດສອນແຖນ ແລະ ເອົາກະດູກຂອງພະຍາສາມແສນໄທໄປເກັບມ້ຽນໃນທີ່ນັ້ນ.

ສະເພາະວຽກການຕ່າງປະເທດພະອົງຍັງໄດ້ສືບຕໍ່ສ້າງສາຍພົວພັນອັນດີງາມກັບບັນດາອານາຈັກອ້ອມຂ້າງ. ພິເສດການພົວພັນກັບອານາຈັກດາຍຫວຽດ, ສະແດງອອກໃນປີ ຄ ສ 1421 ອານາຈັກດາຍຫວຽດຖືກຮຸກຮານຈາກຈີນ ພະຍາລ້ານຄຳແດງກໍ່ຈຶ່ງໃຈສົ່ງກຳລັງທະຫານຂອງຕົນນຳພາໂດຍພະຍາພຸດທະວົງເຈົ້າເມືອງ ເມືອງພວນອັນມີກຳລັງເຖິງ 30.000 ຄົນ ແຕ່ຮອດສະໜາມຮົບພະຍາມພຸດທະວົງພັດນຳກຳລັງໄປສົມທົບກັບກັບຈີນຕີດາຍຫວຽດເຮັດໃຫ້ຄວາມສຳພັນຂອງລ້ານຊ້າງກັບດາຍຫວຽດທີ່ເຄີຍມີມາກ່ອນຕ້ອງພັງທະລາຍລົງ ດັ່ງນັ້ນ. ພາຍຫຼັງກອງທັບດາຍຫວຽດໄດ້ຮັບໄຊຊະນະ ແລະ ຂັບໄລ່ສັກດີນາຈີນອອກຈາກດິນແດນໄດ້ແລ້ວເຈົ້າຊີວິດດາຍຫວຽດກໍ່ໄດ້ສັ່ງໃຫ້ນາຍທະຫານຄຸມກອງທະຫານລ້ານຊ້າງທີ່ຍັງເຫຼືອກັບອານາຈັກລ້ານຊ້າງເຫດການດັ່ງກ່າວນີ້ເຖິງວ່າຈະບໍ່ມີບັນຫາຮ້າຍແຮງເກີດຂຶ້ນກໍ່ຕາມແຕ່ກໍ່ເປັນຜົນເຮັດໃຫ້ຄວາມສຳພັນລະຫວ່າງລ້ານຊ້າງ ກັບ ດາຍຫວຽດຊຸດໂຊມລົງ.

ພໍມາຮອດຄສ 1427 ເຈົ້າລ້ານຄຳແດງສິ້ນພະຊົນ, ເສນາອາມາດແລະປະຊາຊົນຈຶ່ງໄດ້ສ້າງວັດແຫ່ງໜຶ່ງຂຶ້ນຊື່ວ່າ"ວັດມະໂນລົມ" ເພື່ອເກັບກະດູກຂອງພະອົງໄວ້. ຕໍ່ຈາກນັ້ນມາອານາຈັກຊຽງທອງກໍ່ເກີດຄວາມວຸ້ນວາຍ ເນື່ອງຈາກນາງມະຫາເທວີ ນ້ອງສາວຂອງພະເຈົ້າສາມແສນໄທຕ້ອງການຢາກໃຫ້ສາມີຂອງຕົນເປັນຜູ້ມີອຳນາດ ແລະ ເປັນເຈົ້າແຜ່ນດິນໃນນະຄອນຊຽງທອງ.

### 2.2 ສາຍເຫດຄວາມວຸ້ນວາຍໃນນະຄອນຊຽງທອງ ຄ ສ 1428-1438

ພາຍຫຼັງການສິ້ນພະຊົນຂອງພະເຈົ້າລ້ານຄຳແດງ ອຳນາດການປົກຄອງໃນນະຄອນຊຽງທອງກໍ່ຕົກຢູ່ໃນກຳມືຂອງມະຫາເທວີແກ້ວພິມພາ ເຊິ່ງເປັນນ້ອງສາວຂອງພະຍາສາມແສນໄທທີ່ເຄີຍໄດ້ຮັບຄວາມເຄົາລົບນັບຖືຈາກປະຊາຊົນ ແລະ ມີອຳນາດສູງສຸດໃນອານາຈັກຊຽງທອງ. ໃນເວລາດຽວກັນນັ້ນ ນາງ ໄດ້ມີຄວາມສະໜິດສະໜົມກັບອ້າຍຜາວຽງ ເປັນແສນຫຼວງຊຽງລໍເຊິ່ງມີຕຳແໜ່ງສູງສຸດ, ມີອຳນາດບັງຄັບບັນຊາຝ່າຍທະຫານ ແລະ ພົນລະເຮືອນ ຕໍ່ຈາກນັ້ນນາງກໍ່ໄດ້ວາງແຜນໃຫ້ຜົວຂອງນາງຄ່ອຍໆຂຶ້ນເປັນຜູ້ສຳເລັດລາຊະການແຜ່ນດິນ. ຍ້ອນແຜນດັ່ງກ່າວນັ້ນຈຶ່ງໄດເຮັດໃຫ້ເຈົ້າລ້ານຄຳແດງ ເຈົ້າຊີວິດຜູ້ໜຸ່ມນ້ອຍ ກາຍເປັນເຈົ້າຊີວິດທີ່ເຄາະຮ້າຍ ໂດຍແມ່ນ ນາງມະຫາເທວີຫຼອກລວງໄປຂ້າຄືກັນກັບກະສັດອົງອື່ນໆເຮົາຈະເຫັນໃນໄລຍະ7 ປີ ແຕ່ປີ ຄ ສ 1428-1435 ໄດ້ມີກະສັດເຖິງ 6ພະອົງໄດ້ຖືກ ນາງມະຫາເທວີຫຼອກໄປຂ້າລາຍລະອຽດດັ່ງນີ້:

- ປີ ຄ ສ 1428-1429 ພະຍາພົມມະທັດໂອລົດຂອງພະເຈົ້າລ້ານຄຳແດງສະເຫວີຍລາດໄດ້ 10 ເດືອນກໍ່ຖືກຫຼອກໄປຂ້າຢູ່ຜາດ່ຽວ
- ປີ ຄ ສ 1430 ທ້າວຄຳເຕັມຊ້າ ຫຼື ພະຍາປາກຫວຍຫຼວງສະເຫວີຍລາດໄດ້ 5ເດືອນຖືກປ້ອງຂ້າຈຶ່ງລັກໜີໄປຢູ່ປາກຫ້ວຍຫຼວງໄດ້ 1 ປີ ກໍ່ເສຍຊີວິດ
- ປີ ຄ ສ 1430 ທ້າວໝື່ໄຊ ໂອລົດຂອງພະເຈົ້າສາມແສນໄທຂຶ້ນສະເຫວີຍລາດໄດ້ 6ເດືອນເມື່ອຮູ້ຕົນຖືກປອງຮາຍຈຶ່ງຫຼົບໜີມາວຽງຈັນ ແລະ ປະຕິເສດບໍ່ກັບຄືນເມືອງຊຽງທອງ

- ປີ ຄ ສ 1431-1434ພະຍາຟ້າໄຄ ໂອລົດຂອງພະຍາຟ້າຄົ້ນຂຶ້ນສະເຫວີຍລາດໄດ້ 3 ປີ ຖືກຂ້າຕາຍຢູ່ຜາດ່ຽວ
- ປີ ຄ ສ 1435 ທ້າວຄຳກ້ອນ(ພະຍາຊຽງສາ)ປົກຄອງເມືອງໄດ້ 7 ເດືອນກໍ່ຖືກອຸບາຍໄປຂ້າຢູ່ຄົກເຮືອ
- ປີ ຄ ສ 1436 ພະຍາບຸຄົນ(ຍຸຄອນ)ໂອລົດຂອງພະຍາລ້ານຄຳແດງສະເຫວີຍລາດໄດ້8ເດືອນ (ຖືກຂ້າຢູ່ທີ່ຄົກເຮືອ)

ຈາກນັ້ນກໍ່ໄດ້ເຊື້ອເຊີນເອົາທ້າວວັງບູລີ ລູກຊາຍຂອງພະຍາສາມແສນໄທ ທີ່ປົກຄອງຢູ່ວຽງຈັນຂຶ້ນມາເປັນເຈົ້າຊີວິດ ລາວລ້ານຊ້າງ ແຕ່ທ້າວ ວັງບູລີ ໄດ້ຮູ້ຄວາມໂຫດຮ້າຍປ່າເຖື່ອນຂອງນາງມະຫາເທວີ ທ້າວວັງບູລີຈຶ່ງໄດ້ປະຕິເສດຄຳເຊື້ອເຊີນດັ່ງກ່າວ. ຕໍ່ມາຈຶ່ງມີທ້າວ ຄຳເກີດ ທີ່ອ້າງວ່າຕົນແມ່ນພະຍາສາມແສນໄທ ມາເກີດ ເພາະທ້າວຄຳເກີດຈົດຈຳທຸກເຫດການ ຕະຫຼອດຮອດຄົນໃຊ້ໃນພາລະຊະວັງ ກໍ່ຈົດຈຳໄດ້ຫມົດ ດັ່ງນັ້ນ ນາງມະຫາເທວີ ຈຶ່ງໄດ້ເຊື້ອເຊີນເອົາທ້າວຄຳເກີດ ຂຶ້ນເປັນເຈົ້າຊີວິດ ແຕ່ຂຶ້ນໄດ້ 2 ປີ ກໍ່ໄດ້ເສຍຊີວິດ ເຮັດໃຫ້ອຳນາດທັງໝົດໃນອານາຈັກຊຽງທອງ ຕົກຢູ່ໃຕ້ອິດທິພົນຂອງນາງມະຫາເທວີຜູ້ໃຈບາບ ພ້ອມນັ້ນນາງກໍ່ພະຍາຍາມກຳຈັດເສນາມຸນຕີ ພະສົງອົງຄະເຈົ້າຕະຫຼອດຮອດປະຊາຊົນ ທີ່ທຳການຂັດຂວາງຈົນເກີດການອົບພະຍົບອອກຈາກນະຄອນຊຽງທອງ ເປັນຈຳນວນຫຼວງຫຼາຍ ໃນເວລານີ້ມີກຸ່ມເຈົ້າຊາຍ ຄື ນໍລະສິງ , ນໍຣະເດດ, ນໍຣະສາດ ແລະ ນໍຣະລາຍ ພ້ອມດ້ວຍພະສົງອົງຄະເຈົ້າ, ໄດ້ພ້ອມກັນເຕົ້າໂຮມກຳລັງ ເພື່ອຊອກຫາວິທີກຳຈັດນາງ ມະຫາເທວີ ແລະ ພັກພວກທີ່ທຳຕົວເປັນກາລະກິນີຕໍ່ສັງຄົມໃຫ້ສິ້ນໄປ.

ພໍຕົກມາຮອດປີ ຄ.ສ 1438 ກຸ່ມນັກປາດທັງ 4 ໄດ້ເຕົ້າໂຮມກຳລັງ ເຂົ້າບຸກປິດລ້ອມພະລາຊະວັງແລ້ວຈັບເອົານາງ ມະຫາເທວີ ແລະ ແສນຫຼວງຊຽງລໍ ໄປປະຫານຊີວິດທີ່ກ້ອງຜາດ່ຽວ (ຢູ່ກາງນ້ຳຂອງກົງກັນຂ້າມກັບຊຽງທອງ) ຫຼັງຈາກນັ້ນເຮັດໃຫ້ຊຽງທອງ ຫວ່າງເປົ່າບໍ່ມີກະສັດປົກຄອງ ເຖິງ 3 ປີ ດັ່ງນັ້ນປະຊາຊົນ ແລະ ເສນາມຸນຕີທັງຫຼາຍໄດ້ໄປເຊື້ອເຊີນເອົາເຈົ້າວັງບູລີ (ລູກຊາຍຄົນທີ 4 ຂອງພະເຈົ້າສາມແສນໄທ) ຜູ້ປົກຄອງເມືອງວຽງຈັນຂຶ້ນມາເປັນເຈົ້າຊີວິດລ້ານຊ້າງໃນ ປີ ຄ.ສ 1441 ແລະ ໃສ່ຊື່ວ່າ "ພະຍາໄຊຍະ ຈັກກະພັດແຜ່ນແຜ້ວ"

### 2.3 ການກຳຈັດຄວາມວຸ້ນວາຍ

ເຫດການປັ່ນປ່ວນຂອງກຸ່ມກະບົດໄດ້ແກ່ຍາວ ເປັນເວລາປະມານ 10 ປີ (ປີຄ.ສ 1428 ຫາ1438) ແຕ່ບັນດາຂຸນນາງ ແລະ ເສນາອາມາດ ຫຼາຍຄົນກໍ່ບໍ່ກ້າທີ່ຈະຕໍ່ຕ້ານ ອິດທິພົນດັ່ງກ່າວເຖິງຢ່າງໃດກໍ່ຕາມ ຍັງມີກຸ່ມນັກປາດທັງ 4 ຄື: ນໍຣະສິງ, ນໍຣະເດດ, ນໍຣະຣາດ, ນໍຣະຣາຍ. ໄດ້ຂົນຂວາຍມະຫາຊົນ ແລະ ເສນາມູນຕີຜູ້ກ້າວໜ້າ , ຜູ້ທີ່ຕໍ່ຕ້ານການກະທຳຂອງກຸ່ມນາງ ມະຫາເທວີ ໂດຍໄດ້ຮັບການປຶກສາຈາກພະສົງ.

ກຸ່ມນັກປາດໄດ້ນຳພາປະຊາຊົນບຸກເຂົ້າພະລາຊະວັງຈັບເອົາ ນາງມະຫາເທວີ, ອ້າຍວຽງຜາ ແລະ ພັກພວກໄປລົງໂທດສະເພາະ ນາງມະຫາເທວີ ແລະ ອ້າຍວຽງຜາ ໄດ້ຖືກຈັບມັດທໍລະມານ ດ້ວຍການບັງຄັບ ໃຫ້ນອນຫົວມູນຫີນ ຕີນຈຸ່ມນ້ຳ ຈົນຂາດໃຈຕາຍຢູ່ກາງນ້ຳຂອງ ແລະ ຕໍໜ້າທ່າວັດວຽງທອງ.

## III. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ຄສ 1441-1479

### 3.1 ການຂຶ້ນຄອງລາຊະບັນລັງຂອງເຈົ້າໄຊຍະຈັກກະພັດແຜ່ນແຜ້ວ

ພະເຈົ້າຈັກກະພັດແຜ່ນແຜ້ວ ເປັນໂອລົດຂອງພະເຈົ້າສາມແສນໄທ ທີ່ມີກັບມະເຫສີນາງແກ້ວຍອດຟ້າ (ລາຊະທິດາແຫ່ງກຸງສີອາຍຸດທະຍາ) ພະອົງປະສູດໃນປີມະແມຈຸລະສັກກະລາດ 777 (ຄ.ສ 1415) ໄດ້ຂຶ້ນປົກຄອງເມືອງໃນປີ ຄ.ສ 1441 ພະອົງຊົງພະນາມວ່າ "ສົມເດັດເຈົ້າ ໄຊຍະ ຈັກກະພັດແຜ່ນແຜ້ວ" ເມື່ອສະເດັດຂຶ້ນຄອງລາຊະບັນລັງແລ້ວ ພະອົງສະຖາປະນາພະລາ ຊະຄູມະຫາສະໝຸດ ທະໂຄດຂຶ້ນເປັນພະທຳມະເສນາສະຖິດ ຢູ່

ວັງມະໂນລົມ. ໃຫ້ພະມະຫາຍາຍຄຳພີ ເປັນພະສົງຄະເສນາສະຖິດ ຢູ່ວັງໂບດກາງເມືອງ ຍ້ອນທັງພະລາຊະທານ ອະໄພຍະໂທດໃຫ້ແກ່ພູ້ກະທຳຜິດ ພະລາຊະອາຍາ ເຊິ່ງໄດ້ເຂົ້າມາອາໄສຢູ່ໃນວັດ ທັງສອງທີ່ພະລາຊະບິດາ ໄດ້ຊົງປະທານມາແຕ່ກ່ອນ.

ໃນຂະນະທີ່ພະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ສະເດັດຂຶ້ນປົກຄອງຢູ່ຊຽງທອງ ວຽງຈັ້ນໄດ້ມອບໃຫ້ເຈົ້າຊາຍມຸ່ຍເປັນຜູ້ປົກຄອງແທນເວລານັ້ນ ເສນາໃຫຍ່ຝ່າຍວຽງຈັນເຫັນວ່າເຫດການທາງການເມືອງຊຽງທອງຄົງຈະບໍ່ມີຄວາມສະຫງົບສຸກ ຈຶ່ງຍົວະເຍົາໃຫ້ເຈົ້າຊາຍມຸ່ຍໃຫ້ແຍກວຽງຈັນອອກເປັນເອກະລາດ ໜຶ່ງຕ່າງຫາກ ໂດຍກຳນົດເອົາຕາດນ້ຳລົງໄປ (ເຫັນຈະແມ່ນແກ້ງຈັນ) ເມື່ອເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ໄດ້ຊາບຂ່າວນີ້ ຈຶ່ງແຕ່ງຕັ້ງໃຫ້ພວກມະຫາດເລັກປອມຕົວລົງຈັບເຈົ້າຊາຍມຸ່ຍໄປປະຫານຊີວິດທີ່ດອນຈັນ ແລ້ວໃຫ້ຫລານຊາຍຂອງພະອົງຊື່ວ່າ "ພະຍາຈັນທາງອກ" ໃຫ້ເປັນເຈົ້າຄອງນະຄອນວຽງຈັນ.

ສົມເດັດພະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ມີລາຊະໂອລົດ 6 ພະອົງແຕ່ລະພະອົງກໍ່ໄດ້ແຕ່ງຕັ້ງໄປປົກຄອງຫົວເມືອງຕ່າງໆດັ່ງນີ້:

1. ທ້າວກ້ອນແກ້ວ ແຕ່ງຕັ້ງເປັນແສນຫຼວງຊຽງລໍ, ຕຳແໜ່ງມະຫາອຸປະລາດ
2. ທ້າວແທ່ນຄຳ ແຕ່ງຕັ້ງໄປປົກຄອງເມືອງດ້ານຊ້າຍ
3. ທ້າວໝື່ນຫຼວງ ໄດ້ແຕ່ງຕັ້ງໄປປົກຄອງເມືອງກະບອງ
4. ທ້າວຫຼ້າແສນໄຕ ແຕ່ງຕັ້ງໃຫ້ໄປປົກຄອງເມືອງວຽງຄຳ
5. ທ້າວວິຊຸນນະລາດ ແຕ່ງຕັ້ງໃຫ້ໄປປົກຄອງເມືອງວຽງແກ.
6. ທ້າວເທພາ ແຕ່ງຕັ້ງໃຫ້ໄປປົກຄອງເມືອງຂວາ.

### 3.2 ສົງຄາມລ້ານຊ້າງດາຍຫວຽດ

#### ກ. ສາເຫດຂອງສົງຄາມ

**ສາເຫດພື້ນຖານ:**ສົງຄາມລະຫວ່າງລ້ານຊ້າງກັກບດາຍຫວຽດເກີດຂຶ້ນໃນປີ ຄ.ສ 1479 ນັ້ນມີສາເຫດເນື່ອງມາຈາກສະໄໝການປົກຄອງຂອງພະຍາລ້ານຄຳແດງ ແຫ່ງອານາຈັກລ້ານຊ້າງ ໄດ້ສົ່ງກອງທະຫານລາວ 30.000 ຄົນ, ຊ້າງ 100 ໂຕ ໄປຊ່ວຍດາຍຫວຽດເພື່ອຕີກັບສັກດີນາຈີນ ແຕ່ກອງທະຫານລ້ານຊ້າງຖືກລໍ້ອັນລອດ (ສັກດີນາຫວຽດນາມ) ມີຄວາມເຂັ້ມແຂງກັບພະເຈົ້າເລເລີຍ ແລະ ເປັນໄສ້ເສິກຂອງກະສັດສັກດີນາຈີນ(ມິງ) ດຳເນີນການຫຼອກລວງໃຫ້ກອງທະຫານລາວລ້ານຊ້າງ ໄປເຂົ້າຊ້າງກັບຝ່າຍຕົນອັນເປັນອຸບາຍໜຶ່ງເຮັດໃຫ້ສາຍພົວພັນດາຍຫວຽດ-ລ້ານຊ້າງ ເຄັ່ງຕຶງ ແລະ ແຕກຫັກ.

**ສາເຫດຕົ້ນຕໍ:** ເນື່ອງຈາກວ່າເຈົ້າໄຊຍະຈັກກະພັດແຜ່ນແຜ້ວປະຕິເສດຕໍ່ການຮ້ອງຂໍກຳລັງຂອງເລແທັງຕົງ ໃນການປາບປາມ ແລະ ຍຶດເອົາອານາຈັກຈາມປາທີ່ຕັ້ງຢູ່ທາງພາກໃຕ້ຂອງຫວຽດນາມ. ເຫດການນີ້ເກີດຂຶ້ນໃນປີ ຄ ສ 1460ເລແທັງຕົງກະສັດແຫ່ງຫວຽດນາມໄດ້ດຳເນີນສົງຄາມເພື່ອປາບປາມ ແລະ ຂ້າລ້າງເຜົ່າພັນຊາວຈາມບໍ່ໃຫ້ມີໂອກາດຕັ້ງຕົນເປັນເອກະລາດ ເລແທັງຕົງຈຶ່ງມາຂໍກຳລັງຈາກລ້ານຊ້າງ ແຕ່ຖືກປະຕິເສດເພາະວ່າ ເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ຄິດວ່າການຂໍກຳລັງຄັ້ງນີ້ບໍ່ແມ່ນເພື່ອປ້ອງກັນອານາຈັກແຕ່ເປັນການຮຸກຮານອານາຈັກອື່ນຈຶ່ງປະຕິເສດ

***ອີກຢ່າງໜຶ່ງກໍ່ຍ້ອນການໃຫ້ຄວາມເຫຼືອແກ່ຊາວຈາມທີ່ເຂົ້າມາລີ້ໄພໃນອານາຈັກລ້ານຊ້າງ***

**ສາເຫດໂດຍກົງ:** ຍ້ອນຄວາມຕັ້ງການຂະຫຍາຍອານາເຂດຮຸກຮານເອົາຊາດອື່ນຂອງສັກດີນາດາຍຫວຽດຄື: ໃນລາຊະການຂອງເລແທັງຕຣົງອານາຈັກດາຍຫວຽດມີຄວາມເຂັ້ມແຂງຮອບດ້ານສະນັ້ນຈຶ່ງຕ້ອງການຂະຫຍາຍອານາເຂດໃຫ້ກວ້າງອອກເພື່ອເກັບພາສີ, ເກັບບັນນາການ ແລະ ເກນກຳລັງເປັນກຳລັງໜູນເປົ້າໝາຍທຳອິດແມ່ນບັນດາລັດທີ່ຢູ່ໃກ້ຄຽງເຊັ່ນ: ຈາມປາ, ລ້ານຊ້າງ....

**ຂ. ຂໍ້ອ້າງໃນການເຮັດສົງຄາມຂອງດາຍຫວຽດ**

**ບັນຫາຂີ້ຊ້າງ:**ໃນຊຸມ ປີ 1476 ພະຍາປະຕາລິບຸດ ເຈົ້າເມືອງ ແກ່ນທ້າວຄ້ອງຊ້າງເຜືອກໄດ້ 1 ໂຕ ສູງ 7 ສອກ ພໍມາຖວາຍໃຫ້ພະເຈົ້າ ໄຊຍະຈັກກະພັດແຜ່ນແຜ້ວ ຂ່າວນີ້ຮູ້ໄປເຖິງເຈົ້າຊີວິດແຫ່ງດາຍຫວຽດ ແລະ ເຈົ້າຊີວິດແຫ່ງດາຍຫວຽດສົ່ງທູດ ມາຂໍຂົນຊ້າງ, ເລັບຊ້າງເຜືອກໄປເບິ່ງ, ແຕ່ບໍ່ຮູ້ດ້ວຍເຫດຜົນໃດ, ແສນຫຼວງຊຽງລໍໄດ້ເອົາຂີ້ຊ້າງໃສ່ແທນ ເຮັດໃຫ້ເຈົ້າແຜ່ນດິນແຫ່ງດາຍຫວຽດໂກດແຄ້ນວ່າເປັນການດູໝິ່ນກຽດສັກສີ ແລະ ເປັນຂໍ້ອ້າງໃນການບຸກໂຈມຕີ ເຂົ້າອານາຈັກລ້ານຊ້າງ ແຕ່ສາເຫດຕົ້ນຕໍແມ່ນພະເຈົ້າເລແທັງຕົງຕ້ອງການຂະຫຍາຍດິນແດນ ແລະ ຢາກມີອິດທິພົນເໜືອອານາຈັກອື່ນໆ ດັ່ງນັ້ນ, ມາຮອດວັນທີ 23 ສິງຫາ ຄ.ສ 1479 ເລແທັງຕົງ ໄດ້ສັ່ງໃຫ້ບັນດາແມ່ທັບກ້າຫານຂອງດາຍຫວຽດໃຫ້ກະກຽມກອງທັບເຂົ້າຕີອານາຈັກລາວລ້ານຊ້າງຢູ່ທາງທິດຕາເວັນຕົກຂອງອານາມ ເມື່ອກອງທັບຫຼວງໄດ້ເຄື່ອນທີ່ເຂົ້າມາຕັ້ງຢູ່ຊາຍແດນລາວແລ້ວໄດ້ແບ່ງກຳລັງຫຼວງ ອອກເປັນ 5 ທັບໃຫຍ່ເພື່ອບຸກເຂົ້າລ້ານຊ້າງພ້ອມໆກັນແບບສາຍຟ້າແມບ.

- ປີກທີ1: ອອກຈາກເຈົ້າຖວນມອຍ(ເຊີນລາ)ບຸກຕີເຂົ້າເມືອງຂວາ ມີຈຳນວນ30.000ຄົນ. ນຳພາໂດຍເລລອງ(ຊຸນພົນຖຸກກົງ)
- ປີກທີ2: ອອກຈາກແທງຮວາບຸກເຂົ້າຊ້ຳເໜືອມີຈຳນວນພົນ 60.000ຄົນ ນຳພາໂດຍຊຸນພົນຈິ່ງກົງໂລ(ຊຸນພົນກາງກົງ)
- ປີກທີ3: ອອກຈາກເງ້ອານບຸກເຂົ້າທາງຜານ້ຳຮຸ່ງ-ຊຽງສາ ມີຈຳນວນພົນ30.000ຄົນ ນຳພາໂດຍເຈີນຍີເຕືອງ(ຊຸນພົນກົງກາງ)
- ປີກທີ4: ອອກຈາກງອກມ້າບຸກເຂົ້າວຽງກະບອງ ມີຈຳນວນພົນ30.000ຄົນ ນຳພາໂດຍເລດິນງານ(ຊຸນພົນກົງພູແສດ)
- ປີກທີ5: ອອກຈາກເງ້ອານ ບຸກເຂົ້າເມືອງພວນ, ມຸ້ງໜ້າສູ່ນະຄອນຊຽງທອງມີກຳລັງພົນ50.000ຄົນ ນຳພາໂດຍໂລຖໍອິກຊຸນພົນໄຕໜີງ

**ຄ. ການກະກຽມກຳລັງຂອງລ້ານຊ້າງ**

ຕໍ່ໜ້າເຫດການນັ້ນຝ່າຍເຈົ້າໄຊຍະຈັກກະພັດແຜ່ນແຜ້ວເຈົ້າແຜ່ນດິນລ້ານຊ້າງເຊິ່ງໄດ້ຕິດຕາມສະພາບການນັ້ນຈຶ່ງໄດ້ຮຽກປະຊຸມເສນາອາມາດໂດຍດ່ວນເພື່ອປຶກສາຫາລື ແລະ ວາງແຜນກະກຽມການປ້ອງກັນຊາດ ໂດຍມອບໃຫ້ພະຍາແສນຫຼວງຊຽງລໍເປັນຜູ້ມີອຳນາດສູງສຸດໃນການກະກຽມກຳລັງ ແລະ ວາງແຜນຕໍ່ຕ້ານກັບກອງທັບດາຍຫວຽດໂດຍຜ່ານກອງປະຊຸມກະກຽມການປ້ອງກັນຊາດໄດ້ເປັນເອກະພາບກັນດັ່ງນີ້:

- ໃຊ້ຍຸດທະວິທີເສິກແບບບ້ານຮ້າງເຮືອນເປົ່າແລະໃຊ້ສົງຄາມແບບກອງຫຼອນຄືເຮັດໃຫ້ນະຄອນຊຽງທອງເປັນເມືອງເປີດໝາຍວ່າບໍ່ໃຫ້ມີປະຊາກອນອາໄສຢູ່ແລະມີການຂົນຍ້າຍຄອບຄົວປະຊາຊົນແລະລາຊະຕະກຸນໄປໄວ້ເມືອງຊຽງຄານມີການຈັດຕັ້ງກຳລັງປະຊາຊົນເປັນກຳລັງສູ້ຮົບແບບກອງຫຼອນ.
- ໃຊ້ວິທີແບບປະຈັນບານ ໂດຍແຕ່ງຕັ້ງກອງທັບຫຼວງມີໜ້າທີ່ປະຈັນບານກັບກອງທັບຂ້າເສິກໂດຍກົງບັນຊາໂດຍພະຍາແສນຫຼວງຊຽງລໍ
- ໃຊ້ຍຸດທະວິທີຫຼອກລໍ້ສັດຕູຄື: ໃຊ້ວິທີແບບຕີຖອນເພື່ອໃຫ້ສັດຕູຕາມມາແລ້ວນາກອງທະຫານທີ່ດັກໄວ້ອອກມາສະກັດລັດຕີ, ຜູ້ມີໜ້າທີ່ໃນການບັນຊາການນີ້ແມ່ນເຈົ້າແທ່ນຄຳ
- ນອກຈາກນີ້ຍັງແຕ່ງຕັ້ງແມ່ທັບ4ຄົນໃຫ້ມີໜ້າທີ່ນຳກອງທັບມາສົມທົບກັນໃນນະຄອນຊຽງທອງ

### ໆ. ບັ້ນຮົບທີ່ສຳຄັ້ນ

- **ບັ້ນຮົບທີ1:**

ເມື່ອຊາບຂ່າວວ່າກອງທັບດາຍຫວຽດຍົກທັບມາທາງເມືອງພວນ ແລະ ມາຕັ້ງທັບຢູ່ຕີນພູມຸງທັງສອງພາກ ຕາເວັນອອກ ກອງທັບລາວ50.000ຄົນ ແລະ ມ້າ4000ໂຕໃຕ້ການບັນຊາຂອງຂຸນພົນທັງ4ຄື: ນໍຣະສິງ, ນໍຣະເດດ , ນໍຣະລາຍ,ແລະ ນໍຣະລາດທັງສອງຝ່າຍໄດ້ສູ້ຮົບກັນຕະຫຼອດ3ມື້3ຄືນຝ່າຍລາວບໍ່ສາມາດຂັບໄລ່ກອງທະຫານຂອງ ດາຍຫວຽດ(ໄຕໜິງ) ເຖິງແມ່ນວ່າພວກຂ້າເສິກຈະຖືກລົ້ມຕາຍເປັນຈຳນວນຫຼວງຫຼາຍກໍ່ຕາມແຕ່ກໍ່ມີກຳລັງໜຸນເຂົ້າ ມາເລື້ອຍໆກອງກຳລັງພົນຝ່າຍລາວກໍ່ບົກບາງລົງນາຍທະຫານເອກທັງ4ຄື: ນໍຣະສິງ, ນໍຣະເດດ, ນໍຣະລາຍ,ແລະ ນໍຣະລາດ ,ມີຄວາມອິດເມື່ອຍຈົນບໍ່ສາມາດຍົກດາບຟັນໄດ້. ດັ່ງນັ້ນ ກອງທັບໝື່ນຫຼ້າຈຶ່ງຖອຍເຂົ້າມາລວມກັບ ກອງທັບໃຫຍ່ຂອງພະຍາແສນຫຼວງຊຽງລໍຢູ່ທົ່ງນາເຂົ້າຈ້າວ. ສ່ວນແມ່ທັບໃຫຍ່ໄຕໜິງໄດ້ຕັ້ງໝັ້ນຢູ່ຕີນພູມຸງຕິດຕາມ ສະພາບການ.

- **ບັ້ນຮົບທີ2:**

ພໍຮອດມື້ໃໝ່ກອງທັບດາຍຫວຽດກໍ່ຍົກພົນເຂົ້າມາພະຍາແສນຫຼວງຊຽງລໍໄດ້ຈັດຕັ້ງກອງທັບລາວເຂົ້າສູ້ຮົບ ພາຍໃຕ້ການບັນຊາຂອງພະຍາໝື່ນຫຼວງ, ໝື່ນບຸນ ປະກອບດ້ວຍຈຳນວນພົນເສິກ 80.000ຄົນ, ຊ້າງ 800ໂຕ, ອອກມາສະກັດລັດຕີຢູ່ພູຜາຜຶ້ງ. ສ່ວນທະຫານເອກທັງ 4 ກໍ່ນຳກຳລັງເຖິງ 50.000ຄົນ, ມ້າເສິກ 400ໂຕ ໄປລັດຕີ ທະຫານດາຍຫວຽດຢູ່ທົ່ງນາເຂົ້າຈ້າວບໍລິເວນວັດວິຊຸນຣະຣາດ (ເມືອງຫຼວງພະບາງໃນປັດຈຸບັນ) ສ່ວນພະຍາແສນ ຫຼວງຊຽງລໍຄຸມພົນເສິກ 40.000ຄົນ, ຊ້າງເສິກ 400ໂຕຕັ້ງກຳລັງຢູ່ນາໄຮ່ດຽວ. ກອງທັບລາວທັງສາມໄດ້ຕີຕ້ານ ກອງກຳລັງຂອງດາຍຫວຽດຢ່າງດຸເດືອດ, ທະຫານດາຍຫວຽດຖືກຂ້າຕາຍຫຼາຍເທົ່າໃດກໍ່ຍິ່ງຫຼັ່ງໄຫຼເຂົ້າມາຫຼາຍກວ່າ ເກົ່າ. ໃນເວລາຕໍ່ສູ້ຢ່າງດຸເດືອດ ທະຫານດາຍຫວຽດທັງ 4 ຄື: ນາຍດຶກກອງ, ນາຍອົງໄສ, ນາຍອົງກອນ ແລະ ອົງ ເປົ້ງ ໄດ້ໃຊ້ຊ້າງທັງ 4 ເຂົ້າຫຸ້ມລ້ອມພະຍາຂວາເທພາຫຼວງໝື່ນ ແລະ ໝື່ນບຸນກໍ່ຮີບໃຊ້ຊ້າງເຂົ້າໄປຊ່ວຍໄດ້ເອົາຫອກ ແທງທະຫານດາຍຫວຽດທັງສີ່ຕາຍຄາຄໍຊ້າງພ້ອມນັ້ນກໍ່ມີທະຫານດາຍຫວຽດ 6 ຄົນຂີ່ຊ້າງຄົນລະໂຕເຂົ້າໄປຊົນຊ້າງ ພະຍາຂວາເທພາພະຍາຂວາເທພາໄດ້ໃຊ້ງ້າວຟັນທະຫານດາຍຫຽວດທັງ 6 ຕາຍລົງອີກ ແຕ່ພະຍາຂວາເທພາກໍ່ອິດ ອ່ອນໂຮຍແຮງແລ້ວຕົກຈາກຫຼັງຊ້າງເຮັດໃຫ້ຖືກທະຫານດາຍຫວຽດຫຸ້ມຈັບແລ້ວຖືກແທງຕາຍຈາກນັ້ນພົນເສິກ ລາວກໍ່ບົກບາງ ສ່ວນດາຍຫວຽດ ກໍ່ຍັງໜຸນໜີບເຂົ້າມາເລື້ອຍໆຈົນຜ່າສະໜາມຮົບເຂົ້າໄປເຖິງບ່ອນແສນຫຼວງຊຽງລໍ ຕັ້ງທັບຢູ່.

- **ບັ້ນຮົບທີ3:**

ແມ່ທັບໄຕໜິງໄດ້ຄຸມກຳລັງທັບດາຍຫວຽດທັງໝົດເຂົ້າຮອດກອງທັບຂອງພະຍາແສນຫຼວງຊຽງລໍຕໍ່ໜ້າ ສະພາບການດັ່ງກ່າວນັ້ນແສນຫຼວງຊຽງລໍພ້ອມດ້ວຍໝື່ນບຸນ, ໝື່ນຫຼວງ, ນໍຣະສິງ, ນໍຣະເດດ, ນໍຣະລາດ, ນໍຣະ ລາຍໄດ້ພ້ອມກັນຕໍ່ສູ້ຢ່າງທໍລະຫົດອົດທົນແມ່ທັບໃຫຍ່ໄຕໜິງຖືກແສນຫຼວງຊຽງລໍແທງຕາຍຄາຫຼັງຊ້າງ, ເຈົ້າແສນ ຫຼວງຊຽງລໍກໍ່ຖືກບາດເຈັບສາຫັດ. ຮອງແມ່ທັບປົວຂວາງຂຸນ ໄດ້ເຮັດໜ້າທີ່ແທນແມ່ທັບໄຕໜິງ. ສ່ວນໝື່ນຫຼວງ ແລະ ໝື່ນບຸນຂີ່ຊ້າງໄລ່ແທງທະຫານດາຍຫວຽດຕາຍຫຼາຍຄົນ ໃນທີ່ສຸດຕົນເອງກໍ່ໝົດແຮງຈຶ່ງຕົກຫຼັງຊ້າງແລ້ວຖືກ ແທງຕາຍກັບສະໜາມຮົບສ່ວນນາຍທະຫານເອກທັງ4 ນໍຣະສິງ, ນໍຣະເດດ, ນໍຣະລາດ, ນໍຣະລາຍ ໄດ້ຕໍ່ສູ້ຄຸ້ມກັນ ແສນຫຼວງຊຽງລໍເພື່ອເຂົ້າສູ່ນະຄອນຊຽງທອງ.

ຝ່າຍເຈົ້າໄຊຍະຈັກກະພັດແຜ່ນແຜ້ວເມື່ອເຫັນວ່າກອງທັບລາວຖືກຕີແຫຍ້ເຂົ້າມາເຖິງຊຽງທອງແລ້ວຈຶ່ງພາ ເອົາຄອບຄົວລົງໄປລີ້ໄພຢູ່ເມືອງຊຽງຄານ. ສ່ວນທະຫານລາວທຸກກອງເມື່ອຖືກຕີເຂົ້າເຂດຊຽງທອງກໍ່ລົງເຮືອຂ້າມ ແມ່ນ້ຳຂອງຢູ່ທາງພາກຕາເວັນຕົກ ສ່ວນເຈົ້າແສນຫຼວງຊຽງລໍ ທີ່ຖືກບາດເຈັບຢູ່ແລ້ວບໍ່ສາມາດລໍນ້ຳໄດ້ຈຶ່ງຈົມນ້ຳຕາຍ ຢູ່ທີ່ນັ້ນເອງທະຫານເອກທັງ4 ພາຍຫຼັງໄດ້ຕໍ່ສູ້ກັບທະຫານດາຍຫວຽດຢ່າງອົງອາດກ້າຫານຈົນອິດເມື່ອບໍ່ສາດຈະເອົາ ຕົວໜີໄດ້ຈຶ່ງຖືກທະຫານດາຍຫວຽດຈັບໄດ້ແລ້ວໄປສຽບໃສ່ປາຍແຫຼມຢູ່ທົ່ງນາເຂົ້າຈ້າວ ສ່ວນໝື່ນຫຼວງ,ໝື່ນບໍ່ຖືກ

ທະຫານດາຍຫວຽດຈັບໄປທໍລະມານ ແລະ ເສຍຊີວິດ. ສໍາລັບຮອງແມ່ທັບບົວຂວາງຊຸນແຫ່ງດາຍຫວຽດ ທີ່ທໍາໜ້າທີ່ແທນແມ່ນທັບໄຕໜິງ ແລະ ແມ່ທັບເນີກອີງ, ແມ່ທັບດຶກທ່າ, ແມ່ທັບອີງອ່າງ ແລະ ແມ່ທັບບົວລາວ ກໍ່ໄດ້ເຄື່ອນພົນເສີກເຂົ້າສູ່ຊຽງທອງ ຕໍ່ຈາກນັ້ນແມ່ທັບດາຍຫວຽດກໍ່ຍົກທັບສ່ວນຫຼວງຫຼາຍຂ້າມແມ່ນໍ້າຂອງເພື່ອໄລ່ຈັບເອົາພະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ.

### 3.3 ຂະບວນການຕໍ່ສູ້ຕ້ານກັບດາຍຫວຽດນໍາພາໂດຍເຈົ້າແທ່ນຄໍາ

ເມື່ອແມ່ທັບບົວຂວາງຊຸນໄດ້ນໍາກໍາລັງຕິດຕາມທະຫານລາວແລະເຈົ້າໄຊຍະຈັກກະພັດແຜ່ນແຜ້ວຈົນຮອດປາກແມ່ນໍ້າພູນຝ່າຍເຈົ້າແທ່ນຄໍາຜູ້ເປັນລູກຊາຍຄົນທີ2 ຂອງເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ທີ່ປົກຄອງເມືອງດ່ານຊ້າຍ-ຊຽງຄານເຊິ່ງໄດ້ກະກຽມກອງທັບໄວ້ເປັນຢ່າງດີແລ້ວ ແລະ ທອງທັບຊຽງທອງທີ່ແຕກໄປນັ້ນໄດ້ສົມທົບກັບກອງທັບເມືອງດ່ານຊ້າຍໃຕ້ການບັນຊາຂອງເຈົ້າແທ່ນຄໍາ ແລະ ພົນຊຽງ ເມື່ອຮູ້ວ່າກໍາລັງຂອງດາຍຫວຽດຕັ້ງຢູ່ປາກນໍ້າພູນເພື່ອກຽມຍຶດເອົາເມືອງດ່ານຊ້າຍ ເຈົ້າແທ່ນຄໍາໄດ້ຍົກກໍາລັງພົນທັງໝົດເຂົ້າຕີກັບບົວຂວາງຊຸນເຮັດໃຫ້ທະຫານດາຍຫວຽດທີ່ພວມພັກຜ່ອນແຕກກະແຈກກະຈາຍເຈົ້າແທ່ນຄໍານໍາກໍາລັງຕິດຕາມຂ້າທະຫານດາຍຫວຽດຕາຍຢ່າງລະເນດລະນອງສ່ວນທີ່ເຫຼືອຕາຍກໍ່ແຕກເປັນກຸ່ມນ້ອຍໆບາງພວກກໍ່ລອຍຂ້າມຂອງ, ບາງພວກກໍ່ວາງອາວຸດຍອມອ່ອນນ້ອມ ກອງທັບລາວໄລ່ຕິດຕາມທະຫານດາຍຫວຽດແຕກທັບໄປຮອດແຄວ້ນພວນຈົນສຸດຊາຍແດນ.

ເພື່ອຂັບໄລ່ພວກດາຍຫວຽດໃຫ້ພົ້ນເຂດແດນຂອງອານາຈັກລ້ານຊ້າງແລ້ວເຈົ້າແທ່ນຄໍາກໍ່ກັບຄືນມານະຄອນຊຽງທອງເພື່ອທ້ອມໂຮມເສນາອາມາດ, ປະຊາຊົນ ແລະ ພະສົງອົງຄະເຈົ້າທັງຫຼາຍມາປະຊຸມກັນ ແລ້ວເຫັນດີໃຫ້ພະທໍາມະເສນາກັບພິຊຸ20 ຕົນໄປເຊີນເອົາພະລາຊະບິດາຄື: ພະເຈົ້າໄຊຍະຈັກກະພັດແຜ່ນແຜ້ວທີ່ປະທັບຢູ່ຊຽງຄານໃຫ້ກັບມາປົກຄອງບ້ານເມືອງຢູ່ນະຄອນຊຽງທອງຄືເກົ່າ. ແຕ່ພະລາຊະບິດານປະຕິເສດພ້ອມທັງຍົກບັນລັງໃຫ້ເຈົ້າແທ່ນຄໍາສ່ວນພະອົງໄດ້ສືບຕໍ່ປະທັບຢູ່ເມືອງຊຽງຄານໄດ້ປີ 1 ກໍ່ສະຫວັນນະຄົດ ໃນປີ ຄ ສ 1480 ພະເຈົ້າແທ່ນຄໍາໄດ້ສັ່ງໃຫ້ປະຊາຊົນສ້າງທາດບັນຈຸອັດຖິ(ກະດູກ) ໃຫ້ແກ່ພະບິດາຊື່ວ່າວັດສົບຊຽງຄານ(ປະຈຸບັນຂຶ້ນກັບປະເທດໄທ).

## IV ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າສຸວັນນະບັນລັງຄສ 1479-1486

ໃນປີຄສ 1479 ພວກເສນາອາມາດທັງຫຼາຍພ້ອມກັນອະພິເສກເຈົ້າແທ່ນຄໍາຂຶ້ນຄອງບ້ານເມືອງແທນພະບິດາແລ້ວຖວາຍພະນາມວ່າ“ພະເຈົ້າສຸວັນນະບັນລັງລາຊາທິລາດ” ພະອົງຂຶ້ນຄອງບັນລັງໃນທ່າມກາງບ້ານເມືອງຖືກທໍາລາຍຊຸດໂຊມຈາກການຮຸກຮານຂອງສັກດິນາດາຍຫວຽດສະນັ້ນ ພາຍຫຼັງຂຶ້ນຄອງລາຊະບັນລັງແລ້ວບັນຫາທໍາອິດທີ່ພະອົງຈະຕ້ອງໄດ້ເຮັດແມ່ນໃຫ້ການຊ່ວຍເຫຼືອປະຊາຊົນຜູ້ທີ່ຖືກເຄາະຮ້າຍ ແລະ ຜູ້ຕົກທຸກໄດ້ຍາກຈາກໄພສົງຄາມຈາກໄພສົງຄາມຈາກນັ້ນກໍ່ນໍາພາປະຊາຊົນຟື້ນຟູບູລະນະສ້າງສາບ້ານເມືອງ ແລະ ປັບປຸງການປົກຄອງໃຫ້ຄືນສູ່ສະພາບເດີມ.

### 1. ດ້ານການປົກຄອງ

ໂຄງຮ່າງການຈັດຕັ້ງການປົກຄອງຍັງຮັກສາຮູບແບບເດີມແຕ່ໄດ້ສັບປ່ຽນການປົກຄອງໂດຍສະເພາະແມ່ນໃຫ້ຍົກຖານະຕໍາແໜ່ງທີ່ສໍາຄັນໃຫ້ຜູ້ທີ່ມີຜົນງານໃນການສູ້ຮົບຂັບໄລ່ຂ້າເສີກອອກຈາກດິນແດນລາວລ້ານຊ້າງ ເຊັ່ນ: ແຕ່ງຕັ້ງເຈົ້າຊຽງ ເປັນເຈົ້າຄອງນະຄອນເມືອງຊ່ອງມາເປັນເຈົ້າເມືອງຊຽງຄານທັງໄດ້ດໍາລົງຕໍາແໜ່ງເປັນຫົວເສີກເຂດເມືອງຊ້າຍອີກ; ສືບຕໍໃຫ້ພະຍາຄໍາກອງເປັນເຈົ້າຄອງແຄວ້ນພວນ ແລະ ແຕ່ງຕັ້ງເປັນເຈົ້າຫົວເສີກອີກ.

### 2. ດ້ານສາສະໜາ

ສາສະໜາແລະການສຶກສາກໍ່ໄດ້ເອົາໃຈໃສ່ສົ່ງເສີມໃຫ້ມີການຂະຫຍາຍຕົວທັງໃນເມືອງຊຽງທອງ ແລະ ຫົວເມືອງນ້ອຍໃຫຍ່ທົ່ວອານາຈັກດ້ານສະຖາປັດຕະຍາກໍາກໍ່ໄດ້ເອົາໃຈໃສ່ຂະຫຍາຍເຊັ່ນ: ຮ່ອງຮອຍສະຖາປັດຕະຍາກໍາ

ທີ່ຍັງເຫຼືອຮອດປັດຈຸບັນແມ່ນຊາກບູຮານສະຖານທີ່ເມືອງຊະນະຄາມ(ຊຽງຄານເກົ່າ)ເຊິ່ງອ້ອມຮອບກຳແພງດິນຈີ່ທັງສີ່ດ້ານແຕ່ລະດ້ານມີຄວາມຍາວປະມານ 200ແມັດ ພາຍໃນກຳແພງມີຮ່ອງຮອຍທຳໂຮງ, ວິຫານຕ່າງໆບູຮານສະຖານດັ່ງກ່າວນີ້ຊາວເມືອງເອີ້ນວ່າໂພນເຈົ້າພໍ່ ປັດຕິມະກຳທີ່ສ້າງຂຶ້ນໃນລະຊະການນີ້ຍັງຕົກທອດມາຮອດປັດຈຸບັນ ແມ່ນພະພຸດທະຮູບຫີນ ສອງອົງທີ່ມີຮູບຊົງງົດງາມອົງໜຶ່ງຢູ່ວັດຜາຫົດທີ່ເມືອງຊະນະຄາມ ແລະ ອີກອົງໜຶ່ງຢູ່ວັດທ່າແຂກທາງຝັ່ງຂວາແມ່ນ້ຳຂອງ(ປະເທດໄທ)

ພະເຈົ້າສຸວັນນະບັນລັງເປັນວິລະກະສັດທີ່ກ້າຫານໄດ້ທຳການກູ້ຊາດແລະບ້ານເມືອງລາວໃຫ້ພົ້ນຈາກອຳນາດຂອງສັດຕູພະອົງສະເຫວີຍລາຊະສົມບັດໄດ້7 ປີກໍ່ສະຫວັນນະຄົດປີຄສ 1486 ລວມພະຊົນໄດ້41 ປີ.

## V ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າຫຼ້າແສນໄຕພູວະນາດ ຄ ສ 1486-1495

### 1. ການຂຶ້ນຄອງລາດຂອງເຈົ້າຫຼ້າແສນໄຕ

ເມື່ອເຈົ້າສຸວັນນະບັນລັງສະຫວັນນາຄົດແລ້ວພວກເສນາອາມາດທັງຫຼາຍຈຶ່ງໄດ້ພ້ອມກັນອະພິເສກເອົາເຈົ້າຫຼ້າແສນໄຕ( ໂອລົດອົງທີ3 ຂອງເຈົ້າໄຊຍະຈັກກະພັດແຜ່ນແຜ້ວ)ເຊິ່ງເວລານັ້ນເປັນເຈົ້າຄອງນະຄອນວຽງແກ. ຂຶ້ນຄອງບັນລັງໃນປີສະລູ່ເດືອນ5 ອອກໃໝ່13 ຄ່ຳວັນຈັນປີຄສ 1486ລາຊະບັນດິດທັງຫຼາຍໄດ້ຖວາຍພະນາມວ່າ"ພະເຈົ້າຫຼ້າແສນໄຕພູວະນາດ"

ພະຍາຫຼ້າແສນໄຕຂຶ້ນຄອງບ້ານເມືອງມາຮອດປີຄສ 1495 ກໍ່ສະຫວັນນາຄົດພະອົງມີໂອລົດຜູ້ໜຶ່ງຊື່ວ່າເຈົ້າຊົມພູແຕ່ງເບິ່ງຈາກເຈົ້າຊົມພູມີອາຍຸ 7 ປີສະນັ້ນ, ເຈົ້າວິຊຸນນະລາດຜູ້ເປັນອາວຈຶ່ງຮັກສາບ້ານເມືອງແທນພະອົງໄດ້ຈັດສ້າງວັດບຸຜາລາມຂຶ້ນສຳລັບກວມທາດກະດູກຂອງພະຍາຫຼ້າແສນໄຕ ມາຮອດປີ ຄ ສ1497 ເສນາອາມາດທັງຫຼາຍຈຶ່ງພ້ອມກັນອະພິເສດເຈົ້າຊົມພູຂຶ້ນຄອງລາຊະສົມບັດເວລານັ້ນພະອົງມີອາຍຸ 9 ປີສ່ວນເຈົ້າວິຊຸນນະລາດຖືກແຕ່ງຕັ້ງເປັນແສນເມືອງ, ເຈົ້າຊົມພູຂຶ້ນຄອງບ້ານເມືອງໄດ້ 5 ປີກໍ່ສະຫວັນນະຄົດ.

### 2. ການສ້າງວັດວາອາລາມ

ພະຍາຫຼ້າແສນໄຕພູວະນາດເປັນກະສັດທີ່ມີຄວາມເຫຼື່ອມໃສຕໍ່ພຸດທະສາສະໜາຫຼາຍດັ່ງນັ້ນພະອົງໄດ້ເອົາໃຈໃສ່ປັບປຸງວັດວາອາລາມແລະສິ່ງເສີມທາງດ້ານພຸດທະສາສະໜາຈົນມີນັກບວດຈາກອານາຈັກສະຫຍາມ, ຂະແມແລະລ້ານນາມາສຶກສາຮ່ຳຮຽນພະທຳ, ພາສາບາລີແລະສັນສະກິດຢູ່ນະຄອນຊຽງທອງເປັນປະຈຳໃນການຕ່າງປະເທດພະອົງໄດ້ຜູກສຳພັນທະໄມຕີກັບພະເຈົ້າແຜ່ນດິນກຸງສີອາຍຸດທະຍາໄວ້ຢ່າງແໜ້ນໜາ ແລະ ທັງໄດ້ກຳນົດເຂດແດນ , ບ່ອນມາເຈລະຈາຄວາມເມືອງກັນທີ່ນາສອງຮັກໃນເຂດແດນເມືອງດ່ານຊ້າຍ

.

## VI ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າວິຊຸນນະລາດຄສ 1500-1520

ໃນປີຄສ 1500(ຈຸນລະສັດກະລາດ862) ເສນາອາມາດລາຊະມົນຕີ ແລະ ພະສົງອົງຂະເຈົ້າທັງຫຼາຍ ຈຶ່ງໄດ້ພ້ອມກັນຍົກເຈົ້າວິຊຸນນະລາດຂຶ້ນເປັນເຈົ້າແຜ່ນດິນຖວາຍພະນາມວ່າ"ພະວິຊຸນນະລາດ ໄຕພູວະນາດຖາທິປັດ ສີສັດຕະນະຄານະຫຸດ" ເວລານັ້ນພະອົງມີພະຊົນໄດ້ 34 ປີ ພະອົງສະເຫວີຍລາຊະສົມບັດແລ້ວຈຶ່ງພະລາຊະທານນ້ອງສາວຊື່ນາງໝື່ນນາໃຫ້ເປັນພະຊາຍາເຈົ້າຊາຍ ແລະ ຊົງແຕ່ງຕັ້ງເຈົ້າຊາຍເປັນເຈົ້າພູນເໜືອ ອີກຜູ້ໜຶ່ງເຈົ້ານາງແພງພະລາລາຊະທານໃຫ້ແກ່ທ້າວກ້ອນຄຳ ໂອລົດເຈົ້າເມືອງປາກຫ້ວຍຫຼວງ ແລ້ວພະລາຊະທານໃຫ້ເປັນເຈົ້າເມືອງກະບອງ.

ໄລຍະຕໍ່ມາທ້າວກ້ອນຄຳຜູ້ເປັນນ້ອງເຂີຍຂອງເຈົ້າວິຊຸນທີ່ປົກຄອງເມືອງກະບອງເກີດມີບັນຫາຂັດແຍ່ງກັບພະອົງ, ດັ່ງນັ້ນພະອົງຈຶ່ງແຕ່ງໃຫ້ເຈົ້າພູນເໜືອນຳກຳລັງໄປປາບປາມ ແຕ່ບໍ່ສາມາດເອົາຊະນະພະຍາກະບອງໄດ້, ຕໍ່ມາພະອົງຈຶ່ງໄດ້ແຕ່ງໃຫ້ເຈົ້າເມືອງຂວານຳກຳລັງໄປປາບປາມອີກ ກອງກຳລັງຂອງເຈົ້າເມືອງຂວາແລະ ທ້າວກ້ອນຄຳໄດ້ສູ້

ຣົບກັນຢູ່ແກ້ງສະໂງກ ທ້າວກ້ອນຄຳສູ້ບໍ່ໄດ້ຈຶ່ງໜີໄປຢູ່ເມືອງກາຫຼົງ ພະຍາເມືອງຂວານຳຈັບໄດ້ທ້າວກ້ອນຄຳ ອ່ອນຍອມ ແລະ ຂໍບວດ ສົມເດັດພະເຈົ້າວິຊຸນກໍ່ອະນຸຍາດໃຫ້ບວດສ່ວນພະຍາເມືອງຂວາເນື່ອງຈາກມີຜົນງານຈຶ່ງຖືກເລື່ອນຍົດພະຍາເມືອງຂວາຂຶ້ນເປັນແສນເມືອງຊື່ວ່າ "ພະຍາແສນສຸລິນ"

### 1. ການປັບປຸງດ້ານສາສະໜາ

ນອກນັ້ນພະອົງຍັງໄດ້ເອົາໃຈໃສ່ໃນການປັບປຸງພຸດທະສາດສະໜາເຊັ່ນ:ໄດ້ມີການສ້າງວັດວາອາລາມແຕ່ສະຖານທີ່ຕ່າງໆທາງດ້ານສາສະໜາເຊັ່ນ:

- ໄດ້ມີການສ້າງສາວັດວາອາຣາມ ສະຖານທີ່ຕ່າງໆທາງດ້ານສາສະໜາ ຄື ສ້າງວິຫານແສນເຈດີ ຊື່ວ່າວັດວິຊຸນ ໃນປີ ຄ.ສ 1503 ແລະ ສຳເລັດໃນປີຄ.ສ 1504 ແລະມີທາດໃຫຍ່ຊື່ວ່າ ເຈດີປະທຸມ ຫຼື ທາດດອກບົວໃຫຍ່ ແຕ່ຄົນທັງຫຼາຍເອີ້ນວ່າ ທາດໝາກໂມ ພ້ອມນັ້ນກໍ່ເຊີນພະບາງມາສະຖິດຢູ່ວັດວິຊຸນ.

### 2. ການຈັດຕັ້ງວຽກງານບໍລິຫານຝ່າຍສົງ

- ໄດ້ມີການຈັດວາງໂຄງຮ່າງການຈັດຕັ້ງຂອງສົງກ່ຽວກັບບໍລິຫານພະອົງໃນທົ່ວອານາຈັກຕ້ອງຢູ່ໃຕ້ການປົກຄອງຂອງພະລາຊາຄະນະສົງທັງສາມໄດ້ແກ່ພະສັງຄະລາດ, ເຈົ້າຄະນະສົງໃຫຍ່ຝ່າຍຂວາ ແລະ ເຈົ້າຄະນະສົງໃຫຍ່ຝ່າຍຊ້າຍ

### 3. ດ້ານພາສາສາດ

ໃນລາຊະການຂອງພະອົງນີ້ ຍັງໄດ້ກຳນົດເອົາພາສາບາລີ ແລະ ສັນສະກິດເປັນພາສາສັກສິດ ກຳນົດເອົາອັກສອນທຳເປັນອັກສອນຂຽນທົ່ວໄປ ແຕ່ຕ້ອງອີງໃສ່ພາສາບາລີເປັນຫຼັກ ດັ່ງນັ້ນ, ໃນລາຊະການນີ້ຈຶ່ງເກີດມີນັກປາດອາຈານຜູ້ມີຄວາມຮູ້ ເປັນຈຳນວນຫຼວງຫຼາຍ, ບັນດາຄຳພີທີ່ສຳຄັນໄດ້ມີການແປ ອອກມາເປັນພາສາລາວ ວິທີແຕ່ງກາບກອນແບບວິຊຸນມາລີ ຫຼື ໂຄງສີສຸພາບ ເຊິ່ງມີການແຜ່ຂະຫຍາຍຢ່າງຫຼວງຫຼາຍ ແລະ ໜັງສືຊຸນບູລົມສະບັບທຳອິດ ກໍ່ໄດ້ຂຽນປຶ້ມໃນຍຸກນີ້.

## VII. ອານາຈັກລາວລ້ານຊ້າງລາຊະການຂອງເຈົ້າໂພທິສາລະລາດ ຄ ສ 1520-1550

### 1. ນະໂຍບາຍດ້ານວັດທະນະທາຂອງເຈົ້າໂພທິສາລະລາດ

ພາຍຫຼັງການສິ້ນພະຊົນຂອງເຈົ້າຊຸນນະລາດ ເສນາອາມາດທັງຫຼາຍໄດ້ພ້ອມກັນອະພິເສກ ເຈົ້າໂພທິສາຣະລາຊະກຸມມານ ຜູ້ເປັນບຸດຂຶ້ນເປັນເຈົ້າແຜ່ນດິນແທນ ໃນປີ ຄ.ສ 1520 (ຈ.ສ 882) ແລ້ວຖວາຍພະນາມວ່າ: "ສົມເດັດໂພທິສາຣະຣາຊະມະຫາທຳມິກະທະສາລັກຂະນະກຸມຊອນມະຫາລາຊາທິປະຕິ ຈັກກະພັດພູມິນນໍຣິນທະຣາດເຈົ້າ" ເວລານັ້ນພະໄດ້ມີພະຊົນ 19 ປີ ພາຍຫຼັງຂຶ້ນປົກຄອງບ້ານເມືອງແລ້ວ ພະອົງໄດ້ປັບປຸງກົງຈັກການປົກຄອງໃໝ່ ປີ ຄ.ສ 1522 ພະອົງໄດ້ແຕ່ງຕັ້ງໝື່ນຫຼວງລູກພະຍາຄຳສັກທາ ເຈົ້າເມືອງພອນຂຶ້ນເປັນເຈົ້າພອນ ຊຽງຂວາງແລ້ວແຕ່ງຕັ້ງອາວໝື່ນຫຼວງໃຫ້ເປັນແສນເມືອງພ້ອມທັງມອບເຄື່ອງອະພິເສກ ແລະ ຊ້າງ ເປັນຈຳນວນຫຼວງຫຼາຍ ພໍມາເຖິງປີມະແມ ຈຸລະສັກກະລາດ 885 (ຄ.ສ 1523) ພະອົງໄດ້ແຕ່ງຕັ້ງລາຊະທູດ ໄປຂໍເອົາພະໄຕປິດົກ ແລະ ພະສົງອົງຄະເຈົ້າມາຈາກນະຄອນຊຽງໃໝ່ ພະເມືອງແກ້ວເຈົ້າແຜ່ນດິນແຫ່ງນະຄອນຊຽງໃໝ່ ຈຶ່ງໄດ້ແຕ່ງໃຫ້ພະເທບ ມົງຄົນເຖຣະກັບພະສົງບໍລິວານ ເຊີນຄຳພີພະໄຕປິດົກ 60 ຄຳພີມາຍັງນະຄອນ ສີສັດຕະນາຄະນະຫຸດ ດ້ວຍຄວາມເຫຼື້ອມໃສໃນພະພຸດສາສະໜາ ຂອງພະເຈົ້າໂພທະສາຣະລາດ ກໍ່ໄດ້ສະເດັດອອກບວດ ເປັນພິຊຸປະທັບຢູ່ວັດວິຊຸນມະຫາວິຫານເປັນເວລາ 1 ພັນສາ ປີ ຄ.ສ 1527 ພະອົງໄດ້ມີພະລາຊະອາຍາປະກາດໃຫ້ບ່າວໄພ່ລາຊະດອນ ເລີກນັບຖືຜີຟ້າຜີແຖນ ອັນເຄີຍເຊື່ອຖືມາແຕ່ບູຮານນະການ ນັ້ນໃຫ້ໝົດໄປ ບັນດາຫໍໂຮງວ້ານສານ ອັນເປັນບ່ອນຂຶ້ນຟ້າແຖນ ຂອງພະເຈົ້າແຜ່ນດິນໃນເມືອງກ່ອນພະອົງໄດ້ຮື້ຖອນອອກຖິ້ມ ແລະສ້າງອາຣາມຂຶ້ນແທນ ບ່ອນຫໍຜີນັ້ນຊື່ວ່າ: "ວັດສຸວັນນະໂລກ ຫຼືວັດສັງຄະໂລກໃນປັດຈຸບັນ" ນັບແຕ່ນັ້ນເປັນຕົ້ນມາ

ປະຊາຊົນຈຳນວນຫຼວງຫຼາຍ ກໍ່ໄດ້ເຊື່ອມສັດທາໃນການເຊື່ອຖືຜີຟ້າຜີແຖນ ແລະ ຫັນມາສັດທາໃນພຸດທະສາສະໜາ ຫຼາຍຂຶ້ນ.

ມາຮອດຄ.ສ 1532 ເຈົ້າເມືອງພວນຊຽງຂວາງກັບອາວຜູ້ເປັນແສນເມືອງເກີດຜິດກັບແສນເມືອງຢູ່ຊຽງຂວາງຈຶ່ງໜີມານະຄອນຊຽງທອງເພື່ອລາຍງານສະພາບການ. ເຫດການນີ້ເຈົ້າເມືອງພວນຊຽງຂວາງເກີດຄວາມບໍ່ພໍໃຈ ແລະທຳການຂັດແຂງບໍ່ຍອມມາອ່ອນຍອມຕໍ່ສົມເດັດພະໂພທະສາຣະຣາດເຈົ້າສະນັ້ນພະອົງຈຶ່ງສັ່ງໃຫ້ພະຍາປາກຫ້ວຍຫຼວງ, ເຈົ້າພູມເໜືອ, ເຈົ້າພູມໃຕ້. ຍົກກອງທະຫານມາຕີເມືອງພວນຊຽງຂວາງ ພວກແມ່ທັບທັງສາມໃຊ້ເວລາປາບປາມຢູ່ 2 ປີ ເຫດການຈຶ່ງຄ່ອຍສະຫງົບລົງ ແລະ ປີ ຄ.ສ 1533 ສົມເດັດພະໂພທິຣະຣາດ ເຈົ້າ ໄດ້ສະເດັດປະທັບຢູ່ນະຄອນຊຽງໃໝ່ໄລຍະໜຶ່ງແລ້ວ ຈຶ່ງໄດ້ສະເດັດມານະຄອນຊຽງທອງ ແລ້ວພະອົງກໍ່ເຊີນເອົາພະແກ້ວມໍລະກົດ ແລະ ພະແຊກຄຳທີ່ສະຖິດຢູ່ໃນວິຫານ ວັດບຸຜາລາມລົງມານຳ ຫຼັງຈາກກັບມາຈາກນະຄອນຊຽງໃໝ່ ບໍ່ດົນພະອົງກໍ່ໄດ້ສິ້ນພະຊົນ ໃນປີ ຄ.ສ 1550 ໃນຂະນະທີ່ສະແດງການຄ້ອງຊ້າງພະອົງ ໄດ້ເກີດອຸບັດເຫດຊ້າງລົ້ມທັບພະອົງ ຈາກນັ້ນຕໍ່ມາ 7 ວັນ ພະອົງກໍ່ສິ້ນພະຊົນ ລວມອາຍຸໄດ້ 43 ປີ.

## 2. ສົງຄາມລ້ານຊ້າງອາຍຸດທະຍາ

ອານາຈັກລາວລ້ານຊ້າງຜ່ານມາ ໄດ້ສ້າງສຳພັນທະໄມຕີອັນດີງາມກັບບັນດາອານາຈັກອ້ອມຂ້າງ ໂດຍສະເພາະແມ່ນໄດ້ມີການສ້າງສາຍສຳພັນທະໄມຕີ ກັບອານາຈັກອາຍຸດທະຍາ ແບບບ້ານໃກ້ເຮືອນຄຽງທີ່ດີງາມຕະຫຼອດມາ ສາເຫດທີ່ພາໃຫ້ເກີດຂໍ້ຂັດແຍ່ງແມ່ນເນື່ອງຈາກວ່າໃນປີ ຄ.ສ 1529 ພະເຈົ້າຣາມາທິບໍດີ 2 ເຈົ້າແຜ່ນດິນແຫ່ງກຸງສີອາຍຸດທະຍາໄດ້ສິ້ນພະຊົນລົງພະອົງບໍ່ມີລາຊະໂອລົດ ຂຶ້ນຄອງລາດແທນ ດັ່ງນັ້ນ, ຈຶ່ງເປັນເຫດໃຫ້ພວກເສນາມຸນຕີ ເກີດຂໍ່ຂັດແຍ່ງ ໃນການຊ່ວງຊີງກັນຂຶ້ນກຳອຳນາດ ການຂັດແຍ່ງກັນຄັ້ງນີ ກຸ່ມສັກດິນາໄດ້ແຍກອອກເປັນ 2 ກຸ່ມຄື: ກຸ່ມເຈົ້າອະທິດຕະຍະວົງ (ພະບໍລົມລາຊາທິລາດ 4 ຜູ້ເປັນມະຫາອຸປະລາດຄອງເມືອງພິດສະນຸໂລກ) ແລະ ອີກກຸ່ມໜຶ່ງແມ່ນກຸ່ມພະເຈົ້າໄຊຍະຣາຊາ ຜູ້ເປັນລາຊະວົງຂອງພະເຈົ້າຣາມາທິບໍດີ ທີ2 ຜົນກຸ່ມຂອງພະເຈົ້າອະທິດຕະຍະວົງເປັນຜູ້ໄດ້ຮັບໄຊຊະນະ ແລະ ເຮັດໃຫ້ເຈົ້າໄຊຍະຣາຊາ ພ້ອມດ້ວຍພັກພວກໄດ້ມາຂໍລີ້ໄພການເມືອງເພື່ອເພິ່ງໂພທິສົມພານນຳພະໂພທິສາຣະລາດ ເຈົ້າທີ່ວຽງຈັນພະອົງ ກໍ່ໄດ້ໃຫ້ການຊ່ວຍເຫຼືອ ເຈົ້າໄຊຍະຣາຊາ ໃນຖານະທີ່ໜີຮ້ອນມາເພິ່ງເປັນ.

ຝ່າຍເຈົ້າອະທິດຕະຍະວົງ ຜູ້ມີກົນອຸບາຍຢາກຂະຫຍາຍອຳນາດ ແລະ ຕ້ອງການກືນກິນອານາຈັກລາວລ້ານຊ້າງແຕ່ເຫິງນານແລ້ວ ກໍ່ສວຍໂອກາດຍົກເອົາເລື່ອງນີ້ຂຶ້ນມາເພື່ອເປັນຂໍ້ອ້າງ ວ່າຕ້ອງການຈັບກຸມເຈົ້າໄຊຍະຣາຊາ ໄປລົງໂທດ ພ້ອມທັງຍົກເອົາກອງທະຫານເຂົ້າມາຮຸກຮານອານາຈັກລາວລ້ານຊ້າງ ໃນປີ ຄ.ສ 1533 ໃນການຕໍ່ສູ້ຕ້ານສະຫຍາມຄັ້ງນີ້ ສົມເດັດພະໂພທິສາຣະລາດ ເຈົ້າໄດ້ມອບໝາຍພາລະກິດ ໃຫ້ພະຍາແສນຫຼວງເປັນຜູ້ຕີຕ້ານສະຫຍາມ ກຳລັງທັງສອງຝ່າຍສູ້ຮົບກັນຢ່າງດຸເດືອດຢູ່ທົ່ງສາລາຄຳ ຈາກນັ້ນກອງທັບລາວລ້ານຊ້າງໄລ່ຕີກອງທັບອາຍຸດທະຍາ ຈົນຮອດເມືອງວຽງຄຸກ ( ໃນບໍລິເວນແຂວງໜອງຄາຍໃນປັດຈຸບັນ) ກອງທັບອາຍຸທະຍາໄດ້ເສຍໄພ່ພົນ ແລະ ຊ້າງມ້າຈຳນວນຫຼວງຫຼາຍ ສ່ວນເຈົ້າອະທິດຕະຍະວົງ ສາມາດເອົາໂຕຫຼົບໜີໄດ້ ເຈົ້າໄຊຍະຣາຊາ ຈຶ່ງໄດ້ເກນພົນທະຫານເສິກຢ່າງຫຼວງຫຼາຍຍົກລົງໄປຕີນະຄອນກຸງສີອະຍຸດທະຍາ ແຕ່ໄປຮອດເມືອງພະງາມ(ຈັ່ງຫວັດພິຈິດຂອງໄທປັດຈຸບັນ) ກໍ່ພັກພົນໂຍທາຢູ່ທີ່ນັ້ນເຖິງ 10 ວັນ ແຕ່ຊາວກຸງສີອະຍຸດທະຍາບໍ່ຍອມອອກມາສູ້ຮົບກໍ່ເລີກທັບກັບຄືນມາ.

ການຂັບໄລ່ກອງທະຫານກຸງສີອະຍຸດທະຍາອອກຈາກດິນແດນລາວລ້ານຊ້າງ ຄັ້ງນີ້ເປັນການບັງຄັບໃຫ້ພວກສັກດິນາສະຫຍາມຕ້ອງເຄົາລົບຖືຂອບເຂດດິນແດນສອງອານາຈັກ ທີ່ໄດ້ເຊັນສັນຍາຮັບຮູ້ກັນມາແຕ່ບັນພະບຸລຸດຂອງສອງຝ່າຍ.

ມາເຖິງປີ ຄ.ສ 1548 ພະເມືອງເກດເກົ້າເຈົ້າແຜ່ນດິນເມືອງຊຽງໃໝ່ ໄດ້ສະຫວັນນະຄົດພະອົງບໍ່ມີລາຊະໂອລົດຈະສືບເມືອງແທນ ພວກເສນາອາມາດແລະ ພວກສັງຄະລາດເຈົ້າທັງຫຼາຍ ອັນມີພະຍາແສນຫຼວງ, ພະຍາສາມ

ລ້ານ, ພະຍາຊຽງແສນຈຶ່ງພ້ອມກັນຂໍເອົາເຈົ້າເສດຖະວັງໂສ ໂອລົດຂອງພະຍາໂພທິສາຣະລາດ ພະສູດຈາກນາງຍອດຄໍາ ຜູ້ເປັນລາຊະທິດາຂອງພະເຈົ້າແຜ່ນດິນຊຽງໃໝ່ ເມື່ອເປັນເຈົ້າແຜ່ນດິນຄອງນະຄອນຊຽງໃໝ່ ເວລານັ້ນເຈົ້າເສດຖະວັງໂສ ມີພະຊົນໄດ້ 14 ປີ ສົມເດັດພະໂພທິສາຣະລາດມີຄວາມຍິນດີ ຈຶ່ງສັ່ງພະລາຊະອາດຍາ ໃຫ້ຕົກແຕ່ງປຸນແປງແຫ່ແຫນມີພົນເຖິງ 300.000 ຄົນ, ຊ້າງ 2000 ໂຕ ພ້ອມທັງອາມາດລາຊະມຸນຕີຜູ້ໃຫຍ່ 9 ຄົນຄື:

1. ພະຍາກົງກະລາດ
2. ພະຍາສີສັດຕະທໍາມະໂຕໂລກ
3. ພະຍາອໍລະຊຸນ
4. ພະຍານະຄອນ
5. ພະຍາຊີວິດສົງຄາມ
6. ພະຍາສຸລະເດດ
7. ພະຍາທັກຂິນ
8. ພະຍາຍຸດລືກຽນ
9. ພະຍາ ພົນຊ້າຍ

ຂະບວນດັ່ງກ່າວໄດ້ແຫ່ແຫນໄປເຖິງນະຄອນຊຽງໃໝ່ເມື່ອເດືອນ 9 ອອກໃໝ່ 10 ຄໍ່າ ປີ ຄ.ສ1548.

### ກ. ສາເຫດຂອງສົງຄາມ

ພາຍຫຼັງການເສຍຊີວິດຂອງພະລາມາທິບໍດີ 2 ແຫ່ງກຸງສີອາຍຸດທະຍາໃນປີຄສ 1529ສັກດີນາພາຍໃນກໍ່ຍາດແຍ່ງຂຶ້ນກໍາອໍານາດຈົນແບ່ງເປັນ 2 ກຸ່ມປໍລະປັກຄື: ກຸ່ມທີ່ສະໜັບສະໜູນໃຫ້ເຈົ້າອະທິດຕະຍະວົງມີຕໍາແໜ່ງເປັນມະຫາອຸປະຣາດມີອໍານາດທາງການທະຫານຂຶ້ນເປັນເຈົ້າແຜ່ນດິນ ແລະ ອີກກຸ່ມໜຶ່ງແມ່ນກຸ່ມເຈົ້າໄຊຍະລາຊາມີຕໍາແໜ່ງເປັນລາຊະວົງ2ກຸ່ມນີ້ເກີດມີຄວາມຂັດແຍ່ງໃນລາຊະບັນລັງແລ້ວໄຊຊະນະກໍ່ເປັນຂອງເຈົ້າອະທິດຕະຍະວົງເມື່ອເຈົ້າອະທິດຕະຍະວົງ ຂຶ້ນເປັນເຈົ້າແຜ່ນດິນແລ້ວກໍ່ໃຊ້ຄວາມພະຍາຍາມທຸກວິທີທາງເພື່ອກໍາຈັດເຈົ້າໄຊຍະລາຊາ ແລະ ພັກພວກ. ດັ່ງນັ້ນ, ເຈົ້າໄຊຍະລາຊາພ້ອມດ້ວຍພັກພວກຈຶ່ງຫຼົບໜີມາລີ້ໄພຢູ່ອານາຈັກລາວລ້ານຊ້າງເພື່ອມາເພິ່ງໂພທິສົມພານຂອງເຈົ້າໂພທິສາລະລາດຢູ່ເມືອງວຽງຈັນໃນປີ ຄສ 1533ພະອົງໃຫ້ບ່ອນຢູ່ອາໃສ ແລະສະບຽງອາຫານເທົ່ານັ້ນແຕ່ຈະບໍ່ຍອມຊ່ວຍເຫຼືອທາງດ້ານກໍາລັງ ເມື່ອເຈົ້າອະທິດຕະຍະວົງ ຊາບຂ່າວຈຶ່ງຂຽນສານມາຫາເຈົ້າໂພທິສາລະລາດໃຫ້ສົ່ງເຈົ້າໄຊຍະລາຊາ ຄືນໃຫ້ອາຍຸດທະຍາ ແຕ່ເຈົ້າໂພທິສາລະລາດປະຕິເສດ, ເພາະຄິດວ່າເປັນເລື່ອງພາຍໃນຂອງອາຍຸດທະຍາ ອັນເປັນສາເຫດເຮັດໃຫ້ລ້ານຊ້າງກັບອາຍຸດທະຍາມີສາຍພົວພັນເລີ່ມບໍ່ແຈ່ມໃສ.

ອີກສາເຫດແມ່ນມາຈາກການທີ່ອາຍຸດທະຍາຕ້ອງການຂະຫຍາຍອານາເຂດຮຸກຮານຊາດອື່ນ: ເຈົ້າອະທິດຕະຍະວົງອ້າງວ່າຈະເຂົ້າມາຈັບເອົາເຈົ້າໄຊຍະລາຊາໄປລົງໂທດ.

### ຂ. ການດໍາເນີນສົງຄາມ

ໃນທ້າຍປີຄສ 1533 ເຈົ້າອະທິດຕະຍະວົງນໍາທັບຫຼວງອາຍຸດທະຍາບຸກເຂົ້າມາຕັ້ງຖານທັບຢູ່ວຽງຄຸກ(ໜອງຄາຍ)ຈຸດປະສົງເພື່ອໂຈມຕີວຽງຈັນ. ເມື່ອຢຶດເອົາວຽງຄຸກສໍາເລັດກໍ່ຂ້າມມາຕັ້ງຖານທັບຢູ່ສາລາຄໍາ. ສ່ວນຝ່າຍເຈົ້າໂພທິສາລະລາດ ໄດ້ແຕ່ງໃຫ້ເຈົ້າເມືອງກະບອງ ແລະ ເຈົ້າເມືອງພວນ(ຊຽງຂວາງ)ນໍາກໍາລັງມາຕໍ່ສູ້ຕ້ານການຮຸກຮານຂອງອາຍຸດທະຍາສາມາດຂັບໄລ່ສັດຕູອອກຈາກທົ່ງສາລາຄໍາ ແລະ ວຽງຄຸກ. ເຈົ້າອະທິດຕະຍະວົງໄດ້ນໍາເອົາກໍາລັງຄຸ້ມກັນຕົວເອງ ແລະຫຼົບໜີໄປກ່ອນ. ດັ່ງນັ້ນ, ມາໃນປີ ຄ ສ 1534ເຈົ້າໂພທິສາລະລາດໄດ້ເກນພົນບຸກຕີເຂົ້າຫົວເມືອງຕ່າງໆຢູ່ທາງພາກເໜືອຂອງອາຍຸດທະຍາໄປຈົນຮອດວຽງພະງາມ ແລະ ຕັ້ງທັບຢູ່ທີ່ນັ້ນເປັນເວລາ 10 ມື້ກໍ່ບໍ່ມີໃຜອອກມາຈຶ່ງນໍາທັບກັບຄືນວຽງຈັນ.

## VIII. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າໄຊເສດຖາທິລາດ

### 1. ປະຫວັດຫຍໍ້ເຈົ້າໄຊເສດຖາທິລາດ

ເຈົ້າໄຊເສດຖາທິລາດມີຊື່ເດີມວ່າ"ເຈົ້າເສດຖະວັງໂສ"ເປັນພະລາຊະໂອລົດຂອງເຈົ້າໂພທິສາລະລາດ ກັບເຈົ້າຍິງຍອດຄໍາທິບແຫ່ງລ້ານນາຊຽງໃໝ່ ພະອົງປະສູດໃນປີມະແມ ເດືອ ອ້າຍ ແຮ 9 ຄໍ່າເວລາທ່ຽງໃນປີ ຄ ສ 1534 ພະອົງຂຶ້ນຄອງລາດໃນປີ 1550 ພາຍຫຼັງການສິ້ນພະຊົນຂອງພະເຈົ້າໂພທິສາລະລາດຜູ້ເປັນ ບິດາເຈົ້າໄຊເສດຖາທິລາດເປັນກະສັດອົງດຽວທີ່ໄດ້ຂຶ້ນຄອງລາດ2 ອານາຈັກ ຄື: ລ້ານຊ້າງ ແລະ ຊຽງໃໝ່.



**ຮູບທີ11: ຮູບປັ້ນເຈົ້າໄຊຍະເຊດຖາທິລາດ ແລະ ຮູບທາດວງວຽງຈັນ**

### 2. ການຂຶ້ນຄອງລາດທີ່ລ້ານນາຊຽງໃໝ່ປີ ຄ ສ 1538

ເຈົ້າໄຊເສດຖາທິລາດມີຊື່ເດີມວ່າ"ເຈົ້າເສດຖະວັງໂສ"ເປັນພະລາຊະໂອລົດຂອງເຈົ້າໂພທິສາລະລາດ ກັບເຈົ້າຍິງຍອດຄໍາທິບແຫ່ງລ້ານນາຊຽງໃໝ່ ພະອົງປະສູດໃນປີມະແມ ເດືອ ອ້າຍ ແຮ 9 ຄໍ່າເວລາທ່ຽງໃນປີ ຄ ສ 1534 ໃນເວລາດຽວກັນນີ້ຢູ່ລ້ານນາກໍ່ມີການຍາດແຍ່ງລາຊະບັນລັງລະຫວ່າງພໍ່ກັບລູກ ຄື: ທ້າວຊາຍຄາ(ລູກ) ແລະ ພະຍາເກດເກົ້າ ໃນທີ່ສຸດທ້າວ ຊາຍຄໍາ ກໍ່ໄດ້ຂຶ້ນຄອງລ້ານນາຊຽງໃໝ່ແຕ່ບໍ່ໄດ້ເອົາໃຈໃສ່ໃນການປົກຄອງເຮັດໃຫ້ໃຜຟ້າບໍ່ພໍໃຈຈຶ່ງໄດ້ທໍາການໂຄ່ນລົ້ມ ແລະ ຈັບເອົາທ້າວຊາຍຄໍາ ໄປປະຫານຊີວິດໃນປີ ຄ ສ 1543(ນັ່ງບັນລັງໄດ້ 6 ປີ). ຈາກນັ້ນເສນາອາມາດຈຶ່ງໄດ້ເຊີນເອົາພະເກດເກົ້າມາຄອງບັນລັງອີກຄັ້ງໜຶ່ງປີຕໍ່ມາຖືກພວກແສນດາວແຫ່ງຊຽງຕຸງຂ້າຕາຍເຮັດໃຫ້ລ້ານນາບໍ່ມີກະສັດປົກຄອງ, ບ້ານເມືອງມີຄວາມວຸ້ນວາຍ ຈຶ່ງໄປຂໍຄວາມຊ່ວຍເຫຼືອຈາກນະຄອນຊຽງທອງ. ເພື່ອແກ້ບັນຫາຄວາມບໍ່ສະຫງົບຢູ່ລ້ານນາ ເຈົ້າໂພທິສາລະລາດຈຶ່ງສົ່ງກໍາລັງໄປປາບປາມຄວາມບໍ່ສະຫງົບຢູ່ລ້ານນາ ແລະ ສ້າງຄວາມສະຫງົບສຸກໃຫ້ແກ່ລ້ານນາອີກຄັ້ງ.

ພາຍຫຼັງບ້ານເມືອງກັບເຂົ້າສູ່ສະພາບປົກກະຕິເສນາອາມາດພ້ອມດ້ວຍປະຊາຊົນຈຶ່ງໄດ້ໄປເຊີນເອົາເຈົ້າເສດຖະວັງໂສ(ໄຊເສດຖາທິລາດ) ມາປົກຄອງລ້ານນາ ແຕ່ເຈົ້າໂພທິສາລະລາດເຫັນວ່າລູກຂອງຕົນຍັງເຍົາໄວ(ອາຍຸ 12ປີ) ດັ່ງນັ້ນ, ຈຶ່ງມອບໃຫ້ເຈົ້າຍິງຈິນລະປະພາຜູ້ເປັນມະເຫສີຂອງພະເກດເກົ້າຮັກສາການແທນ ຮອດປີ ຄ ສ 1548 ເຈົ້າຍິງຈິນລະປະພາບໍ່ສາມາດບໍລິຫານວຽກງານຈຶ່ງແຕ່ງຕັ້ງໃຫ້ເສນາອາມາດໄປເຊີນເອົາເຈົ້າໄຊເສດຖາທິລາດ

ຂຶ້ນເມືອປົກຄອງນະຄອນລ້ານນາ(ຊຽງໃໝ່) ພິທີສະເຫວີຍລາດຈັດຂຶ້ນໃນມື້ອອກໃໝ່ 4 ຄໍ່າ ເດືອນ 11 ກົງກັບວັນພຸດ ປີ ຄ ສ 1548 (ມີອາຍຸ 14 ປີ).

**3. ການຂຶ້ນຄອງລາດທີ່ນະຄອນຊຽງທອງ ຄ ສ 1550**

ເມື່ອພະເຈົ້າໂພທິສາລະລາດສະຫວັນນະຄົດ (ປີຄສ 1550)ສະພາບການພາຍໃນອານາຈັກມີຄວາມວຸ້ນວາຍຄື: ພະລ້ານຊ້າງ (ລູກເຈົ້າຍິງແຫ່ງອາຍຸດທະຍາ) ແລະ ເຈົ້າວໍລະວັງໂສ (ແມ່ເປັນຄົນນະຄອນຊຽງທອງ) ຍາດບັນລັງກັນ; ແມ່ຂອງເຈົ້າລ້ານຊ້າງ ແລະ ເສນາມຸນຕີຈໍານວນໜຶ່ງມີແຜນຢາກເອົາພະລ້ານຊ້າງຂຶ້ນເປັນເຈົ້າຊີວິດ. ແຕ່ກໍ່ຖືກຂັດຂວາງຈາກເຈົ້າວໍລະວັງໂສ ສໍາລັບກຸ່ມຂອງເຈົ້າວໍລະວັງໂສພັດຕ້ອງການແບ່ງດິນລ້ານຊ້າງອອກເປັນສອງສ່ວນຄື: ສ່ວນໜຶ່ງແມ່ນພະລ້ານຊ້າງປົກຄອງ ແລະ ສ່ວນໜຶ່ງແມ່ນຕົນປົກຄອງ ນອກນີ້ຍັງມີກຸ່ມເສນາອາມາດຜູ້ທີ່ຈົ່ງຮັກພັກດີ ແລະ ບໍ່ຕ້ອງການໃຫ້ມີການແບ່ງປັນດິນແດນ, ຈຶ່ງປຶກສາຫາລືກັນເພື່ອຕ້ານກັບແຜນການຂອງສອງກຸ່ມ ໂດຍການໄປເຊີນເອົາ ເຈົ້າໄຊເສດຖາທິລາດຈາກລ້ານນາມາແກ້ໄຂບັນຫາຄວາມບໍ່ສະຫງົບແຫ່ງນະຄອນຊຽງທອງ. ຫຼັງຈາກນັ້ນເສນາອາມາດຈຶ່ງສະຖາປະນາເຈົ້າໄຊເສດຖະທິລາດຂຶ້ນຄອງບັນລັງຢູ່ລ້ານຊ້າງ ໃນປີ ຄ ສ 1550 ແລະ ໄດ້ຮັບນາມໃໝ່ວ່າ "ສົມເດັດພະອຸໄທພູທອນບໍວອນ ໄຊເສດຖາ ພູວະນາຖາທິປັດ ສີສັດຕະນາຄະນະຫຸດ".

**ກ. ດ້ານການເມືອງການປົກຄອງ**

ໂດຍສະເພາະດ້ານການບໍລິຫານອານາຈັກພະອົງໄດ້ຈັດແບ່ງຄວາມຮັບຜິດຊອບອອກເປັນ 2 ຝ່າຍ ຄື ຝ່າຍລາຊາຕະກູນ ແລະ ຝ່າຍເສນາ ໃນນັ້ນຝ່າຍລາຊາຕະກຸນມີ 3 ຂັ້ນຄື

- ເຈົ້າແຜ່ນດິນເປັນຜູ້ກໍາອໍານາດສູງສຸດ ແລະ ດໍາລົງຕໍາແໜ່ງເປັນຈອມທັບ
- ມະຫາອຸປະລາດມີໜ້າທີ່ເປັນທີ່ປຶກສາ ແລະ ດໍາພາລະກິດຕາງໜ້າເຈົ້າຊີວິດ
- ພະອຸປະໂຍວະຣາດ ຫຼື ອຸປະຍຸວະຣາດ

ສ່ວນຝ່າຍເສນາອາມາດນັ້ນປະກອບມີ 2 ພາກສ່ວນ ຄື ພາກສ່ວນທະຫານ ແລະ ພາກສ່ວນປົກຄອງສອງພາກສ່ວນນີ້ເປັນຜູ້ກໍາອໍານາດສູງສຸດ ຂອງຝ່າຍເສນາອາມາດ ແລະ ມີຕໍາແໜ່ງເປັນອັກຄະເສນາບໍດີຝ່າຍພົນລະເຮືອນ ແລະ ຝ່າຍທະຫານ ຕໍາແໜ່ງຝ່າຍອັກຄະບໍດີ ຝ່າຍພົນລະເຮືອນເວລານັ້ນແມ່ນພະຍາແສນສຸລິນຄ່ອງຟ້າ ນອກຈາກນີ້ພະອົງຍັງໄດ້ມີການແຕ່ງຕັ້ງເຈົ້າປົກຄອງເມືອງຕ່າງໆ ພາຍໃນອານາຈັກອີກ.

**ຂ. ການປ້ອງກັນອານາຈັກ ແລະ ການຍ້າຍນະຄອນຫຼວງປີ ຄ ສ 1560**

ພະອົງໄດ້ມີການຈັດກໍາລັງພົນຊາຍສະກັນເຂົ້າສັງກັດໃນກອງທັບເພື່ອເປັນກໍາລັງປ້ອງກັນອານາຈັກໃຫ້ມີຄວາມເຂັ້ມແຂງໄອ້ເຖິງ 380.000 ຄົນ, ຊ້າງເສິກ 5000ໂຕ, ແລະ ມ້າເສິກອີກເປັນຈໍານວນຫຼວງຫຼາຍນອກຈາກນີ້ຍັງມີການເຝິກແອບຍຸດທະວິທີ ສູ້ຮົບໃຫ້ແກ່ກອງທັບ ເພື່ອໃຫ້ມີຄວາມຊໍານິຊໍານານໃນການສູ້ຮົບ ພິເສດໃນສະໄໝນີ້ຍັງມີການຈັດຊັ້ນຕໍາແໜ່ງການທະຫານຄືນໃໝ່ ເປັນລະບົບສະເພາະກອງທັບຄື:

- ພະຍາມີຕໍາແໜງເປັນຜູ້ບັນຊາກອງທະຫານສູງສຸດ
- ແສນ ມີຕໍາແໜ່ງເປັນຜູ້ຮອງຜູ້ບັນຊາທະຫານສູງສຸດ ແລະ ເປັນແມ່ທັບ
- ໝື່ນມີຕໍາແໜ່ງເປັນນາຍທະຫານ.

**ການສ້າງຕັ້ງນະຄອນຫຼວງວຽງຈັນເປັນລາຊະທານີ:**

ພາຍຫຼັງຕໍ່ສູ້ຊີງອໍານາດເພື່ອຄອບຄອງນະຄອນຊຽງໃໝ່ພະເຈົ້າໄຊຍະເສດຖາທິລາດ ກໍ່ໄດ້ເຫັນຢ່າງຈະແຈ້ງຕໍ່ກົນອຸບາຍ ຂະຫຍາຍອານາເຂດຂອງບູເລັງນອງ ຕາມຄາດຄະເນວ່າບູເລັງນອງ ຕ້ອງກໍ່ສົງຄາມຮຸກຮານອານາຈັກລາວລ້ານຊ້າງແນ່ນອນ ດັ່ງນັ້ນ, ພະເຈົ້າຈຶ່ງຮຽກປະຊຸມເສນາມຸນຕີ ເພື່ອວາງແຜນປ້ອງການຮຸກຮານຈາກພະມ້າ ຕໍ່ຈາກການປະຊຸມເສນາມຸນຕີ ທັງຫຼາຍຈຶ່ງໄດ້ຕົກລົງຄວາມເຫັນກັນວ່າ"ນະຄອນຊຽງທອງບໍ່ເໝາະສົມທີ່ຈະເປັນນະຄອນຫຼວງຕໍ່ໄປ ເພາະຢູ່ໃກ້ກັບພະມ້າທີ່ພວມເປັນສັດຕູກັບລ້ານຊ້າງ ອີກດ້ານໜຶ່ງນະຄອນຫຼວງຊຽງທອງເປັນ

ເມືອງທີ່ຄັບແຄບ ບໍ່ກວ້າງຂວາງມີພູເຂົາອ້ອມຮອບ  ບໍ່ມີທາງຂະຫຍາຍສ່ວນວຽງຈັນເປັນເມືອງໃຫຍ່ ມີບໍລິເວນກວ້າງຂວາງສົມບູນ ແລະ ຕັ້ງຢູ່ເຄິ່ງກາງອານາຈັກ ສະດວກໃຫ້ແກ່ການປົກຄອງທາງພາກເຫນືອແລະ ພາກໃຕ້ , ອີກອັນໜຶ່ງນະຄອນຫຼວງວຽງຈັນມີປະຊາຊົນພົນລະເມືອງຢູ່ຢ່າງໜາແໜ້ນ ແລະ ວຽງຈັນເປັນສູນກາງການຄົມມະນາຄົມທາງບົກ ແລະ ທາງນໍ້າ, ທັງເປັນບ່ອນແລກປ່ຽນທາງພາຍໃນ ແລະ ພາຍນອກ ໃນຍາມສະຫງົບວຽງຈັນເປັນສູນກາງປົກຄອງ, ເສດຖະກິດ, ວັດທະນະທຳ ເປັນຕົວແທນໃຫ້ແກ່ລາວລ້ານຊ້າງ ໃນຍາມສົງຄາມກໍ່ສັ່ງກຳລັງຫຼວງອອກໄປປ້ອງກັນຊາຍແດນ ຫຼືເກນເອົາກຳລັງທ້ອງຖິ່ນມາປ້ອງກັນ ນະຄອນຫຼວງກໍ່ໄດ້ໄວທັນກັບເຫດການ ຍ້ອນສະພາບການດັ່ງກ່າວນັ້ນ ພະເຈົ້າໄຊຍະເສດຖາທິລາດຈຶ່ງຕົກລົງຍ້າຍຈາກນະຄອນຫຼວງຊຽງທອງ ມາຕັ້ງຢູ່ວຽງຈັນໃນປີ ຄ. ສ 1560 ສ່ວນນະຄອນຊຽງທອງໄດ້ຮັກສາໄວ້ພຽງຖານະ ຜູ້ຄອງເມືອງ ເພາະໄດ້ມອບພະສິງອິງຄະເຈົ້າ ແລະ ພະບາງໄວ້ເປັນມິ່ງເມືອງ ສ່ວນພະແກ້ວມໍລະກົດ ແລະ ພະແຊກຄຳ ເອົາມາສະຖິດໄວ້ທີ່ວຽງຈັນແຕ່ນັ້ນມາປະຊາຊົນຈຶ່ງເອີ້ນນະຄອນຊຽງທອງວ່າ “ເມືອງຫຼວງພະບາງ” ພາຍຫຼັງການຍ້າຍນະຄອນຫຼວງສຳເລັດ ແລ້ວພະເຈົ້າໄຊຍະເສດຖາທິລາດ ໄດ້ມີການກໍ່ສ້າງລະບົບ ນະຄອນຫຼວງດ້ວຍການກໍ່ສ້າງກຳແພງເມືອງ ໂດຍມີປ້ອມຍາມເປັນໄລຍະຫ່າງກັນ ພໍສາຍຕາຫຼຽວເຫັນ, ທາງດ້ານໜ້າກຳແພງ (ເບື້ອງນອກ) ໄດ້ຂຸດຮ່ອງຂະໜານກັນໄປກັບກຳແພງເຊິ່ງມີລວງກວ້າງ 5-8 ແມັດແລະ ເລິກປະມານ 1.70-2 ແມັດ ສ່ວນກາແພງນັ້ນສູງກວ່າຫຼັງຊ້າງໃຫຍ່ ການກໍ່ສ້າງກຳແພງໂດຍມີຮ່ອງນໍ້າຢູ່ດ້ານນອກ ນີ້ເປັນລະບົບປ້ອງກັນໄພທີ່ດີທີ່ສຸດ ໃນສະໄໝນັ້ນ ທັງເປັນຈຸດພິເສດ ໃນການສ້າງຕົວເມືອງໃນລະບອບສັກດີນາ ຄຽງຄູ່ກັນນັ້ນແມ່ນການສ້າງສະຖານທີ່ ປູສະນີຍະສະຖານເຊິ່ງເປັນຈຸດລວມຈິດໃຈເພື່ອສ້າງຄວາມສາມັກຄີ  ສ້າງຄວາມເປັນເອກະລາດແຫ່ງຊາດ ເຊັ່ນ: ຫໍພະແກ້ວວຽງຈັນ, ເປັນບ່ອນປະດິດສະຖານພະແກ້ວມໍລະກົດ ແລະ ພະແຊກຄຳ ເຖິງປີ ຄ.ສ 1566 ໄດ້ສ້າງພະທາດຫຼວງວຽງຈັນ ນອກຈາກນັ້ນຍັງໄດ້ຈັດຕັ້ງລະບົບ ເມືອງເພື່ອເປັນເສນາທິການປ້ອງກັນນະຄອນຫຼວງ ເຊັ່ນ: ເມືອງວຽງຄຳ,ເມືອງວຽງພັນແກ້ວ, ວຽງປາກຫ້ວຍຫຼວງ, ວຽງປາກງື່ມເປັນດ່ານປ້ອງກັນຂ້າເສິກ ເບື້ອງຕາເວັນຕົກ ສ່ວນດ້ານຕາເວັນອອກ ດ່ານຊັ້ນອອກນອກໄປແມ່ນໜອງຄູວຽງ, ວຽງໜອງຫານນ້ອຍ, ດ່ານເມືອງເໜືອໄດ້ແກ່ວຽງຄຳ, ວຽງແກ້ວ,ວຽງເງິນເປັນຕົ້ນ.



**ຮູບທີ12: ຮູບພະທາດຫຼວງວຽງຈັນ**

ນອກຈາກນີ້ພະເຈົ້າໄຊຍະເສດຖາທິລາດ ໄດ້ປັບປຸງຄວາມສາມັກຄີພາຍນອກ ໂດຍສ້າງສາຍສຳພັນແບບພິເສດ ລະຫວ່າງອານາຈັກລາວລ້ານຊ້າງ ກັບອານາຈັກກຸງສີອາຍຸດທະຍາເພື່ອຮ່ວມກັນຕໍ່ຕ້ານພະມ້າທີ່ເປັນສັດຕູຕົວດຽວກັນ.

**ຄ. ການສ້າງສິ່ງກໍ່ສ້າງຕ່າງໆຂອງເຈົ້າໄຊເສດຖາທິລາດ**

ໃນດ້ານນີ້ພະອົງໄດ້ນຳພາປະຊາລາຊະດອນບູລະນະສ້າງສາວັດວາອາຮາມຕ່າງໆເພື່ອແນ່ໃສ່ຊຸກຍູ້ເຜີຍແຜ່ສາສະໜາໃຫ້ມີບົດບາດສຳຄັນໃນວິຖີດຳເນີນຊີວິດ ປະຊາຊົນ ແລະ ແນໃສ່ສ້າງແນວຄິດສູນລວມ ຫຼື ສ້າງຄວາມເປັນເອກະພາບແຫ່ງຊາດ ກິດຈະກຳການສ້າງທີ່ສຳຄັນໃນໄລຍະນີ້ໄດ້ແກ່ການກໍ່ສ້າງວັດຊຽງທອງ.




**ຮູບທີ13: ຮູບວັດຊຽງທອງ**

ແຕ່ພາຍຫຼັງການຍ້າຍນະຄອນຫຼວງຊຽງທອງມາຕັ້ງຢູ່ວຽງຈັນ(ປີ ຄ.ສ 1560 ) ພະອົງໄດ້ມີການກໍ່ສ້າງພະທາດຫຼວງ, ທາດສີສອງຮັກ, ກຳແພງເມືອງວຽງຈັນ, ວັດອົງຕື້, ວັດສີເມືອງ...ນອກຈາກນີ້ຍັງປະຕິສັງຂອນວັດວາອາຮາມຕ່າງໆ ເຊັ່ນ: ທາດສີໂຄດຕະບອງ, ພະທາດອິງຮັງ, ພະທາດພະນົມ ແລະ ຍັງມີການຄວັດຫຼໍ່ພະພຸດທະຮູບອັນເປັນປູສະນີຍະສະຖານຕ່າງໆ ໃນອານາຈັກລ້ານຊ້າງເປັນຈຳນວນຫຼວງຫຼາຍ ເພື່ອແນໃສ່ສ້າງຈຸດລວມທາງດ້ານຈິດໃຈ ຂອງປະຊາຊົນໃຫ້ມີຈິດໃຈສາມັກຄີ ຮັກຊາດ, ຮັກຄວາມສະຫງົບສຸກ ແລະ ເປັນອັນໜຶ່ງອັນດຽວກັນໂດຍອາໄສບົດບາດ ທາງພຸດທະສາສະໜາ ແລະພະອົງເປັນຜູ້ຊີ້ນຳສັ່ງສອນເພື່ອເຕົ້າໂຮມກຳລັງແຮງຂອງປະຊາຊົນລາວລ້ານຊ້າງ.

**ງ. ດ້ານການຕ່າງປະເທດ**

ໂດຍສືບຕໍ່ພາລະກິດຂອງພະລາຊະບິດາທາງດ້ານການເມືອງພາຍນອກທີ່ເຄີຍປະຕິບັດມາແລ້ວໂດຍແນ່ໃສ່ພົວພັນທຸກໆອານາຈັກອ້ອມຂ້າງພະອົງໄດ້ມີການປັບປຸງຄວາມສຳພັນໄມຕີກັບອານາຈັກອາຍຸດທະຍາຄືຜູກພັນກກັນສ້າງພະທາດສອງຮັກເພື່ອເປັນຫຼັກໝາຍຊາຍແດນລະຫວ່າງສອງອານາຈັກພະທາດສີສອງຮັກໄດ້ລົງມືສ້າງແຕ່ປີ ຄ.ສ 1560 ຈົນເຖິງປີ ຄ.ສ 1563 ຈຶ່ງສາເລັດບໍລິບູນ ແລະ ແບ່ງເຂດແດນທັງສອງໄວ້ດັ່ງນີ້: "ແທກແຕ່ທາດນີ້ໄປເຖິງນ້ຳນານ ແລະ ນ້ຳຂອງໄກເທົ່າກັນ" ນອກນັ້ນຍັງຜູກພັນທະໄມຕີທາງສາຍເລືອດ ແລະ ເຄືອຍາດໂດຍການມີສົມລົດ ກັບລາຊະບິດາຂອງພະມະຫາຈັກກະພັດແຫ່ງກຸງສີອາຍຸດທະຍາ ແລະ ຜູກພັນກັນທາງດ້ານການທະຫານ ໂດຍສະເພາະເຈົ້າໄຊຍະເສດຖາທິລາດ ໄດ້ນຳກອງທັບລ້ານຊ້າງໄປຊ່ວຍກອງທັບອາຍຸດທະຍາໃນການບຸກໂຈມຕີອານາຈັກຕ່າງໆທີ່ເປັນປໍລະປັກກັບອານາຈັກກຸງສີ ອາຍຸດທະຍາ ເຊັ່ນ: ເຄີຍຍົກທັບໄປຕໍ່ຕ້ານການຮຸກຮານ ຂອງສັກດິນາພະມ້າເຖິງ 2 ຄັ້ງ ຄື: ຄັ້ງທີ 1 ແມ່ນປີ ຄ.ສ 1567, ຄັ້ງທີ 1 ແມ່ນປີ ຄ.ສ 1569 ນັ້ນແມ່ນສະແດງເຖິງການຜູກພັນທາງດ້ານສຳພັນທະໄມຕີຕໍ່ກັນ.

## IX. ສົງຄາມລ້ານຊ້າງ-ພະມ້າ

### 1. ສະພາບກ່ອນເກີດສົງຄາມ

#### ກ. ສະພາບຂອງພະມ້າ

ໃນລະຫວ່າງສະຕະວັດທີ 16-17 ແມ່ນໄລຍະການຂະຫຍາຍຕົວຂອງອານາຈັກລາວລ້ານຊ້າງທີ່ມີຄວາມເຂັ້ມແຂງໄປດ້ວຍອຳນາດທາງດ້ານການເມືອງ , ການທະຫານແລະຄວາມອຸດົມສົມບູນທາງດ້ານເສດຖະກິດ , ແຕ່ໃນຂະນະດຽວກັນນັ້ນກໍ່ເກີດມີຄູ່ແຂ່ງທີ່ສຳຄັນຄື: ສັກດີນາພະມ້າເຊິ່ງເປັນຜູ້ປໍລະປັກ ທີ່ມີຄວາມເຂັ້ມແຂງທີ່ສຸດໃນອານາຈັກລາວລ້ານຊ້າງ ໃນຂະນະທີ່ລາວລ້ານຊ້າງພວມຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ນັ້ນ ຝ່າຍສັກດີນາພະມ້າ ກໍ່ພວມຕໍ່ສູ້ກ້າວເຂົ້າສູ່ສັກດີນາລວມສູນ ແລະ ກາຍເປັນມະຫາອານາຈັກໃນແຫຼມສຸວັນນະພູມ ໃນທີ່ສຸດກໍ່ປະສົບຜົນສຳເລັດ.

ເມື່ອສຳເລັດການທ້ອນໂຮມອຳນາດລວມສູນໃນພະມ້າແລ້ວສັກດີນາພະມ້າກໍ່ໄດ້ຂະຫຍາຍອິດທິພົນລົງໃຕ້ເລື້ອຍໆແລະສາມາດຢຶດເອົາອານາຈັກຫົງສາວະດີຂອງພວກມອນໄດ້ສຳເລັດໃນປີ ຄ.ສ 1539 ເປົ້າໝາຍຣຸກຮານຕໍ່ໄປຂອງສັກດີນາພະມ້າ ແມ່ນອາຍຸດທະຍາ ແລະ ລາວລ້ານຊ້າງ ພໍຕົກມາຮອດສະໄໝຂອງບູເລັງນອງ ກໍ່ໄດ້ສືບຕໍ່ນະໂຍບາຍຂະຫຍາຍອານາເຂດ ຕາມແນວທາງຂອງຕະບິງເສີເວຕີ ບູເລັງນອງວາງເປົ້າໝາຍວ່າ ຂັ້ນທຳອິດຕ້ອງເຕົ້າໂຮມເອົາພາກກາງ ຂອງພະມ້າໃຫ້ສຳເລັດ, ຂັ້ນທີ 2 ແມ່ນສ້າງຄວາມເປັນເອກະພາບແຫ່ງອານາຈັກພະມ້າໃຫ້ສົມບູນ.

ບູເລັງນອງໄດ້ຈ້າງກອງທະຫານອາສາສະຫມັກຂອງຊາວປອກຕຸຍການເປັນຜູ້ບັນຊາການແລ້ວເຕົ້າໂຮມເອົາກຳລັງທຸກເມືອງຂຶ້ນເພື່ອບຸກຕີເມືອງອັງວະພາຍຫຼັງຢຶດນະຄອນອັງວະສຳເລັດແລ້ວບູເລັງນອງຈຶ່ງປະກາດຕົນເອງເປັນລາຊາທິລາດທີ່ເມືອງຫົງສາວະດີຈາກນັ້ນກໍ່ໄດ້ລວບລວມກຳລັງທັງໝົດຂຶ້ນ. ເມື່ອຢຶດເອົາພາກເໜືອຂອງລັດຊານຄວາມພະຍາຍາມຂອງບູເລັງນອງໄດ້ກາຍເປັນ ຄວາມສຳເລັດ ໃນປີ ຄ.ສ 1555 ແລະ ກາຍເປັນອານາຈັກທີ່ເຂັ້ມແຂງທີ່ສຸດ ຢູ່ພາກພື້ນອາຊີອາຄະເນ.

#### ຂ. ສະພາບຂອງລ້ານຊ້າງ

ການທີ່ເຈົ້າໄຊຍະເສດຖາທິລາດປະນະຄອນຊຽງໃໝ່ມາແກ້ໄຂສະພາບບໍ່ປົກກະຕິຢູ່ນະຄອນຊຽງທອງເທົ່າກັບເປັນການໄຂປະຕູຮັບເອົາແຜນການຂະຫຍາຍອານາເຂດ ຂອງສັກດີນາພະມ້າເຊິ່ງບູເລັງນອງເປັນກະສັດໃນເວລານັ້ນ ແຜນການຂະຫຍາຍອານາເຂດຂອງບູເລັງນອງແມ່ນການຂະຫຍາຍອິດທິພົນກວມເອົາອານາຈັກລ້ານນາ , ອານາຈັກອາຍຸດທະຍາ ແລະ ອານາຈັກລາວລ້ານຊ້າງ ແຕ່ອຸປາສັກທີ່ຂັດຂວາງແຜນການຂອງບູເລັງນອງ ແມ່ນຄວາມເຂັ້ມແຂງຂອງອານາຈັກລາວລ້ານຊ້າງ ຂອງເຈົ້າໄຊຍະເສດຖາທິລາດ , ເພາະວ່າລ້ານນາ ແລະ ອາຍຸດທະຍາຕ່າງກໍ່ມີຄວາມສຳພັນກັບລ້ານຊ້າງ, ດັ່ງນັ້ນ, ບູເລັງນອງຈຶ່ງວາງເປົ້າໝາຍວ່າ ຕ້ອງລົບລ້າງຄວາມເຂັ້ມແຂງຂອງອານາຈັກລາວລ້ານຊ້າງ ກ່ອນ ຄືຕ້ອງຢຶດເອົາລ້ານນາ ໃຫ້ຢູ່ໃນກຳມືສາກ່ອນ ບູເລັງນອງໄດ້ຍຸແຍ່ໃຫ້ກຸ່ມສັກດີນາ ໃນອານາຈັກລ້ານນາປະກາດແຍກຕົວ ອອກຈາກລ້ານຊ້າງອີກດ້ານໜຶ່ງ ກໍ່ໃຊ້ກຳລັງນາບຄູ່ບັນດາຂຸນນາງ ແລະ ເຈົ້າເມືອງຕ່າງໆທີ່ຂຶ້ນກັບລ້ານນາ ໃຫ້ອ່ອນຍອມຕໍ່ພະມ້າ. ຂັ້ນຕໍ່ໄປແມ່ນເກນເອົາກຳລັງຈາກຫົວເມືອງຂຶ້ນທັງໝົດບຸກເຂົ້າກຸງສີອາຍຸດທະຍາ ເຮັດໃຫ້ອານາຈັກລາວລ້ານຊ້າງຕ້ອງໂດດດ່ຽວແຜນການສຸດທ້າຍຂອງບູເລັງນອງແມ່ນເອົາກຳລັງທັງໝົດເຂົ້າຍ້ຳຍີອານາຈັກລາວລ້ານຊ້າງ ແຜນການດັ່ງກ່າວເປັນກາລະໂອກາດດີ ໃຫ້ແກ່ບູເລັງນອງເພາະວ່າ ພໍດີກັບນະຄອນຊຽງໃໝ່ຫວ່າງບໍ່ມີເຈົ້າແຜ່ນດິນບູເລັງນອງຈຶ່ງມີເງື່ອນໄຂສ້າງຄວາມແຕກແຍກ ໃນສັກດີນາຂຸນນາງນະຄອນຊຽງໃໝ່ ເຊິ່ງມີແສນເມືອງເປັນຫົວໜ້າຕ້ອງການຢູ່ຮ່ວມກັບອານາຈັກລາວລ້ານຊ້າງ ແຕ່ກຸ່ມພະຍາສຸທັດສະນະພັດ ຕ້ອງການຂຶ້ນກັບພະມ້າ ເຮັດໃຫ້ນະຄອນຊຽງໃໝ່ເກີດຄວາມວຸ້ນວາຍ.

ຂ່າວຄວາມວຸ້ນວາຍຂອງນະຄອນຊຽງໃໝ່ມາເຖິງນະຄອນຊຽງທອງພະເຈົ້າເສດຖາທິລາດໄດ້ສົ່ງກຳລັງຈາກຊຽງທອງຂຶ້ນເມືອປາບເຫດການທັງຫຼາຍຈຶ່ງສະຫງົບລົງ ສອງປີຕໍ່ມາກຸ່ມທີ່ນິຍົມພະມ້າ ອັນມີພະຍາສຸທັດສະນະພັດເປັນຫົວໜ້າໄດ້ທຳການເຄື່ອນໄຫວພ້ອມທັງໄປເຊີນເອົາເຈົ້າເມກຸຕິ ຜູ້ເປັນເຊື້ອສາຍພະຍາເມັງລາຍ (ເວລານັ້ນບວດເປັນພະ) ຂໍໃຫ້ສິກອອກມາເປັນເຈົ້າຊີວິດຊຽງໃໝ່ ເມື່ອເຈົ້າເມກຸຕິໄດ້ເປັນເຈົ້າແຜ່ນດິນລ້ານນາ ແລ້ວກໍ່ເກີດຄວາມກົວພະເຈົ້າໄຊຍະເສດຖາທິລາດ ຈະຍົກທັງກຳລັງມາປາບຈຶ່ງຍອມຮັບເອົາສິດອາລັກຂາຂອງພະມ້າ ເຊິ່ງແຜນການນີ້ສ້າງຄວາມບໍ່ພໍໃຈໃຫ້ແກ່ບູເລັງນອງເປັນທີ່ສຸດ.

ພໍຕົກຮອດປີຄ.ສ 1555 ພະເຈົ້າໄຊຍະເສດຖາທິລາດໄດ້ກະກຽມກຳລັງໄປບຸກຕີເມືອງຊຽງໃໝ່ເພື່ອລົບລ້າງບັນລັງຂອງພະຍາເມກຸຕິແລະ ຂັບໄລ່ອິດທິພົນຂອງພະມ້າອອກຈາກລ້ານນາ ຝ່າຍພະຍາເມກຸຕິເມື່ອຊາບຂ່າວການຍົກທັບຂອງພະເຈົ້າໄຊຍະເສດຖາທິລາດກໍ່ຕົກໃຈຟ້າວຂໍກຳລັງຈາກພະມ້າ ເພື່ອປ້ອງກັນນະຄອນຊຽງໃໝ່ ແລະໄດ້ຈັດແຈງກຳລັງທັບນຳພາ ໂດຍພະຍາໄຊຍະເສນໃຫ້ໄປດັກສະກັດ ກອງທັບລາວລ້ານຊ້າງຢູ່ຜາໄດ (ເມືອງຊຽງລາຍ) ກອງທັບລາວລ້ານຊ້າງນຳພາໂດຍພະຍົດລຶກຽດ(ພະຍາແສນສຸລິນລືໄຊ) ໄດ້ປະທະກັບພະຍາໄຊຍະເສນ ຢູ່ບ້ານດ່ານໃນບັ້ນຮົບນີ້ ພະຍາໄຊຍະເສນຖືກຂ້າຕາຍ. ໃນເວລາດຽວກັນນັ້ນບູເລັງນອງຜູ້ນຳຂອງພະມ້າ ກໍ່ໄດ້ທຳການເຄື່ອນໄຫວປາບປາມບັນດາຫົວເມືອງທັງຫຼາຍ ຢູ່ດິນແດນລ້ານນາພ້ອມທັງບັງຄັບ ໃຫ້ພະຍາເມກຸຕິຕ້ອງຍອມເປັນເມືອງຂຶ້ນໂດຍກົງຕໍ່ພະມ້າສຸດທ້າຍພະຍາເມກຸຕິຕ້ອງຍອມມອບເມືອງຊຽງໃໝ່ໃຫ້ແກ່ພະມ້າ ແລະ ພະຍາເມກຸຕິກໍ່ຖືກແຕ່ງຕັ້ງເປັນເຈົ້າແຜ່ນດິນແຫ່ງອານາຈັກລ້ານນາພ້ອມທັງສາບານເປັນຜູ້ຈົ່ງຮັກພັກດີ ແລະ ຊື່ສັດຕໍ່ພະມ້າ.

ພາຍຫຼັງສຳເລັດແຜນການຍຶດຄອງລ້ານນາແລ້ວບູເລັງນອງກໍ່ວາງແຜນເພື່ອຈັບເອົາພະເຈົ້າໄຊຍະເສດຖາທິລາດແຕ່ທຸກການກະທຳຂອງບູເລັງນອງນັ້ນພະເຈົ້າໄຊຍະເສດຖາທິລາດໄດ້ຮັບຮູ້ໝົດ ພະອົງໄດ້ກະກຽມກຳລັງເພື່ອບຸກຕີເມືອງຊຽງໃໝ່ ພ້ອມກັນນັ້ນກໍ່ໃຫ້ພະຍາກາສີວິໄຊ, ແສນຊ້າງທ້າວ, ແສນໄຊຍະໂຊດ, ເອົາທະຫານຈຳນວນໜຶ່ງຄຸມຕົວນ້ອຍເມັງເຈຍ (ທູດພະມ້າ) ທີ່ສົ່ງສານຈາກ ບູເລັງນອງເຖິງພະເຈົ້າໄຊຍະເສດຖາທິລາດ ລົງມາຊຽງທອງ ແຕ່ຖືກກອງມ້າໄວຂອງພະຍາໄລ່ມາທັນຢູ່ແຄມແດນເມືອງຈຶ່ງເກີດການສູ້ຮົບກອງລະຫວ່າງຫຼັງຂອງລ້ານຊ້າງຖືກຕີແຕກພະຍາກາງວິໄຊ, ແສນຊ້າງທ້າວແລະ ແສນໄຊຍະໂຊດ ພ້ອງດ້ວຍນ້ອຍເມັງເຈຍ ຖືກກອງມ້າໄວພະມ້າຈັບໄດ້ດັ່ງນັ້ນພະເຈົ້າໄຊຍະເສດຖາທິລາດ ຈຶ່ງຖອຍກັບຄືນມາຊຽງທອງ ໃນປີ ຄ.ສ 1559.

**ຄ. ແຜນການປ້ອງກັນອານາຈັກຂອງລ້ານຊ້າງ**

- ດຳເນີນການຍົກຍ້າຍນະຄອນຫຼວງຊຽງທອງ ລົງມາຕັ້ງຢູ່ວຽງຈັນ (1560)
- ສ້າງກຳແພງອ້ອມນະຄອນວຽງຈັນ
- ດຳເນີນການປັບປຸງເມືອງດ່ານ ເຊັ່ນ: ວຽງຄຸກ, ວຽງງົວ, ວຽງພັນພ້າວ, ວຽງປາກຫ້ວຍຫຼວງ (ຂຶ້ນກັບໜອງຄາຍໃນປັດຈຸບັນ), ວຽງປາກງື່ມ, ວຽງໜອງຫານນ້ອຍ,ວຽງໜອງຫານຫຼວງ,ວຽງແກ້ວ, ວຽງຄຳແລ ຊາຍຟອງ.
- ປັບປຸງກຳລັງກອງທັບ, ຝຶກແອບທະຫານ, ຝຶກແອບຊ້າງເສິກ ແລະ ມ້າເສິກ.
- ປັບປຸງລະບົບບໍລິຫານ
- ສ້າງສາຍພົວພັນພິເສດກັບອາຍຸດທະຍາ (ສະໄໝລາຊະການພະມະຫາຈັກກະພັດ)

## 2. ການດຳເນີນສົງຄາມ

### ກ. ການດຳເນີນສົງຄາມໄລຍະທີ1 ປີ ຄ ສ 1563

ໃນໂອກາດທີ່ກຳລັງນຳພາປະຊາຊົນ ສ້າງນະຄອນຫຼວງໃໝ່ຢູ່ວຽງຈັນນັ້ນ ພະເຈົ້າໄຊຍະເສດຖາທິລາດພ້ອມດ້ວຍພະຍາມືເຫຼັກ, ພະຍາຊ້າຍແຂນທັກ ແລະ ແສນຊ້າງທ້າວ ລົງໄປຢ້ຽມຢາມເມືອງທີ່ຢູ່ບັນດາຕາເວັນອອກກ້ຳໃຕ້ ໂດຍທາງເມືອງໂສກ, ເມືອງຊຸງຈົນຮອດເມືອງອິດກະບື ຢູ່ທີ່ນີ້ມີຊ້າງປ່າຫຼາຍພະອົງຈຶ່ງເລືອກເອົາເມືອງອັດກະບື ເປັນບ່ອນຕັ້ງທັບ ແລະ ພະນຽດ ຊ້າງສາມາດຈັບຊ້າງປ່າມາຝຶກແອບໃຫ້ກາຍເປັນຊ້າງບ້ານບອກໄດ້ໃຊ້ຟັງເຖິງ

100 ໂຕໃນໄລຍະນີ້ພະອິງໄດ້ໄປຢ້ຽມຢາມຫົວເມືອງທາງພາກໃຕ້ນີ້ ໄດ້ມອບໃຫ້ພະຍາແສນສຸລິນ ແລະ ບາຈັນກອງ ນາງເປັນຜູ້ດູແລບ້ານເມືອງ.

ໃນເວລາດຽວກັນນັ້ນແສນນ້ອຍກັບພະຍາສາມລ້ານເມືອງຊຽງໃໝ່ຄິບຄິດກັນຈະລົ້ມລາຊະບັນລັງຂອງ ພະຍາເມກຸຕິ ຈິນເກີດສົງຄາມກາງເມືອງຂຶ້ນອັນເປັນການເປີດໂອກາດໃຫ້ແກ່ພະມ້າ ພະຍາເມກຸຕິຢ້ານເສຍບັນລັງຈຶ່ງ ແຕ່ງຕັ້ງທູດໄປລາຍງານເຈົ້າຫົງສາວະດີ. ດັ່ງນັ້ນ, ເຈົ້າຫົງສາວະດີ ຈຶ່ງນຳກຳລັງມາປາບປາມ ແສນນ້ອຍໄດ້ລົບໜີໄປຢູ່ ເມືອງຊຽງແສນ ສ່ວນພະຍາສາມລ້ານໄດ້ພາຄອບຄົວ ແລະ ພັກພວກໜີມາຢູ່ລ້ານຊ້າງກອງກຳລັງຫົງສາວະດີໄດ້ໄລ່ ຕິດຕາມຈັບຕົວແສນນ້ອຍ ແລະ ພະຍາສາມລ້ານແລ້ວໄດ້ຍຶດເອົາເມືອງຫຼວງພະບາງ ແລະ ກໍ່ຍຶດເອົາເມືອງພວນຊຽງ ຂວາງ. ຈາກນັ້ນກອງທັບພະມ້າກໍ່ໄດ້ຕີລ່ອງເຂົ້ານະຄອງຫຼວງວຽງຈັນ, ມະຫາອຸປະລາດວໍລະວັງໂສ ເປັນນ້ອງຊາຍ ຂອງເຈົ້າໄຊຍະເສດຖາທິລາດ ເຊິ່ງໄດ້ຮັບການມອບໝາຍໃຫ້ເບິ່ງແຍງບ້ານເມືອງ ໃນເວລາເຈົ້າໄຊຍະເສດຖາທິລາດ ບໍ່ຢູ່ໄດ້ນຳກຳລັງອອກຕໍ່ສູ້ກັບພະມ້າ ແຕ່ບໍ່ສາມາດຕ້ານທານໄດ້ ເມື່ອກອງທັບພະມ້າເຂົ້າວຽງຈັນແລ້ວ ກໍ່ທຳການຈັບ ເອົາມະຫາອຸປະລາດວໍລະວັງໂສ, ເຈົ້າຍິງຄຳໄຂ, ເຈົ້າຍິງແທນຄຳ ແລະ ພະຍານະຄອນສົ່ງໄປຫົງສາວະດີເພື່ອເປັນຕົວ ປະກັນ.

ຂ່າວການຍຶດວຽງຈັນຂອງກອງທັບພະມ້າດັງໄປຮອດ ພະເຈົ້າໄຊຍະເສດຖາທິລາດ ໃນຂະນະທີ່ພະອົງ ຢ້ຽມຢາມປະຊາຊົນເຂດນ້ຳເຊກອງ, ເຊຊານ ແລະ ເຊໂປນ. ພະອົງມີຄວາມວິຕົກກັງວົນທີ່ສຸດ ພະອົງໄດ້ມອບ ພາລະກິດການສ້າງວັດວາອາຮາມໃຫ້ແກ່ທ່ານພະຄູຫູຍາວຈຸບ່າ ເຊິ່ງພະສະຫາຍທີ່ຮັກແພງ ສ່ວນພະອົງເອງກໍ່ພ້າວນຳ ຂະບວນ ການກັບຄືນນະຄອນຫຼວງໂດຍຜ່ານເມືອງສາລະວັນ, ອາປີຫົມ ລັດໃສ່ວຽງໜອງຫານ ແລ້ວຟ້າວຮຽກ ເສນາມຸນຕີ ທີ່ຕິດຕາມທ່ານມາປະຊຸມ ວາງແຜນຂັບໄລ່ກອງທັບພະມ້າອອກຈາກດິນແດນລ້ານຊ້າງ ແລະ ໄດ້ຈັດ ກອງທັບອອກເປັນສອງສາຍໃຫຍ່ ຄື: ສາຍທີ 1 ແມ່ນພະອົງເປັນແມ່ທັບຕິດຕາມດ້ວຍພະຍາຊ້າຍແຂນທັກ ແລະ ພະຍາຊ້າງທ້າວ; ສາຍທີ 2 ມອບໃຫ້ພະຍາແສນສຸລິນ ເປັນແມ່ທັບຕິດຕາມດ້ວຍພະຍາຈັນກອງ ນາງໃຫ້ຍົກທັບ ແບບສາຍຟ້າແມບເຂົ້າວຽງຈັນ ໂດຍສາຍທີ່1 ມີໜ້າທີ່ເປັນກອງໜູນ ຝ່າຍອົມພາເລຢູ່ວຽງຈັນ ເມື່ອວ່າກອງທັບພະ ເຈົ້າໄຊຍະເສດຖາທິລາດ ພວມຍົກທັບກັບມາຈຶ່ງມີຄຳສັ່ງໃຫ້ກອງທັບຂອງຕົນຖອນອອກຈາກວຽງຈັນຢ່າງຮີບດ່ວນ ເພື່ອໃຫ້ພົ້ນຈາກການໄລ່ຕິດຕາມຂອງທະຫານລາວລ້ານຊ້າງ, ພະຍາຊ້າຍແຂນທັກ ແລະ ພະຍາຊ້າງທ້າວໄດ້ນຳ ກຳລັງໄລ່ຕິດຕາມຈົນຮອດເມືອງນ່ານ ຈັບຊ້າງເສິກພະມ້າໄດ້ສອງໂຕແລ້ວນຳກຳລັງທັບກັບວຽງຈັນ.

### ຂ. ການດຳເນີນສົງຄາມໄລຍະທີ2ປີ ຄ ສ 1570

ເມື່ອບູເລັງນອງສາມາດຍຶດອາຍຸດທະຍາໄດ້ແລ້ວ ມັນໄດ້ເປັນການເພີ່ມຈຳນວນພົນຮົບຂອງບູເລັງນອງຂຶ້ນ ຫຼາຍໝື່ນຄົນ, ພາຫານະສົງຄາມກໍ່ເພີ່ມຂຶ້ນເຊັ່ນ: ຊ້າງເສິກ, ມ້າເສິກ, ອາວຸດຍຸດໂທປະກອນກໍ່ເພີ່ມຂຶ້ນຢ່າງພຽງພໍ. ອຸປະກອນສົງຄາມທີ່ສຳຄັນທີ່ສຸດໃນເວລານັ້ນໄດ້ແກ່ປືນໃຫຍ່ທີ່ຊື້ຈາກຊາວຕາເວັນຕົກ(ປອກຕຸຍການ) ມີເຖິງ 400 ກະບອກ, ອັນໄດ້ເຮັດໃຫ້ອິດທິພົນຂອງບູເລັງນອງເຂັ້ມແຂງຍິ່ງຂຶ້ນ. ພ້ອມທັງອານາເຂດພະມ້າກໍ່ຂະຫຍາຍກວ້າງ ອອກຍິ່ງຂຶ້ນ. ການເຄື່ອນໄຫວກໍ່ບໍ່ຫຍຸ້ງຍາກໃນການຂົນສົ່ງສະບຽງອາຫານ. ເມື່ອສະຖານະການອຳນວຍຄວາມ ສະດວກໃຫ້ແກ່ການຂະຫຍາຍອານາເຂດຂອງພະມ້າເຂົ້າສູ່ດິນແດນຂອງລ້ານຊ້າງ. ແຕ່ວ່າຊ່ວງໄລຍະທີ່ພະເຈົ້າໄຊ ເສດຖາທິລາດຄອງບັນລັງນີ້ ກຳລັງທະຫານຂອງອານາຈັກລາວລ້ານຊ້າງກໍ່ມີຄວາມເຂັ້ມແຂງຍ້ອນມີການເຝິກແອບ, ທະຫານສ່ວນຫຼາຍໄດ້ຜ່ານການສູ້ຮົບເລື້ອຍໆ, ມີຍຸດທະວິທີໃນການສູ້ຮົບ, ມີການຈັດຕັ້ງທາງການເມືອງ, ການ ປົກຄອງໜັກແໜ້ນ, ມີເສດຖະກິດໝັ້ນຄົງ. ບູເລັງນອງຖືວ່າພະເຈົ້າໄຊເສດຖາທິລາດ ເປັນຄູ່ແຂ່ງຕົວອັນຕະລາຍທີ່ ສຸດ ຖ້າແຜນການຍຶດອານາຈັກລາວລ້ານຊ້າງບໍ່ສຳເລັດ, ບັນດາອານາຈັກອື່ນໆໂດຍສະເພາະແມ່ນບັນດາອານາຈັກທີ່ ມີເຊື້ອຊາດອ້າຍລາວຈະລວມຕົວກັນຕໍ່ຕ້ານຕົນເອງ. ຍ້ອນແນວນັ້ນບູເລັງນອງຕ້ອງທຸ້ມເທຄວາມພະຍາຍາມຢ່າງ

ໃຫຍ່ຫຼວງໃນການຍຶດເອົາອານາຈັກລາວລ້ານຊ້າງໃຫ້ໄດ້ຢ່າງເດັດຂາດ. ໂດຍສະເພາະແມ່ນພະຍາຍາມຈັບພະເຈົ້າໄຊເສດຖາທິລາດເປັນຕົວປະກັນ.

ເຖິງຢ່າງໃດກໍ່ຕາມ ເມື່ອບູເລັງນອງມີອຳນາດສູງສຸດ ໄດ້ບັງຄັບເກັບເກນກຳລັງເພື່ອລວບລວມເອົາອານາຈັກລ້ານຊ້າງໄວ້ໃນກຳມື ຖ້າບໍ່ໄດ້ລາວລ້ານຊ້າງກໍ່ບໍ່ສົມກັບຄຳກ່າວຂອງບັນດາສັກດິນາທີ່ເປັນເມືອງຂຶ້ນຂອງພະມ້າວ່າ "ຜູ້ຊະນະສິບທິດ" ຮອດຕົ້ນປີ ຄ ສ 1570 ບູເລັງນອງ ໄດ້ເກັບເກນເອົາຊາຍສະກັນຕາມຫົວເມືອງຂຶ້ນທັງໝົດເຂົ້າເປັນກອງທັບຫຼວງເພື່ອກຽມຍົກທັບມາຕີອານາຈັກລ້ານຊ້າງ.

ມາຮອດປີ ຄ ສ 1570 ເປັນປີແຫ່ງການກະກຽມເງື່ອນໄຂຂອງບູເລັງນອງ ທີ່ຈະບຸກຍຶດເອົາອານາຈັກລ້ານຊ້າງ. ດັ່ງນັ້ນ, ບັນຫາທີ່ສຳຄັນທີ່ສຸດແມ່ນການກະກຽມສະບຽງອາຫານບູເລັງນອງໄດ້ສັ່ງໃຫ້ຫົວເມືອງຕ່າງໆເລັ່ງໃສ່ການປູກຝັງລ້ຽງສັດຢ່າງຂະໜາດໃຫຍ່ເພື່ອສະສົມໃຫ້ແກ່ກອງທັບຫຼວງ. ນອກນັ້ນກໍ່ຍັງມີການຈັດກຳລັງທັບ ໂດຍຮີບໂຮມເອົາກຳລັງຈາກປະເທດສາລາດ ແລະ ແບ່ງໜ້າທີ່ຮັບຜິດຊອບດັ່ງນີ້:

- ມະຫາອຸປະຣາດເມືອງຫົງສາ(ຜູ້ເປັນລູກຊາຍ)ເປັນກອງທັບໜ້າເກນເອົາທະຫານມອນ, ຍວນຊຽງໃໝ່, ຍົກທັບເຂົ້າມາເມືອງນ່ານ ແລ້ວເຂົ້າສູ່ຊຽງຄານ.
- ແຕ່ງເຈົ້າເມືອງອັງວະ (ລູກເຂີຍ) ແລະ ເຈົ້າເມືອງແປ (ນ້ອງຊາຍ) ເປັນແມ່ທັບຄຸມຊາວມອນ, ພະມ້າ, ກະລຽງ, ໄທສະຫຍາມ ຮ່ວມກັບກອງທັບມະຫາອຸປະຣາດ ເມືອງພິດສະນຸໂລກຍົກທັບມາທາງເໜືອເພັດສະບູນເຂົ້າສູ່ໜອງບົວລຳພູນ.
- ສຳລັບບູເລັງນອງເປັນແມ່ທັບຫຼວງຄຸມຊາວມອນ, ສະລຽງ, ພະມ້າ, ຊາວລື້ ແລະ ໄທສະຫຍາມສົມທົບກັບເຈົ້າເມືອງຕອງອູ, ເມືອງໄຊຍະ ແລະ ກອງທັບເມືອງພິດສະນຸໂລກຂອງພະມະຫາທຳມະລາຊາເຄື່ອນທັບເຂົ້າມາຕາມລຳນ້ຳຊີຜ່ານທາງເມືອງໄຊຍະພູມເຂົ້າສູ່ເມືອງໜອງບົວລຳພູ.

ພໍກ້າວເຂົ້າສູ່ລະດູແລ້ງຂອງຕົ້ນປີ ຄສ 1571 ບູເລັງນອງໄດ້ສັ່ງໃຫ້ກອງທັບທຸກກອງເຄື່ອນຍ້າຍຕາມເສັ້ນທາງດັ່ງກ່າວ ແລະ ມຸ່ງໜ້າສູ່ອານາຈັກລາວລ້ານຊ້າງໄດ້ກຳນົດເອົາເມືອງ ໜອງບົວລຳພູເປັນຄ້າຍໃຫຍ່ເພື່ອວາງແຜນບຸກເຂົ້າວຽງຈັນ.

ຕໍ່ໜ້າສະພາບການດັ່ງກ່າວນັ້ນເຈົ້າໄຊເສດຖາທິລາດໄດ້ເລັ່ງລົງມືປັບປຸງກຳລັງປ້ອງກັນອານາຈັກລົງມືກໍ່ສາງລະບົບປ້ອງກັນນະຄອນຫຼວງຢ່າງແໜ້ນໜາທຸກສິ່ງທຸກຢ່າງທີ່ເຈົ້າໄຊເສດຖາທິລາດໄດ້ຄາດຄະເນໄວ້ຕົ້ນປີ ຄ ສ 1571 ຂ່າວການເຄື່ອນທັບຂອງພະມ້າພວມຈະມາຢໍ່ຢື້ນະຄອນວຽງຈັນ, ເພື່ອປົກປັກຮັກສາຄວາມເປັນເອກະລາດຂອງອານາຈັກລາວລ້ານຊ້າງພະເຈົ້າໄຊເສດຖາທິລາດຈຶ່ງໄດ້ຮຽກບັນດາແມ່ທັບມາວາງແຜນຕີຕ້ານການບຸກລຸກຂອງພະມ້າ. ໃນກອງປະຊຸມຄັ້ງນີ້ມີພະຍາແສນສຸລິນເຊິ່ງດຳລົງຕຳແໜ່ງເປັນເສນາເມືອງໄດ້ສະເໜີຍຸດທະວິທີຕ້ານ ການຮຸກຮານຂອງພະມ້າວ່າ "ເຈົ້າຫົງສາວະດີຊິງສະຫຼາດໃນການເສິກສົງຄາມເປັນຢ່າງດີ ປັນຍາກໍ່ຫຼັກແຫຼມຈຳຕ້ອງມີກົນອຸບາຍຈຶ່ງຈະໄດ້ໄຊຊະນະ, ຂ້າຜ່າບາດເຫັນວ່າຄວນຈະຍົກ ແລະ ອົບພະຍົບພົນລະເມືອງໄປຢູ່ດ້ານໃຕ້ເຂົ້າລີ້ຢູ່ຕາມປ່າດົງໃຫ້ໝົດສ່ວນຄອບຄົວທ້າວພະຍາທັງຫຼາຍນັ້ນໃຫ້ເອົາໄປໄວ້ຢູ່ວຽງສຸລິນຖ້າເຈົ້າຫົງສາວະດີເຂົ້າມາຕີວຽງຈັນຈະໄດ້ເອົາວຽງຈັນເປັນຄ່ວງສະໜາມ"ຕໍ່ໜ້າສະພາບການພະມ້າເຖິງຈະມີທ່າແຮງກຳລັງຫຼາຍແຕ່ບູເລັງນອງ ກໍ່ແມ່ນທັບຜູ້ຮຸກຮານຈາກແດນໄກແນ່ນອນເຂົາເຈົ້າບໍ່ເຄີຍກັບດິນຟ້າອາກາດ ແລະ ພູມສັນຖານ ອີກດ້ານໜຶ່ງເສັ້ນທາງລຳລຽງສະບຽງອາຫານພັດຢູ່ໄກ ແລະ ພົບພໍ້ຄວາມຫຍຸ້ງຍາກຫຼາຍດ້ານ. ຜ່ານການໄຈ້ແຍກ ແລະ ຕຶກຕອງຂອງພະຍາແສນສຸລິນໄດ້ວາງຍຸດທະວິທີຕີຕ້ານ ແລະ ຮຸກຮານຂອງສັດຕູທີ່ພະເຈົ້າໄຊເສດຖາທິລາດໄດ້ເຫັນນນຳທຸກຢ່າງຄື:

1. ອົບພະຍົກຄອບຄົວພົນລະເມືອງຂ້າມໄປຢູ່ຝັ່ງດ້ານໃຕ້ໃຫ້ເຂົ້າໄປລີ້ຊ້ອນຢູ່ຕາມປ່າຕາມດົງປະໃຫ້ວຽງຈັນເປັນເມືອງວ່າງເປົ່າໃຫ້ປະຊາຊົນຖາງປ່າດົງລຽບຕາມແຄມແມ່ນ້ຳຂອງໃຫ້ກຽງເພື່ອໃຫ້ສັດຕູເຂົ້າມາວຽງຈັນ ແລະ ເອົາວຽງຈັນເປັນສະໜາມຮົບ.

2. ໃຫ້ພະຍາຫານແກ້ວ, ພະຍາຫານພາບ ແລະ ພະຍາທຳມະຄຸນ ຄຸມທັບເປັນກອງຫຼອນປິດລ້ອມຂ້າເສິກທີ່ສົ່ງສະບຽງອາຫານມາລ້ຽງກອງທັບພະມ້າຢູ່ວຽງຈັນເມື່ອຂຶນປະຊາຊິນອອກຕາມແຜນແລ້ວກໍ່ເລີ່ມຈັດຕັ້ງຍຸດທະວິທີກອງທັບດັ່ງນີ້:

- ໃຫ້ພະຍານະຄອນ(ສີໂຄດຕະບອງ), ພະຍາເພັດ, ພະຍາປາກຫ້ວຍຫຼວງ, ພະຍາສຸລະເສນຄຸມທັບຫຼອກໃຫ້ຂ້າເສິກທັງຫຼາຍຫຼົງຕິດຕາມແລ້ວຕັ້ງສະກັດຕີຢູ່ທາງໃຕ້ວຽງຈັນໃນຝັ່ງຂວາແມ່ນ້ຳຂອງ.
- ຕັ້ງພະຍາສີນາດ(ຈັນກອງນາງ), ພະຍາຂາວດອກນາດ, ພະຍາລາສະກົດ, ພະຍາຍົດລືກຽດຄຸມທັບສະກັດອອກລັດຕີຢູ່ທາງຕາເວັນອອກວຽງຈັນ.
- ຕັ້ງໝື່ນໄຊ(ເຈົ້າເມືອງພວນ) ເຈົ້າພູມເໜືອຄຸມທັບອອກລັດຕີກອງລຳລຽງຂອງຂ້າເສິກພະມ້າ
- ກອງທັບຫຼວງຄຸມທັບໂດຍພະເຈົ້າໄຊເສດຖາທິລາດ, ໃນກອງທັບນີ້ມີນາຍທະຫານຜູ້ເຄີຍຜ່ານສິງຄາມມາຫຼາຍແລ້ວເຊັ່ນ: ພະຍາມືໄຟຫົວໜ້າ, ພະຍາມືເຫຼັກເປັນທັບຂວາ, ພະຍາຊາຍແຂນຫັກເປັນທັບຊ້າຍ.
- ສ່ວນພະນາແສນສຸລິນນອກຈາກເປັນຜູ້ບັນຊາທະຫານສູງສຸດແລ້ວຍັງໄດ້ຄຸມທັບອອກສະກັດຂ້າເສິກທາງດ້ານຕາເວັນຕົກຂອງວຽງຈັນທີ່ເປັນທາງຂອງພວກຂ້າເສິກພະມ້າຈະຖອນອອກຈາກວຽງຈັນ, ໃນກອງນີ້ລ້ວນແຕ່ມີນັກຮົບຜູ້ທີ່ຜ່ານສິງຄາມມາຫຼາຍແລ້ວເຊັ່ນ: ພະຍາສາມລ້ານ, ພະຍາພົມເທບ, ພະຍາເມືອງຊ້າຍ, ພະຍາແກ່ນທ້າວ, ພະຍາເມືອງຂວາ, ພະຍາແກ, ພະຍາເມືອງນະຄອນໂລກ, ພະຍານະຄອນລ້ານຊ້າງເປັນຕົ້ນ.

ເມື່ອກອງທັບພະມ້າເຂົ້າມາໃກ້ເຂດນະຄອນຫຼວງວຽງຈັນແລ້ວກອງທັບພະຍາຄອນກໍ່ທຳອຸບາຍຖອນກຳລັງລົງປາກງື່ມເຮັດໃຫ້ກອງທັບຂ້າເສິກພະມ້າເຂົ້າໃຈວ່າເຈົ້າໄຊເສດຖາທິລາດພາກອງທັບໜີ, ພວກພະມ້າຈຶ່ງໄລ່ຕິດຕາມ ແລະ ສາມາດຍຶດໄດ້ເມືອງທ່າບໍ່, ເມືອງວຽງຄຸກ ແລະ ໜອງຄາຍຕາມລຳດັບ ພ້ອມທັງສັ່ງໃຫ້ທະຫານເຮັດເຮືອຂະໜາດໃຫຍ່300ລຳເຮືອນ້ອຍ200ລຳ, ກະກຽມໄວ້ເພື່ອຍົກກຳລັງມາຕັ້ງທາງພາກເໜືອປາກງື່ມເພື່ອຫຼີກລຽງການປະທະກັບເຈົ້າໄຊເສດຖາທິລາດ ແຕ່ການຄາດຄະເນຂອງກອງທັບພະມ້າຜິດໄປເພາະວ່າກອງທັບຂອງລ້ານຊ້າງເວລານັ້ນບໍ່ຮູ້ວ່າຢູ່ບ່ອນໃດແທ້. ຈາກນັ້ນບູເລັງນອງໄດ້ສັ່ງໃຫ້ກອງທັບຫຼວງເຂົ້າຍຶດເອົານະຄອນວຽງຈັນເຊິ່ງພົບແຕ່ຄວາມເປົ່າແປນ ແລະ ບໍ່ໄດ້ຮັບການຕໍ່ສູ້ຈາກຝ່າຍລາວລ້ານຊ້າງເລີຍ. ມາຮອດເວລານີ້ນະຄອນຫຼວງວຽງຈັນ ແລະ ຫົວເມືອງຕ່າງໆໄດ້ຕົກຢູ່ພາຍໃຕ້ການຍຶດຄອງຂອງບູເລັງນອງເຊິ່ງເປັນໄປຕາມແຜນຍຸດທະສາດຂອງພະຍາແສນສຸລິນຄືປ່ອຍໃຫ້ຂ້າເສິກເຂົ້າໃນວົງປິດລ້ອມ ແລ້ວຕີສັດຕູແບບກອງຫຼອນ ແລະ ຍາວນານຕາມແຜນການນີ້ເຮັດໃຫ້ຂ້າເສິກຕ້ອງຕົກຢູ່ໃນທ່າຕັ້ງຮັບ, ແຕ່ບູເລັງນອງກໍ່ບໍ່ຖອຍຄວາມພະຍາຍາມທີ່ຈະທຳລາຍອານາຈັກລາວລ້ານຊ້າງ ແລະ ຈັບຕົວພະເຈົ້າໄຊເສດຖາທິລາດ ໃນເວລານັ້ນພະເຈົ້າໄຊເສດຖາທິລາດກໍ່ໄດ້ເຄື່ອນກຳລັງຈາກໜອງຫານນ້ອຍອອກມາສູ່ປາກງື່ມໃຕ້ ຈຶ່ງໄດ້ປະທະກັບກຳລັງບູເລັງນອງທີ່ຢູ່ທີ່ນັ້ນເປັນເວລາ 3 ມື້3 ຄືນ ຈາກນັ້ນພະເຈົ້າໄຊເສດຖາຈຶ່ງໄດ້ຖອນທັບມາຕັ້ງຢູ່ວຽງສຸລິນ ຕາມແຜນຍຸດທະສາດທີວາງໄວ້ ເພື່ອປ່ອຍໃຫ້ຝ່າຍຂ້າເສິກມາຕັ້ງຢູ່ປາກງື່ມ ຈາກນັ້ນກອງທັບລ້ານຊ້າງກໍ່ໄດ້ມີການຫຼອນຕີກອງທັບຂອງພະມ້າທັງເວັນທັງຄືນ ເຮັດໃຫ້ພະມ້າຕົກຢູ່ໃນທ່າເສຍຫາຍຢ່າງໜັກໜ່ວງ, ໂດຍສະເພາະກອງກຳລັງທະຫານລາວລ້ານຊ້າງໄດ້ທຳການສະກັດລັດຕີກອງກຳລັງສະບຽງອາຫານເຮັດໃຫ້ສັດຕູລົ້ມຕາຍໃນແຕ່ລະວັນນັບບໍ່ຖ້ວນ.

ດັ່ງນັ້ນ, ທຸກຄ້າຍຂອງກຳລັງບູເລັງນອງຈຶ່ງຕົກຢູ່ສະພາວະຂາດແຄນອາຫານ,ທະຫານເຈັບປ່ວຍ ແລະລົ້ມຕາຍ ສະນັ້ນ, ບູເລັງນອງຈຶ່ງອອກຄຳສັ່ງໃຫ້ກອງທະຫານທຸກເຫຼົ່າ ໃຫ້ຖອນອອກໄປໃຫ້ພົ້ນເຂດການໂຈມຕີຂອງຝ່າຍລາວ ແຕ່ເສັ້ນທາງຖອນທັບຂອງບູເລັງນອງ ຕ້ອງພົບກັບອຸປະສັກຫຼາຍຢ່າງ ໂດຍສະເພາະແມ່ນພະເຈົ້າໄຊຍະເສດຖາທິລາດໄດ້ມອບໝາຍ ໃຫ້ພະຍາແສນສຸລິນ ກຽມກຳລັງໃຫ້ພຽບພ້ອມເພື່ອລໍຖ້າ ໂອກາດ

ຖອນຕົວອອກ ຈາກນະຄອນວຽງຈັນຂອງພະມ້າ ໃນເວລານັ້ນພະຍາແສນສຸລິນແມ່ທັບໃຫຍ່ ໄດ້ນຳພາກອງທັບໄລ່ຕິດຕາມກອງທັບບູເລັງນອງ ແລະ ໄດ້ເກີດການສູ້ກັນຢ່າງຂະໜາດໃຫຍ່ ໃນ 3 ຈຸດຄື:

- **ການສູ້ຮົບເມືອງວຽງຄຸກ**

ຕາມການມອບໝາຍຂອງພະຍານະຄອນພະຍາສຸກກະເສີມໄດ້ນຳກອງທະຫານແລະປະຊາຊົນບຸກຕີໃສ່ກອງທະຫານພະມ້າ ທີ່ພວມຖອນອອກຈາກເມືອງວຽງຄຸກ, ສ່ວນພະຍາຫານພາບເປັນກອງຫຼອນ ຕີຂະໜາບແມ່ທັບຂ້າເສິກກອງທັບພະຍານະຄອນບຸກເຂົ້າຕີດ້ານຫຼັງ ຂອງຂ້າເສິກ ເຮັດໃຫ້ກອງທັບພະມ້າແຕກກະຈາຍເສຍຂວັນ ມີທັງຜູ້ໄດ້ຮັບບາດເຈັບ ລົ້ມຕາຍ ແລະ ຖິ້ມອາວຸດ , ຊ້າງ, ມ້າ ເປັນຈຳນວນຫຼວງຫຼາຍ ສ່ວນທີ່ເຫຼືອໜີລອດໄປໂຮມກັນຢູ່ໜອງບົວລຳພູ.

- **ການສູ້ຮົບຢູ່ເມືອງໜອງບົວລຳພູ**

ເມື່ອກຳລັງທະຫານທີ່ລອດຕາຍຈາກບັ້ນຮົບວຽງຄຸກ, ມາພັກປິ່ນປົວທີ່ໜອງບົວລຳພູມັນສ້າງໂອກາດອັນດີໃຫ້ແກ່ລາວລ້ານຊ້າງທີ່ຈະຕ້ອງສັ່ງສອນບົດຮຽນອັນເຈັບແສບໃຫ້ແກ່ບູເລັງນອງ. ກອງທັບລາວພາຍໃຕ້ການນຳພາຂອງພະຍາສີຫານາດ, ພະຍາຂາວດອກນາກ, ພະຍາຍົດລຶກຽດ ແລະ ພະຍາລາກິດ ສົມທົບກັບກອງຫຼອນ ຂອງພະຍາທຳມະຄຸນ ເຊິ່ງໄດ້ລໍຖ້າບຸກໂຈມຕີຢູ່ທີ່ນັ້ນ ໄດ້ສວຍໂອກາດເວລາກາງຄືນ ເຊິ່ງທະຫານພະມ້າກຳລັງພັກຜ່ອນຢູ່ນັ້ນກອງທັບລາວກໍ່ໄດ້ບຸກໂຈມຕີຢ່າງກະທັນຫັນ ບຸກຕີພວກພະມ້າຕະຫຼອດຄືນ, ພໍຮຸ່ງເຊົ້າມາພວກພະມ້າກໍ່ໄດ້ຖອນອອກໄປທາງສະໜໍສໍ, (ໃກ້ຊ່ອງແຄບພູພະຍາພໍ່ຈອດໃສ່ສາຍພູໄຊຍະບູລີ) ກອງທັບລາວລ້ານຊ້າງກໍ່ຕີລັດທາງຂະບວນຂອງພະມ້າ ເຮັດໃຫ້ທະຫານພະມ້າບໍ່ຮູ້ຕົວ ຈຶ່ງແຕກໜີບໍ່ມີແນວຄິດຈະສູ້ຮົບ ພຽງແຕ່ເອົາຕົວລອດກໍ່ພໍ ຕ່າງກໍ່ພາກັນແລ່ນໜີເຂົ້າສູ່ລ່ອງແມ່ນ້ຳປາກສັກ. ຢູ່ໃນບັ້ນຮົບນີ້ກອງທັບພະມ້າໄດ້ສູນເສຍກຳລັງເປັນຈຳນວນຫຼວງຫຼາຍ, ກອງທັບລ້ານຊ້າງສາມາດຂັບໄລ່ສັດຕູໃຫ້ພົ້ນຈາກດິນແດນລ້ານຊ້າງ ແລະ ຈັບສະເລີຍສົງຄາມ, ຊ້າງ, ມ້າ ແລະອາວຸດໄດ້ເປັນຈຳນວນຫຼວງຫຼາຍ.

- **ບັ້ນຮົບບ້ານມະໂນສົມ**

ກອງທັບຫຼວງພະມ້ານຳໂດຍບູເລັງນອງໄດ້ເຕົ້າໂຮມກຳລັງຢູ່ເມືອງວຽງພັນພ້າວເມື່ອກອງທັບລາວໂຈມຕີຢ່າງໜັກໜ່ວງຈຶ່ງໄດ້ຖອນຕົວໄປທາງບ້ານມະໂນສົມ, ກອງທັບລາວໄດ້ໄລ່ຕີໄປຕະຫຼອດທາງເຊິ່ງມີກອງທັບລາວ 3 ກອງຄື: ກອງຫຼອນພະຍາຫານແກ້ວ, ພະຍານະຄອນໂລກ, ພະຍານະຄອນລ້ານຊ້າງ. ສ່ວນກອງທັບຂອງພະຍາແສນສຸລິນພ້ອມດ້ວຍນາຍທະຫານຊັ້ນຜູ້ໃຫຍ່ເປັນກອງດັກສະກັດທັງ 3 ກອງນີ້ໄດ້ບຸກຕີເຂົ້າໃສ່ກອງທະຫານຂອງບູເລັງນອງແບບສາມກ້ອນເສົ້າການບຸກຕີຂ້າເສິກໄປຕາມແບບແຜນຍຸດທະສາດທີ່ວາງໄວ້ທຸກປະການ.

ຜ່ານການຕໍ່ຕ້ານການຮຸກຮານຂອງພະມ້າຄັ້ງນີ້ມັນມີຄວາມໝາຍສຳຄັນຄື: “ປະຊາຊົນລາວມີນ້ຳໃຈຮັກຊາດອັນພິລະອາດຫານເຊື່ອໝັ້ນຕໍ່ການນຳພາ ແລະ ທໍລະຫົດອົດທົນເຖິງແມ່ນວ່າການຕໍ່ສູ້ຄາວນັ້ນຈະປະສົບຄວາມຫຍຸ້ງຍາກສັບສົນພຽງໃດກໍ່ຕາມ ແຕ່ປະຊາຊົນລາວກໍ່ອົດທົນຜ່ານຜ່າຕໍ່ສູ້ບໍ່ຍ້ອມຈຳນົນ. ຍ້ອນຄວາມມັກສະຫງົບຮັກອິດສະຫຼະມີຄວາມຮັກແພງສາມັກຄີກັນເຖິງຍາມມີສັດຕູຮຸກຮານກໍ່ໄດ້ສູ້ເອົາເປັນເອົາຕາຍໃນທີ່ສຸດກໍ່ສາມາດຍາດເອົາໄຊ້ຊະນະ.

**ຄ. ການດຳເນີນສົງຄາມໃນໄລຍະທີ3 ປີ ຄ ສ 1574-1575**

ພາຍຫຼັງພະເຈົ້າໄຊເສດຖາທິລາດສິ້ນພະຊົນໃນປີ ຄ ສ 1572ພາຍໃນລາຊະບັນລັງໄດ້ເກີດຄວາມວຸ້ນວາຍ ແລະ ແບ່ງອອກເປັນ 2 ກຸ່ມ: ກຸ່ມໜຶ່ງຕ້ອງການອະພິເສດພະໜໍ່ເມືອງ(ລາຊະບຸດຂອງພະເຈົ້າໄຊເສດຖາທິລາດ) ເຊິ່ງມີອາຍຸພຽງແຕ່ 5 ປີ ແລະ ກຸ່ມໜຶ່ງເປັນບິດາຂອງມະເຫສີພະເຈົ້າໄຊເສດຖາທິລາດ, ເປັນແມ່ທັບໃຫຍ່ຂອງລ້ານຊ້າງ ໃນທີ່ສຸດພະຍາແສນສຸລິນກໍ່ໄດ້ຂຶ້ນເປັນຜູ້ສຳເລັດລາຊະການແຜ່ນດິນ ໃນໄລຍະຕົ້ນດັ່ງນັ້ນ, ບູເລັງນອງຈຶ່ງຫັນມາໃຊ້ອຸບາຍທາງການທູດ ຖືສານມາສະເໜີຕໍ່ເສນາມົນຕີ ນະຄອນວຽງຈັນເພື່ອຮັບເອົາມະຫາອຸປະຣາດວໍລະວັງໂສ (ນ້ອງຊາຍຂອງເຈົ້າໄຊເສດຖາທິລາດທີ່ຖືກພະມ້າຈັບເປັນຕົວປະກັນ) ມາເປັນເຈົ້າແຜ່ນດິນລ້ານຊ້າງ. ເມື່ອເສນາມົນຕີນຳເລື່ອງນີ້ໄປທູນຕໍ່ພະເຈົ້າແຜ່ນດິນໃໝ່ຂອງລ້ານຊ້າງ(ພະຍາແສນສຸລິນ)ກໍ່ມີຄວາມໂກດແຄ້ນຕໍ່ບູເລັງນອງຢ່າງໃຫຍ່ຫຼວງ ແລະ ປະກາດສົງຄາມກັບບູເລັງນອງ.

ຮອດປີຄສ 1575 ບູເລັງນອງໄດ້ລະດົມກອງທັບຫຼວງໃນອານາຈັກພະມ້າໄດ້ 7 ກອງທັບໃຫຍ່ຄື:

- ກອງທັບບູເລັງນອງເມືອງຫົງສາວະດີ
- ກອງທັບເມືອງຕອງອູ
- ກອງທັບມະຫາອຸປະຣາດ
- ກອງທັບເມືອງແປ
- ກອງທັບພະເຈົ້າເມືອງອັງວະ
- ກອງທັບພະໄຂ
- ກອງທັບລ້ານນາຊຽງໃໝ່

ສົງຄາມຄັ້ງນີ້ບູເລັງນອງໄດ້ສວຍໃຊ້ສົງຄາມຈິດຕະສາດຫຼາຍກວ່ານຳໃຊ້ອາວຸດຄືບູເລັງນອງໄດ້ປະກາດວ່າການຍົກທັບຄາວນີ້ແມ່ນວ່າຊ່ວຍຕໍ່ສູ້ເອົາບັນລັງໃຫ້ມະຫາອຸປະຣາດວໍລະວັງໂສ, ເພື່ອກຳຈັດພະຍາແສນສຸລິນຜູ້ທີ່ບໍ່ແມ່ນເສື້ອສາຍກະສັດອອກຈາກລາຊະບັນລັງອານາຈັກລາວລ້ານຊ້າງ. ຕໍ່ຄຳປະກາດດັ່ງກ່າວນີ້ມັນໄດ້ເປັນຜົນຕໍ່ເສນາມົນຕີຜູ້ທີ່ບໍ່ຄ່ອຍໃຫ້ຄວາມສະໜັບສະໜູນພະຍາແສນສຸລິນຂຶ້ນເປັນເຈົ້າແຜ່ນດິນຢູ່ແລ້ວຍິ່ງມີຄວາມສົນໃຈຕໍ່ພະມະຫາອຸປະຣາດວໍລະວັງໂສ, ດັ່ງນັ້ນ, ເສນາມົນຕີຈຶ່ງແຕກອອກເປັນສອງຝ່າຍຝ່າຍໜຶ່ງແມ່ນພ້ອມໃຈກັບເຈົ້າຊີວິດໃໝ່, ອີກຝ່າຍໜຶ່ງແມ່ນຫັນຄວາມສົນໃຈຕໍ່ອຸປະຣາດວໍລະວັງໂສຍ້ອນຄວາມແຕກແຍກພາຍໃນ ດັ່ງນັ້ນ, ເມື່ອບູເລັງນອງຍົກທັບມາຕີອານາຈັກລາວລ້ານຊ້າງຈຶ່ງເຮັດໃຫ້ລ້ານຊ້າງຕົກໃນທ່າປາລາໄຊ ແລະຕົກຢູ່ໃນການຄອບຄອງຂອງພະມ້າຢ່າງສົມບູນ ໃນ ປີ ຄ ສ 1575.

## X. ອານາຈັກລາວລ້ານຊ້າງພາຍໃຕ້ແອກປົກຄອງຂອງສັກດີນາພະມ້າ

### 1. ດ້ານການປົກຄອງ

ພາຍຫຼັງພະມ້າຢຶດເອົາອານາຈັກລ້ານຊ້າງແລ້ວເຮັດໃຫ້ລ້ານຊ້າງຕົກໃນສະຖານະເປັນປະເທດສະລາດໃນປີ ຄ ສ 1575 ພວກເຂົາຮັກສາຮູບແບບການປົກຄອງໄວ້ຄືເກົ່າໂດຍທີ່ພວກເຂົາກໍ່ໄດ້ແຕ່ງຕັ້ງໃຫ້ເຈົ້າວໍລະວັງໂສຂຶ້ນຄອງບັນລັງລ້ານຊ້າງແຕ່ຢູ່ພາຍ ໃຕ້ອຳນາດກົດຂີ່ຂູດຮີດຂອງພະມ້າເຊິ່ງໂຄງສ້າງການປົກຄອງຂອງປະເທດສະລາດຈະມີຮູບແບບການປົກຄອງດ້ວຍຕົນເອງ, ມີກອງທັບເປັນຂອງຕົນເອງ, ມີລະບົບເສດຖະກິດ ແລະຕ້ອງສົ່ງເຄື່ອງບັນນາການ ນອກຈາກນີ້ ແລ້ວພວກເຂົາກໍ່ຍັງບັງຄັບໃຫ້ສັກດີນາລາວປະຕິບັດຕາມເງື່ອນໄຂຕ່າງໆທີ່ວາງອອກ ບັນດາເງື່ອນໄຂ ແລະ ຂໍ້ກຳນົດຕ່າງໆທີ່ສັກດີນາພະມ້າວາງອອກຕໍ່ປະຊາຊົນລາວລ້ານຊ້າງຕາມຄວາມພໍໃຈຂອງພະມ້າ.

**2. ການກົດຂີ່ຂູດຮີດປະຊາຊົນລ້ານຊ້າງຂອງພະມ້າ**

ຫຼັງຈາກທີ່ພະມ້າເອົາລ້ານຊ້າງເປັນປະເທດສະລາດແລ້ວພວກເຂົາໄດ້ດຳເນີນນະໂຍບາຍການກົດຂີ່ຂູດຮີດປະຊາຊົນລາວລ້ານຊ້າງຢ່າງໜັກໜ່ວງເຊິ່ງປະກອບມີດັ່ງນີ້:

- ກຳນົດໃຫ້ສັກດິນາລາວລ້ານຊ້າງຕ້ອງສົ່ງຊ້າງເສີກ ໃຫ້ສັກດິນາພະມ້າ 10 ໂຕ ແລະ ຄຳ 12 ກິໂລໃນທຸກໆປີ.
- ຕ້ອງເສຍສ່ວຍຈາກປະຊາຊົນໄປໃຫ້ພະມ້າທຸກໆປີ
- ຕ້ອງເກັບເກນກຳລັງຊາຍໜຸ່ມຍິງສາວໄປເປັນກຳລັງຮັບໃຊ້ພວກພະມ້າຕາມຄວາມຕ້ອງການ
- ຕ້ອງສົ່ງກອງທັບໄປຊ່ວຍພະມ້າໃນເມື່ອເກີດສົງຄາມ ຫຼື ໄປປາບປາມຂະບວນການຕໍ່ສູ້ຢູ່ພາຍໃນ ແລະ ປະເທດສະລາດຕ່າງໆຕາມຄວາມຮຽກຮ້ອງຕ້ອງການ
- ຕ້ອງນຳເອົາຕົ້ນດອກໄມ້ເງິນ, ດອກໄມ້ຄຳພ້ອມດ້ວຍເຄື່ອງບັນນາການຕ່າງໆທີ່ມີຄຸນຄ່າສູງໄປຖວາຍແກ່ສັກດິນາພະມ້າໃນທຸກໆສາມປີ ຖ້າບໍ່ປະຕິບັດຕາກໍ່ຈະຖືວ່າເປັນກະບົດ ແລະ ບໍ່ມີຄວາມຈົ່ງຮັກພັກດີຕໍ່ພະມ້າ.
- ຕ້ອງເກັບເກນຍິງສາວຕະຫຼອດຮອດລາຊະທິດາຂອງຂຸນນາງສັກດິນາລາວລ້ານຊ້າງໄປເປັນນາງບຳເລີຕໍ່ສັກດິນາພະມ້າ.

ຕໍ່ການກະທຳດັ່ງກ່າວພະເຈົ້າວໍລະວັງໂສບໍ່ເຄີຍຄິດທີ່ຈະກອບກູ້ເອກະລາດອິດສະຫຼະພາບໃຫ້ແກ່ປະຊາຊົນແຕ່ຢ່າງໃດເລີຍ, ເມື່ອເປັນແນວນັ້ນຂຸນນາງແລະປະຊາຊົນເກີດຄວາມບໍ່ພໍໃຈ. ດັ່ງນັ້ນ, ຈິ່ງເກີດມີຂະບວນການຕໍ່ຕ້ານອຳນາດການປົກຄອງຫຸ່ນຂອງພະເຈົ້າວໍລະວັງໂສຂຶ້ນໃນຫຼາຍບ່ອນ ທັງຢູ່ໃນນະຄອນວຽງຈັນ ແລະ ບັນດາຫົວເມືອງທີ່ສຳຄັນ ເຊັ່ນ: ປີ ຄ ສ 1578ເຈົ້າຄອງແຄວ້ນຊຽງຂວາງໄດ້ນຳພາປະຊາຊົນຊຽງຂວາງປະກາດຄວາມເປັນອິດສະຫຼະພາບບໍ່ຍ້ອມຂຶ້ນຕໍ່ວຽງຈັນຍ້ອນເຂົ້າເບື່ອນ່າຍຕໍ່ການຍ້ອມຈຳນົນຂອງພະເຈົ້າວໍລະວັງໂສ.

ຮອດຄສ 1579 ຂະບວນການຕໍ່ສູ້ຂອງອັດຕະປືພາຍໃຕ້ການນຳພາຂອງພະຄູຫູຍາວໄດ້ທຳການເຄື່ອນໄຫວປຸກລະດົມປະຊາຊົນລາວບັນດາເຜົ່າຢູ່ພາກໃຕ້ເພື່ອກຳຈັດອິດທິພົນຂອງພະມ້າທີ່ປົກຄອງວຽງຈັນຍ້ອນພະຄູຫູຍາວມີໜ້າຕາຄ້າຍຄືພະເຈົ້າໄຊເສດຖາທິລາດແລະພະຄູຫູຍາວກໍ່ຕໍ່ສູ້ໃນນາມຂອງພະເຈົ້າໄຊເສດຖາທິລາດ ມາໃນປີ ຄ ສ 1579 ພະຄູຫູຍາວຈູບ່າ ກໍ່ນຳພາປະຊາຊົນລາວຢຶດເອົາຫົວເມືອງຕ່າງໆ, ເຮັດໃຫ້ເຈົ້າຊີວິດວໍລະວັງໂສຊາບຂ່າວວ່າມີກຳລັງທະຫານທາງພາກໃຕ້ຈະມາຍາດແຍ່ງບັນລັງຂອງຕົນຈິ່ງໄດ້ສົ່ງທະຫານນຳພາໂດຍພະຍາຊຽງໃຕ້, ພະຍາຊຽງເໜືອ ພະຍານະຄອນ ແລະ ແສນຄອງ ຍົກທັບລົງໄປປາບປາມແຕ່ຖືກປະລາໄຊ. ຝ່າຍເຈົ້າວໍລະວັງໂສເມື່ອເຫັນກອງກຳລັງຂອງຕົນປາລາໄຊກໍ່ເກີດຄວາມສະທ້ານຢ້ານກົວ ແລະ ອົບພະຍົບຄອບຄົວຂອງຕົນເພື່ອຈະໄປເພິ່ງບູເລັງນອງຢູ່ຫົງສາວະດີດ້ວຍການເດີນທາງເຮືອ ແຕ່ສຸດທ້າຍເຮືອກໍ່ລົ້ມເຈົ້າຊີວິດວໍລະວັງໂສ ແລະ ຄອບຄົວເສຍຊີວິດໃນທີ່ນັ້ນ.ດັ່ງນັ້ນຂວນການກູ້ຊາດລາວພາກໃຕ້ຈິ່ງສາມາດຢຶດເອົານະຄອນວຽງປະກາດຄວາມເປັນອິດສະຫຼະພາບ ແລະ ບໍ່ຍອມເສຍຊ່ວຍໃຫ້ແກ່ສັກດິນາພະມ້າອີກຕໍ່ໄປ. ເມື່ອບູເລັງນອງຮັບຂ່າວການສິ້ນພະຊົນຂອງພະເຈົ້າວໍລະວັງໂສ ແລະ ປະຊາຊົນຢູ່ວຽງຈັນຍຶດອຳນາດໃຫ້ພະຍາແສນສຸລິນ ທີ່ຖືກພັກຕົວຢູ່ພະມ້າ ແລະ ມະຫາອະຣາດເມືອງຫົງສາວະດີຊື່: ອິນແຊະມັນກູ(ນັນທະບູເລັງ)ນຳກຳລັງຫຼວງພ້ອມດ້ວຍກຳລັງເມືອງຊຽງໃໝ່ ແລະ ກຳລັງຈາກກຸງສີອາຍຸດທະຍາປິດລ້ອມນະຄອນຫຼວງວຽງຈັນ ແລະ ສາມາດຍຶດວຽງຈັນໄດ້.

ເຖິງວ່າຂະບວນການຕໍ່ສູ້ຂອງປະຊົນລາວພາຍໃຕ້ຮູບແບບພະເຈົ້າໄຊເສດຖາທິລາດ(ພະຄູຫູຍາວ)ຈະຖືກປາບປາມລົງຢ່າງສິ້ນເຊີ່ງກໍ່ຕາມແຕ່ຈິດໃຈຮັກຊາດຮັກອິດສະຫຼະພາບຂອງປະຊາຊົນລາວຍັງຝັງຢູ່ໃນຈິດໃຈ ແລະ ກໍ່ຄ່ອຍຫາໂອກາດທີ່ຈະປົດປ່ອຍຕົນຢູ່ສະເໝີ.

**3. ຂະບວນການກອບກູ້ເອກະລາດຈາກພະມ້າຂອງປະຊາຊົນລ້ານຊ້າງຄສ1582-1600**

ເມື່ອຮອດປີຄ ສ 1581 ບູເລັງນອງໄດເສຍຊີວິດມະຫາອຸປະຣາດແຊະມັນກູຜູ້ເປັນລູກຊາຍເປັນຜູ້ສືບທອດບັນລັງ ແລະ ໄດ້ປ່ຽນຊື່ວ່ານັນທະບູເລັງ ກະສັດອົງນີ້ໄດ້ສືບແນວຄິດຣຸກຮານອານາຈັກໃກ້ຄຽງ, ຈາກສະພາບການ

ດັ່ງກ່າວປະຊາຊົນພະມ້າໄດ້ມີຄວາມເບື່ອໜ່າຍສົງຄາມ, ໃນກຸ່ມສັກດິນາກໍ່ເກີດຄວາມຂັດແຍ່ງອໍານາດກັນຢ່າງຮຸນແຮງຈົນເຖິງຂັ້ນແຕກຫັກເຮັດໃຫ້ສະຖານະການຂອງຄວາມເປັນລາຊາທິລາດສັ່ນຄອນເຕັມໄປດ້ວຍຄວາມສັບສົນວຸ້ນວາຍ.

ເມື່ອສະພາບເປັນແນວນັ້ນມັນໄດ້ເປັນໂອກາດອັນດີໃຫ້ແກ່ບັນດາປະເທດສະລາດຍາດເອົາສິດເປັນເຈົ້າຕົນເອງເຊັ່ນ: ປະຊາຊົນລ້ານຊ້າງພ້ອມກັນປົດເຈົ້າຊີວິດຂອງຕົນທີ່ຮັບໃຊ້ພະມ້າອອກຈາກບັນລັງໃນປີ ຄ ສ 1584 ພະເຈົ້ານະເຣສວນ(ເຈົ້າດໍາ)ໄດ້ປະກາດອິດສະຫຼະພາບອອກຈາກແອກປົກຄອງຂອງພະມ້າ ເຖິງແມ່ນວ່າພະມ້າຈະພະຍາຍາມບຸກຕີອາຍຸດທະຍາເຖິງ 4 ຄັ້ງ ແຕ່ກໍ່ບໍ່ສາມາດເຂົ້າຍຶດຄອງອາຍຸດທະຍາໄດ້ຄືແຕ່ກ່ອນ ຕໍ່ໜ້າສະພາບການດັ່ງກ່າວນີ້ປະຊາຊົນລາວລ້ານຊ້າງກໍ່ໄດ້ເລັ່ງທວງໃຫ້ນັນທະບູເລັງສົ່ງພະໜໍ່ເມືອງ(ລູກຊາຍຂອງພະເຈົ້າໄຊເສດຖາທິລາດ) ກັບມາເປັນເຈົ້າແຜ່ນດິນລ້ານຊ້າງ ສຸດທ້າຍພະມ້າຈິ່ງຍອມຍົກພະໜໍ່ເມືອງໃຫ້ກັບມາເປັນເຈົ້າແຜ່ນດິນລ້ານຊ້າງໃນປີ ຄ ສ 1591 ພາຍຫຼັງຂຶ້ນຄອງລາດແລ້ວພະໜໍ່ເມືອງກໍ່ຮີບຈັດຕັ້ງປັບປຸງອໍານາດການປົກຄອງແນໃສ່ສ້າງອານາຈັກໃຫ້ຈະເລີນຮຸ່ງເຮືອງບັນດາຫົວເມືອງຕ່າງໆທີ່ເຄີຍປະກາດແຍກຕົວອອກຈາກວຽງຈັນໃນສະໄໝລາຊະການຜ່ານມານັ້ນກໍ່ກັບຄືນມາເປັນເອກະພາບເໝືອເດີມ. ນອກນີ້ພະອົງຍັງໄດ້ຫຼຸດຜ່ອນຄວາມເປັນພັນທະຕໍ່ພະມ້າສະແດງອອກໃນການປະຕິເສດບໍ່ຍ້ອມສົ່ງກໍາລັງໄປຊ່ວຍພະມ້າບຸກຕີອາຍຸດທະຍາຕາມຄໍາສັ່ງຂອງນັນທະບູເລັງ ພິເສດໃນເວລານີ້ພະອົງຍັງໄດ້ນໍາພາປະຊາຊົນປັບປຸງກໍາແພງເມືອງວຽງຈັນ ໃຫ້ມີຄວາມທົນທານ ແລະ ກໍ່ສ້າງກໍາແພງເມືອງອີກຊັ້ນໜຶ່ງ, ລວມທັງກໍາແພງເມືອງພັນພ້າວ.

ການປັບປຸງອານາຈັກລາວລ້ານຊ້າງຂອງພະໜໍ່ເມືອງໄດ້ເປັນຂີດໝາຍຂອງໄຊຊະນະໃນເບື້ອງຕົ້ນຂອງຂະບວນວິວັດທາງການຕໍ່ສູ້ທີ່ຍາວນານຂອງປະຊາຊົນລາວລ້ານຊ້າງຕໍ່ກັບສັກດິນາພະມ້າ ພະອົງຂຶ້ນຄອງລາດໄດ້ພຽງ 7 ປີ ແຕ່ປີ ຄ ສ 1591-1598 ກໍ່ສິ້ນພະຊົນ.

### ກ. ສະພາບເອື້ອອໍານວຍໃຫ້ແກ່ການລຸກຂຶ້ນຕໍ່ສູ້ເພື່ອປະກາດເອກະລາດຈາກພະມ້າຂອງປະຊາຊົນລາວ

- ປີຄ ສ 1581 ບູເລັງນອງໄດເສຍຊີວິດເປັນບາດກ້າວໜຶ່ງໃນການຄ່ອຍໆແຍກຕົວອອກຂອງບັນດາປະເທດສະລາດ ມະຫາອຸປະຣາດແຊະມັນກູຜູ້ເປັນລູກຊາຍເປັນຜູ້ສືບທອດບັນລັງແທນເຊິ່ງນິໄສສ່ວນຕົວຂອງ ມະຫາອຸປະຣາດແຊະມັນເປັນຄົນທະນົງຕົວອວດເກັ່ງເຮັດໃຫ້ບ້ານເມືອງບໍ່ສະຫງົບສຸກສະພາບພາຍໃນເກີດຄວາມແຕກແຍກ
- ປະຊາຊົນພະມ້າໄດ້ມີຄວາມເບື່ອໜ່າຍສົງຄາມ, ໃນກຸ່ມສັກດິນາກໍ່ເກີດຄວາມຂັດແຍ່ງອານາດກັນຢ່າງຮຸນແຮງຈົນເຖິງຂັ້ນແຕກຫັກເຮັດໃຫ້ສະຖານະການຂອງຄວາມເປັນລາຊາທິລາດສັ່ນຄອນເຕັມໄປດ້ວຍຄວາມສັບສົນວຸ້ນວາຍ.
- ບັນດາປະເທດສະລາດທີ່ເຄີຍຂຶ້ນຕໍ່ພະມ້າພ້ອມກັນແຍກຕົວອອກເປັນອິດສະຫຼະພາບ
- ປະຊາຊົນລ້ານຊ້າງມີຄວາມສະມັກຄີ ຮັກຄວາມເປັນອິດສະຫຼະພ້ອມກັນຂັບໄລ່ພະມ້າອອກຈາກດິນແດນຂອງຕົນ.

### ຂ. ໄຊຊະນະຂອງປະຊາຊົນລາວໃນການຕໍ່ສູ້ເພື່ອປົດແອກປົກຄອງຂອງພະມ້າ

ພາຍຫຼັງການສິ້ນພະຊົນຂອງພະໜໍ່ເມືອງເນື່ອງຈາກວ່າພະອົງບໍ່ມາລາຊະໂອລົດຂຶ້ນຄອງບັນລັງແທນ, ດັ່ງນັ້ນ, ເສນາອາມາດຈິ່ງອະພິເສດເຈົ້າວໍລະວົງສາຜູ້ເປັນບຸດນ້າສາວ ຂອງພະໜໍ່ເມືອງສືບທອດລາຊະບັນລັງແທນ ແຕ່ເນື່ອງຈາກພະວໍລະວົງສາອາຍຸດຍັງນ້ອຍພຽງແຕ່ 13 ປີ ຈິ່ງບໍ່ສາມາດບໍລິຫານບ້ານເມືອງໄດ້. ສະນັ້ນຈິ່ງສະເໜີໃຫ້ແຕ່ງຕັ້ງພະວໍລະບິດາ ເຊິ່ງເປັນພະບິດາຂອງພະວໍລະວົງສາຂຶ້ນເປັນຜູ້ວ່າລາຊະການແຜ່ນດິນຊົ່ວຄາວໃນປີ ຄ ສ 1598.

ໃນໄລຍະດັ່ງກ່າວນັ້ນຢູ່ພາຍໃນຂອງພະມ້າໄດ້ເກີດມີຄວາມວຸ້ນວາຍຍ້ອນບັນດາຂຸນນາງສັກດິນາພວມຍາດຊີງອຳນາດເຊິ່ງກັນແລະກັນຈົນເຮັດໃຫ້ເກີດສົງຄາມກາງເມືອງສວຍໂອກາດດັ່ງກ່າວນີ້ກຸ່ມຄົນລາວທີ່ຖືກພະມ້າກວດຕ້ອນໄປເມື່ອກ່ອນໄດ້ພາກັນລຸກຮື້ຂຶ້ນແລະໂຕນກັບຄືນມາລ້ານຊ້າງແຕ່ຖືກເຈົ້າເມືອງຊຽງໃໝ່ (ຄົນພະມ້າ) ໃຊ້ກຳລັງຈັບກຸ່ມເອົາຄົນລາວລ້ານຊ້າງໄວ້ເພື່ອຈະສົ່ງຄືນເມືອພະມ້າ ສ່ວນທີ່ເຫຼືອລອດມາກໍ່ເລົ່າສະພາບການທີ່ເກີດຂຶ້ນຢູ່ຊຽງໃໝ່ໃຫ້ພະວໍລະບິຕາ ແລະ ພະວໍລະວົງສາຊາບ ຈາກນັ້ນພະອົງກໍ່ໄດ້ສັ່ງໃຫ້ກອງທັບລາວລ້ານຊ້າງອັນມີພະຍາແສນເມືອງຫຼວງເປັນແມ່ທັບ ແລະ ພະວໍລະວົງສາກໍ່ຕິດຕາມໄປນຳເພື່ອຮັກສາຄອບຄົວຄົນລາວລົງມາລ້ານຊ້າງພ້ອມນັ້ນກໍ່ໄດ້ບຸກຕີປົດປ່ອຍລ້ານຊ້າງອອກຈາກອິດທິພົນຂອງພະມ້າ ກອງທັບລາວລ້ານຊ້າງໄດ້ເຂົ້າຢຶດເອົາເມືອງພະເຢົາ, ເມືອງແພ, ເມືອງນ່ານ, ເມືອງລຳພູນ, ເມືອງເຊີງ, ເມືອງຊຽງແສນ, ເມືອງລໍ, ເມືອງຊຽງລາຍ ແລະ ເມືອງທາງໄດ້ທັງໝົດແລ້ວກໍ່ເຂົ້າໄປປິດລ້ອມເມືອງຊຽງໃໝ່ເອົາໄວ້. ແຕ່ບໍ່ທັນສາມາດຢຶດເອົາຊຽງໃໝ່ໄດ້ເທື່ອ, ກອງທັບກໍ່ຂາດສະບຽງອາຫານ ແລະ ໄພ່ພົນກໍ່ເຈັບເປັນລົ້ມຕາຍ ສະນັ້ນແມ່ທັບຈຶ່ງສັ່ງຍົກພົນກັບເມືອວຽງຈັນເມື່ອພະວໍລະບິຕາເຫັນກອງທັບລາວລ້ານຊ້າງກັບຄືນໂດຍທີ່ບໍ່ສາມາດຍຶດເອົາເມືອງຊຽງໃໝ່ມາໄດ້ກໍ່ເກີດຄວາມໂກດຮ້າຍ ແລະ ໄດ້ສັ່ງໃຫ້ທະຫານປິດປະຕູເມືອງບໍ່ໃຫ້ພະວໍລະວົງສາ ແລະ ພະຍາແສນຫຼວງພ້ອມທະຫານເຂົ້າມາໃນເມືອງໄດ້ ສະນັ້ນພະວໍລະວົງສາພ້ອມທະຫານໄດ້ໄປຕັ້ງທັງຢູ່ສະໜາມພະລານໄຊ ແລະ ປະກາດເຮັດສົງຄາມກັບພະວໍລະປິຕາຜູ້ເປັນບິດາເພື່ອກອບກູ້ເອົາລາຊະບັນລັງ. ສົງຄາມກາງເມືອງໄດ້ດຳເນີນໄປເຖິງ 4 ເດືອນ, ເຮັດໃຫ້ປະຊາຊົນເສຍຫາຍຢ່າງໜັກໜ່ວງ, ດັ່ງນັ້ນ, ເສນາອາມາດພ້ອມດ້ວຍພະສົງອົງຄະເຈົ້າໄດ້ປຶກສາຫາລືກັນ ແລະ ເກ່ຍກ່ອມ 2 ພໍ່ລູກໃຫ້ຄືນດີກັນໃນທີ່ສຸດພະວໍລະວົງສາກໍ່ເຂົ້າມາຂໍໂທດພະວໍລະປິຕາ(ພິທີຈັດຂຶ້ນທີທາດດອນຈັນ) ແລະ ພະວໍລະປິຕາກໍ່ຍິນດີມອບອຳນາດລາຊະບັນລັງໃຫ້ພະວໍລະວົງສາເມື່ອພະວໍລະວົງສາໄດ້ຂຶ້ນຄອງບັນລັງຢ່າງເປັນທາງການແລ້ວພະອົງໄດ້ປະກາດຄວາມເປັນເອກະລາດຂອງອານາຈັກລາວລ້ານຊ້າງຈາກພະມ້າຢ່າງເປັນທາງການໃນປີ ຄ ສ 1600.

ພາຍຫຼັງປະກາດເອກະລາດແລ້ວ, ພະວໍລະວົງສາກໍ່ໄດ້ປັບປຸງອຳນາດໃຫ້ມີຄວາມເຂັ້ມແຂງແລະບໍລິຫານບ້ານເມືອງໃຫ້ມີຄວາມສະຫງົບສຸກເຖິງ 20 ກວ່າປີມາຮອດຄສ 1621ບ້ານເມືອງໄດ້ເກີດຄວາມວຸ້ນວາຍຍ້ອນການຍາດຊີງບັນລັງຂອງຂຸນນາງສັກດິນາອີກ.

# ບົດທີ6
# ອານາຈັກລາວລ້ານຊ້າງໄລຍະຈະເລີນຮຸ່ງເຮືອງທີ່ສຸດໃນສະຕະວັດທີXVIII

## I. ອານາຈັກລາວລ້ານຊ້າງກ່ອນການຂຶ້ນຄອງລາຊະບັນລັງຂອງເຈົ້າສຸລິຍະວົງສາ

### 1. ການປາບປາມບັນດາຫົວເມືອງທີ່ເປັນກະບົດຂອງພະວໍລະວົງສາ

ພາຍຫຼັງທີ່ພະວໍລະວົງສາໄດ້ປະກາດເອກະລາດຢ່າງສົມບູນບໍ່ຂຶ້ນກັບສັກດີນາພະມ້າໃນປີຄສ 1600 ແລ້ວປະຊາຊົນສ່ວນໃຫຍ່ໃນອານາຈັກໄດ້ມີຄວາມປີຕິຊົມຊື່ນທະນົງອົງອາດຕໍ່ໄຊຊະນະທີ່ຍາດມາໄດ້ແຕ່ຍ້ອນຄວາມມັກໃຫຍ່ໃຝ່ສູງຂອງພວກສັກດີນາລາວຈຳນວນໜຶ່ງໄດ້ວາງແຜນຍາດຊິງລາຊະບັນລັງເພື່ອຫວັງເປັນໃຫຍ່ໃນການປົກຄອງແຜ່ນດິນເປັນຕົ້ນແມ່ນພະວໍລະປິຕາ ທີ່ໄປປົກຄອງຢູ່ເມືອງມະຣຸກຄະນະຄອນແຄວ້ນສີໂຄດຕະບອງ ໃນໄລຍະດຽວກັນນັ້ນ ພວກພະມ້າກໍ່ສືບຕໍ່ສົ່ງກຳລັງມາຮຸກຮານລາວລ້ານຊ້າງ ຢູ່ທາງພາກເໜືອໂດຍສະເພາະຢູ່ເຂດຊາຍແດນລ້ານຊ້າງ, ເມືອງນ່ານ, ຊຽງແສນ...ເຮັດໃຫ້ປະຊາຊົນໃນຂົງເຂດດັ່ງກ່າວໄດ້ຮັບຄວາມເດືອດຮ້ອນ ແລະ ບໍ່ອຸ່ນອ່ຽງຕໍ່ອຳນາດການປົກຄອງທີ່ວຽງຈັນດັ່ງນີ້: ໃນປີ ຄ ສ 1602 ກອງທັບລາວລ້ານຊ້າງພາຍໃຕ້ການນຳພາຂອງພະວໍລະວົງສາ ທຳມິກະລາດຕິດຕາມດ້ວຍແມ່ທັບໃຫຍ່ ມີພະຍາແສນຫຼວງ ໄດ້ໄປຕັ້ງທັບຢູ່ເມືອງຫຼວງພະບາງເພື່ອກຳຈັດອິດທິພົນຂອງພະມ້າອອກຈາກເຂດແດນອານາຈັກລາວລ້ານຊ້າງ; ທັງນີ້ກໍ່ເພື່ອປັບປຸງຄວາມເຂົ້າໃຈລະຫວ່າງບັນດາຫົວເມືອງຕ່າງໆທາງພາກເໜືອຂອງລາວ.

ພະວໍລະປິຕາສວຍໂອກາດຕອນທີ່ພະວໍລະວົງສາບໍ່ຢູ່ວຽງຈັນໄປຊັກຊວນເອົາເຈົ້າຄຳລຸນເຈົ້າປົກຄອງແຄວ້ນພວນຊຽງຂວາງເຂົ້າມາຍຶດເອົານະຄອນວຽງຈັນ. ເມື່ອພະວໍລະວົງສາທຳມິກະລາດໄດ້ຊາບຂ່າວພະວໍລະປິຕາໄດ້ຍົກທັບມາຍຶດເອົານະຄອນວຽງຈັນ ແລ້ວກໍ່ຍົກກຳລັງລົງມາຈາກຫຼວງພະບາງ ແລ້ວແຕ່ງໃຫ້ພະຍາແສນຫຼວງ ນຳກອງກຳລັງເຂົ້າຕີຍຶດເອົານະຄອນວຽງຈັນຄືນ ພະວໍລະປິຕາ ແລະ ພັກພວກສູ້ບໍ່ໄດ້ ຈຶ່ງພ່າຍໜີໄປເມືອງນຽກ (ປາກຊັນ) ກອງທະຫານຂອງພະຍາແສນຫຼວງໄດ້ຕິດຕາມໄປຮອດເມືອງນຽກຈັບເອົາພະວໍລະປິຕາໄດ້ ພະວໍລະປິຕາຂໍອ່ອນຍອມ ແລ້ວຂໍອອກບວດໃນພຸດທະສາດສະ ໜາ ແລະໄດ້ສິ້ນພະຊົນໃນ ປີ ຄ ສ 1617 ເມື່ດສະພາບມີຄວາມຫງົບແລ້ວ ພະວໍລະວົງສາທຳມິກະຣາດໂດຍເຫັນດີຈາກຄະນະເສນາບໍດີຜູ້ໃຫຍ່ ໄດ້ຕົກລົງແຕ່ງຕັ້ງພະຍາແສນຫຼວງໄປປົກຄອງເມືອງມະລຸຂະນະຄອນ (ແຄວ້ນສີໂຄດຕະບອງ) ນັບແຕ່ນັ້ນມາປະຊາຊົນຈຶ່ງເອີ້ນວ່າ "ພະຍາແສນຫຼວງນະຄອນ"ກໍ່ໄດ້ປັບປຸງພະນະຄອນໃຫ້ເຂັ້ມແຂງຮອບດ້ານ ໄດ້ສ້າງກຳແພງອ້ອມເມືອງມະຣຸຄະນະຄອນຕໍ່ມາໄດ້ປ່ຽນມາເປັນ "ສີໂຄດຕະບູນ" ຕາມຊື່ເດີມ ແລະ ພະຍາແສນຫຼວງນະຄອນກໍ່ໄດ້ຖືກເລື່ອນຍົດເປັນ"ພະຍານະຄອນຫຼວງພິຊິດ ທິດສະຣາຊະນີສີໂຄດຕະບູນຫຼວງ"ປົກຄອງແຄວ້ນສີໂຄດຕະບອງ (ພະຍາແສນຫຼວງນີ້ແມ່ນລູກນ້ອງແມ່ຂອງພະວໍລະວົງສາທຳມິກະລາດຄື ເປັນນ້ອງອາວຂອງພະວໍລະວົງສາ).

ໃນປີຄ.ສ 1604 ຫຼັງຈາກພະຍາຄຳລຸນໄດ້ສິ້ນພະຊົນແລ້ວບັນດາລູກທັງຫຼາຍກໍ່ເກີດຄວາມຂັດແຍ່ງກັນເພື່ອຍາດຊິງກັນຂຶ້ນເປັນໃຫຍ່ດ້ວຍເຫດນັ້ນພະວໍລະວົງສາທຳມະກາຣາດຈຶ່ງໄດ້ນຳກອງທັບຂຶ້ນໄປແຄວ້ນເມືອງພວນຊຽງຂວາງເພື່ອແກ້ໄຂສະພາບໃຫ້ສະຫງົບ ແລະ ໄດ້ຕົກລົງແຕ່"ພະຍາຫຼວງອຸໄທທານີ" ປົກຄອງມາຮອດປີ ຄ.ສ 1618 ກໍ່ເສຍຊີວິດລວມອາຍຸໄດ້ 65 ປີ ພະວໍລະວົງສາຈຶ່ງໄດ້ແຕ່ງຕັ້ງ ເຈົ້າທິບມົນຕີ ຄອງແຄວ້ນເມືອງພວນຊຽງຂວາງສືບຕໍ່ມາ.

ນັບແຕ່ເຫດການຢູ່ນະຄອນຫຼວງວຽງຈັນ ແຄວ້ນສີໂຄດຕະບອງ ແລະ ແຄວ້ນພວນຊຽງຂວາງ ໄດ້ຖືກແກ້ໄຂແລ້ວ ສະພາບອານາຈັກລາວລ້ານຊ້າງກໍ່ມີຄວາມສະຫງົບສັນຕິສຸກ ບັນດາເມືອງໃຫຍ່ມີເມືອງຊຽງທອງ (ຫຼວງພະບາງ), ແຄວ້ນພວນຊຽງຂວາງ, ແຄວ້ນສີໂຄດຕະບອງ, ຮ້ອຍເອັດ ແລະ ຈຳປານະຄອນບູລີ (ຈຳປາສັກ) ກໍ່ມີຄວາມຈົງຮັກພັກດີຕໍ່ອຳນາດສ່ວນກາງ ທີ່ນະຄອນວຽງຈັນ. ໃນໄລຍະນີ້ປະຊາຊົນບັນດາເຜົ່າ ໄດ້ມີໂອກາດທຳມາຫາ

ລ້ຽງຊີບດ້ວຍຄວາມເບີກບານມ່ວນຊື່ນ ຄຽງຄູ່ກັບການປົກປັກຮັກສາ ເອກະລາດໄວ້ໃຫ້ໝັ້ນຄົງແລ້ວ ປົວແປງຊີວິດການເປັນຢູ່ ແລະ ວຽກງານວັດທະນະທຳສັງຄົມກໍ່ໄດ້ເອົາໃຈໃສ່ປົວແປງໃຫ້ດີຂຶ້ນ. ກ່ຽວກັບການສ້າງສາຍພົວພັນກັບບາງອານາຈັກທີ່ໃກ້ຄຽງ ເຊັ່ນ: ຂະແມ ປະກົດວ່າໄດ້ສືບຕໍ່ຮັກສາສາຍສຳພັນອັນດີໄວ້ຕໍ່ກັນ.

## 2. ການຍາດຊີງອຳນາດຂອງສັກດີນາລາວ

ນັບແຕ່ພະເຈົ້າພະວໍລະປີຕາ ວາງແຜນຢຶດອຳນາດຈາກ ພະວໍລະວົງສາ ທຳມິກາຣາດ ບໍ່ສຳເລັດເປັນເວລາຍາວນານໄດ້ສອງທົດສະຕະວັດກວ່າແລ້ວ ແຕ່ນັ້ນມາບ້ານເມືອງມີຄວາມສະຫງົບປະຊາຊົນມີໂອກາດທຳມາຫາກິນຢ່າງສະດວກສະບາຍ ແຕ່ມາຮອດປີ ຄ.ສ 1622 ຍ້ອນຄວາມມັກໃຫຍ່ໃຝ່ສູງຂອງພະຍາວຽງ ຫຼື ພະຍາເມືອງຈັນເຂົາໄດ້ດຳເນີນການແບ່ງແຍກພວກສັກດີນາ ພາຍໃນລາຊະວົງ ເຮັດໃຫ້ບັນດາວົງສານຸວົງ ຂອງເຈົ້າສັກດີນາແຕກແຍກກັນ ກໍ່ເພື່ອຈຸດປະສົງທີ່ຕົນ ຈະໄດ້ເປັນໃຫຍ່ໃນຜ່ນດິນລາວລ້ານຊ້າງ ສະນັ້ນພະຍາເມືອງຈັນ ຈຶ່ງໄດ້ຍຸແຍ່ພະອຸປະຍຸວະຣາດ ລູກຊາຍຜູ້ທີໜຶ່ງຂອງພະວໍລະວົງສາ ທຳມິກະຣາດ ເອົາກອງທັບເຂົ້າຢຶດນະຄອນວຽງຈັນ ແລ້ວຍົກກຳລັງພົນຂຶ້ນເມືອງຊຽງທອງ ເພື່ອຢຶດເອົານະຄອນຊຽງທອງ ໃນເວລານັ້ນພະວໍລະວົງສາ ທຳມິກະຣາດກຳລັງທຳພາລະກິດຢູ່ນະຄອນຊຽງທອງ ພ້ອມດ້ວຍເສນາອາມາດຜູ້ໃຫຍ່ຈຳນວນໜຶ່ງ ເມື່ອຮູ້ຂ່າວວ່າພະຍາວຽງ ຈະຄິດກະບົດຢຶດອຳນາດຢູ່ເບື້ອງຫຼັງນັ້ນ ຈຶ່ງໄດ້ແຕ່ງຕັ້ງໃຫ້ຫມ່ອມໄຊລູກຊາຍອີກຄົນໜຶ່ງພ້ອມດ້ວຍພະຍາອະນຸຊິດ ຍົກກອງທັບອອກຕໍ່ສູ້ກັບພະຍາວຽງ ແລະ ພະຍາອຸປະຍຸວະຣາດ ໃນເວລາດຽວກັນນັ້ນ ພະຍາວໍລະວົງສາ ທຳມິກະຣາດໄດ້ໃຫ້ພະຍາເມືອງພວນຊຽງຂວາງ ກະກຽມເອົາກຳລັງມາສົບທົບ ດັ່ງນັ້ນ, ການຕໍ່ສູ້ຄັ້ງນີ້ດຳເນີນໄປຢ່າງດຸເດືອດທີ່ສຸດ. ໃນເບື້ອງຕົ້ນກອງທັບຂອງມ່ອມໄຊ ແລະ ພະຍາອະນຸຊິດ ສາມາດຢຶດນະຄອນວຽງຈັນໄດ້ ພວກພະຍາວຽງໄດ້ອົບພະຍຸບຂ້າມນໍ້າຂອງ ໄປຕັ້ງທີ່ໝັ້ນຢູ່ທີ່ປາກນໍ້າໂມງ ຫມ່ອມໄຊ ແລະ ພະຍາອະນຸຊິດ ໄດ້ຍົກກຳລັງຕິດຕາມໄປຕີຄ້າຍປາກນໍ້າໂມງພະຍາວຽງ ແລະ ພະຍາອຸປະຍຸວະຣາດ ສູ້ບໍ່ໄດ້ຈຶ່ງຖອນກອງທັບໄປຕັ້ງທີ່ໝັ້ນຢູ່ວຽງຄຸກ. ສ່ວນທາງນະຄອນວຽງຈັນ ສັດຕູໄດ້ສົ່ງກຳລັງມາຈູດເຜົາ ພະວໍລະວົງສາທຳມິກະຣາດ ຢູ່ບໍ່ໄດ້ຈຶ່ງເອົາຄອບຄົວພ້ອມດ້ວຍບ່າວໄພ່ລາຊະດອນອົບພະຍຸບໄປຕັ້ງຫຼັກຢູ່ທ່າແຂກ , ແຕ່ສຸດທ້າຍກຳລັງຂອງມ່ອມໄຊ ແລະ ພະຍາອະນຸຊິດຖືກປາລາໄຊພະວໍລະວົງສາໄດ້ພາຄອບຄົວ ແລະ ພັກພວກຝ່າຍໜີໄປທາງບ້ານຊຽງແດງ ພະຍາວຽງກໍ່ເອົາກຳລັງໄປຕິດຕາມຈັບພະວໍລະວົງສາ ທຳມິກະຣາດ ພ້ອມດ້ວຍຄອບຄົວທັງໝົດ ແລ້ວປະຫານຊີວິດທີ່ບ້ານຊຽງແດງນັ້ນເລີຍ ນັບແຕ່ນັ້ນມາອານາຈັກລາວລ້ານຊ້າງ ກໍ່ເກີດຄວາມສັບສົນວຸ້ນວາຍ ພວກສັກດີນາໄດ້ແຕກແຍກກັນອອກເປັນຫຼາຍກຸ່ມ ແລະຂັດແຍ່ງກັກນຄື: ກຸ່ມຂອງພະອຸປະຍຸວະຣາດ ເຊິ່ງມີພະຍາວຽງເປັນຜູ້ຢູ່ເບື້ອງຫຼັງ ຂອງກຸ່ມພະຫມ່ອມແກ້ວ (ຕ່ອນຄຳ) , ກຸ່ມຂອງປະທຸມ, ຫມ່ອມຊົມພູ (ເຈົ້າຊົມພູ), ໝ່ອມພົນ ແລະແມ່ທັບພະຍາຈັນນະຄອນ ແລະ ກຸ່ມພະຍາສຸລິຍະກຸມມານ (ເຈົ້າສຸລິຍະວົງສາ) ກຸ່ມນີ້ໄດ້ພາກັນລົບໜີໄປລີ້ ຊ້ອນຢູ່ປ່າພູເຂົາຄວາຍ ເພື່ອເສີມສ້າງກຳລັງຢູ່ທີ່ນັ້ນແລະ ລໍຖ້າເງື່ອນໄຂທີ່ຈະອຳນວຍຄວາມສະດວກໃຫ້.

ເມື່ອແຜນກະບົດຂອງພະຍາວຽງ ໄດ້ສຳເລັດຕາມຄວາມໝາຍແລ້ວ ພວກພະຍາວຽງກໍ່ຍົກພະອຸປະຍຸວະຣາດ ຂຶ້ນເປັນເຈົ້າແຜ່ນດິນອານາຈັກລາວລ້ານຊ້າງ ໃນປີ ຄ.ສ 1622 ເຊິ່ງບໍ່ຫົວຊານຳການຄັດຄ້ານຂອງປະຊາຊົນເປັນສ່ວນຫຼາຍ, ແຕ່ຂຶ້ນຄອງລາດໄດ້ພຽງແຕ່ 9 ເດືອນ ກໍ່ເສຍຊີວິດເຮັດໃຫ້ພະຍາວຽງຕົກຢູ່ໃນທ່າໂດດດ່ຽວ ເຊິ່ງເວລານັ້ນມີຍົດເປັນພະຍາແສນຫຼວງຜູ້ບັນຊາການທະຫານສູງສຸດ ຫຼື ເອີ້ນອີກຢ່າງໜຶ່ງວ່າ "ພະຍາແສນຫຼວງຂວານຟ້າຜ່າ" ໃນເມື່ອສະພາບເປັນຄືແນວນັ້ນປະຊາຊົນທັງຫຼາຍ ຈຶ່ງຕົກລົງໄປເຊີນເອົາ "ພະຍານະຄອນຫຼວງພິຊິດ ທົດສະທິດຣາດຊະທານີສີໂຄດຕະບູນຫຼວງ" ທີ່ປົກຄອງເມືອງມະລຸກຂະນະຄອນ ແຄວ້ນສີໂຄດຕະບອງຂຶ້ນມາປົກຄອງອານາຈັກລາວລ້ານຊ້າງ ທີ່ນະຄອນຫຼວງວຽງຈັນໃນປີ ຄ.ສ1623 ພະອົງມີອາຍຸ 71 ປີແລ້ວ, ຍ້ອນປະຊາຊົນເຫັນຄຸນງາມຄວາມດີ ໃນການປົກປັກຮັກສາອານາຈັກ ມາແຕ່ສະໄໝພະວໍລະວົງສາພຸ້ນ. ເຖິງວ່າພະຍາວຽງຈະອອກແຮງຄັດຄ້ານ ກໍ່ບໍ່ສາມາດເອົາຊະນະໄດ້. ປະຊາຊົນກໍ່ໄດ້ ຂະຫນານນາມວ່າ "ພະບັນດິດໂພທິສາຣະຣາດ" ປົກຄອງ

ອານາຈັກໄດ້ປີປາຍ ພະຍາວຽງກໍ່ຄິດກະບົດ ຄື:  ໄດ້ນຳເອົາກຳລັງເຂົ້າຍຶດເອົາຫໍສະໜາມຫຼວງໄວ້ ແຕ່ເຫັນວ່າຈະສູ້ກຳລັງຂອງພະບັນດິດໂພທິສາຣະຣາດບໍ່ໄດ້ກໍ່ຈູດຫໍສະໜາມຫຼວງ ແລ້ວກໍ່ນຳກຳລັງຫລົບເຂົ້າປ່າເພື່ອສະສົມກຳລັງໃໝ່. ພະບັນດິດໂພທິສາລະລາດ ຈຶ່ງສັ່ງໃຫ້ກໍ່ສ້າງຫໍສະໜາມຫຼວງ ແລະ ພະລາຊະວັງຄືນໃໝ່ທີ່ທ່າພະລານໄຊ(ບໍລິເວນຄຸ້ມວັດນາມຫຼັກສາມທາງໄປທ່າເດື່ອ) ພະບັນດິດໂພທິສາລະລາດ ໄດ້ປົກຄອງອານາຈັກລາວລ້ານຊ້າງ ໄດ້ພຽງແຕ່ 4 ປີ ຄື: ປີຄ.ສ 1627 (ຈ.ສ 989 ເດື່ອ 5 ຂຶ້ນ 4 ຄ່ຳ ວັນອາທິດຍາມຕອນແລງ) ກໍ່ໄດ້ສິ້ນພະຊົນດ້ວຍໂລກຊະລາໃນເວລາທີ່ບ້ານເມືອງກຳລັງຫຍຸ້ງຍາກຢູ່.

ເມື່ອບັນດິດໂພທິສາລະລາດ ສິ້ນພະຊົນໄປແລ້ວບັນດາເສນາອາມາດຜູ້ໃຫຍ່ ແລະເຖົ້າແກ່ປະຊາຊົນທັງຫຼາຍ ໄດ້ຕົກລົງແຕ່ງຕັ້ງພະໜ່ອມແກ້ວ ຫຼື ພະທຳມະເທໂວ ໂອລົດອົງທີ 2 ຂອງພະວໍລະວົງສາຂຶ້ນເປັນເຈົ້າແຜ່ນດິນປົກຄອງອານາຈັກລາວລ້ານຊ້າງໃນປີ ຄ ສ 1627ໃນລາຊະການຂອງພະໜ່ອມແກ້ວບ້ານເມືອງເຕັມໄປດ້ວຍຄວາມຫຍຸ້ງຍາກສັຍສົນທີ່ສຸດ. ໂດຍສືບເນື່ອງມາຈາກລາຊະການກ່ອນ(ເພາະວ່າພະໜ່ອມແກ້ວແມ່ນກຸ່ມຂອງຝ່າຍດຽວກັບພະວໍລະວົງສາທຳມິກະລາດ, ພະບັນດິດໂພທິສາລະລາດ ເຊິ່ງເປັນຝ່າຍປໍລະປັກກັບພະຍາວຍງ). ດັ່ງນັ້ນ, ພະມ່ອນແກ້ວຂຶ້ນຄອງບັນລັງໄດ້ 1 ປີ ຮອດປີ ຄ ສ 1628 ພະຍາແສນຫຼວງຂວັນຟ້າຜ່າ(ພະຍາວຽງ) ກໍ່ໄດ້ນຳເອົາກໍ່າລັງເຂົ້າຍຶດນະຄອນວຽງຈັນ ແຕ່ກໍ່າລັງຫຼວງຂອງພະໜ່ອມແກ້ວໄດ້ເຂົ້າປ້ອງກັນນະຄອນວຽງຈັນໄວ້ຢ່າງເຂັ້ມແຂງ ສາມາດຕີກອງທັບຂອງພະຍາວຽງແຕກຝ່າຍໜີໄປ ແລ້ວພະໜ່ອມແກ້ວໄດ້ເອົາກຳລັງໄລ່ຕາມຈັບພະຍາວຽງໄດ້ແລ້ວປະຫານຊີວິດທີ່ທ່າເວີນຄວ່າງໄຊ(ທ່າພະລານໄຊຫຼັກ 3 ທາງໄປຈີນາຍໂມ້). ຕໍ່ນັ້ນມາບ້ານເມືອງກໍ່ມີຄວາມສະຫງົບ ໄປຊົ່ວໄລຍະໜຶ່ງ ມາເຖິງປີ ຄ ສ 1635 ພະປະທຸມ, ໜ່ອມຊົມພູ, ໜ່ອມພິມ ແລະ ພະຍາຈັນນະຄອນໄດ້ຮ່ວມຫົວກັນເປັນກະບົດລຸກຂຶ້ນເພື່ອໂຄ່ນລົ້ມພະຍາໜ່ອມແກ້ວ ແຕ່ບໍ່ສຳເລັດຜົນ ກອງກຳລັງຫຼວງຂອງໜ່ອມແກ້ວໄດ້ຈັບເອົາພະຈັນນະຄອນໄປປະຫານຊີວິດສ່ວນພະປະທຸມ, ໜ່ອມຊົມພູ ແລະ ໜ່ອມພິມ ຫຼົບໜີໄປຈີນຮອດປີ ຄ ສ 1636 ພະປະທຸມ, ໜ່ອມພິມ ແລະ ໜ່ອມຊົມພູ ໄດ້ກັບຄືນມາຍຶດເອົາວຽງຈັນອີກເທື່ອໃໝ່ ແຕ່ເຫັນວ່າຈະສູ້ກອງທັບຫຼວງຂອງພະໜ່ອມແກ້ວບໍ່ໄດ້ ຈຶ່ງໄດ້ເອົາໄຟຈູດຫໍສະໜາມຫຼວງ ແລ້ວໜີເຂົ້າປ່າ ແຕ່ໃນທີ່ສຸດພະປະທຸມ ແລະ ໜ່ອມພິມກໍ່ຖືກຈັບໄດ້ແລ້ວຖືກປະຫານຊີວິດ ພະໜ່ອມແກ້ວໄດ້ປົກຄອງອານາຈັກລາວລ້ານຊ້າງຮອດປີ 1638(ຈ ສ 1000 ເດືອ 6 ຂຶ້ນ 4 ຄ່ຳ) ພະອົງໄດ້ສິ້ນພະຊົນ.

## II. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າສຸລິຍະວົງສາທຳມິກະລາດປີຄສ 1638-1695

### 1. ການຂຶ້ນຄອງລາດຊະບັນລັງຂອງເຈົ້າສຸລິຍະວົງສາ

ຫຼັງຈາກໜ່ອມແກ້ວສິ້ນພະຊົນແລ້ວ ເຈົ້າສຸລິຍະກຸ່ມມານ ລູກຂອງພະວໍລະວົງສາທຳມິກະຣາດພ້ອມດ້ວຍພັກພວກ 509 ຄົນທີ່ໄດ້ໄປລີ້ຊ້ອນຢູ່ປ່າເຂດພູເຂົາຄວາຍດັ່ງທີ່ໄດ້ກ່າວມາແລ້ວນັ້ນ. ເມື່ອຊາບຂ່າວວ່າພະໜ່ອມແກ້ວອ້າຍຂອງຕົນນັ້ນສິ້ນພະຊົນແລ້ວບ້ານເມືອງຍິ່ງເກີດຄວາມຂັດແຍ່ງສັບສົນຂຶ້ນເພາະ ໜ່ອມຊົມພູ (ເຈົ້າຊົມພູ), ເຈົ້າບຸນຊູ ແລະ ອ້າຍນ້ອງຄົນອື່ນໆອີກກຳລັງຂັດແຍ່ງ ແລະ ຍາດຊີງກັນຂຶ້ນກຳອຳນາດ ເມື່ອສະພາບເປັນຄື ແນວນັ້ນເຈົ້າສຸລິຍະກຸມມານພ້ອມດ້ວຍພັກພວກຈຶ່ງໄດ້ຍົກເອົາກຳລັງຈາກພູເຂົາຄວາຍເຂົ້າຍຶດເອົາເມືອງວຽງຈັນໄດ້ສຳເລັດຜົນ, ປະຊາຊົນທັງຫຼາຍຈຶ່ງຍົກເອົາເຈົ້າສຸລິຍະກຸມມານຂຶ້ນເປັນເຈົ້າແຜ່ນດິນອານາຈັກລາວລ້ານຊ້າງ. ໄດະຂະໜານາມວ່າ “ສົມເດັດພະເຈົາສຸລິຍະວົງສາ ໄຊຍະເສດຖາທຳມິກະລາດ” ຫຼື “ເຈົ້າອົງຫຼວງ ຫຼື ອາດຍາອົງຫຼວງ” ພິທີການເຫຼີມສະຫຼອງໄຊນີໄດ້ຈັດຂຶ້ນເປັນເວລາ 3 ມື້ 3 ຄືນທີ່ນະຄອນຫຼວງວຽງຈັນໃນເດືອນ 6 ເພັງ ຈຸນລະສັງກາດ 1000 ຄ ສ 1638). ນັບແຕ່ເຈົ້າສຸລິຍະວົງສາທາມິກະລາດເຂົ້າຢຶດອານາດທີ່ນະຫຼວງວຽງຈັນໄດ້ແລ້ວກໍ່ດາເນີນການກວດລ້າງບັນດາກຸ່ມ ແລະ ບັນດາບຸກຄົນທີ່ເປັນປໍລະປັກທີ່ຍຶດເຍື້ອຍາວນານມາໄດ້ 3 ທົດສະວັດກວ່າແລ້ວນັ້ນໃຫ້ໝົດໄປດັ່ງນັ້ນ, ພະອົງຈຶ່ງໄດ້ຕົກລົງຈັດການກັບຍາດຕິພີ່ນ້ອງທີ່ຈະເປັນສັດຕູໜີຈາກເມືອງໄປໃຫ້ໝົດຄື:

- ເນລະເທດໝ່ອມຊຶມພູ(ອ້າຍນ້ອງເຈົ້າສຸລິຍະກຸ່ມມານ) ພ້ອມດ້ວຍພັກພວກໃຫ້ໜີຈາກອານາຈັກລາວລ້ານຊ້າງ. ເຈົ້າຊຶມພູ ແລະ ພັກພວກໄດ້ໜີໄປລີ້ໄພຢູ່ເມືອງເວ້ ອານາຈັກດາຍຫວຽດ ເຈົ້າຊຶມພູມີລູກຊາຍອົງໜຶ່ງຊື່ວ່າ: ເຈົ້າໄຊອົງເຫ້ວ ຕໍ່ມາເຈົ້າຊຶມພູໄດ້ເສຍຊີວິດລົງແລ້ວພະຊາຍາໄດ້ເອົາກັບແສນທິບນາບົວ ໄດ້ລູກອີກໜຶ່ງຄົນຊື່ວ່າເຈົ້າລອງ ຫຼື ເຈົ້ານ້ອງ
- ເຈົ້າບຸນຊູ(ອ້າຍອີກຄົນໜຶ່ງ)ໄດ້ຕົກລົງອອກບວດເປັນພະພິຊຸໃນພຸດທະສາສະໜາຢູ່ທີ່ພູຫໍພູໂຮງໃນເຂດທ່າປາງທອງສະຫວັນນະເຂດ
- ຕົກລົງແຕ່ງຕັ້ງເຈົ້າປຸ(ຫຼານ)ລູກຂອງເຈົ້າວິໄຊ (ໝ່ອມໄຊ)ໄປປົກຄອງເມືອງດ່ານຊ້ານ(ຊຽງຄານ)
- ໄດ້ສົ່ງເຈົ້າສ້ອຍ ນ້ອງຊາຍເຈົ້າປຸ ໄປປົກຄອງເມືອງພະພິ(ອຳເພີຕະການແຂວງອຸບົນປະເທດໄທປັດຈຸບັນ)
- ໃນປີ ຄ ສ 1639ໄດ້ຕົກລົງຖອດພະຍາອານຸຣາດ ອອກຈາກຕຳແໜ່ງເຈົ້າປົກຄອງແຄວ້ນສີໂຄດຕະບອງ ແລະ ຍົກຍ້າຍເຈົ້າປຸທີ່ປົກຄອງເມືອງດ່ານຊ້າຍນັ້ນໄປປົກຄອງແຄວ້ນສີໂຄດຕະບອງແທນ.

ເຖິງແມ່ນວ່າເຈົ້າສຸລິຍະວົງສາທຳມິກະຣາດຍຶດອຳນາດໄດ້ຈາກພວກກະບົດສ່ວນໃຫຍ່ແລ້ວກໍ່ຕາມແຕ່ສະພາບທົ່ວອານາຈັກຍັງບໍ່ທັນໄດ້ສະຫງົບໝົດເທື່ອຄື ໃນປີ ຄ ສ 1640 ພະອານຸຊາເຖົ້າໂຮມກຳລັງຈຳນວນໜຶ່ງ ເປັນພັກພວກກໍ່ຄວາມວຸ້ນວາຍຂຶ້ນເປົ້າໝາຍກໍ່ເພື່ອຍຶດເອົາອຳນາດການປົກຄອງຈາກເຈົ້າສຸລິຍະວົງສາທຳມິກະຣາດ ແຕ່ກໍ່ຖືກກຳລັງຂອງເຈົ້າສຸລິຍະວົງສາທຳມິກະຣາດປາບປາມລົງໄດ້ ແລະ ໃນປີດຽວກັນນີ້ເອງກໍ່ເກີດຄວາມເຂົ້າໃຈຜິດລະຫວ່າງນະຄອນວຽງຈັນກັບແຄ້ວນພວນຊຽງຂວາງເຈົ້າສຸລິຍະວົງສາທຳມິກະຣາດ ໄດ້ສົ່ງກອງກຳລັງຂຶ້ນໄປແກ້ໄຂໄດ້ສຳເລັດ ແລ້ວຕົກລົງແຕ່ງຕັ້ງເຈົ້າຄຳສັ້ນ ເປັນເຈົ້າປົກຄອງແຄວ້ນພວນຊຽງຂວາງເພື່ອສະແດງຄວາມບໍລິສຸດຕໍ່ເຈົ້າສຸລິຍະວົງສານະຄອນວຽງຈັນນັ້ນ ເຈົ້າຄຳສັ້ນໄດ້ສົ່ງທິດາ(ລູກສາວ)ຂອງຕົນຊື່ວ່ານາງແກ່ນຈັນມາຖວາຍແກ່ເຈົ້າສຸລິຍະວົງສາ ທຳມິກະຣາດ ພ້ອມດ້ວຍຄອບຄົວຄົນລາວພວນ 1000 ຄອບຄົວລົງມາຮັບໃຊ້ເຈົ້ານາງແກ່ນຈັນ. ນັບແຕ່ນັ້ນມາບ້ານເມືອງໄດ້ກ້າວເຂົ້າສູ່ຄວາມສະຫງົບສຸກປະສາຈາກໄພທັງປວງ, ຈາກຄວາມຂັດແຍ່ງ ແລະ ບາດໝາງເຊິ່ງກັນ ແລະ ກັນລະຫວ່າງສັກດິນາເພື່ອຍາດຊີງກັນຂຶ້ນກຳອຳນາດໄດ້ສິ້ນສຸດລົງ.

## 2. ການປັບປຸງທາງດ້ານການເມືອງ-ການປົກຄອງ

### ກ. ຖານະ ແລະ ສິດອຳນາດຂອງສະຖາບັນກະສັດ

ຮູບແບບການປົກຄອງຂອງອານາຈັກລາວລ້ານຊ້າງໃນສະໄໝເຈົ້າສຸລິຍະວົງສາທຳມິກະຣາດແມ່ນປົກຄອງດ້ວຍລະບອບລາຊາທິປະໄຕສົມບູນເຊິ່ງລະອຽດໄດ້ມີການແບ່ງຖານະດັ່ງນີ້:

- **ພະມະຫາກະສັດ ຫຼື ເຈົ້າຊີວິດ ຜູ້ມີອຳນາດສູງສຸດ**

  ເປັນຜູ້ມີສິດອຳນາດເດັດຂາດພຽງຜູ້ດຽວໃນການປົກຄອງອານາຈັກບໍ່ວ່າທາງດ້ານການປົກຄອງ, ການເມືອງ, ການທະຫານ, ເສດຖະກິດ-ສັງຄົມ ແລະ ອື່ນໆມີສິດແຕ່ງຕັ້ງ ແລະ ໃຫ້ຍົດຖາບັນດາສັກແກ່ບຸກຄົນທີ່ມີຄວາມດີຄວາມຊອບຕໍ່ອານາຈັກ ແລະ ມີສິດຖອດຖອນ, ຂັບໄລ່ ຕະຫຼອດຮອກການຕັດສິນປະຫານຊີວິດແກ່ບຸກຄົນທີ່ທໍລະຍົດຕໍ່ຊາດ. ພິເສດໃນສະໄໝຂອງພະອົງນີ້ເຊິ່ງຖືຕົນເອງເໝືອນກັນເທບພະເຈົ້າ ຫຼື ເວົ້າວ່າມີອຳນາດແບບເທວະກະສັດຜູ້ຍິ່ງໃຫຍ່ທີ່ລົງມາຈາກເມືອງສະຫວັນເຊິ່ງຕ່າງກັບເຈົ້າຊີວິດອົງກ່ອນໆ.

- **ອຳນາດຂອງເຈົ້າອຸປະຣາດ**

  ເຈົ້າອຸປະຣາດແມ່ນບຸກຄົນທີ່ສຳຄັນທີ່ຄັດເລືອກຈາກເຊື້ອສາຍເຈົ້າຊີວິດ ມີຕຳແໜ່ງສູງສຸດຖັດຈາກເຈົ້າຊີວິດ ເຮັດໜ້າທີ່ຊ່ວຍເຈົ້າຊີວິດ ແລະ ເຮັດວຽກແທນເຈົ້າຊີວິດໄດ້ເມື່ອເຈົ້າຊີວິດບໍ່ຢູ່ມະຫາອຸປະຣາດແມ່ນສະມາຊິກທີ່ສຳຄັນຂອງສະຖາບັນຂອງມະຫາກະສັດ ແລະ ເປັນປະທານກອງປະຊຸມຂອງຄະນະເສນາບໍດີ(ຄະນະລັດທະມົນຕີ). ເມື່ອເຈົ້າຊີວິດສິ້ນພະຊົນມະຫາອູປະຣາດມີສິດຄັດເລືອກເອົາບຸກຄົນ

ຫຼື ສັກດິນາຄົນໃດຄົນໜຶ່ງ ຂຶ້ນຄອງລາຊະສົມບັດແທນມີສິດເກັບເກນເອົາກຳລັງເຂົ້າສູ່ສົງຄາມໃນເວລາຖືກສັດຕູຮຸກຮານໃນສະໄໝການປົກຄອງຂອງເຈົ້າສຸລິຍະວົງສາທຳມິກະຣາດ ມີ ອຸປະຣາດເຖິງ 8 ຄົນ ໃນນັ້ນຜູ້ທີ 1 ເອີ້ນວ່າເຈົ້າສຸລິຍະວົງສາທກມີກະລາດ ມີໜ້າທີ່ຮັບຜິດຊອບແຜ່ນດິນ ສ່ວນອີກ 7 ຄົນມີໜ້າທີ່ເບິ່ງແຍງຜົນປະໂຫຍດຂອງຂອງຫົວເມືອງໃຫຍ່ ຫຼື ຂັ້ນເຂື່ອນເມືອງຕ່າງໆ.

ຄະນະອຸປະຣາດທັງ 8 ທ່ານນີ້ແມ່ນອົງປະກອບທີ່ສຳຄັນທີ່ສຸດຂອງສະພາມະຫາກະສັດປົກຄອງແຜ່ນດິນເປັນປະທານຂອງຄະນະເສນາບໍດີເບິ່ງສິດຜົນປະໂຫຍດຕົວຈິງແກ່ເຈົ້າຊີວິດ.

- **ອຳນາດເຈົ້າລາຊະວົງ**

ເຈົ້າລາຊະວົງແມ່ນຕຳແໜ່ງໜຶ່ງຂອງລາຊະຕະກຸນ(ຜູ້ເປັນເຊື້ອສາຍຂອງເຈົ້າຊີວິດ ຫຼື ເຈົ້າສັກດິນາ) ປົກກະຕິແລ້ວເຮັດໜ້າທີ່ຊ່ວຍເຈົ້າອຸປະຣາດ ຫຼື ຮອງເຈົ້າອຸປະຣາດ ຕາມເງື່ອນໄຂ ແຕ່ສ່ວນຫຼາຍແລ້ວເບິ່ງແຍງກ່ຽວກັບສານຕຸລາການນຳເສນາບໍດີຝ່າຍກາງ. ນອກຈາກນີ້ຍັງມີສິດເລື່ອນຖານະຂຶ້ນເປັນເຈົ້າອຸປະຣາດໄດ້.

- **ອຳນາດຂອງເຈົ້າລາຊະບຸດ**

ເຈົ້າລາຊະບຸດແມ່ນຕຳແໜ່ງໜຶ່ງຂອງລູກ ແລະ ຫຼານເຈົ້າຊີວິດ ມີໜ້າທີ່ເບິ່ງແຍງສິດຜົນປະໂຫຍດແຜ່ນດິນນຳເສນາບໍດີຝ່າຍຂວາໂດຍສະເພາະນຳພະຍາເມືອງຂວາເປັນເສນາທິການກອງທັບ, ກົມຄັງຫຼວງ, ກົມນາ ແລະ ມີສິດເລື່ອນຖານະຂຶ້ນເປັນເຈົ້າຊີວິດໃນເມື່ອເຈົ້າຊີວິດສິ້ນພະຊົນ.

- **ຖານະ ແລະ ສິດອຳນາດຂອງເສນາບໍດີ**

ຄະນະເສນາບໍດີແມ່ນຄະນະບໍລິຫານໜ່ວຍວຽກງານຂອງຊາດຮັບຜິດຊອບຫຼາຍກົມໃນສະໄໝເຈົ້າສຸລິຍະວົງສາທຳມິກະຣາດ ນີ້ພະອົງໄດ້ແບ່ງວຽກງານອອກເປັນ 4 ຂະແໜງການໃຫຍ່ ຄື : ກົມເມືອງ, ກົມວັງ, ກົມຄັງ, ກົມນາ ການແບ່ງໜ່ວຍງານອອກເປັນ 4 ຂະແໜງນີ້ເພິ່ນເອີ້ນວ່າ "ຈັດຕຸສະດົມ"ແປວ່າ 4 ຫຼັກ(ລະບົບວຽກງານນີ້ເປັນວິທີປົກຄອງຂອງບູຮານທີ່ໄດ້ຮັບອິດທິພົນຈາກອິນເດຍເພາະວ່າອານາຈັກຢູ່ໃນອາຊີຕາເວັນອອກສ່ຽງໃຕ້ກໍ່ມີລະບົບການປົກຄອງຄ້າຍຄືກັນ) ຄະນະເສນາບໍດີທຳຮັບຜິດຊອບວຽກງານດັ່ງກ່າວໄດ້ແບ່ງອອກເປັນ 2ສາຍ ຫຼື 2 ສາຂາໃຫຍ່ຄື: ເສນາບໍດີຝ່າຍຂວາ ແລະ ເສນາບໍດີຝ່າຍຊ້າຍ ຫຼື ເອີ້ນຢ່າງໜຶ່ງວ່າຝ່າຍທະຫານ ແລະ ຝ່າຍປົກຄອງ ເສນາບໍດີທັງ 2 ສາຂານີ້ມີສິດເຂົ້າຮ່ວມກອງປະຊຸມສະພາປົກຄອງຂອງພະມະຫາກະສັດຄືຜູ້ເຮັດວຽກໃຫ້ເຈົ້າຊີວິດເຊິ່ງເອີ້ນວ່າຂ້າລາຊະການຂຸນນາງຂອງເຈົ້າຊີວິດເຊິ່ງລາຍລະອຽດລຸ່ມນີ້:

- **ຄະນະບໍດີຝ່າຍຂວາ:** ມີໜ້າທີ່ປ້ອງກັນອານາຈັກ ແລະ ຮັບຜິດຊອບ 2 ກົມໃຫຍ່ຄື ກົມຄັງ ແລະ ກົມນາ ຄະນາເສນາບໍດີຝ່າຍຂວາມີຍົດສັກຕຳແໜ່ງຂັ້ນພະຍາມີເຖິງ 10 ພະຍາຄື:
  - ພະຍາແສນເມືອງ ຮັບຜິດຊອບທັງໝົດຂອງເສນາບໍດີຝ່າຍຂວາຕົ້ນຕໍແມ່ນວຽກງານປ້ອງກັນອານາຈັກ
  - ພະຍາເມືອງຂວາດຳລົງຕຳແໜ່ງເປັນຮອງ ຮັບຜິດຊອບຊ່ວຍພະຍາແສນເມືອງ ແລະ ກົມການຄັງ
  - ພະຍາຊຽງເໜືອມີໜ້າທີ່ຮັບຜິດຊອບກົມນາ
  - ພະຍາເມືອງຮາມ ຮັບຜິດຊອບ ສາງອາວຸດ, ສາສະໜາ ອີກ 6 ພະຍາ ພະຍາຊຽງສາ, ພະຍາພົນນາ, ພະຍາສອງເມືອງ, ພະຍາໝື່ນເມືອງເໜືອ, ພະຍາໝື່ນໜ້າ ແລະ ພະຍານ້ຳຮຸ່ງ ແມ່ນມີໜ້າທີ່ຊ່ວຍທົ່ວໄປຂອງຄະນະເສນາບໍດີຝ່າຍຂວາ.

- **ຄະນະເສນາບໍດີຝ່າຍຊ້າຍ:** ມີໜ້າທີເຮັດວຽກກ່ຽວກັບການປົກຄອງ ແລະ ຮັກສາຄວາມສະຫງົບພາຍໃນຮັບຜິດຊອບ 2 ກົມໃຫຍ່ຄື: ກົມເມືອງ ແລະ ກົມວັງ, ສະມາຊິກເສນາບໍດີຝ່າຍຊ້າຍມີຍົດສັກຕຳແໜ່ງຂັ້ນພະຍາ ເຖິງ 10 ພະຍາຄື:
  - ພະຍາເມືອງຈັນ ຮັບຜິດຊອບວຽກງານທັງໝົດຂອງຝ່າຍຊ້າຍໂດຍສະເພາະແມ່ນວຽກງານປົກຄອງ
  - ພະຍາເມືອງຊ້າຍຮັບຜິດຊອບກຸ່ມເມືອງຊ່ວຍພະຍາເມືອງແສນ
  - ພະຍາຊຽງໃຕ້ຮັບຜິດຊອບກົມວັງ ແລະ ເບິ່ງແຍງໃນພະລາຊະວັງຫຼວງ
  - ພະຍາເມືອງປາກຮັບຜິດຊອບພະແນກບັນຊີພົນລະເມືອງ ແລະ ໃນສາມປີໃດສຳຫຼວດເທື່ອໜຶ່ງສ່ວນອີກ 6 ພະຍາຄື : ພະຍາຂາ, ພະຍາເມືອງຄຸກ, ພະຍາພົນໜອງ, ພະຍາອີໄລ, ພະຍາໝື່ນໃຕ້ ແລະ ເພຍເມືອງເສນາທັງໝົດນີ້ເປັນຜູ້ຊ່ວຍວຽກງານຂອງຄະນະເສນາບໍດີຝ່າຍຊ້າຍ.
  - ຄະນະເສນາບໍດີຝ່າຍກາງ ມີໜ້າທີ່ກໍ່ສ້າງກົດໝາຍ ແລະ ສານເປັນຜູ້ສືບສວນຄະດີ ແລະ ຕັດສິນລົງໂທດຕໍ່ຜູ້ກະທຳຜິດເພື່ອສະເໜີໃຫ້ເຈົ້າຊີວິດລົງຄວາມເຫັນສຳລັບສານມີ 2 ປະເພດຄື: ສານປະຊາຊົນມີພະຍາເມືອງຮັບຜິດຊອບ, ສານພະລາຊະວັງມີ ພະຍາປະຊຸມຮັບຜິດຊອບ, ນອກຈາກນີ້ຍັງມີພະຍາໂຍທາ, ເພ້ຍຊານົນ, ເພ້ຍສີພັດພະນາມ, ເພ້ຍສີສະໝຸດ ແລະ ເພ້ຍສີສຸມົນເປັນຜູ້ຊ່ວຍວຽກຂອງເສນາບໍດີຝ່າຍກາງ.

**ຂ. ການຈັດຮູບແບບການປົກຄອງ**

ອານາຈັກລາວລ້ານຊ້າງສະໄໝການປົກຄອງຂອງເຈົ້າສຸລິຍະວົງສາທຳມິກະຣາດລະຫວ່າງ ຄ ສ 1638-1695 ມີຂອບເຂດກວ້າງຂວາງກວມເອົາສອງຝັ່ງໂຫຼ້ງແມ່ນ້ຳຂອງຕອນກາງ ແລະ ອານາຈັກນີ້ມີລະບຽບກົດໝາຍການປົກຄອງເຂັ້ມແຂງ, ຈາກບົດບັນທຶກຂອງຄະນະທູດການຄ້າຊາວໂຮນລັງທີ່ເຂົ້າມານະຄອນວຽງຈັນທີ່ເຂົ້າມາໃນປີ ຄ ສ 1641 ໄດ້ກ່າວໄວ້ວ່າມີ 7 ຫົວເມືອງໃຫຍ່ (ຂັ້ນອຸປະຣາດປົກຄອງ) ແລະ ຫຼາຍຫົວເມືອງນ້ອຍປະກອບຢູ່ໃນອານາຈັກລາວລ້ານຊ້າງ( ແຕ່ໜັງສືພື້ນເມືອງລາວກ່າວໄວ້ວ່າມີ 13 ຫົວເມືອງທີ່ລວມຢູ່ໃນອານາຈັກລາວລ້ານຊ້າງ)ສະໄໝເຈົ້າສຸລິຍະວົງສາທຳມິກະຣາດນັ້ນໄດ້ມີການຈັດເຂດປົກຄອງອອກຄື: ນະຄອນຫຼວງວຽງຈັນ ຫຼື ເມືອງເອກ, ຫົວເມືອງໃຫຍ່ ຫຼື ຂັ້ນເຂື່ອນເມືອງ ແລະ ເມືອງຂອບດ່ານ ຫຼື ຂັ້ນດ່ານເມືອງດັ່ງນີ້:

- **ນະຄອນວຽງຈັນ ຫຼື ເມືອງເອກ**

ເມືອງວຽງຈັນໃນສະໄໝການປົກຄອງຂອງເຈົ້າສຸລິຍະວົງສາທຳມິກະຣາດສະຕະວັດທີ XVII ເປັນເມືອງທີ່ມີຄວາມຮຸ່ງເຮືອງທີ່ສຸດ ເຊິ່ງປະກອບດ້ວຍເມືອງສຳຄັນທີ່ເປັນປ້ອມດ່ານໜ້າເຊັ່ນ: ເມືອງວຽງຄຳ(ເມືອງເກົ່າທຸລະຄົມ) 70 ກິໂລແມັດໄປທາງພາກຕາເວັນນອອກສ່ຽງເໜືອ, ເມືອງຊຽງຄານ(ຊະນະຄາມເກົ່າ)ຕັ້ງຢູ່ລ່ອງແມ່ນ້ຳຂອງທາງທິດເໜືອ, ເມືອງຜານ້ຳຮຸ່ງ(ບໍລິເວນປາກນ້ຳກະດິງ) ເບື້ອງເໜືອເມືອງວຽງຄຸກ, ເມືອງວຽງພະໂຄ, ເມືອງປາກຫ້ວຍຫຼວງ( ຕັ້ງຢູ່ຈັ່ງຫວັດໜອງຄາຍປະເທດໄທປັດຈຸບັນ) ນະຄອນວຽງຈັນ ເປັນເມືອງໃຫຍ່ ແລະ ສວຍງາມມີປະຊາຊົນອາໄສຢູ່ຢ່າງໜາແໜ້ນ, ເມືອງນີ້ມີກຳແພງດິນຈີ່ອ້ອມຮອບ 2 ຊັ້ນກວມເອົາສອງຝັ່ງໂຫຼ້ງແມ່ນ້ຳຂອງ ຊັ້ນທີໜຶ່ງຍາວ 4 ກິໂລແມັດ, ກວ້າງ ຫຼື ເລິກປະມານ1200 ແມັດເມືອງຢູ່ພາຍໃນກຳແພງຊັ້ນທີ ໜຶ່ງນີ້ ກວມເອົາບ້ານເຮືອນຂອງຊົນຊັ້ນສັກດີນາ, ຂຸນນາງ ແລະ ວັດສຳຄັນທາງພຸດທະສາສະໜາໃນນັ້ນມີວັດສີມເດັດພະສັງຄະຣາດ(ເຈົ້າຊີວິດພະ) ຕັ້ງຢູ່ບໍລິເວນໂຮງແຮມລ້ານຊ້າງປະຈຸບັນ. ສຳລັບກຳແພງຊັ້ນທີ2 ຫຼື ຊັ້ນນອກນັ້ນຍາວປະມານ 14 ກິໂລແມັດກໍ່ສ້າງດ້ວຍດິນຈີ່ເສີມສ້າງດ້ວຍດິນໜຽວທີ່ແຂງທີ່ສຸດໃນສະໄໝຂອງເຈົ້າສຸລິຍະວົງສາທຳມິກະຣາດ.

ຕາມການບັນທຶກຂອງຄະນະທູດການຄ້າຊາວໂຮນລັງ ແລະ ຄະນະສາສະໜາຄຣິດຖຸນພໍ່ມາລີນີ ແລະ ລີເລຍຊາວເອີຣົບທີ່ເຂົ້າມາວຽງຈັນໃນປີ ຄ ສ 1641-1642ມີເນື້ອໃນບາງຕອນກ່າວເຖິງນະຄອນວຽງຈັນວ່າ ດ້ານໜຶ່ງມີກຳແພງສູງ, ມີຮ່ອງນ້ຳເລິກອ້ອມ ແລະ ອີກດ້ານໜຶ່ງມີນ້ຳຂອງເປັນທີ່ປ້ອງກັນສັດຕູ, ແລະ ພະລາຊະວັງປຸກສ້າງ

ຢ່າງມີລະບຽບກວ້າງຂວາງມີສິ່ງກໍ່ສ້າງທີ່ໃຫຍ່ໂຕ ເມື່ອເບິ່ງເຂົ້າມາແຕ່ໄກຄືວ່າ ແມ່ນເມືອງໜຶ່ງຕ່າງຫາກຫ້ອງບ່ອນປະທັບຂອງເຈົ້າຊີວິດສວຍສົດງົດງາມທີ່ສຸດຊຸມປະຕູ ແລະ ບານປະຕູຂອງພະລາຊະວັງນີ້ປະກອບດ້ວຍດອກດວງ ພະລາຊະວັງນີ້ເຮັດດ້ວຍໄມ້ທີ່ດີທີ່ສຸດ ມີຫຼາຍຫ້ອງ ຫຼາຍແຖວຕໍ່ໆກັນຟອກດ້ວຍນໍ້າຄໍາທີ່ສົດໃສເມື່ແນມມາແຕ່ໄກຄືວ່າເອົາຄໍາເປັນແທ່ງມາຕັ້ງໄວ້ໃນປະສາດ, ສໍາລັບເຮືອນຂອງ ເຈົ້ານາຍ ແລະ ເສດຖີຜູ້ຮັ່ງມີ ເຮັດດ້ວຍໄມ້ປະດັບດ້ວຍດອກດວງທີ່ສວຍງາມທີ່ສຸດ, ແຕ່ເຮືອນປະຊາຊົນທົ່ວໄປນັ້ນເປັນເຮືອນສູງມຸງດ້ວຍຫຍ້າ ມີແຕ່ພະສົງເທົ່ານັ້ນທີ່ຢູ່ເຮືອນດີ ກໍ່ດ້ວຍດິນຈີ່ນີ້ສະແດງວ່ານະຄອນຫຼວງວຽງຈັນໃນສະໄໝເຈົ້າສຸລິຍະວົງສາ ທໍາມິກະຣາດເປັນນະຄອນຫຼວງທີ່ສວຍງາມ ມີປະຊາຊົນທີ່ໜາແໜ້ນ. ແຕ່ການບັນທຶກນີ້ບໍ່ໄດ້ເວົ້າເຖິງຈໍານວນພົນລະເມືອງທີ່ຢູ່ໃນນະຄອນຫຼວງວຽງຈັນມີເທົ່າໃດແທ້ ຕາມແຫຼ່ງບູຮານຄະດີທີ່ພົບເຫັນຢູ່ວຽງຈັນນີ້ ຜັງເມືອງບູຮານນັ້ນມີກໍາແພງເມືອງບູຮານ, ວັດວາອາຮາມທາງພຸດທະສາສະໜາ ແລະ ວັດຖຸສິລະປະອື່ນໆສະໄໝສະຕະວັດທີXVII ມີຫຼາຍທີ່ສຸດພິເສດແມ່ນວັດຖຸທາງພຸດທະສາສະໜາທີ່ກວດພົບ ມີປະມານ 120 ວັດເຊິ່ງເວລານັ້ນວັດກໍ່ຄືໂຮງຮຽນອົບຮົມປະຊາຊົນດັ່ງນັ້ນພົນລະເມືອງຫຼືປະຊາຊົນທີ່ອາໃສຢູ່ນະຄອນຫຼວງວຽງຈັນ ເວລານັ້ນຢ່າງນ້ອຍກໍ່ປະມານ 60.000 ຄົນ ສະເພາະອາໄສຢູ່ກໍາແພງດ້ານໃນບໍ່ນັບປະຊາຊົນທີ່ອາໃສຢູ່ນອກກໍາແພງທັງສອງຊັ້ນ.

- **ຂັ້ນຫົວເມືອງໃຫຍ່ ຫຼື ຂັ້ນເຂື່ອນເມືອງ**

ອານາຈັກລາວລ້ານຊ້າງໃນສະຕະວັດທີXVII ໂດຍສະເພາະສະໄໝການປົກຄອງຂອງພະເຈົ້າສຸລິຍະວົງສາ ທໍາມິກະຣາດ ຂັ້ນຫົວເມືອງໃຫຍ່ໃນທົ່ວອານາຈັກລາວລ້ານຊ້າງເວລານີ້ມີເຖິງ 7 ຫົວເມືອງໃຫຍ່(ຈາກບົດບັນທຶກຂອງທ່ານວັນວຸດສະຕົບ)ໃນທົ່ວອານາຈັກລາວລ້ານຊ້າງຜູ້ປົກຄອງມີຊັ້ນເປັນອຸປະຣາດ ຫຼື ເອີ້ນອີກຢ່າງໜຶ່ງວ່າເມືອງຊັ້ນ ອຸປະຣາດ(ແຕ່ຕໍານານພື້ນເມືອງລາວບູຮານວ່າມີ 13 ຫົວເມືອງໃຫຍ່ທີ່ຂຶ້ນກັບພະອົງນັ້ນ)ທັງສອງແຫຼ່ງຂໍ້ມູນບໍ່ໄດ້ກ່າວໄວ້ວ່າແມ່ນຫົວເມືອງໃດແດ່ທີ່ເປັນຫົວເມືອງໃຫຍ່ໄດ້ສັງເກດຕາມເຫດການຕົວຈິ່ງຂອງປະຫວັດສາດລາວໃນສະຕະວັດທີXVIIນັ້ນມີຫົວເມືອງໃຫຍ່ອາດຈັດເປັນຂັ້ນເຂື່ອນເມືອງໄດ້ນັ້ນມີ 7 ເມືອງຄື:

1. ເມືອງໄລ່(ແຄວ້ນ12 ຈຸໄທ)
2. ເມືອງພວນຊຽງຂວາງ
3. ເມືອງຫຼວງພະບາງ
4. ເມືອງຮ້ອຍເອັດ(ປະເທດໄທປັດຈຸບັນ)
5. ເມືອງນະຄອນ(ນະຄອນສີໂຄດຕະບອງທ່າແຂກເກົ່າ)
6. ເມືອງນ່ານ(ປະເທດຈີນປັດຈຸບັນ)
7. ເມືອງຈໍາປາສັກ

ແຕ່ລະເມືອງມີເຈົ້າສັກດີນາປົກຄອງເອີ້ນວ່າ"ເຈົ້າຄອງນະຄອນ"ໃນນັ້ນຫົວເມືອງໃຫຍ່ໄດ້ມີການຈັດຕໍາແໜ່ງບໍລິຫານປົກຄອງອອກເປັນດັ່ງນີ້:

- ເຈົ້າຄອງນະຄອນດໍາລົງຕໍາແໜ່ງເປັນພະຍາພົນໝື່ນ ຫຼື ເຈົ້າພົນໝື່ນ ມີສິດເທົ່າທຽມກັບເສນາບໍດີມີຍົດສັກດີນາ1.400ກົບ
- ເຈົ້າຝ່າຍດາລົງຕາແໜ່ງເປັນເຈົ້າຄອງນະຄອນເທົ່າກັບເຈົ້າເມືອງໃນປັດຈຸບັນ
- ເຈົ້າກວານດໍາລົງຕໍາແໜ່ງເທົ່າກັບຕາແສງ ແລະ ພໍ່ບ້ານໃນປັດຈຸບັນ.

ເຈົ້າສັກດີນາທີ່ປົກຄອງບາງເມືອງກໍ່ຖືກສົ່ງໄປຈາກລາຊະຕະກຸນທີ່ນະຄອນຫຼວງວຽງຈັນຫົວເມືອງໃຫຍ່ແຕ່ລະຫົວເມືອງນັ້ນມີລະບົບການຈັດຕັ້ງການປົກຄອງ, ວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນາທໍາ-ສັງຄົມເປັນຂອງຕົນເອງ.ໄປຄຽງຄູ່ກັບອໍານາດການປົກຄອງຂອງເຈົ້າຄອງນະຄອນຍັງມີເຈົ້າອຸປະຣາດອີກ 7 ຄົນ ເຊິ່ງພາກັນຢູ່ກັບເຈົ້າຊີວິດຢູ່ນະຄອນຫຼວງວຽງຈັນມີໜ້າທີ່ເບິ່ງແຍງສິດຜົນປະໂຫຍດຂອງແຕ່ລະເມືອງທີ່ຕົນຮັບຜິດຊອບແທນເຈົ້າຊີວິດ. ເຈົ້າຄອງນະຄອນແຕ່ລະເມືອງຕ້ອງລາຍງານສະພາບການເມືອງ ຂອງ

ຕົນໃຫ້ເຈົ້າອຸປະຣາດທີ່ຢູ່ສູນກາງນະຄອນວຽງຈັນ ເພື່ອລາຍງານໃຫ້ແກ່ເຈົ້າຊີວິດສຸລິຍະວົງສາ ທຳມິກະຣາດ ໂດຍຜ່ານເຈົ້າມະຫາອຸປະຣາດ(ອຸປະຣາດຜູ້ໃຫຍ່ ຫຼື ຮອງເຈົ້າຊີວິດ).

- **ເມືອງຂອບດ່ານ ຫຼື ເມືອງດ່ານໜ້າ**

ໄດ້ແກ່ເມືອງທີ່ເປັນປ້ອມດ່ານໜ້າຂອງອານາຈັກລາວລ້ານຊ້າງທີ່ຕັ້ງຢູ່ຕາມເຂດຊາຍແດນແລະບາງເມືອງສຳຄັນທີ່ຕິດຕໍ່ກັນ. ເຈົ້າຄອງເມືອງເຫຼົ່ານີ້ມີຍົດສັກຕຳແໜ່ງເທົ່າກັບເຈົ້າສັກດິນາຫົວພັນຫຼື ພະຍາຫົວພັນ ຖືສັກດິນາ 1200ກີບເມືອງຂອບດ່ານນີ້ມີການປົກຄອງເມືອງໂດຍກົງຕໍ່ເມືອງຫຼວງນະຄອນວຽງຈັນເມືອງນີ້ອາດມີຫຼາຍແຕ່ປາກົດຊື່ໃນໜັງສືພົ້ນເມືອງລາວບູຮານ ມີ 16 ເມືອງ ຄື: ເມືອງອູ, ເມືອງສິບທາ, ເມືອງໂສຍ, ເມືອງຄຳ, ເມືອງວັງ, ເມືອງຊະໂປນ, ເມືອງນອງ, ເມືອງໂສກ(ອັດຕະປື), ເມືອງຊຸງ, ເມືອງຊຽງແຕງ(ຫາງໂຄ), ເມືອງບ້ານແມ່ທອດ, ເມືອງວັດເກດ(ພົມມະຂັນ), ເມືອງຫົງ, ເມືອງທອງ( ອຳເພີຈະຕຸລະພັກພິມາຍ), ເມືອງບົວ(ໄຊຍະພູມ), ເມືອງພູຂຽວ(ສາມໝື່ນ) ແລະ ເມືອງດ່ານຊ້າຍຈັ່ງຫວັດເລີຍ.

ນອກນີ້ຍັງມີເມືອງອື່ນໆອີກຫຼາຍເມືອງທີ່ປະກົດໃນຊື່ສະໄໝບູຮານທີ່ຕັ້ງລະຫວ່າງເມືອງໃຫຍ່ທີ່ສຳຄັນທຽບເທົ່າກັບເມືອງຂອບດ່ານມີ: 10 ເມືອງເຊັ່ນ:ເມືອງຊອງ(ວັງວຽງ), ເມືອງໜອງຫານນ້ອຍ(ອຸບົນ), ເມືອງຊຽງຊຸມ(ສາກົນນະຄອນ), ເມືອງຊຽງສາ, ເມືອງມຸກດາຫານ, ເມືອງພູແລ່ນຊ້າງ(ອຸດອນ), ເມືອງບົງບອນ, ເມືອງບຶງຊອນ, ເມືອງທ່າອຸເທນ, ເມືອງຄຸປະທາຍ ແລະ ອື່ນໆ.

ນອກຈາກນີ້ຍັງມີເມືອງສຳຄັນທີ່ຕັ້ງຢູ່ລະຫວ່າງສອງອານາຈັກເຊັ່ນ: ເມືອງລະຄອນລາດສະສີມາ ຖືວ່າເປັນເມືອງສອງທ້າວ, ຢ້າວສອງເຂີຍເໝືອນກັບວ່າ ນາສອງເໝືອງເມືອງສອງທ້າວເພາະວ່າເປັນເມືອງທີ່ຕັ້ງຢູ່ລະຫວ່າງກາງຂອງອານຈັກລາວລ້ານຊ້າງ ແລະ ອານາຈັກອາຍຸດທະຍາ ເມື່ອໃດອານາຈັກລາວລ້ານຊ້າງເຂັ້ມແຂງກໍ່ຂຶ້ນກັບອານາຈັກລາວລ້ານຊ້າງ ແລະ ເມື່ອໃດກຸງສີອາຍຸດທະຍາເຂັ້ມແຂງກໍ່ໄປຂຶ້ນກັບອາຍຸດທະຍາບາງເທື່ອກໍ່ຂຶ້ນກັບສອງອານາຈັກພ້ອມໆກັນ ແລະ ບາງເທື່ອກໍ່ປະກົດຕົນເປັນເອກະລາດບໍ່ຂຶ້ນກັບໃຜສະເພາະສະໄໝເຈົ້າສຸລິຍະວົງສາທຳມິກະຣາດປົກຄອງອານາຈັກລາວລ້ານຊ້າງ, ນະຄອນລາດຊະສີມາໄດ້ເປັນຫົວເມືອງຂຶ້ນ ຫຼື ນັບຖືສອງອານາຈັກຄຽງຄູ່ກັນໄປ.

**ຄ. ດ້ານກົດໝາຍ ແລະ ການຕັດສິນຄະດີ**

- ກົດໝາຍ

ນອກຈາກນີ້ພະອົງຍັງໄດ້ເອົາໃຈໃສ່ປັບປຸງທາງດ້ານກົດໝາຍເພື່ອເຮັດໃຫ້ການຄຸ້ມຄອງພົນລະເມືອງໃນສັງຄົມມີຄວາມເປັນລະບຽບຮຽບຮ້ອຍສະນັ້ນພະອົງຈຶ່ງໄດ້ເອົາໃຈໃສ່ກໍ່ສ້າງກົດໝາຍເພື່ອຄຸ້ມຄອງສັງຄົມໃຫ້ມີຄວາມເປັນລະບຽບຮຽບຮ້ອຍບໍ່ພຽງແຕ່ຂ້າລາຊະການ, ທະຫານ, ຕຳຫຼວດພົນລະເຮືອນ ແລະ ປະຊາຊົນທົ່ວໄປເທົ່ານັ້ນແມ່ນແຕ່ເຈົ້າຊີວິດເອງກໍ່ຕ້ອງປະຕິບັດກົດໝາຍຢ່າງເຄັ່ງຄັດທີ່ສຸດ ໃນ ປີ ຄ ສ 1660 ນີ້ກົດໝາຍມີ ສອງສຳນວນ ຄື ສຳນວນທີ່ຂຽນເປັນກາບກອນເພື່ອປຸກລະດົມປະຊາຊົນ. ຄຳພີກົດໝາຍນີ້ຜູ້ແຕ່ງໃສ່ຊື່ວ່າ: “ຄຳພີທຳມະຊາດ” ຜູ້ເປັນເຈົ້າການໃນການແຕ່ງກົດໝາຍນີ້ ແມ່ນເສນາບໍດີຝ່າຍກາງເຊິ່ງມີໜ້າທີ່ຮັບຜິດຊອບກ່ຽວກັບ ກົດໝາຍ ແລະສານຕາງເຈົ້າຊີວິດ ແລະ ມີສິດລົງໂທດຜູ້ຝ່າຝືນກົດໝາຍ ແລະ ກາບທູນເຈົ້າຊີວິດຕັດສິນ ຊີ້ຂາດບາງບັນຫາສຳຄັນໃນຮ່າງກົດໝາຍນັ້ນ ແມ່ນເອົາສິນທຳທາງພຸດທະສາສະນາເປັນຕົ້ນຕໍເຊັ່ນ: ທະສະພິສຣາຊະທຳ 10ປະການ, ສິນ 5 ປະການ, ອະຄະຕິ 4, ພົມວິຫານ4 ແລະ ອື່ນໆອີກ ຕົວຢ່າງເພິ່ນໄດ້ແບ່ງຄຳພີທຳມະຊາດ(ກົດໝາຍ)ອອກເປັນ 5 ຫ້ອງ(ຫຼື 5 ພາກ)ຕາມຫຼັກສິນ5ທາງພຸດທະສາສະໜາຄື:

- ຫ້ອງປານາຕິບາດ ວ່າດ້ວຍການຂ້າຕະກຳຕ່າງໆ
- ຫ້ອງອະທິນາທານວ່າດ້ວຍເລື່ອງໂຈລະກຳຕ່າງໆ(ການກໍ່ການຮ້າຍ ຫຼື ສ້າງຄວາມບໍ່ສະຫງົບ)
- ຫ້ອງກາເມສຸມິດສາຈານວ່າດ້ວຍເລື່ອງຮີດຄອງຜົວເມຍ
- ຫ້ອງມຸສາວາດວ່າດ້ວຍເລື່ອງການຫຼອກລວງ ແລະ ຕົວະລ້າຍ

- ຫ້ອງສຸລາເມໄລຍະວ່າດ້ວຍເລື່ອງໂທດການດື່ມຂອງໜື່ນເມົາ.

ນອກນີ້ຍັງມີສິນທຳທາງພຸດທະສາສະໜາຫຼາຍອັນທີ່ໝູນໃຊ້ເຂົ້າໃນວຽກງານກໍ່ສ້າງກົດໝາຍແລະສານ ຈຸດປະສົງກໍ່ເພື່ອຢາກໃຫ້ກົດໝາຍແລະສານນັ້ນສັກສິດແລະເປັນໜ້າເຊື່ອຖືແກ່ມະຫາຊົນທົ່ວໄປແຕ່ຈຸດປະສົງຕົ້ນຕໍ ແມ່ນເພື່ອຢາກໃຫ້ປະຊາຊົນຮັບໃຊ້ສັກດີນາຢ່າງຕາຍໃຈ ການດຳເນີນຄະດີຂອງຜູ້ກະທຳຜິດ ການໄຕ່ສວນ ຫຼື ສືບສວນ ແລະ ຕັດສິນລົງໂທດຕໍ່ຜູ້ກະທຳຜິດນັ້ນກ່ອນອື່ນໝົດຜູ້ໄຕ່ສວນ ແລະ ດຳເນີນຄະດີໝາຍເຖິງເຈົ້າກວ້ານ, ເຈົ້າສານ ຕ້ອງຢູ່ໃນສິນທຳ(ສັດຈະທຳ)ຢ່າງເຄັ່ງຂັດ ບໍ່ມີອະຄະຕິເຫັນແກ່ຜູ້ໃດຜູ້ໜຶ່ງ, ບໍ່ວ່າຂຸນນາງມີຍົດສັກ, ຄູບາ ອາຈານ, ເຈົ້າຊີວິດທີ່ປົກຄອງແຜ່ນດິນກໍ່ຕາມ ຜູ້ເຮັດຜິດກໍ່ໃຫ້ວ່າຜິດ, ຜູ້ເຮັດຖືກກໍ່ໃຫ້ວ່າຖືກລັກສະນະຕັດສິນຄະດີ ມີຢູ່ 4 ສະຖານຄື:

- ໂທດສະຖານໜັກເອີ້ນວ່າຂັນຄ່າຄໍ
- ໂທດສະຖານກາງເອີ້ນວ່າຂັນໄໝ
- ໂທດສະຖານເບົາເອີ້ນວ່າຂັນແປງ
- ໂທດສະຖານນ້ອຍເອີ້ນວ່າຂັນສົມມາ.

- **ການຕັດສິນຄະດີ(ສານຍຸດຕິທຳ)**

ໄດ້ແບ່ງອອກເປັນສອງສານໃຫຍ່ຄືສານຍຸດຕິທຳວັງຫຼວງແລະສານຍຸດຕິທຳຮັບໃຊ້ປະຊາຊົນທົ່ວໄປ. ສານທັງສອງນີ້ມີຈຸດປະສົງເປົ້າໝາຍແຕກຕ່າງກັນຄືສານວັງຫຼວງມີຈຸດປະສົງຕົ້ນຕໍໃນການເສີມສ້າງຖານະບົດບາດ ບັນດາເຈົ້າສັກດີນາຂ້າລາຊະການຂຸນນາງໃນພະລາຊະວັງໃນຖານະທີ່ຖືຕົນເອງວ່າເປັນຊົນຊັ້ນໜຶ່ງທີ່ມີອຳນາດອາດ ສະໝາຢູ່ໃນສັງຄົມເວລານັ້ນ ການຕັດສິນຄະດີກໍ່ມີເປົ້າໝາຍແຕກຕ່າງກັນຈາກຄົນທຳມະດາສາມັນສານທີ່ຮັບໃຊ້ ຕັດສິນຄະດີມະຫາຊົນນັ້ນກໍ່ມີສອງຂັ້ນ ຫຼື ສອງລະດັບຄື: ສານປະຊາຊົນຂັ້ນສູນກາງ ແລະ ສານປະຊາຊົນຂັ້ນ ທ້ອງຖິ່ນ ສານປະຊາຊົນຂັນສູນກາງ ມີໜ້າທີ່ດຳເນີນຄະດີອາຍາ ແລະ ຄະດີແພ່ງຂອງມະຫາຊົນທົ່ວໄປໃນເມື່ອໄດ້ ຮັບອຸທອນທ້ອງຖິ່ນຕາມລຳດັບ ແລະ ມີໜ້າທີ່ຈັບກຸ່ມນັກໂທດເຂົ້າຄຸກ ແລະ ສັ່ງປ່ອຍຕົວນັກໂທດ. ຖ້າກໍລະນີທີ່ ສານນີ້ບໍ່ສາມາດຕັດສິນໄດ້ກໍ່ນຳຂຶ້ນກາບທູນເຈົ້າມະຫາອຸປະຣາດ ແລະເຈົ້າຊີວິດເພື່ອຂໍຄວາມພິຈາລະນາ, ສານ ທ້ອງຖິ່ນໝາຍເຖິງສານປະຈຳເມືອງ ເອີ້ນວ່າສານເມືອງ,ຫົວໜ້າສານນີ້ເອີ້ນວ່າສານເມືອງ, ມີ 1 ຄົນຜູ້ພິພາກສາໄຕ່ ສວນ ແລະ ຕຸລາການ ເອີ້ນວ່າ: “ຂຸນພິນິໄສ ແລະ ລ່າມເມື່ອງ” ມີ 4 ຄົນທີ່ຕ່ຳກວ່າເມືອງລົງມາແມ່ນສານຝ່າຍ ຕາແສງ, ບ້ານຕາມລຳດັບ, ທັງສາມຂັ້ນປົກຄອງທີ່ດ່າວມານີ້ ບໍ່ມີເຈົ້າໜ້າທີ່ປະຈຳການ ແຕ່ມີເລື່ອງເກີດຂຶ້ນກໍ່ປະຊຸມ ເພື່ອຄົ້ນຄວ້າຖ້າບໍ່ຕົກລົງກັນ ໄດ້ກໍ່ອຸທອນຂຶ້ນຕາມລຳດັບ.

## 3. ວຽກງານດ້ານການປ້ອງກັນອານາຈັກ

### ກ. ຮູບການຈັດຕັ້ງກອງທັບ

ຮູບການຈັດຕັ້ງບັນຊາການກອງທັບສະໄໝເຈົ້າສຸລິຍະວົງສາ ທຳມິກະຣາດນັ້ນ ຕາມບົດບັນທຶກຄະນະທູດ ການຄ້າ ແລະນັກສອນສາສະໜາຊາວຕາເວັນຕົກ ແລະ ບາງຂໍ້ມູນໃນໜັງສືທຳມະຊາດ ບູຮານລາວກ່າວວ່າ ພະອົງມີ ກຳລັງປ້ອງກັນເຖິງ 500.000 ຄົນ ໃນນັ້ນກໍ່ມີທະຫານຫຼວງປະຈຳຢູ່ນະຄອນ ແລະ ຫົວເມືອງໃຫຍ່ທີ່ຊາວເອີຣົບ ເອີ້ນວ່າ”ມົນທົນ” ຮູບການຈັດຕັ້ງບັນຊາວຽກງານກອງທັບທັງໝົດຂຶ້ນກັບ”ອັກຄະມະຫາເສນາບໍດີຝ່າຍຂວາ” ມີ ບົດບາດເປັນພະຍາເອີ້ນວ່າ: ພະຍາແສນເມືອງສະເພາະຢູ່ສູນກາງ ຍັງມີຄະນະເສນາທິການ 6 ຄົນມີຍຸດເປັນພະຍາ 4 ຄົນ ອີກ2ຄົນເປັນຜູ້ເສນາທິການມີຄື:

- ພະຍາສຸໄພບັນຊາການຮົບ
- ພະຍາຄຳມູນເກນກຳລັງທະຫານ
- ພະຍາແກ ຈັດກອງທັບເຝິກແອບໜ່ວຍຮົບຕ່າງໆ ມີເຝິກແອບທະຫານ, ຊ້າງເສິກ, ມ້າເສິກ ແລະ ອື່ນໆ

- ພະຍາວຽງຄຳ ລຳລຽງສະບຽງອາຫານໃຫ້ກອງທັບທັງ 4 ຄົນນີ້ມີຖານດອນສັກ ຫຼື ເອີ້ນວ່າມີຂັ້ນຄ່າຄໍ ພັນສອງຮ້ອຍ (1200)
- ອຸປະຣາຊາ ເປັນເສນາທິການຜູ້ຊ່ວຍ.
- ໝື່ນໃຈເປັນເສນາທິການຜູ່ຊ່ວຍທັງ 2 ຄົນໃນຖານະດອນສັກ 800 ເງິນ.

ທັງ 6 ທີ່ກ່າວມານີ້ເປັນກຳລັງຫຼວງປ້ອງກັນອານາຈັກພິເສດກຳລັງຫຼວງປ້ອງກັນອານາຈັກມີໜ້າທີ່ຕິດຕໍ່ພົວພັນກັບກອງທັບຢູ່ທ້ອງຖິ່ນ ພາຍໃຕ້ການຊີ້ນຳຂອງພະຍາເມືອງແສນ ມີສິດສັ່ງໄປຍັງກອງທັບທຸກເຫຼົ່າໄປຍັງກອງທະຫານທຸກເຫຼົ່ານັ້ນ ໃນ 7 ຫົວເມືອງເພື່ອອອກຕໍ່ສູ້ ກັບສັດຕູ ໃນສະໄໝຂອງພະອົງແບ່ງກອງທັບອອກເປັນ: ເລົ່າທະການຍ່າງທາງຕີ, ເຫຼົ່າທະຫານລົດມ້າ, ເຫຼົ່າທະຫານລຳລຽງບຳລຸງ ແລະ ເຫຼົ່າທະຫານສຳຮອງ

**ຂ. ທິດທາງການປ້ອງກັນອານາຈັກ ແລະ ສາມາດປ້ອງກັນເຂດນ້ຳແດນເດີມ**

ທິດທາງປ້ອງກັນອານາຈັກແມ່ນວຽກງານໜຶ່ງທີ່ສຳຄັນ ແລະ ຮີບດ່ວນຂອງພະອົງ ຍ້ອນສະພາບຢູ່ພາຍໃນ ແລະ ພາຍນອກໜີບຮັດ.ດັ່ງນັ້ນພະອົງໄດ້ຊຸກຍູ້ທ້ອງຖິ່ນພື້ນຖານ ໂດຍສະເພາະແມ່ນຫົວບົດເມືອງໃຫຍ່ຕ້ອງປັບປຸງກຳລັງຕົນເອງໃຫ້ເຂັ້ມແຂງຮູບດ້ານເພື່ອ ປົກປ້ອງແຜ່ນດິນອອກຈາກອຳນາດອານາຈັກອ້ອມຂ້າງ ພະອົງໄດ້ສັ່ງໃຫ້ກຳລັງຫຼວງສົມທົບກັບກຳລັງທ້ອງຖິ່ນເປັນເຈົ້າການ ດັ່ງນັ້ນ, ການປະທະກັນຢູ່ເຂດຊາຍແດນອ້ອມຂ້າງເຮັດໃຫ້ກຳລັງທັບຂອງອານາຈັກລາວລ້ານຊ້າງ ໄດ້ປຽບສະເໝີ ກຳລັງປ້ອງກັນໃນສະໄໝເຈົ້າສຸລິຍະວົງສາ ທຳມະກະຣາດ ໄດ້ເປັນກຳລັງທັບທີ່ເຂັ້ມແຂງທີ່ສຸດ ໃນປະຫວັດສາດລາວເປັນທີ່ເກງຂາມ ແກ່ຂ້າເສິກສັດຕູພາຍໃນ ແລະ ພາຍນອກເຮັດໃຫ້ອານາຈັກລາວລ້ານຊ້າງ ມີຊື່ສຽງໂດ່ງດັງ.

**4. ການປັບປຸງທາງດ້ານເສດຖະກິດ**

ພື້ນຖານເສດຖະກິດຂອງອານາຈັກລາວລ້ານຊ້າງ ສະໄໝເຈົ້າສຸລິຍະວົງສາ ທຳມິກະຣາດ ປົກຄອງນັ້ນແມ່ນຍຶດຖືອາຊີບກະສິກຳເປັນຫລັກ ໂດຍສະເພາະມີການປູກຝັງ ແລະ ລ້ຽງສັດຄຽງຄູ່ກັນ ນອກນັ້ນຂະແໜງການຄ້າ ແລະ ຫັດຖະກຳກໍ່ຂະຫຍາຍຄວບຄູ່ກັນໄປ ການຜະລິດສ່ວນໃຫຍ່ເປັນຂອງບຸກຄົນຫຼື ຂອງຄອບຄົວຕ້ອງດຳເນີນການຜະລິດ ຢູ່ໃນຂອບເຂດຕອນດິນທີ່ເຈົ້າຊີວິດອະນຸຍາດໃຫ້ ປະຊາຊົນທຸກຄົນຕ້ອງເສຍພາສີເຂົ້າຄັງຫຼວງ ໂດຍຄິດໄລ່ເອົາຜົນຜະລິດຕາມຈຳນວນ ພົນໃນຄອບຄົວ ແລະ ຕາມອາຍຸກະສຽນທີ່ບົ່ງໄວ້ໃນກົດໝາຍ ເພື່ອສົ່ງເສີມໃຫ້ເສດຖະກິດມີຄວາມເຂັ້ມແຂງ ແລະ ປະຊາຊົນມີຄວາມຢູ່ດີກິນດີ ມາໃນປີ ຄ.ສ 1660 ພະອົງຈຶ່ງມີການອອກກົດຫມາຍກ່ຽວກັບການຄຸ້ມຄອງທີ່ດິນປູກຝັງ, ການເຊົ່າດິນປູກຝັງແລະ ການເສຍພາສີໃຫ້ລັດ ການອອກກົດໝາຍດັ່ງນີ້ ໄດ້ເປັນການສົ່ງເສີມກະຕຸກຊຸກຍູ້ ໃຫ້ຜູ້ທຳການຜະລິດມີກຳລັງໃຈ ສະແດງອອກບ່ອນວ່າ:

- ການຄຸ້ມຄອງທີ່ດິນຕອນດິນບຸກຄົນໃດກໍ່ຕາມທີ່ປະປ່ອຍ ໂດຍບໍ່ມີການທຳການຜະລິດນັ້ນຈະມີພຽງແຕ່ 3 ປີ ຖ້າກາຍ 3 ປີ ບໍ່ມາບຸກເບີກສ້າງສາ ຈະຖືວ່າໝົດກຳມະສິດໃນດິນຕອນນັ້ນ.
- ການເຊົ່າບຸກຄົນໃດກໍ່ຕາມທີ່ເຊົ່າດິນຜູ້ອື່ນ ເພື່ອທຳການຜະລິດບໍ່ໄດ້ຂາດ ແລະ ເສຍຄ່າເຊົ່າໃຫ້ເປັນປະຈຳເຈົ້າຂອງດິນບໍ່ມີສິດຖອນດິນນາໄປ ໃຫ້ຜູ້ອື່ນເປັນເດັດຂາດ ບໍ່ວ່າບຸກຄົນນັ້ນຈະມີຖານະສັກສູງປານໃດກໍ່ຕາມ, ຖ້າມາບັງຄັບໃຫ້ຜູ້ເຊົ່ານາອອກ ຈາກຕອນດິນເພື່ອໃຫ້ຜູ້ອື່ນທຳການຜະລິດ ບຸກຄົນນັ້ນຈະຖືກລົງໂທດໜັກຂຶ້ນ.
- ການເສຍສ່ວຍກ່ຽວກັບການເສຍພາສີ ກະສິກຳເຂົ້າພະຄັງຫຼວງນັ້ນ ເວລານີ້ໄດ້ມີການຫຼຸດຜ່ອນລົງ.

**ກ. ດ້ານກະສິກຳ**

ປະຊາຊົນສະໄໝເຈົ້າສຸລິຍະວົງສາທຳມິກະຣາດ(ປົກຄອງ) ອາຊີບຕົ້ນຕໍແມ່ເຮັດນາ ແລະ ໄຮ່ໄປຄຽງຄູ່ກັນ. ອີງຕາມສະພາບເງື່ອນໄຂຂອງທ້ອງຖິ່ນໃຜລາວຢູ່ເຂດທົ່ງພຽງຕາມສອງຝັ່ງແມ່ນ້ຳຂອງ ແລະ ສາຂາແມ່ນ້ຳຂອງ. ສ່ວນຫຼາຍແມ່ນເຮັດນາ ແຕ່ບາງປີຟ້າແລ້ງຈຳເປັນຕ້ອງເຮັດໄຮ່ເພີ່ມເຕີມເພື່ອແກ້ໄຂສະພາບໃນຕໍ່ໜ້າ ແຕ່ທ້ອງຖິ່ນເຂດພູດອຍແມ່ນເຮັດໄຮ່ປູກເຂົ້າເປັນຫຼັກ, ປູກທາດແປ້ງອື່ນໆເປັນສຳຮອງ. ການເຮັດນາ, ເຮັດໄຮ່ນີ້ສ່ວນໃຫຍ່ອີງໃສ່ນ້ຳ

ຝົນຈຶ່ງສາມາດເຮັດນາປີໄດ້ປີລະເທື່ອເທົ່ານັ້ນ, ແຕ່ບາງບ່ອນມີການເຮັດເໝືອງຝາຍ(ບ່ອນເກັບນ້ຳ) ໄດ້ມີຄວາມກ້າວໜ້າສາມາດເຮັດນາປີໄດ້ປີລະ ສອງເທື່ອ ເຊັ່ນ: ຢູ່ທົ່ງຮາບວຽງຈັນເປັນຕົ້ນຕຳນານອຸລັງຄະທາດບູຮານກ່າວວ່າຢູ່ເຂດເທິງບຶງຫຼວງເພິ່ນເຮັດຝາຍກັນນ້ຳ ແຕ່ກ່ອນເອີ້ນວ່າ "ໜອງຄັນແທຜີເຊື້ອ" ບ່ອນເກັບນ້ຳໄວ້ເພື່ອການກະສິກຳ ໄປຄຽງຄູ່ກັບການປູກຝັງຍັງມີການລ້ຽງສັດທີ່ປະກົດຊື່ໃນກົດໝາຍບູຮານມີ: ຊ້າງ, ມ້າ, ງົວ, ຄວາຍ, ໝູ, ໝາ, ແບ້, ເປັດ, ໄກ່...ສ່ວນງົວ ແລະ ຄວາຍນັ້ນລ້ຽງໄວ້ສຳລັບລາກແກ່ ແລະ ເປັນອາຫານ.

ໃນລາຊະການຂອງພະເຈົ້າສຸລິຍະວົງສາທຳມິກະຣາດນີ້ຍັງມີກົດໝາຍຫ້າມບໍ່ໃຫ້ຂ້າງົວ, ຄວາຍຂາຍຢູ່ຕາມຕະຫຼາດ ເວັ້ນເສຍແຕ່ກໍ່ລະນີຈຳເປັນຕ້ອງຂໍອະນຸຍາດຈາກເຈົ້າໜ້າທີ່ຂອງລັດ. ຖ້າບໍ່ໄດ້ຮັບອະນຸຍາດຈະຖືກປັບໄໝ1ໂຕຕໍ່5ໂຕໃຫ້ເປັນຂອງຫຼວງ.

**ຂ. ວຽກງານຫັດຖະກາ ແລະ ການຄ້າ**

ຄຽງຄູ່ກັບການກະສິກຳນັ້ນວຽກງານຫັດຖະກຳເຊິ່ງມີມາໃນສະຕະວັດແລ້ວຍິ່ງໄດ້ຖືກປັບປຸງດີກວ່າເກົ່າ ແລະ ມີຄຸນນະພາບໃໝ່(ການບັນທຶກຂອງຊາວຕ່າງປະເທດທີ່ເຂົ້າມາຢ້ຽມຢາມລາວ) ວຽກງານຫັດຖະກຳມີຫຼາຍປະເພດ ເຊັ່ນ: ຫັດຖະກຳເຄື່ອງປັ້ນດິນເຜົາ, ຫັດຖະກຳຕີເຫຼັກ, ປັ້ນຫູ່, ຕີເຄື່ອງເອ້, ເຄື່ອງປະດັບ, ຫັດຖະກຳຕ່ຳແຜ່ນແພ,ຫຍິບແສ່ວ, ຈັກສານ, ການຊ່າງ ແລະ ອື່ນໆ ໄປຄຽງຄູ່ກັບການຂະຫຍາຍຕົວ. ວຽກງານການຄ້າໃນສະໄໝນັ້ນໄດ້ຂະຫຍາຍຕົວ ພໍ່ຄ້າ, ແມ່ຄ້າມີສິດເສລີພາບໃນການດຳເນີນທຸລະກິດຫຼາຍຂຶ້ນການຄ້າເວລານັ້ນມີ 2 ປະເພດຄື: ການຄ້າຂາຍຂອງເອກະຊົນ ແລະ ການຄ້າຂອງລັດສອງປະເພດນີ້ໄດ້ຂະຫຍາຍຕົວຄຽງຄູ່ກັນໄປແຕ່ວ່າການຄ້າເອກະຊົນນັ້ນຈະຕ້ອງຢູ່ໃຕ້ການຄອບຄອງຂອງລັດບົນພື້ນຖານຂອງລະບຽບກົດໝາຍ.



**ຮູບທີ14: ຮູບການຄ້າຂາຍໃນຕະຫຼາດ**

## 5. ການປັບປຸງທາງດ້ານວັດທະນະທຳ-ສັງຄົມ

### ກ. ລັກສະນະທາງສັງຄົມ

ສັງຄົມລ້ານຊ້າງໃນສະໄໝປົກຄອງຂອງພະເຈົ້າສຸລິຍະວົງສາ ທໍາມິກະຣາດນັ້ນປະກອບຫຼາຍຊັ້ນຄົນທີ່ມີຖານະຕໍາແໜ່ງແຕກຕ່າງກັນແຕ່ເຮົາອາດຈໍາແນກຊົນຊັ້ນໃນສັງຄົມລາວລ້ານຊ້າງສະໄໝນັ້ນແບ່ງອອກເປັນ 2 ຊົນຊັ້ນໃຫຍ່ຄື: ຊົນຊັ້ນປົກຄອງ ແລະ ຊົນຊັ້ນຖືກປົກຄອງ. ໃນແຕ່ລະຊົນຊັ້ນນີ້ປະກອບດ້ວຍຫຼາຍກຸ່ມຄົນຄື:

- ຊົນຊັ້ນປົກຄອງປະກອບດ້ວຍກະສັດ, ພະສົງ, ຂຸນນາງ ແລະ ຂ້າລາຊະການພວກນີ້ເປັນຜູ້ມີສິດໃນການຄອບຄອງດິນແດນເປັນຂອງສ່ວນຕົວ ແລະ ມີສິດເໜືອປະຊາຊົນ.
- ຊົນຊັ້ນທີ່ຖືກປົກຄອງປະກອບດ້ວຍປະຊາຊົນສ່ວນໃຫຍ່ທີ່ມີຖານະເປັນໄພ່ ແລະ ຂ້ອຍຂ້າ ພວກນີ້ມີຊີວິດຢູ່ພາຍໃຕ້ການຄຸ້ມຄອງຂອງສັກດີນາ ແລະ ເປັນຂ້ອຍຂ້າຮັບໃຊ້ແກ່ຜູ້ທີ່ມີຖານະຮັ່ງມີໃນສັງຄົມ. ພວກບ່າວໄພ່ ແລະ ຂ້ອຍຂ້ານີ້ເປັນຜູ້ອອກແຮງງານໂດຍກົງ ເພື່ອຜະລິດລ້ຽງສັງຄົມ ແລະ ມີສິດຄອບຄອງດິນເພື່ອປູກຝັງຕາມຖານະຄືປະຊາຊົນທົ່ວໄປໃນຄອບຄົວໜຶ່ງ ມີສິດຄອບຄອງດິນມາເປັນຂອງຕົນເອງໄດ້ 500ໄຣ່ຫາ 2000ໄຣ່. ພວກທີ່ເປັນຂ້ອຍຂ້າໃນຄອບຄົວໜຶ່ງ ມີສິດຄອບຄອງດິນເປັນຂອງຕົນເອງໄດ້ 250ໄຣ່ ຫາ 1000 ໄຣ່ ແຕ່ຢ່າງໃດກໍ່ຕາມ ເຖິງວ່າສັງຄົໃລາວລ້ານຊ້າງໃນສະໄໝການປົກຄອງຂອງພະເຈົ້າສຸລິຍະວົງສາ ທໍາມິກະຣາດ ນັ້ນ ຈະມີການແບ່ງຊົນຊັ້ນຕາມຖານະຕໍາແໜ່ງກັນກໍ່ຕາມແຕ່ ການພົວພັນກັນທາງສັງຄົມ ແມ່ນຢູ່ບົນພື້ນຖານລະບຽບກົດໝາຍຂອງບ້ານເມືອງ ແລະ ຫຼັກສິນທໍາທາງດ້ານສາສະໜາ.

**ຂ. ວັດທະນະທໍາ**

ປະຊາຊົນມີພື້ນຖານວັດທະນະທໍາທີ່ເປັນເອກະລັກຂອງຕົນ ບໍ່ວ່າທາງດ້ານວັດຖຸທີ່ເປັນສີໄມ້ລາຍມືກໍ່ຄືທາງດ້ານຈິດໃຈ. ຄົນລາວມີນິໄສໃຈຄໍໂອບອ້ອມອາລີ, ກວ້າງຂວາງ(ໃຈບຸນ)ຊື່ສັດຕໍ່ເພື່ອນມິດ ແລະ ອື່ນໆມີສິລະປະວັດຖຸທີ່ສະແດງອອກທາງດ້ານຫົວຄິດປະດິດສ້າງເຊັ່ນ: ສິລະປະສະຖາປັດຕະຍາກໍາ, ປະຕິມະກໍາ ແລະ ຈິດຕະກໍາທີ່ສວຍສົດງົດງາມໄດ້ສືບທອດມາຮອດປະຈຸບັນໃນໄລຍະນັ້ນວັດໄດ້ເປັນສູນກາງທາງດ້ານວັດທະນະທໍາລາວເປັນໂຮງຮຽນສຶກສາອົບຮົມປວງຊົນທົ່ວໄປ ແລະ ຍັງເປັນບ່ອນເຕົ້າໂຮມບັນດານັກປາດອາຈານຜູ້ທີ່ມີຫົວຄິດປະດິດສ້າງຄືບົດບັນທຶກຂອງຊາວຕາເວັນຕົກທີ່ເຂົ້າມາໃນວຽງຈັນເມື່ອປີ ຄ ສ 1641-1642ບາງຕອນໄດ້ກ່າວວ່າ: ພຸດທະສາສະໜາໃນສະຕະວັດທີ XVIIສະໄໝຂອງພະເຈົ້າສຸລິຍະວົງສາ ທໍາມິກະຣາດໄດ້ມີບົດບາດອິດທິພົນສູງສຸດ ຢູ່ໃນສັງຄົມລາວສະໄໝສັກດີນາ. ພະສົງທາງພະພຸດທະສາສະໜາມີຍົດສັກ(ສະມະນະສັກ) ເທົ່າທຽມກັບສັກດີນາ,ຂຸນນາງຂັ້ນຕ່າງໆຂອງອາຈານ.

ສິນທໍາທາງພຸດທະສາສະໜາມີອິດທິພົນຢູ່ເໜືອຈິດໃຈຂອງຄົນລາວຕັ້ງແຕ່ຊົນຊັ້ນສູງສຸດລົງຮອດປະຊາຊົນລາວທົ່ວໄປໄດ້ເປັນທິດສະດີພື້ນຖານໃຫ້ແກ່ການເມືອງການປົກຄອງ, ນັກບວດ, ອາຈານ, ນັກປະດິດຄິດແຕ່ງ ແລະ ອື່ນໆໄດ້ກາຍເປັນແສງສະຫວ່າງເຍືອງທາງໃນການດໍາລົງຊີວິດປະຈໍາວັນ ແລະ ເປັນເຄື່ອງວັດແທກຄຸນສົມບັດຂອງຄົນໃນສັງຄົມ. ໃນການບໍລິຫານອານາຈັກເຈົ້າຊີວິດຍັງໄດ້ອີງໃສ່ສາສະໜາເປັນເຄື່ອງມືຊ່ວຍໃນການປົກຄອງ.

**ການສຶກສາ:** ເພື່ອພັດທະນາອານາຈັກໃຫ້ມີຄວາມຮຸ່ງເຮືອງ ແລະ ເຂັ້ມແຂງນັ້ນ ພະອົງໄດ້ເອົາໃຈໃສ່ໃນການພັດທະນາຄົນໃຫ້ມີຄວາມຮູ້, ດ້ວຍເຫດນັ້ນໃນໄລຍະນີ້ຈຶ່ງເກີດມີນັກປາດອາຈານເປັນຈໍານວນຫຼວງຫຼາຍການສຶກສາເວລານີ້ ໄດ້ມີພື້ນຖານຈາກພຸດທະສາສະໜາຄື ເອົາວັດເປັນສະຖານທີ່ສຶກສາຫາຄວາມຮູ້ຂອງຄົນທົ່ວໄປ. ພິເສດບໍ່ພຽງແຕ່ລູກຂອງສັກດີນາ ແລະ ຂຸນນາງຜູ້ໃຫຍ່ເທົ່ານັ້ນທີ່ມີໂອກາດຮໍ່າຮຽນຢູ່ລາຊະວັງຂອງເຈົ້າຊີວິດ, ຄົນທໍາມະດາກໍ່ມີໂອກາດຄືກັນຖ້າຮຽນໄດ້ດີເດັ່ນຈາກຂອບເຂດຕົນກໍ່

ກໍ່ຈະຖືກສົ່ງຂຶ້ນໄປຮຽນໃນວັງ ແລະ ໃນວັດທີ່ສຳຄັນ ຈົນກາຍເປັນຄົນທີ່ສຳຄັນ ເຊັ່ນ: ພະຍາແສນສຸລິນ ແລະ ຍາຄູຂີ້ຫອມເປັນຕົ້ນ. ຜູ້ທີ່ສິດສອນທົ່ວໄປແມ່ນພະສົງສຳມະເນນຢູ່ວັດ. ການສິດສອນບໍ່ໄດ້ຄິດໄລ່ຄ່າຕອບແທນໂດຍກົງເພາະວ່າມີປະຊາຊົນມາຖວາຍຢູ່ແລ້ວ. ເນື້ອໃນການສິດສອນມີຢູ່ 2 ລັກສະນະຄື: ລັກສະນະຝ່າຍທຳ ຫຼື ເອີ້ນວ່າ "ຄະດີທຳ" ແລະ ຫຼັກສູດຝ່າຍໂລກເອີ້ນວ່າ "ຄະດີໂລກ" ລະບົບການຮຽນແບ່ງເປັນ3 ຂັ້ນຄື:

- **ຂັ້ນທີ1** ຮຽນອັກຄະລະວິທີຄືຮຽນອ່ານ-ຂຽນ ແລະ ວິຊາການຕ່າງໆທີ່ກ່ຽວພັນກັບສາສະໜານອກຈາກນີ້ ຍັງມີການຮຽນສູດມົນນ້ອຍ ແລະ ກາງອີກ
- **ຂັ້ນທີ2** ຮຽນໄວຍະກອນບາລີ, ອະພິທຳ 7ຄຳພີ ແລະ ຍັງຮຽນກ່ຽວກັບວິຊາການຕ່າງໆເພື່ອແນໃສ່ ປະກອບອາຊີບເຊັ່ນ: ຊ່າງແກະສະຫຼັກ, ຊ່າງຫຼອມ ແລະ ອື່ນໆ
- **ຂັ້ນທີ3** ເປັນຂັ້ນຕອນການຕັດສິນການຮຽນຈະດຳເນີນການສຶກສາໄປໃນຝ່າຍໃດຄື: ຝ່າຍທຳ ຫຼື ຝ່າຍ ໂລກ.

ສຳລັບຄາລະວາດ(ປະຊາຊົນທົ່ວໄປ)ເມື່ອຮຽນສຸດຂັ້ນທີ1 ແລະ ຂັ້ນທີ2 ແລ້ວບາງຄົນກໍ່ໄປປະກອບອາຊີບອັນໃດອັນໜຶ່ງໄດ້ສະເພາະຜູ້ທີ່ຍັງມີຄວາມພະຍາຍາມຈະສືບຕໍ່ສຶກສາຮໍ່າຮຽນຂັ້ນຕໍ່ໄປຕ້ອງເລືອກເອົາວິຊາໃດໜຶ່ງໃນສາຕະສິນ 18 ປະທານຄື:

| | | |
|---|---|---|
| 1. | ຍຸດທະສາດ | ວິຊາສົງຄົມ |
| 2. | ຣັດຖະສາດ | ວິຊາການປົກຄອງ ຫຼື ບໍລິຫານປະເທດ |
| 3. | ນິຕິສາດ | ວິຊາກົດໝາຍແບບແຜນປະເພນີຣິດຄອງ |
| 4. | ວານິຊາສາດ | ວິຊາການຄ້າ |
| 5. | ອັກສອນສາດ | ວິຊາທາງໜັງສື |
| 6. | ນິຣຸດຕິສາດ | ວິຊາພາສາຕ່າງປະເທດ |
| 7. | ຄະນິດສາດ | ວິຊາຄຳນວນ |
| 8. | ໂຊຕິສາດ | ວິຊາເບິ່ງດາວ ຫຼື ດາລາສາດ |
| 9. | ພູມິສາດ | ວິຊາເບິ່ງພູມປະເທດ |
| 10. | ໂຫລາສາດ | ວິຊາຄຳນວນນໍ້າຟ້ານໍ້າຝົນ |
| 11. | ສັດຕະສາດ | ວິຊາກ່ຽວກັບສັດ |
| 12. | ໂຍຄະສາດ | ວິຊາຊ່າງກົນຫຼໍ່ |
| 13. | ເຫຕຸສາດ | ວິຊາຮູ້ເຫດຜົນ (ຕັກກະສາດ) |
| 14. | ເວຊະສາດ | ວິຊາແພດ(ໝໍຢາ) |
| 15. | ສາສະໜາສາດ | ວິຊາທາງສາສະໜາ |
| 16. | ມາຍາສາດ | ວິຊາໃຊ້ກົນອຸບາຍ(ປະຈຸບັນເອີ້ນວ່າວິຊາຈິດຕະສາດ) |
| 17. | ຄັນທັບພະສາດ | ວິຊາດົນຕີ,ນາຕະສິນ, ການຂັບຮ້ອງ |
| 18. | ສັນຕິສາດ | ວິຊາແຕ່ງກາບກອນ, ກາວີຕ່າງໆ |

ຈາກການເອົາໃຈໃສ່ທາງດ້ານການສຶກສານີ້ຈຶ່ງເຮັດໃຫ້ຜົນງານທາງດ້ານການຂີດຂຽນໂດຍສະເພາະພາສາ ແລະ ວັນນະຄະດີທີ່ມີການຂະຫຍາຍຕົວສູງບັນດາຜົນງານແຫ່ງການຂີດຂຽນທີ່ດີເດັ່ນໃນສະໄໝນັ້ນຍັງຄົງມີຄຸນຄ່າມາຈົນຮອດປະຈຸບັນນີ້ເຊັ່ນ: ນິທານສຽວສະຫວາດ, ມູລະຕັນໄຕ, ສິນໄຊ, ກາລະເກດ ແລະ ອື່ນໆ.

**ສິລະປະກຳຕ່າງໆ:**ໄປຄຽງຄູ່ກັບການຂະຫຍາຍຕົວທາງດ້ານສິລະປະ, ວັນນະຄະດີ, ວຽກງານ ສິລະປະກຳ .ການຄວັດ, ການແຕ້ມ, ການຫຼໍ່ ແລະ ການປັ້ນກໍ່ຂະຫຍາຍຕົວສູງ.

ນອກນີ້ພະອົງຍັງເອົາໃຈໃສ່ການປັບປຸງວຽກງານການຕ່າງປະເທດເພື່ອແນໃສ່ການປະຕິບັດນະໂຍບາຍການຢູ່ຮ່ວມກັນໂດຍສັນຕິບໍ່ແຊກແຊງຊຸກຮານເຊິ່ງກັນ ແລະ ກັນເປັນມິດກັບທຸກອານາຈັກອ້ອມຂ້າງເຊັ່ນ: ສ້າງສາຍພົວພັນກັບອານາຈັກຂະແມ, ດາຍຫວຽດ

ເວົ້າລວມແລ້ວອານາຈັກລາວລ້ານຊ້າງໃນສະຕະວັດທີXVII ໂດຍສະເພາະໃນສະໄໝການປົກຄອງຂອງ ພະເຈົ້າສຸລິຍະວົງສາ ທຳມິກະຣາດ ໄດ້ມີການຂະຫຍາຍຕົວຮຸ່ງເຮືອງສູງສຸດ ແລະ ມີຊື່ສຽງໂດ່ງດັ່ງໄປເຖິງຫຼາຍປະເທດໃນໂລກດັ່ງນັ້ນໃນລາຊະການຂອງພະອົງຈຶ່ງມີຊາວຕ່າງປະເທດເຂົ້າມາລ້ານຊ້າງຄື: ຕົວແທນທູດການຄ້າຊາວໂຮນລັງກໍ່ເດີນທາງມາເຖິງອານາຈັກລາວລ້ານຊ້າງກ່ອນໝູ່ຊື່ວ່າ ວັນວຸດສະຕົບໃນເວລານັ້ນ ພະເຈົ້າສຸລິຍະວົງສາ ທຳມິກະຣາດໄດ້ຕ້ອນຮັບຢ່າງສົມກຽດທີ່ພະທາດຫຼວງ ໃນເດືອນພະຈິກ ຄ ສ 1641ເຊິ່ງແມ່ນໄລຍະບຸນນະມັດສະການພະທາດຫຼວງ. ຈາກນັ້ນກໍ່ມີຊາວປອກຕຸຍການອີກທີ່ເດີນທາງເຂົ້າມາອານາຈັກລາວລ້ານຊ້າງໃນປີ ຄ ສ 1642ເພື່ອເຜີຍແຜ່ສາສະ ໜາຄຣິດແຕ່ບໍ່ສຳເລັດເພາະຖືກປະຊາຊົນລາວລ້ານຊ້າງປະຕິເສດ.

## III. ຊີວິດຂັ້ນທ້າຍຂອງເຈົ້າສຸລິຍະວົງສາ

ສົມເດັດພະເຈົ້າສຸລິຍະວົງສາທຳມິກະຣາດມີຊື່ເດີມວ່າສຸລິຍະກຸມມານ ເປັນບຸດຂອງພະວໍລະວົງສາທຳມິກະຣາດ ເກີດເມື່ອ**ຄ ສ 1613** ມີອ້າຍນ້ອງຮ່ວມພໍ່ແມ່ດຽວກັນຄື: ພະອຸປະຣາດ, ພະໝ່ອມແກ້ວ(ພະຕ່ອນຄຳ), ພະໝ່ອມໄຊ(ວິໄຊ), ເຈົ້າຊົມພູ, ເຈົ້າບຸນຊູ, ເຈົ້າປຸ ແລະ ເຈົ້າສ້ອຍ ພະເຈົ້າສຸລິຍະກຸມມານມີລາຊະບຸດ ແລະ ລາຊະທິດາ3 ຄົນ ຄື: ເຈົ້າລາຊະບຸດ, ເຈົ້ານາງກຸມມາລີ, ເຈົ້ານາງສຸມັງຄະລາ.ໃນສະໄໝຂອງພະອົງນີ້ໄດ້ມີພວກຫໍ້ທີ່ຢູ່ທາງພາກໃຕ້ໄດ້ລົງມາຕີເອົາເມືອງຊຽງຮຸ່ງ, ແຄວັນ 12 ປັນນາລື ເຈົ້າອິນທະກຸມມານຜູ້ປົກຄອງເມືອງຊຽງຮຸ່ງ ໄດ້ພານ້ອງສາວຊື່ນາງຈັນທະກຸມມາລີ ໜີລົງມາເພິ່ງພະຣາຊາສົມພານ ຂອງ ພະເຈົ້າສຸລິຍະວົງສາ ທຳມິກະຣາດ ທີ່ນະຄອນວຽງຈັນ ເຈົ້າລາຊະບຸດໄດ້ອະພິເສກສົມລົດກັບ ນາງຈັນທະກຸມມາລີ ໄດ້ບຸດ 2ຄົນຄື: ເຈົ້າກິ່ງກິດສະລາດ ແລະ ເຈົ້າອິນທະໂສມ ສ່ວນເຈົ້າອິນທະກຸມມານນັ້ນໄດ້ສົມລົດກັບນາງກຳມີລູກຊາຍຜູ້ໜຶ່ງຊື່ວ່າເຈົ້າໝ່ອມນ້ອຍ ຫຼືເຈົ້າອົງນ້ອຍພາຍລຸນມາຄົນທັງຫຼາຍເອີ້ນວ່າເຈົ້າອົງນົກ(ເພາະມັກຕໍ່ນົກ) ພະເຈົ້າສຸລິຍະວົງສາ ທຳມິກະຣາດ ສະເຫວີຍລາຊະສົມບັດໃນປີ ຄ ສ 1638 ແລະ ໄດ້ປົກຄອງອານາຈັກລ້ານຊ້າງມາໄດ້ 57 ປີ ຄື: ມາເຖິງປີ ຄ ສ 1695(ຈຸນລະສັກກະຣາດ1057)ກໍ່ສິ້ນພະຊົນດ້ວຍໂລກຊະລາລວມອາຍຸໄດ້82 ປີ ແລະ ບໍ່ມີໂອລົດສືບແທນລາຊະບັນລັງ.

## IV. ອານາຈັກລາວລ້ານຊ້າງພາຍຫຼັງລາຊະການຂອງເຈົ້າສຸລິຍະວົງສາ

ອານາຈັກລາວລ້ານຊ້າງນັບແຕ່ກາງສະຕະວັດທີ 14 ເຖິງສະຕະວັດທີ 17 ເປັນອານາຈັກທີ່ມີອານາເຂດກ້ວາງຂວາງ, ອຸດົມສົມບູນມີຄວາມເຂັ້ມແຂງຈະເລີນຮຸ່ງເຮືອງຮອບດ້ານມາເຖິງປີ ຄ.ສ 1638 ມີການແຕກແຍກໃນກຸ່ມສັກດີນາລາວໄດ້ປາກົດຕົວຂຶ້ນ,ແຕ່ຍ້ອນມີກຸ່ມຄົນທີ່ມີກຳລັງເຂັ້ມແຂງພາຍໃຕ້ການນຳພາຂອງເຈົ້າສຸລິຍະວົງສາ ທຳມິກະຣາດ ທີ່ສາມາດກຳຈັດບັນດາກຸ່ມຄົນທີ່ເປັນປໍລະປັກ ຄື ກຸ່ມເຈົ້າບຸນຊູ ແລະ ກຸ່ມຂອງເຈົ້າຊົມພູ ທັງສອງກໍ່ເປັນອ້າຍນ້ອງຂອງເຈົ້າສຸລິຍະວົງສາ ທຳມິກະຣາດ ພາຍຫຼັງເຈົ້າສຸລິຍະວົງສາສິ້ນພະຊົນ ຄວາມແຕກແຍກພາຍໃນກຸ່ມສັກດີນາລາວລ້ານຊ້າງໄດ້ເກີດຂຶ້ນອີກ. ສາເຫດຄວາມແຕກແຍກແມ່ນເກີດມາຈາກຄວາມມັກໃຫຍ່ໃຝ່ສູງ ຍາດແຍ່ງກຳອຳນາດໃນລະຫວ່າງເຊື້ອສາຍ ລາຊະວົງດ້ວຍກັນ ຄວາມແຕກແຍກຂອງກຸ່ມສັກດີນາເຫລົ່ານີ້ ໄດ້ເກີດຂຶ້ນໃນກຸ່ມສັກດີນານະຄອນຫຼວງວຽງຈັນກ່ອນແລ້ວກໍ່ຄ່ອຍທແຜ່ລາມອອກໄປຕາມຫົວເມືອງໃຫຍ່ ໃນທີ່ອານາຈັກຕາມການຢັ້ງຢືນທາງປະຫວັດສາດ ໃຫ້ຮູ້ວ່າ ເມື່ອເຈົ້າສຸລິຍະວົງສາ ທຳມິກະຣາດ ສິ້ນພະຊົນໃນປີ ຄ.ສ 1695 ນັ້ນແລ້ວບໍ່ມີໃຜທີ່ຈະສືບທອດລາຊະບັນລັງ (ບໍ່ມີລັດຊະທາຍາດ). ພະຍາຫຼວງ ເມືອງຈັນ ຜູ້ເປັນອັກຄະລະເສນາບໍດີຜູ້ກຳຕຳແໜ່ງທີ່ສຳຄັນ ເຊັ່ນ: ເປັນຫົວໜ້າຮັກສາຄວາມສະຫງົບຝ່າຍຕຳຫຼວດ, ທະຫານ ແລະ ຝ່າຍພົນລະເມືອງ ພ້ອມທັງເປັນເຈົ້າກົມທ່າຮັບຜິດຊອບການສົ່ງສິນຄ້າອອກ ແລະ ຂົນສົ່ງພາຍໃນພ້ອມນັ້ນຍັງວ່າ ລາຊະການພາຍນອກອີກດ້ວຍ

ພະຍາຫຼວງເມືອງຈັນໄດ້ຢຶດເອົາອຳນາດໄວ້ໃນກຳມື ແລ້ວສະຖາປະນາຕົນຂຶ້ນເປັນຜູ້ສຳເລັດລາຊະການແຜ່ນດິນ. ໃນປາຍເດືອນເມສາ ຄ.ສ 1695.

ໃນນາມເຈົ້າກິ່ງກິດສະລາດ ແລະ ເຈົ້າອິນທະໂສມ ເຊິ່ງເປັນບຸດຫຼານຂອງເຈົ້າສຸລິຍະວົງສາ ທຳມະກະຣາດ ເປັນຜູ້ທີ່ມີສິດສືບທອດບັນລັງ ທີ່ຖືກຕ້ອງຕາມກົດລາຊະປະເພນີ ແຫ່ງລາຊະວົງລ້ານຊ້າງມາແຕ່ບູຮານ, ແຕ່ເຈົ້າຊາຍທັງສອງ ແມ່ນຢູ່ໃນໄວເຍົາບໍ່ທັນສາມາດ ວ່າລາຊະການແຜ່ນດິນແທນໄດ້ ເມື່ອສະພາບເປັນຄືແນວນັ້ນ ພະຍາເມືອງຈັນຈຶ່ງໄດ້ວາງແຜນໄຕ່ເຕົ້າຂຶ້ນສູ່ການເປັນເຈົ້າແຜ່ນດິນລ້ານຊ້າງ ໂດຍຂໍອະພິເສກ (ສົມຣົດ) ກັບເຈົ້າຍິງສຸມັງຄະລາ ຜູ້ເປັນລູກສາວຂອງເຈົ້າສຸລິຍະວົງສາ ທຳມິກະຣາດ ຜົວຂອງນາງເສຍຊີວິດໄປບໍ່ດົນມານັ້ນ ແລະ ນາງກໍ່ພວມຖືພາຄົນທີສອງຢູ່ ຄຳສະເໜີຂອງພະຍາຫຼວງເມືອງຈັນ ຖືກນາງສຸມັງຄະລາປະຕິເສດ ແຕ່ເຈົ້າພະຍາຍັງໄດ້ຕັ້ງຄວາມຫວັງໄວ້ຢູ່ ນາງສຸມັງຄະລາເຫັນວ່າການປະເສດຂອງຕົນ ອາດນຳໄປສູ່ຄວາມເປັນຕາຍ ແລະ ຍັງເຂົ້າໃຈເລິກໄປກວ່ານັ້ນວ່າການຕາຍຂອງຜົວນາງອາດຈະນອນຢູ່ໃນແຜນການນີ້ດ້ວຍ ດັ່ງນັ້ນ, ນາງກໍ່ໄດ້ປຶກສາຫາລືເສນາບໍດີບາງທ່ານທີ່ມີຄວາມຈົ່ງຮັກພັກດີ ຕໍ່ນາງເພື່ອຊອກຫາຊ່ອງທາງແກ້ໄຂບັນຫານັ້ນ ໃນທີ່ສຸດຈຶ່ງໄດ້ເລືອກເອົາຫົນທາງໜີອອກຈາກວຽງຈັນ ໄປອາໄສຄວາມເມດຕາຈາກພະຄູຍອດແກ້ວ ທີ່ວັດໂພນສະເມັກ ຝ່າຍພະຄູຍອດແກ້ວເຫັນວ່າການທີ່ນາງສຸມັງຄະລາ ພ້ອມດ້ວຍພັກພວກເຂົ້າມາອາໄສ ນຳຕົນນີ້ຄົງບໍ່ພົ້ນອັນຕະລາຍ ແລະ ຕົນກໍ່ຈະພອຍມີເລື່ອງໝາງໃຈ ກັບພະຍາຫຼວງເມືອງຈັນອີກດ້ວຍ ເພື່ອລີບຫຼີກຈາກບັນຫານີ້ພະຄູຍອດແກ້ວ ຈຶ່ງໄດ້ຈັດສົ່ງນາງ ແລະ ພັກພວກໄປຢູ່ພູສະງໍ້ຫໍຄຳ ເມື່ອນາງໄດ້ໄປຢູ່ທີ່ນັ້ນແລ້ວ ນາງສຸມັງຄະລາເກີດລູກຄົນທີສອງ ຊື່ ເຈົ້າໜໍ່ກະສັດ .

ຝ່າຍພະຍາຫຼວງເມືອງຈັນໄດ້ຮູ້ວ່າ ຄວາມມຸ່ງຫວັງຂອງຕົນຖືກປະຕິເສດ ກໍ່ຄຽດແຄ້ນຄິດຈະກຳຈັດນາງເສຍກ່ອນແຕ່ກໍ່ຊ້າໄປແລ້ວ ໃນເມື່ອຮັບຮູ້ວ່ານາງໄດ້ພາພັກພວກຫຼົບໜີ ອອກຈາກວຽງຈັນ ແລະ ໄດ້ໄປໃສຢູ່ກັບພະຍາຄູຍອດແກ້ວ ທີ່ວັດໂພນສະເມັກ ຈຶ່ງແຕ່ງຄົນໄປສືບຂ່າວ ແລະ ໄດ້ຮັບລາຍງານວ່າ ນາງສຸມັງຄະລາພ້ອມດ້ວຍພັກພວກ ໄດ້ນີອອກຈາກທີ່ນັ້ນໄປແລ້ວ ບໍ່ຮູ້ວ່າໄປຢູ່ແຫ່ງຫົນໃດ, ການກະທຳແບບມັກໃຫຍ່ໄຝ່ສູງຂອງພະຍາເມືອງຈັນ ໄດ້ສ້າງຄວາມບໍ່ພໍໃຈຢ່າງຍິ່ງຕໍ່ກັບບັນດາເສນາມົນຕີ, ຂ້າລາຊະການ ແລະ ປະຊາຊົນຜູ້ຈົ່ງຮັກພັກດີຕໍ່ລາຊະວົງຂອງເຈົ້າສຸລິຍະວົງສາ, ເຂົາເຈົ້າເກີດມີຂະບວນ ກາງວາງແຜນເພື່ອໂຄ່ນລົ້ມພະຍາຫຼວງເມືອງຈັນລົງ. ຈຶ່ງໄດ້ພາກັນເຕົ້າໂຮມກຳລັງຢູ່ ເມືອງພານພູຊິນ ແຫ່ງອຸດອນໂດຍຖືເອົາເຈົ້າຊາຍອົງຫຼໍ່ (ລູກຊາຍຄົນທຳອິດຂອງນາງສຸມັງຄະລາ) ເປັນແກນກາງໃນການນຳພາ.

ເວົ້າລວມແລ້ວພາຍຫຼັງລາຊະການຂອງພະເຈົ້າສຸລິຍະວົງສາທຳມິກະຣາດສິ້ນສຸດລົງອານາຈັກລາວລ້ານຊ້າງທີ່ເຄີຍຈະເລີນຮຸ່ງເຮືອງເຖິງຂີດສຸດກໍ່ກ້າວເຂົ້າສູ່ຄວາມສັບສົນວຸ້ນວາຍເນື່ອງຈາກການຍາດຊິງອຳນາດຂອງສັກດິນາລາວລ້ານລ້ານ ແລະ ບັງດາວົງສານຸວົງ ຈົນກ້າວໄປເຖິງອານາຈັກລາວລ້ານຊ້າງຊຸດໂຊມ ແລະ ແຕກແຍກອອກເປັນ 3 ອານາຈັກ ໃນທີ່ສຸດກໍ່ຕົກເປັນຫົວເມືອງຂຶ້ນຂອງສັກດິນາສະຫຍາມໃນປີ ຄ ສ 1779.

## ເອກະສານອ້າງອີງ

1. ປື້ມປະຫວັດສາດ 3 ສາຍສ້າງຄູມັດທະຍົມຕົ້ນ
2. ປະຫວັດສາດລາວລ້ານຊ້າງ(ອຈຈັນທະລາດ ພູມພິທັກ 2011 ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ)
3. ສະເຫຼີມສັກ ພາບຸດດີ 2008 ເອກະສານຮຽນປະຫວັດສາດລາວ
4. ເດຊານຸລາດ ແສນດວງເດດ. 2003 ເອກສານຮຽນວິຊາປະຫວັດສາດລາວສະໄໝລ້ານຊ້າງ
5. ບົວພັນ ທໍາມະວົງ. ເດຊານຸລາດ ແສນດວງເດດ 1998 ປື້ມປະຫວັດສາດລາວສະໄໝບູຮານ ແລະ ສະໄໝກາງ
6. ດຣ ສຸເນດ ໂພທິສານ; ປະຫວັດສາດດຶກດໍາບັນຫາປະຈຸບັນ ໜ້າທີ 140
7. ມາຣິນີ; ບປພ 23-24
8. WWWGoogle.com


**ໂຄງຮ່າງຫຼັກສູດລາຍວິຊາ**

| ຊື່ວິຊາ: ປະຫວັດສາດລາວບູຮານ-ສະໄໝລາວລ້ານຊ້າງ<br>ຫຼັກສູດສ້າງຄູມັດທະຍົມລະດັບປະລິນຍາຕີ<br>ລະຫັດລາຍວິຊາ: 0905407 | |
|---|---|
| ລະບົບ-ພາກຮຽນ | ລະບົບ12+4ພາກຮຽນທີ2ປີ2 |
| ຊົ່ວໂມງ | 64ຊົ່ວໂມງ |
| ຄ່າໜ່ວຍກິດ | 3(2-2-2) |
| ອະທິບາຍໜ່ວຍກິດ | ວິຊານີ້ມີທັງໝົດ3 ໜ່ວຍກິດມີຊົ່ວໂມງທິດສະດີໃນ16ອາທິດ32ຊົ່ວໂມງ ( 2 ຊມ/ອາທິດ), ປະຕິບັດຕົວຈິງ32 ຊົ່ວໂມງ( 2ຊມ/ອາທິດ) ລວມທັງໝົດ64 ຊົ່ວໂມງ |
| ຈຸດປະສົງ | ເມື່ອຮຽນວິຊານີ້ແລ້ວນັກສຶກສາຄູສາມາດ<br>- ບອກບັນດາແຫຼ່ງຮ່ອງຮອຍ ແລະຫຼັກຖານທາງປະຫວັດສາດຢູ່ໃນແຜ່ນດິນລາວໄດ້<br>- ອະທິບາຍຄວາມໝາຍ ແລະຄວາມເປັນມາຂອງຄຳວ່າລາວ ແລະຕົ້ນກຳເນີດຂອງຊົນຊາດລາວໄດ້<br>- ອະທິບາຍກ່ຽວກັບພັດທະນາການຂອງລັດລາວບູຮານກ່ອນການທ້ອນໂຮມແຜ່ນດິນຂອງເຈົ້າຟ້າງຸ່ມໄດ້<br>- ບອກແລະອະທິບາຍກ່ຽວກັບສະພາບການຕ່າງໆຂອງອານາຈັກລາວລ້ານຊ້າງນັບແຕ່ເຈົ້າຟ້າງຸ່ມທ້ອນໂຮມແຜ່ນດິນຈົນເຖິງລາຊະການຂອງເຈົ້າສຸລິຍະວົງສາ |
| ເນື້ອໃນຫຍໍ້ | ນີ້ສຶກສາກ່ຽວກັບ<br>- ບັນດາຮ່ອງຮ່ອຍແລະຫຼັກຖານທາງປະຫວັດສາດໃນແຜ່ນດິນ<br>- ປະຫວັດຄວາມເປັນມາຂອງຄຳວ່າລາວ ແລະຕົ້ນກຳເນີດຂອງຊົນຊາດລາວ<br>- ວິວັດການຂະຫຍາຍຕົວຂອງນະຄອນລັດບູຮານຂອງລາວກ່ອນການທ້ອນໂຮມແຜ່ນດິນ<br>- ພັດທະນາການຂອງອານາຈັກລາວລ້ານຊ້າງໃນແຕ່ລະໄລຍະແຕ່ສະຕະວັດທີXIV-XVII |
| ການດຳເນີນການສອນ | ວິຊານີ້ຮຽນ16 ອາທິດ, ມີທັງໝົດ7ບົດແບ່ງເປັນ ແຕ່ລະບົດແບ່ງເປັນຫຼາຍຫົວຂໍ້ຍ່ອຍແລະນຳໃຊ້ການສອນຫຼາຍຮູບແບບເຊັ່ນ: ບັນລະຍາຍ, ອະທິບາຍແບ່ງກຸ່ມ, ສົນທະນາຖາມ-ຕອບ ແລະໃຊ້ເຄື່ອງປະຈັກຕາອື່ນໆເພື່ອປະກອບການສອນ. |
| ວິທີການວັດ-ປະເມີນຜົນ | - ສັງເກດການເຮັດກິດຈະກຳແລະການມີສ່ວນຮ່ວມ<br>- ການຕອບຄຳຖາມ<br>- ການລາຍງານ<br>- ການເຮັດບົດທົດສອບ |

| | |
|---|---|
| ສື່ການສອນ | ຄອມພິວເຕີ, ແອວຊີດີ, ຮູບພາບກ່ຽວກັບຮ່ອງຮອຍບູຮານຄະດີ, ຮ່ອງຮອຍເມືອງລາວບູຮານ, ຮູບພາບຮູບປັ້ນເຈົ້າຟ້າງຸ່ມ,ແຜນອາດຊ່ວຍຈື່ແລະເອກະສານຕ່າງໆທີ່ກ່ຽວຂ້ອງ |
| ອາທິດ1 | ບົດທີ1 ຫຼັກຖານທາງປະຫວັດສາດໃນແຜ່ນດິນລາວ<br>1. ຄວາມໝາຍ ແລະຄວາມສຳຄັນຂອງຫຼັກຖານທາງປະຫວັດສາດ<br>1.1. ຄວາມໝາຍຂອງຫຼັກຖານ<br>1.2. ຄວາມສຳຄັນຂອງຫຼັກຖານ<br>2. ປະເພດຫຼັກຖານທີ່ຖືກຄົ້ນພົບໃນແຜ່ນດິນລາວ<br>2.1. ຫຼັກຖານປະເພດວັດຖຸ<br>2.2.1. ປະເພດວັດຖຸສິ່ງຂອງ<br>2.2.2. ປະເພດຊາກສິ່ງທີ່ມີຊີວິດ<br>2.2. ຫຼັກຖານປະເພດບັນທຶກ<br>2.2.1. ຫຼັກຖານຊັ້ນໜຶ່ງ<br>2.2.2. ຫຼັກຖານຊັ້ນສອງ<br>2.2.3. ຫຼັກຖານຊັ້ນສາມ<br>2.3. ຫຼັກຖານປະເພດບອກເລົ່າ |
| ອາທິດ2 | ບົດທີ1 (ຕໍ່) ຫຼັກຖານທາງປະຫວັດສາດໃນແຜ່ນດິນລາວ<br>3. ຮ່ອງຮອຍບູຮານຄະດີໃນແຜ່ນດິນລາວ<br>3.1. ຮ່ອງຮອຍບູຮານຄະດີໃນຍຸກຫີນ<br>3.1.1. ຮ່ອງຮອຍບູຮານຄະດີໃນຍຸກຫີນເກົ່າ<br>3.1.2. ຮ່ອງຮອຍບູຮານຄະດີໃນຍຸກຫີນກາງ<br>3.1.3. ຮ່ອງຮອຍບູຮານຄະດີໃນຍຸກຫີນໃໝ່<br>3.2. ຮ່ອງຮອຍບູຮານຄະດີໃນຍຸກໂລຫະ<br>3.2.1. ຮ່ອງຮອຍບູຮານຄະດີຢູ່ແຂວງຫຼວງພະບາງ<br>3.2.2. ຮ່ອງຮອຍບູຮານຄະດີຢູ່ແຂວງຫົວພັນ<br>3.2.3. ຮ່ອງຮອຍບູຮານຄະດີຢູ່ແຂວງຊຽງຂວາງ<br>3.2.4. ຮ່ອງຮອຍບູຮານຄະດີຢູ່ແຂວງຄຳມ່ວນ<br>3.2.5. ຮ່ອງຮອຍບູຮານຄະດີຢູ່ນະຄອນຫຼວງວຽງຈັນ |
| ອາທິດ3 | **ບົດທີ2 ຄວາມເປັນມາຂອງຄຳວ່າລາວ ແລະຖິ່ນກຳເນີດຊົນຊາດລາວ**<br>1. ຄວາມເປັນມາຂອງຄຳວ່າລາວແລະຖິ່ນກຳເນີດຂອງຊົນຊາດລາວ<br>1.1. ບັນດາທັດສະນະຕ່າງໆກ່ຽວກັບຄຳວ່າລາວ<br>1.2. ບັນດາທັດສະນະຕ່າງໆກ່ຽວກັບຖິ່ນກຳເນີດຂອງຊົນຊາດລາວ<br>2. ການສ້າງຕັ້ງນະຄອນລັດທຳອິດຂອງກຸ່ມຄົນລາວນອກດິນແດນລາວໃນປັດຈຸບັນ<br>2.1. ອານາຈັກອ້າຍລາວ<br>2.2. ອານາຈັກແຖນ<br>2.3. ອານາຈັກໜອງແສ |

| | |
|---|---|
| ອາທິດທີ4 | **ບົດທີ3 ການສ້າງຕັ້ງອານາຈັກບູຮານໃນແຜ່ນດິນລາວ**<br>1. ການເຄື່ອນຍ້າຍເຂົ້າສູ່ແຫຼມສຸວັນນະພູມຂອງພວກຂອມ<br>1.1.ດິນແດນສຸວັນນະພູມໂດຍສັງເຂບ<br>1.2.ການເຄື່ອນຍ້າຍເຂົ້າສູ່ແຫຼມສຸວັນນະພູມຂອງພວກຂອມ<br>2. ການສ້າງອານາຈັກບູຮານໃນແຜ່ນດິນລາວ<br>2.1. ອານາຈັກສີໂຄດຕະບອງ<br>2.2. ເມືອງວຽງຈັນ<br>2.3. ເມືອງຈຳປານະຄອນ (ຈຳປາສັກ)<br>2.4. ເມືອງພວນ<br>2.5. ເມືອງຊວາ<br>3.ວັດທະນະທຳ-ສັງຄົມລາວສະໄໝບູຮານ<br>2.6. ດ້ານສາສະໜາ<br>2.7. ດ້ານສັງຄົມ<br>2.8. ດ້ານສິລະປະ<br>2.9. ດ້ານພາສາ ແລະວັນນະຄະດີ |
| ອາທິດທີ5 | **ບົດທີ4 ການທ້ອນໂຮມອານາຈັກລາວລ້ານຊ້າງ**<br>1. ຄວາມເປັນມາຂອງຄຳວ່າ: ອານາຈັກລາວລ້ານຊ້າງ<br>2. ສະພາບການກ່ອນການທ້ອນໂຮມແຜ່ນດິນຂອງເຈົ້າຟ້າງຸ່ມ<br>2.1. ສະພາບການຂອງອານາຈັກອ້ອມຂ້າງ<br>2.1.1. ອານາຈັກຈີນ<br>2.1.2. ອານາຈັກສຸໂຂໄທ<br>2.1.3. ອານາຈັກອັງກໍ<br>2.1.4. ອານາຈັກພະມ້າ<br>2.1.5. ອານາຈັກດາຍຫວຽດ<br>2.2. ສະພາບຂອງຫົວເມືອງລາວກ່ອນການທ້ອນໂຮມແຜ່ນດິນ<br>2.2.1. ສະພາບຂອງນະຄອນຊຽງທອງ<br>2.2.2. ຄວາມຂັດແຍ່ງຂອງສັກດີນາພາຍໃນເມືອງຊວາ<br>2.3. ປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ<br>2.4. ການກະກຽມກຳລັງເພື່ອທ້ອນໂຮມແຜ່ນດິນຂອງເຈົ້າຟ້າງຸ່ມ |
| ອາທິດທີ6 | **ບົດທີ4 (ຕໍ່) ການທ້ອນໂຮມອານາຈັກລາວລ້ານຊ້າງ**<br>3. ການທ້ອນໂຮມອານາຈັກລາວລ້ານຊ້າງໃນສະຕະວັດທີXIV<br>3.1. ການທ້ອນໂຮມແຜ່ນດິນຄັ້ງທີ່1 ປີຄ.ສ1349-1353<br>3.1.1. ການບຸກຕີຫົວເມືອງລາວພາກກາງ ແລະພາກໃຕ້<br>3.1.2. ການບຸກຕີຫົວເມືອງລາວຝ່າຍຕາເວັນອອກ<br>3.1.3. ການບຸກຕີຫົວເມືອງລາວທາງພາກເໜືອ |

| | |
|---|---|
| | 3.1.4. ການບຸກຕີເຂົ້ານະຄອນຊຽງທອງ |
| ອາທິດທີ7 | **ບົດທີ4 (ຕໍ່) ການທ້ອນໂຮມອານາຈັກລາວລ້ານຊ້າງ**<br>3.2. ການທ້ອນໂຮມແຜ່ນດິນຄັ້ງທີ່2 ປີຄ.ສ1354-1357<br>3.2.1. ການບຸກຕີເອົາເມືອງຊຽງແສນ ແລະການແບ່ງປັນເຂດແດນກັບລ້ານນາ<br>3.2.2. ການບຸກຕີເມືອງວຽງຈັນ-ວຽງຄຳ<br>3.2.3. ການບຸກຕີຫົວເມືອງລາວທາງຝັ່ງຂວາແມ່ນ້ຳຂອງ<br>3.2.4. ການສະຫຼອງໄຊໃຫຍ່ທີ່ວຽງຈັນປີຄ.ສ1357<br>1) ພິທີສະເຫຼີມສະຫຼອງໄຊ<br>2) ຄຳໂອວາດຂອງເຈົ້າຟ້າງຸ່ມ<br>4. ສາເຫດທີ່ພາໃຫ້ໄດ້ຮັບໄຊຊະນະແລະຄວາມໝາຍປະຫວັດສາດ<br>4.1. ສາເຫດທີ່ໄດ້ຮັບໄຊຊະນະ<br>4.2. ຄວາມໝາຍປະຫວັດສາດ |
| ອາທິດທີ8 | **ບົດທີ4 (ຕໍ່) ການທ້ອນໂຮມອານາຈັກລາວລ້ານຊ້າງ**<br>5. ການຈັດຕັ້ງອຳນາດສັກດີນາລວມສູນຂອງເຈົ້າຟ້າງຸ່ມ<br>5.1. ການຈັດຕັ້ງອຳນາດສັກດີນາລວມສູນໃນເບື້ອງຕົ້ນ<br>5.1.1. ການເລື່ອນຍົດຕຳແໜ່ງຜູ້ທີ່ມີຜົນງານ<br>5.1.2. ການຈັດລະບຽບການປົກຄອງຄືນໃໝ່<br>5.1.3. ການແຕ່ງຕັ້ງຜູ້ທີ່ມີຜົນງານໄປປົກຄອງເມືອງສຳຄັນ<br>5.2. ການປັບປຸງທາງດ້ານວັດທະນະທຳ-ສັງຄົມ<br>5.2.1. ການຈັດແບ່ງທາງສັງຄົມ<br>5.2.2. ການນຳເອົາສາສະໜາພຸດເຂົ້າມາລາວໃນປີຄ.ສ1359 |
| ອາທິດທີ9 | **ບົດທີ5 ອານາຈັກລາວລ້ານຊ້າງພາຍຫຼັງລາດຊະການຂອງເຈົ້າຟ້າງຸ່ມແຕ່ປີ 1373-1479**<br>1. ອານາຈັກລາວລ້ານຊ້າງໃນລາຊະການຂອງພະຍາສາມແສນໄທ 1374-1417<br>1.1. ດ້ານການປົກຄອງ<br>1.2. ການສຳຫຼວດພົນເສິກ ແລະການຈັດຕັ້ງກອງທັບ<br>1.3. ການສ້າງສຳພັນທະໄມຕີກັບອານາຈັກອ້ອມຂ້າງ<br>ກ. ອານາຈັກລ້ານນາ<br>ຂ. ອານາຈັກອາຍຸດທະຍາ<br>ຄ. ອານາຈັກດາຍຫວຽດ<br>2. ອານາຈັກລາວລ້ານຊ້າງໃນລາຊະການຂອງພະຍາລ້ານຄຳແດງ<br>2.1. ການຂຶ້ນຄອງລາດຂອງພະຍາລ້ານຄຳແດງຄ.ສ1417-1428<br>2.2. ເຫດການຄວາມວຸ້ນວາຍໃນນະຄອນຊຽງທອງຄ.ສ1428-1438 |

| | |
|---|---|
| | 2.3. ການກຳຈັດຄວາມວຸ້ນວາຍ |
| ອາທິດທີ10 | **ບົດທີ5 ຕໍ່ອານາຈັກລາວລ້ານຊ້າງພາຍຫຼັງລາດຊະການຂອງເຈົ້າຟ້າງຸ່ມແຕ່ປີ 1373-1479**<br>3. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າໄຊຍະຈກກະພັດແຜ່ນແພ້ວ 1441-1479<br>3.1. ການຂຶ້ນຄອງລາຊະບັນລັງຂອງເຈົ້າໄຊຍະຈັກກະພັດແຜ່ນແພ້ວ<br>3.2. ສົງຄາມລ້ານຊ້າງດາຍຫວຽດ<br>3.2.1. ສາເຫດຂອງສົງຄາມ<br>1) ຂໍ້ອ້າງໃນການເຮັດສົງຄາມກັບລ້ານຊ້າງຂອງດາຍຫວຽດ<br>2) ສາເຫດໂດຍກົງ<br>3.2.3. ການກະກຽມກຳລັງຂອງລ້ານຊ້າງ<br>3.2.4. ບັ້ນຮົບທີ່ສຳຄັນ<br>3.3. ຂະບວນການຕໍ່ສູ້ຕ້ານກັບດາຍຫວຽດນຳພາໂດຍເຈົ້າແທ່ນຄຳ |
| ອາທິດທີ11 | **ບົດທີ6ອານາຈັກລາວລ້ານຊ້າງໄລຍະແຕ່ປີ 1479-1600**<br>1. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າສຸວັນນະບັນລັງຄ.ສ1479-1486<br>1.1. ດ້ານການປົກຄອງ<br>1.2. ດ້ານສາສະໜາ<br>2. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າຫຼ້າແສນໄຕຄ.ສ1486-1495<br>2.2.ການຂຶ້ນຄອງລາດຂອງເຈົ້າຫຼ້າແສນໄຕ<br>2.3.ການສ້າງວັດວາອາຮາມ<br>3. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າວິຊຸນນະລາດຄ.ສ1500-1520<br>1. ການປັບປຸງທາງດ້ານສາສະໜາ<br>2. ການຈັດຕັ້ງວຽກງານບໍລິຫານຝ່າຍສົງ<br>3. ດ້ານພາສາສາດ |
| ອາທິດທີ12 | **ບົດທີ6ຕໍ່ອານາຈັກລາວລ້ານຊ້າງໄລຍະແຕ່ປີ 1479-1600**<br>4. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າໂພທິສາລາດຄ.ສ1520-1550<br>4.2. ນະໂຍບາຍທາງດ້ານວັດທະນະທຳຂອງເຈົ້າໂພທິສາລາດ<br>4.3. ສົງຄາມລ້ານຊ້າງອາຍຸດທະຍາຄ.ສ1533<br>4.3.1. ສາເຫດຂອງສົງຄາມ<br>4.3.2. ການດຳເນີນສົງຄາມ<br>5. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າໄຊເສດຖາທິລາດ |

| | |
|---|---|
| | 5.2. ປະຫວັດຫຍໍ້ຂອງເຈົ້າໄຊເສດຖາທິລາດ<br>5.3. ການຂຶ້ນຄອງລາດທີ່ລ້ານນາຊຽງໃໝ່ປີຄ.ສ1538<br>5.4. ການຂຶ້ນຄອງລາດທີ່ນະຄອນຊຽງທອງປີຄ.ສ1550<br>5.4.1. ດ້ານການເມືອງການປົກຄອງ<br>5.4.2. ການປ້ອງກັນອານາຈັກແລະການຍ້າຍນະຄອນຫຼວງຄ.ສ1560<br>5.4.3. ຄ. ການສ້າງສິ່ງກໍ່ສ້າງຕ່າງໆຂອງເຈົ້າໄຊເສດຖາທິລາດ<br>5.4.4. ດ້ານການຕ່າງປະເທດ |
| ອາທິດທີ13 | **ບົດທີ6ຕໍ່ອານາຈັກລາວລ້ານຊ້າງໄລຍະແຕ່ປີ 1479-160໐**<br>6. ສົງຄາມລ້ານຊ້າງ-ພະມ້າ<br>6.2.ສະພາບກ່ອນເກີດສົງຄາມ<br>6.2.1. ສະພາບຂອງພະມ້າ<br>6.2.2. ສະພາບຂອງລ້ານຊ້າງ<br>6.2.3. ແຜນການປ້ອງກັນອານາຈັກຂອງລ້ານຊ້າງ<br>6.3. ການດຳເນີນສົງຄາມ<br>6.3.1. ດຳເນີນສົງຄາມໄລຍະທີ1ປີຄ.ສ1563<br>6.3.2. ການດຳເນີນສົງຄາມໄລະທີ2ປີຄ.ສ1570 |
| ອາທິດທີ14 | **ບົດທີ6ຕໍ່ອານາຈັກລາວລ້ານຊ້າງໄລຍະແຕ່ປີ 1479-1600**<br>6.3.4. ການດຳເນີນສົງຄາມໃນໄລຍະທີ3 ປີຄ.ສ1574-1575<br>7. ອານາຈັກລາວລ້ານຊ້າງພາຍໃຕ້ແອກປົກຄອງຂອງສັກດີນາພະມ້າ<br>7.1 ດ້ານການປົກຄອງ<br>7.2. ການກົດຂີ່ຂູດຮີດປະຊາຊົນລ້ານຊ້າງຂອງພະມ້າ<br>7.3. ຂະບວນການກອບກູ້ເອກະລາດຈາກພະມ້າຂອງປະຊາຊົນລ້ານຊ້າງຄ. ສ1582-1600<br>7.3.1. ສະພາບເອື້ອອຳນວຍໃຫ້ແກ່ການລຸກຂຶ້ນຕໍ່ສູ້ເພື່ອປະກາດເອກະລາດຈາກພະມ້າຂອງປະຊາຊົນລາວ<br>7.3.2. ໄຊຊະນະຂອງປະຊາຊົນລາວໃນການຕໍ່ສູ້ເພື່ອປົດແອກປົກຄອງຂອງພະມ້າ |
| ອາທິດທີ15 | **ບົດທີ7ອານາຈັກລາວລ້ານຊ້າງໄລຍະຈະເລີນຮຸ່ງເຮືອງທີ່ສຸດໃນສະຕະວັດທີXVIII**<br>**1.** ອານາຈັກລາວລ້ານຊ້າງກ່ອນການຂຶ້ນຄອງລາຊະບັນລັງຂອງເຈົ້າສຸລິຍະວົງສາ<br>1.1. ການປາບປາມບັນດາຫົວເມືອງທີ່ເປັນກະບົດຂອງພະວໍລະວົງສາ |

| | |
|---|---|
| | 1.2. ການຍາດຊີງອຳນາດຂອງສັກດີນາລາວ<br>2. ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າສຸລິຍະວົງສາທຳມິກະລາດປີຄ.ສ1638-1695<br>2.1. ການຂຶ້ນຄອງລາດຊະບັນລັງຂອງເຈົ້າສຸລິຍະວົງສາ<br>2.2. ການປັບປຸງທາງດ້ານການເມືອງ-ການປົກຄອງ<br>2.2.1. ຖານະ ແລະສິດອຳນາດຂອງສະຖາບັນກະສັດ<br>2.2.2. ການຈັດຮູບແບບການປົກຄອງ<br>2.2.3. ດ້ານກົດໝາຍ ແລະການຕັດສິນຄະດີ |
| ອາທິດທີ16 | **ບົດທີ6ຕໍ່ອານາຈັກລາວລ້ານຊ້າງໄລຍະຈະເລີນຮຸ່ງເຮືອງທີ່ສຸດໃນສະຕະວັດທີXVIII**<br>2.3. ວຽກງານປ້ອງກັນອານາຈັກ<br>2.3.1. ຮູບການຈັດຕັ້ງກອງທັບ<br>2.3.2. ທິດທາງການປ້ອງກັນອານາຈັກ<br>2.4. ການປັບປຸງທາງດ້ານເສດຖະກິດ<br>2.4.1. ດ້ານກະສິກຳ<br>2.4.2. ວຽກງານຫັດຖະກຳ ແລະການຄ້າ<br>2.5. ການປັບປຸງທາງດ້ານວັດທະນະທຳ-ສັງຄົມ<br>3. ຊີວິດບັ້ນທ້າຍຂອງເຈົ້າສຸລິຍະວົງສາ<br>4. ອານາຈັກລາວລ້ານຊ້າງພາຍຫຼັງລາຊະການຂອງເຈົ້າສຸລິຍະວົງສາ |
| ການຕີລາຄາ | 1. ການຂຶ້ນຫ້ອງຮຽນ10%<br>2. ບຸກຄົນ 20 %<br>3. ກຸ່ມ10%<br>4. ສອບກາງພາກ 20%<br>5. ສອບທ້າຍພາກ 40% |
| ເອກະສານອ້າງອີງ | 1. ຄຳແຝງ ແສນຄຳຈັນ, ແກ້ວລຳຂວັນພັກດີວິຈິດ, ປະຫວັດສາດ3 ສາຍສ້າງຄູມັດທະຍົມຕົ້ນ, 2009<br>2. ສະເຫຼີມສັກພາບຸດດີພ້ອມດ້ວຍຄະນະ,ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາກະຊວງສຶກສາທິການແລະກິລາແບບຮຽນປະຫວັດສາດຊັ້ນມັດທະຍົມປີທີ1, ປີ2010<br>3. ສະເຫຼີມສັກພາບຸດດີພ້ອມດ້ວຍຄະນະ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາກະຊວງສຶກສາທິການແລະກິລາ,ແບບຮຽນປະຫວັດສາດຊັ້ນມັດທະຍົມສຶກສາປີທີ 5 ປີ2014. |

| | |
|---|---|
| | 4. ມະຫາບຸນມີ ເທບສີເມືອງ, 2011 ຄວາມເປັນມາຂອງຊົນຊາດລາວເຫຼັ້ມແ ນະຄອນຫຼວງວຽງຈັນ<br>5. ດຣສຸເນດ ໂພທິສານ, ກະຊວງຖະແຫຼງຂ່າວແລະວັດທະນະທຳ, 2000, ປະຫວັດສາດລາວດຶກດຳບັນ-ປັດຈຸບັນ,ນະຄອນຫຼວງວຽງຈັນ.<br>6. ເດຊານຸລາດ ແສງດວງເດດ ເອກະສານປະກອບການຮຽນວິຊາປະຫວັດສາດລາວສະໄໝອານາຈັກລາວລ້ານຊ້າງພາກວິຊາປະຫວັດສາດຄະນະວິທະຍາສາດສັງຄົມມຊ<br>7. ເອກະສານ 450 ປີນະຄອນຫຼວງວຽງຈັນ<br>8. ຄຳແຝງແສນຄຳຈັນແລະແກ້ວລຳຂວັນພັກດີວິຈິດ, ແບບຮຽນປະຫວັດສາດ .3 ສຳລັບສ້າງຄູສັງຄົມລະບົບ 11+3 ກະຊວງສຶກສາທິການ, ກົມສ້າງຄູສູນພັດທ :ປີ 2009.<br>9. ມະຫາສີລາວີລະວົ (2001), ປະຫວັດສາດລາວແຕ່ສະໄໝບູຮານເຖິງປີຄ.ສ .1946 ຫໍສະໝຸດແຫ່ງຊາດ, ນະຄອນຫຼວງວຽງຈັນ<br>10. ຈັນທະລາດພູມພິທັກ, ພາກວິຊາປະຫວັດສາດ, ຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດເອກະສານປະກອບການສອນວິຊາປະຫວັດສາດລາວລ້ານຊ້າງ. |
| ຜູ້ຂຽນ | 1. ຊອປທມ. ສິງອຳໄພພິມພາພອນວິທະຍາໄລຄູສາລະວັນ<br>ໂທລະສັບ: 030 9095686. Email:Phimphasingsun@gmail.com<br>2. ອຈ. ປທມ. ບົວລີພັນທະພາວິທະຍາໄລຄູຄັງໄຂ<br>ໂທລະສັບ: 020 55548700. Email:boualyphanthapha@gmail.com<br>3. ຊອ. ປທມ. ເພັດສະໝອນພຸດສະດີວິທະຍາໄລຄູຄັງໄຂ<br>ໂທລະສັບ: 020 5471 7789. Email:Phetsamonepsd@gmail.com<br>4. ຊອ. ປທມ. ສຸວັນທອນຍົດສະຫວັດຄະນະສຶກສາສາດ, ມຊ<br>ໂທລະສັບ: 020 55798938. Email:thonesvt2021@gmail.com<br>5. ຊອ. ປທມ. ພິມໃຈອິນແປງວິທະຍາໄລຄູດົງຄຳຊ້າງ<br>ໂທລະສັບ: 020 2821 1124. Email:Phiminpheng@gmail.com<br>6. ປຕມ. ວິໄລພອນສົມສຸດທິຄະນະສຶກສາສາດ, ມຂ<br>ໂທລະສັບ: 020 77983567. Email: man svk.119@gmail.com<br>7. ປທອຸ່ນເຕົ້າໄຊຍະແສງສູນພັດທະນາຄູ<br>ໂທລະສັບ: 020 56472846. Email:Ountao76@gmail.com<br>8. ປຕມ. ດາວອນສິດທິເດດສູນພັດທະນາຄູ<br>ໂທລະສັບ: 020 28892323. Email:Davonessithided@gmail.com |